ຄະນະໂຄສະນາອົບຮົມສູນກາງພັກ

ເອກະສານ

ເຜີຍແຜ່ ອະທິບາຍ ເນື້ອໃນ
ມະຕິກອງປະຊຸມໃຫຍ່ຄັ້ງທີ IX
ຂອງພັກປະຊາຊົນ ປະຕິວັດລາວ

ເດືອນ ສິງຫາ 2011

ຈູມມາລີ ໄຊຍະສອນ

ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ

ປະຊາຊົນປະຕິວັດລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ
ຄັ້ງທີ IX ຂອງ ພັກປະຊາຊົນປະຕິວັດລາວ
IX

ທຸກສິ່ງທຸກຢ່າງ ເພື່ອຄວາມສົມບູນພູນສຸກ ຂອງປະຊາຊົນ, ເພື່ອຄວາມຈະເລີນວັດທະນາ ຂອງປະເທດຊາດ.

ຄຳນຳ

- ປະຕິບັດຕາມການຊີ້ນຳ ຂອງກົມການເມືອງ, ຄະນະໂຄສະນາອົບຮົມສູນກາງພັກ ໄດ້ຄົ້ນຄວ້າສ້າງເອກະສານ ເຜີຍແຜ່ ອະທິບາຍ ເນື້ອໃນສຳຄັນ ມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ເພື່ອໃຫ້ສະມາຊິກພັກ-ພະນັກງານ ແລະ ບຸກຄົນທົ່ວໄປ ອ່ານ ແລະ ຄົ້ນຄວ້າທຳຄວາມເຂົ້າໃຈຕໍ່ແນວທາງ ແຜນນະໂຍບາຍ ກໍຄື ທິດທາງວຽກງານຈຸດສຸມ ທີ່ວາງອອກ ສຳລັບໄລຍະ 2011-2015 ເພື່ອສ້າງບາດກ້າວບຸກທະລຸ ໃນການສ້າງສາພັດທະນາ ແນໃສ່ເຮັດໃຫ້ປະເທດເຮົາ ຫລຸດພົ້ນຈາກຄວາມດ້ອຍພັດທະນາ ໃນປີ 2020.

- ໃນປຶ້ມຫົວນີ້ ໄດ້ຍົກເອົາບັນຫາສຳຄັນໃນແຕ່ລະດ້ານ ຂຶ້ນມາອະທິບາຍ ຊີ້ແຈງ ໃຫ້ຄວາມກະຈ່າງແຈ້ງ ໂດຍອີງໃສ່ຫລັກມູນທິດສະດີ-ພຶດຕິກຳ ແລະ ບົດຮຽນຈາກການນຳພາ-ຊີ້ນຳຕົວຈິງ ຂອງພັກເຮົາ. ການອະທິບາຍ ກໍມີລັກສະນະເຈາະຈີ້ມ ໃຫ້ທິດ ສຳລັບການຮຽນຮູ້ ກຳແໜ້ນແນວທາງ ແລະ ໃຫ້ທິດ ກ່ຽວກັບການຈັດຕັ້ງ ຜັນຂະຫຍາຍ ໄປພ້ອມໆກັນ. ເພາະສະນັ້ນ ມັນຈຶ່ງເໝາະສົມ ສຳລັບໃຊ້ເປັນຄູ່ມືໂຄສະນາ, ປາຖະກະຖາ ຂອງພະນັກງານໂຄສະນາອົບຮົມ, ຜູ້ທີ່ເຮັດວຽກງານການເມືອງ-ແນວຄິດ ຂອງຄະນະພັກກະຊວງ-ອົງການ ອ້ອມຂ້າງສູນກາງ ແລະ ຄະນະພັກທ້ອງຖິ່ນ ໃນຂອບເຂດທົ່ວປະເທດ. ພ້ອມກັນນີ້ ກໍສາມາດໃຊ້ເປັນບ່ອນອີງ ສຳລັບການຂຽນບົດຄວາມ-ບົດຂ່າວ ແລະ ການສ້າງບົດສອນວິຊາການເມືອງ ຢູ່ໃນໂຮງຮຽນການເມືອງ-ການປົກຄອງ, ມະຫາວິທະຍາໄລ ແລະ ໂຮງຮຽນອະຊີວະສຶກສາຊັ້ນສູງຕ່າງໆ. ນອກຈາກນັ້ນ ມັນຍັງມີຄຸນປະໂຫຍດ ສຳລັບຜູ້ທີ່ສົນໃຈອ່ານ ເພື່ອຍົກລະດັບຄວາມຮູ້ ກ່ຽວກັບແນວທາງການເມືອງໃນດ້ານຕ່າງໆ ຂອງພັກປະຊາຊົນປະຕິວັດລາວ ອີກດ້ວຍ.

ຄະນະໂຄສະນາອົບຮົມສູນກາງພັກ ເຂົ້າໃຈດີວ່າ ປຶ້ມຫົວນີ້ ຍັງມີຈຸດບົກພ່ອງ ໃນບາງດ້ານ; ສະນັ້ນ ຈຶ່ງຍິນດີທີ່ຈະຮັບເອົາຄວາມຄິດເຫັນ ຕຳນິຕິຊົມ ຈາກທ່ານຜູ້ອ່ານ ແລະ ທ່ານຜູ້ຮູ້ທັ່ງຫລາຍ ເພື່ອຈະໄດ້ສືບຕໍ່ປັບປຸງ ປຶ້ມຫົວນີ້ ໃຫ້ມີຄວາມສົມບູນຍິ່ງໆຂຶ້ນ, ພ້ອມດຽວກັນນີ້ ກໍຂໍສະແດງຄວາມຂອບໃຈ ຕໍ່ການຮ່ວມມື ຂອງບັນດາທ່ານ ມານະໂອກາດນີ້ດ້ວຍ.

ຄະນະໂຄສະນາອົບຮົມສູນກາງພັກ.

ຄຳຂວັນ
ຂອງກອງປະຊຸມໃຫຍ່ ຄັ້ງທີ IX.

" ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນ ຂອງທົ່ວປວງຊົນລາວ ແລະ ຄວາມເປັນເອກະພາບພາຍໃນພັກ, ເຊີດຊູບົດບາດ ແລະ ຄວາມສາມາດນຳພາຂອງພັກ, ສ້າງບາດກ້າວບຸກທະລຸ ໃນການຈັດຕັ້ງປະຕິບັດແນວທາງປ່ຽນແປງໃຫມ່, ສ້າງພື້ນຖານ ອັນຫນັກແຫນ້ນ ໃຫ້ການນຳເອົາປະເທດເຮົາຫລຸດພົ້ນອອກຈາກຄວາມດ້ອຍພັດທະນາ ໃນປີ 2020 ສືບຕໍ່ກ້າວຂຶ້ນສູ່ຈຸດຫມາຍສັງຄົມນິຍົມ".

ຄຳຂວັນດັ່ງກ່າວ ມີຄວາມຫມາຍສຳຄັນ ດັ່ງນີ້ :

ກອງປະຊຸມໃຫຍ່ແມ່ນອົງການນຳພາສູງສຸດ ຂອງພັກເຮົາ. ກອງປະຊຸມໃຫຍ່ແຕ່ລະຄັ້ງ ລ້ວນແຕ່ມີຄຳຂວັນເພື່ອບົ່ງບອກເຈດຈຳນົງຂອງພັກ ກໍຄື ຄວາມມຸ່ງມາດປາຖະຫນາ ຂອງປະຊາຊົນ; ພ້ອມກັນນັ້ນ ກໍບົ່ງບອກທິດທາງຫນ້າທີ່ອັນສຳຄັນຕົ້ນຕໍ ທີ່ທົ່ວພັກ ທົ່ວປວງຊົນ ຕ້ອງໄດ້ສຸມຄວາມເອົາໃຈໃສ່, ສຸມກຳລັງແຮງສັງລວມ ຈັດຕັ້ງປະຕິບັດ ໃນໄລຍະຫນຶ່ງສະໄຫມ ຂອງກອງປະຊຸມໃຫຍ່ນັ້ນ ແລະ ຕໍ່ໆໄປ ໃຫ້ສຳເລັດຕາມວັດຖຸປະສົງທີ່ວາງໄວ້.

✪ ***ຄຳຂວັນ ຂອງກອງປະຊຸມໃຫຍ່ຄັ້ງທີ IX ປະກອບດ້ວຍ 4 ເນື້ອໃນໃຫຍ່ ຄື:***

ເນື້ອໃນທີຫນຶ່ງ: *ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນ ຂອງທົ່ວປວງຊົນລາວ ແລະ ຄວາມສາມັກຄີເປັນເອກະພາບ ພາຍໃນພັກ.*

ອັນນີ້ ຫມາຍຄວາມວ່າ ພັກເຮົາເວົ້າລວມ ກໍຄື ຄະນະພັກແຕ່ລະຂັ້ນ ຕ້ອງເອົາໃຈໃສ່ ຕໍ່ການເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນ ຂອງທົ່ວປວງຊົນ ເພາະມັນແມ່ນປັດໄຈຕັດສິນໃນການຄົງຕົວ ແລະ ຂະຫຍາຍຕົວ ຂອງຊາດລາວເຮົາ. ພ້ອມກັນນັ້ນ ກໍຕ້ອງເພີ່ມທະວີ **ຄວາມສາມັກຄີເປັນເອກະພາບ ພາຍໃນພັກ** ໃຫ້ເປັນແກ່ນສານແຫ່ງຄວາມສາມັກຄີເປັນປຶກແຜ່ນ ຂອງທົ່ວປວງຊົນລາວ.

ເນື້ອໃນທີສອງ: *ເຊີດຊູບົດບາດ ແລະ ຄວາມສາມາດນຳພາຂອງພັກ.*

ພັກເຮົາ ເປັນພັກກຳອຳນາດ ມີຄວາມຮັບຜິດຊອບຕໍ່ທົ່ວສັງຄົມ, ປະເທດຊາດຂອງພວກເຮົາ ຈະຄົງຕົວ ແລະ ຂະຫຍາຍຕົວ ເປັນປະເທດທີ່ມັ່ງຄັ່ງເຂັ້ມແຂງ, ປະຊາຊົນ ຮັ່ງມີຜາສຸກ ໄດ້ຫລືບ່ນັ້ນ ແມ່ນຂຶ້ນກັບຄວາມສາມາດນຳພາ ຂອງພັກເຮົາ. ສະນັ້ນ ຈຶ່ງມີຄວາມຈຳເປັນ ເຊີດຊູຄວາມສາມາດນຳພາຂອງພັກ ໃຫ້ສູງຂຶ້ນ ສົມຄູ່ກັບພາລະກຳປະຫວັດສາດ ໃນໄລຍະໃຫມ່ ເພື່ອຮັກສາບົດບາດເປັນພັກກຳອຳນາດ ຢ່າງຫມັ້ນຄົງຕໍ່ໆໄປ.

ເນື້ອໃນທີສາມ: *ສ້າງບາດກ້າວບຸກທະລຸ ໃນການຈັດຕັ້ງປະຕິບັດແນວທາງປ່ຽນແປງໃຫມ່;*

ສ້າງພື້ນຖານອັນຫນັກແຫນ້ນ ໃຫ້ການນຳເອົາປະເທດເຮົາ ຫລຸດພົ້ນຈາກຄວາມດ້ອຍພັດທະນາ ໃນ ປີ 2020.

ແນວທາງປ່ຽນແປງໃຫມ່ ໄດ້ພິສູດຄວາມຖືກຕ້ອງໃນພຶດຕິກຳ ແຫ່ງການຈັດຕັ້ງປະຕິບັດມາ ກວ່າ 20 ປີ, ແຕ່ມາເຖິງປັດຈຸບັນນີ້ ຍັງເຫັນວ່າ ມີສິ່ງກີດຂວາງ ກົດຫນ່ວງ ອັດຕັນ ການພັດທະນາ ຕາມ ແນວທາງປ່ຽນແປງໃຫມ່ຢູ່ບໍ່ຫນ້ອຍ. ສະນັ້ນ ຕ້ອງສ້າງບາດກ້າວບຸກທະລຸຕື່ມອີກ ໃນການຈັດຕັ້ງປະ ຕິບັດແນວທາງປ່ຽນແປງໃຫມ່ ໃຫ້ມີຜົນສຳເລັດອັນເດັ່ນຊັດ ເພື່ອເປັນພື້ນຖານ ໃຫ້ແກ່ການນຳເອົາປະ ເທດອອກຈາກຄວາມດ້ອຍພັດທະນາ ໃຫ້ໄດ້ ໃນປີ 2020.

ເນື້ອໃນທີ່ສີ່: *ສືບຕໍ່ກ້າວຂຶ້ນ ສູ່ຈຸດຫມາຍສັງຄົມນິຍົມ.*

ສັງຄົມນິຍົມ ແມ່ນອຸດົມການຂອງພັກເຮົາ, ສະນັ້ນ ກອງປະຊຸມໃຫຍ່ແຕ່ລະຄັ້ງ ທີ່ຜ່ານມາ ກໍ ຄືກອງປະຊຸມໃຫຍ່ຄັ້ງທີ IX ຈຶ່ງຢືນຢັນຄວາມຕັດສິນໃຈ ຢຶດຫມັ້ນໃນອຸດົມການດັ່ງກ່າວ; ອັນນີ້ ທັງ ເປັນການສະແດງອອກເຖິງມານະຈິດ ກໍຄື ຄວາມຈົງຮັກພັກດີ ຕໍ່ອຸດົມການອັນສູງສົ່ງ ທີ່ພັກເຮົາໄດ້ ຢຶດຖືມາ ຕັ້ງແຕ່ມື້ທຳອິດຂອງການສ້າງຕັ້ງພັກ; ຈະແມ່ນເວລາໃດ, ໃນສະພາວະການ ແລະ ເງື່ອນໄຂ ຄືແນວໃດ ພັກເຮົາກໍຕ້ອງສູ້ຊົນບຸກບືນ ນຳພາທົ່ວປວງຊົນລາວ ສ້າງສາປະເທດຊາດ ໃຫ້ບັນລຸອຸດົມ ການດັ່ງກ່າວນັ້ນ ເປັນກ້າວໆ.

ພາກທີ I

ສະຫລຸບຕີລາຄາ ຜົນການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ VIII.

ກ. <u>ຜົນງານ ແລະ ດ້ານດີ</u>.

ກອງປະຊຸມໃຫຍ່ຄັ້ງທີ IX ໄດ້ສະຫລຸບຕີລາຄາວ່າ ໃນ 5 ປີຜ່ານມາ (2006 - 2010) ການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ຄັ້ງທີ VIII ໄດ້ບັນລຸຜົນສຳເລັດອັນສຳຄັນຫລາຍປະການ, ປະເທດຊາດອັນແສນຮັກຂອງພວກເຮົາ ມີພື້ນຖານ ແລະ ຖ່ວງທ່າໃຫມ່ ສຳລັບການສືບຕໍ່ຂະຫຍາຍຕົວໄປຕາມທິດທາງ ແລະ ຈຸດໝາຍທີ່ວາງໄວ້. ຜົນສຳເລັດທີ່ບັນລຸໄດ້ສະແດງອອກໃນແຕ່ລະດ້ານ ດັ່ງນີ້ :

❶ ສາມາດປົກປັກຮັກສາຄວາມເປັນເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງປະເທດຊາດໄວ້ໄດ້ຢ່າງຫມັ້ນຄົງ, ລະບອບການເມືອງ ມີສະຖຽນລະພາບອັນຫນັກແຫນ້ນ, ສັງຄົມມີຄວາມສະຫງົບປອດໄພ ແລະ ມີຄວາມເປັນລະບຽບ ຮຽບຮ້ອຍໂດຍທົ່ວໄປ.

❷ ການພັດທະນາເສດຖະກິດ-ສັງຄົມ ມີຜົນສຳເລັດໃຫມ່ຫລາຍປະການ, ອັນພົ້ນເດັ່ນແມ່ນຈັງຫວະການເຕີບໂຕ ຂອງເສດຖະກິດແຫ່ງຊາດ ມີລັກສະນະຕໍ່ເນື່ອງ, ໂດຍສະເລ່ຍໃນ 5 ປີ ແມ່ນ 7,9%, ລວມຍອດມູນຄ່າຜະລິດຕະພັນພາຍໃນ ສົກງົບປະມານ 2009-2010 ສະເລ່ຍຕໍ່ພົນລະເມືອງ ບັນລຸ 8,7 ລ້ານກີບຕໍ່ຄົນ ຫລື 1069 ໂດລາສະຫະລັດ (ລື່ນຄາດໝາຍທີ່ວາງໄວ້); ເສດຖະກິດມະຫາພາກມີຄວາມຫມັ້ນທ່ຽງໂດຍພື້ນຖານ; ການແກ້ໄຂຄວາມທຸກຍາກ ຂອງປະຊາຊົນຕິດພັນກັບການສ້າງບ້ານ ແລະ ກຸ່ມບ້ານພັດທະນາ ໄດ້ຮັບຜົນດີໃນຫລາຍດ້ານ, ຄອບຄົວທຸກຍາກໃນທົ່ວປະເທດ ໄດ້ຫລຸດລົງຈາກ 27,7% ໃນສົກປີ 2002-2003 ມາເປັນ 20,4% ໃນສົກປີ 2009-2010. ການສ້າງບ້ານພັດທະນາ ແລະ ເຕົ້າໂຮມບ້ານ ມີຜົນທີ່ຕັ້ງຫນ້າ, ບ້ານໃຫຍ່ຈຳນວນຫນຶ່ງໄດ້ກາຍເປັນໃຈກາງ ດ້ານເສດຖະກິດ-ວັດທະນະທຳ ແລະ ກໍ່ຕົວເປັນຮູບຂອງຕົວເມືອງນ້ອຍຢູ່ໃນເຂດຊົນນະບົດ; ອັນສຳຄັນໃນນັ້ນ ແມ່ນໄດ້ມີປັດໄຈໃຫມ່, ຫນໍ່ແຫນງໃຫມ່ ເກີດຂຶ້ນຢູ່ໃນການທຳມາຫາກິນຂອງປະຊາຊົນບັນດາເຜົ່າ ຢູ່ຫລາຍທ້ອງຖິ່ນ.

❸ ຄຽງຄູ່ກັບຜົນສຳເລັດ ທາງດ້ານເສດຖະກິດ, ການຈັດຕັ້ງປະຕິບັດ ແຜນນະໂຍບາຍ ທາງດ້ານສັງຄົມ-ວັດທະນະທຳ ກໍໄດ້ຮັບຜົນດີ; ການປະຕິຮູບລະບົບການສຶກສາແຫ່ງຊາດ ໃນບາດກ້າວ

ເບື້ອງຕົ້ນໄດ້ດຳເນີນຢ່າງມີຜົນສຳເລັດ ເປັນຕົ້ນ ແມ່ນໄດ້ຂະຫຍາຍໂອກາດ ດ້ວຍການເປີດກ້ວາງ ຕາໜ່າງການສຶກສາໃຫ້ທົ່ວເຖິງກວ່າເກົ່າ, ຄຸນນະພາບຂອງການສຶກສາ ກໍໄດ້ຮັບການປັບປຸງດີຂຶ້ນ; ຕາໜ່າງການສຶກສາວິຊາຊີບ ໄດ້ຂະຫຍາຍໄປແຕ່ລະພາກ ແຕ່ລະແຂວງ ຢ່າງທົ່ວເຖິງ; ພາລະກິດ ການສຶກສາໄດ້ກາຍເປັນຂອງທົ່ວປວງຊົນ; ວຽກງານສາທາລະນະສຸກ ການກັນພະຍາດ ແລະ ສິ່ງ ເສີມສຸຂະພາບ ກໍມີການຫັນປ່ຽນດີຂຶ້ນ ຍ້ອນມີການປັບປຸງຍົກລະດັບ ໂຮງໝໍສູນກາງ ແລະ ໂຮງໝໍ ພາກ, ໄດ້ເປີດກ້ວາງຕາໜ່າງສາທາລະນະສຸກ ຕິດພັນກັບການໂຄສະນາສຸຂະສຶກສາ ແລະ ເປີດຂະ ບວນສັກຢາ ຢອດຢາກັນພະຍາດ ຢ່າງຕໍ່ເນື່ອງ.

- ວັດທະນະທຳແຫ່ງຊາດ ກໍຄື ຂອງແຕ່ລະເຜົ່າລາວໄດ້ຮັບການອະນຸລັກ ແລະ ເສີມຂະ ຫຍາຍ; ອັນພົ້ນເດັ່ນ ແມ່ນການເຊື່ອມສານ ການສະແດງສິລະປະວັດທະນະທຳ ອັນເປັນເອກະລັກ ຂອງຊາດ ເຂົ້າກັບງານມະຫາກຳກິລາຊີເກມ ຄັ້ງທີ 25; ວັນຊາດ ຄົບຮອບ 35 ປີ ແລະ ວຽງຈັນ 450 ປີ. ຊີວິດທາງດ້ານວັດທະນະທຳ ກໍຄື ດ້ານຈິດໃຈ ຂອງຄົນລາວເຮົາ ກໍໄດ້ຮັບການຍົກສູງຂຶ້ນ ດ້ວຍ ການຕອບສະໜອງຂ່າວສານ, ສາລະຄວາມຮູ້ ແລະ ການບັນເທີງເປີກບານ ຜ່ານສື່ຕ່າງໆດ້ວຍເນື້ອ ຫາສາລະທີ່ຫລາກຫລາຍ ແລະ ທົ່ວເຖິງກວ່າເກົ່າ. ອັນນັ້ນ ໄດ້ປະກອບສ່ວນຢ່າງສຳຄັນໃນການເພີ່ມ ທະວີຄວາມ ສາມັກຄີເປັນປຶກແຜ່ນ ແລະ ຄວາມເອກະພາບ-ເປັນອັນໜຶ່ງອັນດຽວ ຂອງຊາດລາວເຮົາ.

- ການປະຕິບັດນະໂຍບາຍ ແລະ ການແກ້ໄຂບັນຫາທາງສັງຄົມ ໃນຫລາຍດ້ານ ກໍມີການ ປັບປຸງດີຂຶ້ນ ໂດຍສະເພາະ ແມ່ນການສັນລະເສີນ ແລະ ຕອບແທນບຸນຄຸນຜູ້ມີຜົນງານ ແລະ ຄຸນ ງາມຄວາມດີ ຕໍ່ປະເທດຊາດ ແລະ ການປະຕິວັດ.

❹ ລະບົບການເມືອງ ປະຊາທິປະໄຕປະຊາຊົນ ໄດ້ຮັບການປັບປຸງບູລະນະ ໃຫ້ມີຄວາມ ໜັກແໜ້ນ, ຍ້ອນໄດ້ດຳເນີນມາດຕະການ ຍຸດທະສາດຫັນລົງຮາກຖານ ການເມືອງຕິດພັນກັບ ການສ້າງບ້ານ ແລະ ກຸ່ມບ້ານພັດທະນາ ເຮັດໃຫ້ບັນດາອົງປະກອບ ຂອງລະບົບການເມືອງ ປະຊາ ທິປະໄຕປະຊາຊົນ ໄດ້ຮັບການບູລະນະຕາມທິດສ້າງລັດແຫ່ງກົດໝາຍ ແລະ ສາມາດປະຕິບັດ ພາລະບົດບາດຂອງຕົນ ໄດ້ຢ່າງມີຄວາມສັກສິດຍິ່ງຂຶ້ນ.

- ສະພາແຫ່ງຊາດ ໄດ້ປະຕິບັດພາລະບົດບາດ ນິຕິບັນຍັດ, ເປັນຕົວແທນແຫ່ງ ສິດອຳນາດ ແລະ ຜົນປະໂຫຍດອັນຊອບທຳ ຂອງປະຊາຊົນບັນດາເຜົ່າ ຢ່າງຕັ້ງໜ້າ ແລະ ແທດເຖິງກວ່າເກົ່າ; ໄດ້ຄົ້ນຄວ້າ ແລະ ຮັບຮອງເອົາບັນຫາສຳຄັນຕ່າງໆ ຂອງຊາດໃຫ້ແທດຕົວຈິງ ແລະ ມີຄຸນນະພາບສູງ; ຕິດຕາມກວດກາ ການປະຕິບັດໜ້າທີ່ ຂອງອົງການບໍລິຫານ ແລະ ຕຸລາການ ຢ່າງຮອບຄອບ ແລະ ເລິກເຊິ່ງ, ໄດ້ເຄື່ອນໄຫວວຽກງານການຕ່າງປະເທດ ຢ່າງຫ້າວຫັນ ແລະ ມີປະສິດທິຜົນປະ

ກອບສ່ວນເຂົ້າໃນການເຊີດຊູ ບົດບາດອິດທິພົນ ຂອງປະເທດເຮົາ ໃຫ້ສູງຂຶ້ນ ໃນເວທີສາກົນ.

- ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ໄດ້ຈັດຕັ້ງປະຕິບັດທິດທາງ, ໜ້າທີ່ ທີ່ ກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກ ວາງອອກ ດ້ວຍຄວາມເປັນເຈົ້າການອັນຕັ້ງໜ້າ, ຮັບປະກັນ ເຮັດໃຫ້ເສດຖະກິດຂະຫຍາຍຕົວ ຕໍ່ເນື່ອງ ແລະ ໜັ້ນທ່ຽງ; ໄດ້ດຳເນີນການຄຸ້ມຄອງລັດ-ຄຸ້ມຄອງ ສັງຄົມ ຕາມກົດໝາຍ ນັບມື້ນັບມີຜົນສັກສິດ, ປັບປຸງການບໍລິການຮັບໃຊ້ ປະຊາຊົນດີຂຶ້ນ ທັງຢູ່ ສູນກາງ ແລະ ທ້ອງຖິ່ນ.

- ອົງການຕຸລາການ (ສານ ແລະ ໄອຍະການປະຊາຊົນ) ຂັ້ນຕ່າງໆ ໄດ້ຕັ້ງໜ້າ ປັບປຸງການ ຈັດຕັ້ງ ແລະ ການເຄື່ອນໄຫວ ສອດຄ່ອງກັບລັດຖະທຳມະນູນ ແລະ ກົດໝາຍ ດີຂຶ້ນ.

- ອົງການແນວລາວສ້າງຊາດຂັ້ນຕ່າງໆ ໄດ້ເປັນເຈົ້າການເຕົ້າໂຮມຄວາມສາມັກຄີ, ສ້າງ ຄວາມເປັນປຶກແຜ່ນ ຂອງທົ່ວປວງຊົນລາວທັງຊາດ, ໂຄສະນາປຸກລະດົມ ບັນດາຊັ້ນຄົນ ເຂົ້າຮ່ວມ ໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ເວົ້າລວມ, ເວົ້າສະເພາະ ແມ່ນການແກ້ໄຂ ຄວາມທຸກຍາກ ຂອງປະຊາຊົນ ຢູ່ຮາກຖານ.

- ບັນດາອົງການຈັດຕັ້ງມະຫາຊົນ ໄດ້ຕັ້ງໜ້າປະຕິບັດພາລະບົດບາດ, ໜ້າທີ່ ຂອງຕົນ ໃຫ້ເປັນຈິງຫລາຍດ້ານ, ເອົາໃຈໃສ່ສຶກສາອົບຮົມສະມາຊິກ ແລະ ມະຫາຊົນ ປະຕິບັດຄຳຂວັນ ແລະ ກິດຈະກຳຕ່າງໆ ປະກອບສ່ວນ ເຮັດໃຫ້ແນວທາງນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດ ປະກົດຜົນເປັນຈິງ.

❺ ພວກເຮົາ ໄດ້ຮັບຜົນສຳເລັດທີ່ສຳຄັນຫລາຍປະການ ໃນການຈັດຕັ້ງປະຕິບັດ ແນວ ທາງການຕ່າງປະເທດ ສັນຕິພາບ ເອກະລາດ ມິດຕະພາບ ແລະ ຮ່ວມມືພັດທະນາ ໂດຍໄດ້ສົມທົບ ແໜ້ນ ການເຄື່ອນໄຫວຕ່າງປະເທດ ດ້ານພັກ, ດ້ານລັດ, ອົງການຈັດຕັ້ງມະຫາຊົນ, ການເມືອງ, ເສດຖະກິດ, ວັດທະນະທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ເຮັດໃຫ້ອິດທິພົນບົດ ບາດ ຂອງປະເທດເຮົາ ໄດ້ຮັບການເຊີດຊູສູງຂຶ້ນຕື່ມອີກ ໃນເວທີພາກພື້ນ ແລະ ສາກົນ; ອັນພົ້ນເດັ່ນ ແມ່ນສາຍພົວພັນມິດຕະພາບ, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານ ກັບ ສ.ສ ຫວຽດນາມ ໄດ້ມີຄວາມໜັກແໜ້ນ ແລະ ເຂົ້າສູ່ລວງເລິກ, ທັງມີປະສິດທິຜົນສູງຂຶ້ນເລື້ອຍໆ, ໄດ້ສຳ ເລັດໂຄງການຮຽບຮຽງປະຫວັດສາດ ການຮ່ວມສຳພັນສູ້ຮົບ ແລະ ຄວາມສາມັກຄີພິເສດ ລາວ-ຫວຽດນາມ; ມິດຕະພາບ, ຄວາມສາມັກຄີ ອັນເປັນມູນເຊື້ອ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ລາວ-ຈີນ ໄດ້ຂະຫຍາຍຕົວເຂົ້າສູ່ລະດັບໃໝ່ ແບບຄູ່ຮ່ວມມືຍຸດທະສາດ ຮອບດ້ານທີ່ໜັ້ນຄົງ ຍາວນານ; ການພົວພັນຮ່ວມມື ກັບບັນດາປະເທດສັງຄົມນິຍົມອ້າຍນ້ອງອື່ນໆ ບົນພື້ນຖານການສະ

ຫນັບສະຫນູນ ຊ່ວຍເຫລືອ ເຊິ່ງກັນແລະກັນ ເພື່ອການພັດທະນາ ກໍໄດ້ຮັບການສົ່ງເສີມ; ພ້ອມນັ້ນ ການພົວພັນຮ່ວມມື ກັບບັນດາປະເທດໃນຄອບຄົວອາຊຽນ, ກັບບັນດາປະເທດເພື່ອນມິດ ກໍຄື ອົງການສະຫະປະຊາຊາດ, ບັນດາອົງການຈັດຕັ້ງສາກົນອື່ນໆ ແລະ ອົງການທີ່ບໍ່ສັງກັດ ລັດຖະບານ ກໍໄດ້ຮັບການເສີມຂະຫຍາຍ ຢ່າງຕັ້ງຫນ້າ ແລະ ມີປະສິດທິຜົນ, ປະເທດເຮົາ ໄດ້ເປັນປະເທດຄູ່ຮ່ວມມືທີ່ຫນ້າໄວ້ວາງໃຈ ຂອງເພື່ອນມິດຫລາຍຂຶ້ນ.

❻ ພັກເຮົາ ໄດ້ຮັບການປັບປຸງ ກໍ່ສ້າງ ເປັນກຳລັງການເມືອງທີ່ເຂັ້ມແຂງ ນຳພາ ທົ່ວສັງຄົມ ສືບຕໍ່ປະຕິບັດສອງຫນ້າທີ່ຍຸດທະສາດ ຕາມແນວທາງປ່ຽນແປງໃຫມ່ ຢ່າງຫນັກແຫນ້ນ ແລະ ມີຜົນ ສຳເລັດໃຫມ່ ໃນຫລາຍດ້ານ :

- ໄດ້ເອົາໃຈໃສ່ ການສຶກສາອົບຮົມແນວຄິດເປັນປະຈຳ ໃຫ້ພະນັກງານ, ສະມາຊິກພັກ ແລະ ປະຊາຊົນ ໃນທົ່ວສັງຄົມ ໂດຍສຸມໃສ່ການໂຄສະນາ, ອະທິບາຍຊີ້ແຈງ ແລະ ປຸກລະດົມ ມວນຊົນ ເຂົ້າຮ່ວມການຈັດຕັ້ງປະຕິບັດແນວທາງຂອງພັກ, ການເຊີດຊູຄວາມເປັນແບບຢ່າງນຳ ຫນ້າ ຂອງສະມາຊິກພັກ, ຕ້ານປະກົດການຫຍໍ້ທໍ້ ກໍຄື ການເສື່ອມຖອຍ ທາງດ້ານຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ, ຕີຖອຍກົນອຸບາຍ ຂອງອິດທິກຳລັງປໍລະປັກ ທີ່ຫວັງມ້າງພັກ ແລະ ລະບອບໃຫມ່ ຂອງ ພວກເຮົາ.

- ໄດ້ປັບປຸງຫລັກສູດການຮຽນ ການສອນທິດສະດີການເມືອງ-ການປົກຄອງ ແລະ ບຳລຸງ ສ້າງຖົນແຖວຄູສອນວິຊາການເມືອງ ສຳລັບໂຮງຮຽນ ແລະ ສະຖາບັນການສຶກສາຊັ້ນຕ່າງໆ ທັງ ທາງດ້ານປະລິມານ ແລະ ຄຸນນະພາບ; ວຽກງານຄົ້ນຄວ້າທິດສະດີ ແລະ ພຶດຕິກຳ ກໍໄດ້ຮັບການ ປັບປຸງຍົກລະດັບ ແລະ ໄດ້ປະກອບສ່ວນ ເຂົ້າ ໃນການບູລະນະແນວທາງ ແລະ ແຜນນະໂຍບາຍ ດ້ານຕ່າງໆ ຂອງພັກ ແລະ ລັດໃນໄລຍະໃຫມ່.

- ພັກເຮົາ ໄດ້ດຳເນີນການກໍ່ສ້າງພັກ ທາງດ້ານການຈັດຕັ້ງ ແລະ ປັບປຸງແບບແຜນການນຳພາ ຢ່າງເປັນປົກກະຕິ ຕໍ່ເນື່ອງ ເປັນຕົ້ນ ແມ່ນໄດ້ຍຶດຫມັ້ນໃນທັດສະນະຊົນຊັ້ນ ແລະ ບັນດາຫລັກການ ພື້ນຖານ ແຫ່ງການກໍ່ສ້າງພັກ ເຮັດໃຫ້ລະບົບການຈັດຕັ້ງ ແລະ ຖົນແຖວສະມາຊິກພັກ ມີຄວາມສາມັກຄີ ເປັນເອກະພາບ ຫນັກແຫນ້ນ; ປະຊາທິປະໄຕ ພາຍໃນພັກ ແລະ ສິດເປັນເຈົ້າ ຂອງສະມາຊິກພັກ ໄດ້ ຮັບການເສີມຂະຫຍາຍ; ຄະນະພັກຂັ້ນຕ່າງໆ ໄດ້ລົງໃກ້ຊິດຕິດແທດຮາກຖານປະຊາຊົນ, ນຳພາປະ ຊາຊົນ ແກ້ໄຂຄວາມທຸກຍາກ ຕິດພັນກັບການກໍ່ສ້າງຮາກຖານການເມືອງ ແລະ ສ້າງບ້ານພັດທະນາ ຢ່າງເປັນຂະບວນ ເນື່ອງນິດລຽນຕິດ; ຄະນະພັກຢູ່ຫລາຍບ່ອນ ໄດ້ເປັນເຈົ້າການເສີມຂະຫຍາຍ ແບບ ແຜນ ແລະ ວິທີການນຳພາ ແບບກ້າຄິດ, ກ້າເຮັດ ແລະ ກ້າຮັບຜິດຊອບ ເຮັດໃຫ້ການສ້າງສາພັດທະນາ

ຢູ່ຫລາຍທ້ອງຖິ່ນ ມີການຫັນປ່ຽນດີຂຶ້ນ; ບັນດາອົງການອຳນາດແຫ່ງລັດ ໄດ້ຮັບການບູລະນະ ໄປຕາມ ທິດເສີມຂະຫຍາຍ ບົດບາດ ແລະ ຄວາມຮັບຜິດຊອບ ຂອງແຕ່ລະອົງການ ຢ່າງເໝາະສົມ.

- ພັກເຮົາ ໄດ້ຖືສຳຄັນ ແລະ ເອົາໃຈໃສ່ ວຽກງານພະນັກງານ ຢ່າງສົມຄູ່ກັບເງື່ອນ ໄຂໃຫມ່; ໄດ້ ເອົາໃຈໃສ່ ບຳລຸງສ້າງຖັນແຖວພະນັກງານ ທາງດ້ານການເມືອງ ແລະ ວິຊາສະເພາະ ພ້ອມທັງໄດ້ຄຸ້ມ ຄອງ, ນຳໃຊ້ຕາມແຜນກຳນົດ ແລະ ຄວາມຮຽກຮ້ອງຕ້ອງການ ຂອງວຽກງານ; ໄດ້ເພີ່ມການລົງທຶນ ແລະ ມີນະໂຍບາຍ ສົ່ງເສີມໃຫ້ພະນັກງານ ລົງເຮັດວຽກຢູ່ຂັ້ນເມືອງ, ຮາກຖານ ເຂດຫ່າງໄກສອກຫລີກ ຕິດ ພັນກັບຂະບວນການວຽກງານຕົວຈິງ ນັບມື້ນັບຫລາຍຂຶ້ນ. ພ້ອມກັນນັ້ນ ກໍໄດ້ຖືວຽກງານກວດກາ ເປັນ ມາດຕະການສຳຄັນ ຂອງການນຳພາ ໂດຍໄດ້ປັບປຸງຍົກລະດັບວຽກງານກວດກາ, ທັງໃນດ້ານພັກ ແລະ ໃນດ້ານລັດ; ໄດ້ດຳເນີນການກວດກາ ແບບເປັນລະບົບ ປົກກະຕິ ແລະ ແບບກວດກາສະເພາະກິດເປັນ ແຕ່ລະບັ້ນ, ໄດ້ຊຸກຍູ້ສົ່ງເສີມການມີສ່ວນຮ່ວມ ຂອງພະນັກງານ, ສະມາຊິກພັກ ແລະ ປະຊາຊົນ ເຂົ້າໃນ ວຽກງານກວດກາ ເຮັດໃຫ້ການປັບປຸງກໍ່ສ້າງພັກ ແລະ ການຄຸ້ມຄອງລັດ ຂອງພັກເຮົາ ໄປຕາມທິດປອດ ໃສ ແລະ ເຂັ້ມແຂງ.

ຂ. <u>ບັນດາຂໍ້ຄົງຄ້າງຕົ້ນຕໍ</u>.

ເຖິງວ່າ ໄດ້ບັນລຸຜົນສຳເລັດຄືດັ່ງກ່າວນັ້ນ ກໍຈິງ; ແຕ່ພວກເຮົາ ຕ້ອງຮັບຮູ້ວ່າ ຍັງມີຂໍ້ຄົງຄ້າງ ຕົ້ນຕໍຈຳນວນຫນຶ່ງ ໃນການນຳພາ-ຊີ້ນຳ ຂອງພັກເຮົາ. ໃຫ້ບັນດາສະຫາຍ ຈຳແນກ ແລະ ສົມທຽບ ໃສ່ກັບການນຳພາ-ຊີ້ນຳ ຂອງຄະນະພັກ ຂັ້ນຂອງຕົນ ວ່າ ມີຂໍ້ຄົງຄ້າງຄືແນວນີ້ ຫລືບໍ່ ?.

❶ ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ບັນດາທິດທາງ-ຫນ້າທີ່ຈຸດສຸມ ຈຳນວນຫນຶ່ງ ທີ່ວາງໄວ້ໃນມະຕິ VIII ເປັນແຜນງານ, ເປັນໂຄງການລະອຽດ ຂອງບັນດາກະຊວງ-ອົງການຂັ້ນສູນກາງ ກໍຄື ຂອງຄະນະພັກ ແລະ ອົງການປົກຄອງທ້ອງຖິ່ນ ຍັງຊັກຊ້າ ໂດຍສະເພາະ ແມ່ນທິດທາງຫນ້າທີ່ຈຸດ ສຸມ ດ້ານການແກ້ໄຂຄວາມທຸກຍາກ ແລະ ການຢຸດຕິການຖາງປ່າເຮັດໄຮ່ແບບເລື່ອນລອຍ ຕິດພັນ ກັບການຈັດສັນພູມລຳເນົາຄົງທີ່ ແລະ ອາຊີບທີ່ຫມັ້ນຄົງໃຫ້ປະຊາຊົນໃນເຂດພູດອຍຊົນເຜົ່າ ແລະ ການສົ່ງເສີມການຜະລິດເປັນສິນຄ້າ ສ້າງລາຍໄດ້ໃຫ້ຄອບຄົວ... ການຊີ້ນຳ ຂອງຄະນະພັກຢູ່ບາງ ບ່ອນ ຕໍ່ວຽກງານນີ້ ບໍ່ທັນເລິກເຊິ່ງແທດເຖິງຕົວຈິງ, ມີການປະຊຸມປຶກສາຫາລືກັນ ວາງທິດທາງມາດຕະ ການລວມອອກຫລາຍແຕ່ຍັງຂາດມາດຕະການອັນລະອຽດໃນການຈັດຕັ້ງປະຕິບັດຕົວຈິງ, ຫລາຍ ກໍລະນີ ມີແຜນວຽກ ແຕ່ບໍ່ມີງົບປະມານ; ບາງໂຄງການ ມີງົບປະມານເຮັດ ແຕ່ການຈັດຕັ້ງຊີ້ ນຳການ ປະຕິບັດ ບໍ່ເລິກເຊິ່ງແທດເຖິງ.

❷ ການປະຕິບັດ ສອງຫນ້າທີ່ຍຸດທະສາດ ຍັງມີບາງດ້ານບໍ່ທັນກົມກຽວກັນ; ຂະແຫນງ

ການສູນກາງ ແລະ ທ້ອງຖິ່ນ ກໍຄື ປະຊາຊົນຈຳນວນຫນຶ່ງ ຍັງບໍ່ທັນຕື່ນຕົວເປັນເຈົ້າການ ເຂົ້າຮ່ວມ ໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢ່າງເປັນຂະບວນການຕໍ່ເນື່ອງ; ຄວາມບໍ່ສະ ຫງົບ, ຄວາມບໍ່ເປັນລະບຽບຮຽບຮ້ອຍ ແລະ ປະກົດການຫຍໍ້ທໍ້ໃນສັງຄົມ ບໍ່ທັນໄດ້ຮັບການແກ້ໄຂ ຢ່າງຫນັກແຫນ້ນ.

❸ ການຂະຫຍາຍຕົວ ຂອງເສດຖະກິດແຫ່ງຊາດ ຍັງບໍ່ທັນສົມດູນ ແລະ ບໍ່ທັນຫນັກ ແຫນ້ນ ຍ້ອນວ່າ ການເຕີບໂຕນັ້ນ ຍັງອີງໃສ່ແຕ່ການຂຸດຄົ້ນ ແລະ ສົ່ງອອກຊັບພະຍາກອນທຳມະ ຊາດ ເປັນສ່ວນໃຫຍ່, ບໍ່ທັນຂຸດຄົ້ນຄວາມອາດສາມາດບົ່ມຊ້ອນ ຂອງຫລາຍຂະແຫນງການຜະລິດ ແລະ ການປຸງແຕ່ງສ້າງມູນຄ່າເພີ່ມ; ການລົງທຶນຂອງລັດ ເຂົ້າໃນໂຄງການຈຳນວນຫນຶ່ງ ບໍ່ຖືກກັບ ທິດຈຸດສຸມ ແລະ ຂາດປະສິດທິຜົນ; ສະມັດຖະພາບ ຂອງການຜະລິດກະສິກຳ ຍັງຕ່ຳ ຍ້ອນຍັງອີງ ໃສ່ແຕ່ການຜະລິດແບບເປີດກ້ວາງ ເປັນຕົ້ນຕໍ; ການຂະຫຍາຍອຸດສາຫະກຳປຸງແຕ່ງ ແລະ ອຸດສາ ຫະກຳເບົາ ຍັງເຮັດໄດ້ຫນ້ອຍ; ການຄຸ້ມຄອງ ເສດຖະກິດມະຫາພາກ ມີບາງດ້ານບໍ່ທັນເຂັ້ມແຂງ, ການລະເມີດວິໄນແຜນການ ແລະ ວິໄນການເງິນ ຍັງແຜ່ຫລາຍ; ການປັບປຸງເສດ ຖະກິດຂອງລັດ ຍັງຊັກຊ້າ ແລະ ມີປະສິດທິຜົນຕ່ຳ; ນະໂຍບາຍ ແລະ ກົນໄກຊຸກຍູ້ສົ່ງເສີມທຸລະກິດ ຂະຫນາດ ກາງ-ຂະຫນາດນ້ອຍ ແລະ ການຜະລິດເປັນສິນຄ້າ ຂອງ ປະຊາຊົນ ບໍ່ທັນເປັນລະບົບຢ່າງຈະແຈ້ງ; ເສດຖະກິດຮ່ວມມື ຂອງປະຊາຊົນ ທີ່ກໍ່ຕົວຂຶ້ນຢູ່ຫລາຍທ້ອງຖິ່ນ ບໍ່ທັນມີຄວາມຫມັ້ນທ່ຽງ, ຍ້ອນຂາດ ການຊ່ວຍຫນູນ ດ້ວຍນະໂຍບາຍດ້ານທຶນຮອນ, ພາສີ-ອາກອນ, ສິນເຊື່ອ ແລະ ການຕະຫລາດ.

❹ ການພັດທະນາສັງຄົມ ມີບາງດ້ານບໍ່ທັນສົມດູ່ ກັບການພັດທະນາເສດຖະກິດ; ການ ພັດທະນາຊັບພະຍາກອນມະນຸດ ບໍ່ທັນສາມາດຕອບສະຫນອງ ຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງການພັດທະນາ; ການສ້າງຄວາມສີວິໄລທາງດ້ານຈິດໃຈບໍ່ສົມດູ່ກັບຄວາມຈະເລີນທາງດ້ານ ວັດຖຸ ແລະ ການປ່ຽນແປງ ຂອງສັງຄົມ; ຄວາມແຕກ ໂຕນດ້ານລາຍໄດ້ ແລະ ລະດັບການພັດທະນາ ລະຫວ່າງບໍລິເວນຕ່າງໆ, ຊັ້ນຄົນຕ່າງໆ ແລະ ລະຫວ່າງຕົວເມືອງ ກັບຊົນນະບົດ ເຂດຫ່າງໄກສອກ ຫລີກ ມີທ່າອ່ຽງເພີ່ມຂຶ້ນ.

❺ ການປະຕິບັດພາລະບົດບາດ ຂອງບັນດາອົງການສິດອຳນາດແຫ່ງລັດ ຍັງບໍ່ທັນຄົບ ຖ້ວນເລິກເຊິ່ງ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດຫມາຍ; ການຄຸ້ມຄອງລັດ, ຄຸ້ມ ຄອງສັງຄົມ ມີຫລາຍດ້ານບໍ່ທັນສັກສິດ ແລະ ເຂັ້ມງວດຕາມທີ່ລະບຸໄວ້ໃນກົດຫມາຍ. ການສະ ຫນອງການບໍລິການ ຂອງອົງການລັດຂັ້ນຕ່າງໆ ໃຫ້ ແກ່ພົນລະເມືອງ ບໍ່ທັນສະດວກວ່ອງໄວ; ລະບົບ ການຈັດຕັ້ງກົງຈັກ, ລະບຽບການ ແລະ ກົນໄກການເຄື່ອນໄຫວ ໃນບາງດ້ານມີລັກສະນະອາດຍາ

ສິດ, ບໍ່ໂປ່ງໃສ ແລະ ທັງເປັນຊ່ອງຫວ່າງ ໃຫ້ແກ່ການສວຍໂອກາດສໍ້ລາດບັງຫລວງ.

❻ ການປັບປຸງປ່ຽນແປງຮູບການເຄື່ອນໄຫວ ຂອງອົງການແນວລາວສ້າງຊາດ ແລະ ບັນດາອົງການຈັດຕັ້ງມະຫາຊົນ ຍັງມີຄວາມຊັກຊ້າ, ກົດຈະກຳທີ່ສ້າງຂຶ້ນ ຍັງບໍ່ທັນຕອບສະໜອງໄດ້ກັບຄວາມສົນໃຈ ກໍຄື ຜົນປະໂຫຍດຕົວຈິງ ຂອງບັນດາຊັ້ນຄົນ ແລະ ເພດໄວ; ເນື້ອໃນ ແລະ ວິທີການເຄື່ອນໄຫວ ຍັງຊ້ຳຊ້ອນ ຫລື ຄ້າຍຄື ກັບອົງ ການບໍລິຫານລັດ; ບາງອົງການຈັດຕັ້ງ ເກືອບວ່າ ບໍ່ມີການເຄື່ອນໄຫວຢູ່ໃນຂັ້ນຮາກຖານ.

❼ ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງໃນດ້ານຕ່າງໆ ກ່ຽວກັບວຽກງານການຕ່າງປະເທດ ຍັງຊັກຊ້າ, ຂາດການຕິດຕາມກວດກາ ແລະ ສະຫລຸບຕີລາຄາ ທີ່ເປັນລະບົບ; ຄວາມເປັນເຈົ້າການ ໃນການປະສານງານ ແລະ ຊຸກຍູ້ ບໍ່ທັນແຂງແຮງ; ການຄຸ້ມຄອງ ໂຄງການຊ່ວຍເຫລືອ, ກູ້ຢືມ ແລະ ການຊີ້ນຳ ການເຄື່ອນໄຫວຕ່າງປະເທດ ຍັງບໍ່ທັນຮັບປະກັນລັກສະນະລວມສູນ ເປັນເອກະພາບ; ການປະສານສົມທົບ ລະຫວ່າງການເຄື່ອນໄຫວ ດ້ານການເມືອງ-ການທູດ ກັບດ້ານເສດຖະກິດ-ການຄ້າ-ການລົງທຶນ ຍັງບໍ່ທັນແໜ້ນ ແລະ ບໍ່ທັນຊ່ວຍເສີມຂະຫຍາຍຄຸນປະໂຫຍດຂອງກັນ ແລະ ກັນໄດ້ຢ່າງສົມຄູ່.

❽ ວຽກງານກໍ່ສ້າງພັກ, ກໍ່ສ້າງພະນັກງານ ມີບາງດ້ານຍັງບໍ່ທັນເລິກເຊິ່ງ ແລະ ບໍ່ທັນຕອບສະໜອງການເລັ່ງໜວງ ຂອງໜ້າທີ່ການເມືອງ ແລະ ການຄຸ້ມຄອງ-ບໍລິຫານລັດ ໃນເງື່ອນໄຂໃໝ່ໄດ້; ການປະຕິບັດທິດນຳ, ຫລັກການກໍ່ສ້າງພັກ ຍັງບໍ່ທັນເຂັ້ມງວດ; ການເສີມຂະຫຍາຍປະຊາທິປະໄຕ ພາຍໃນພັກ ຍັງຂາດກົນໄກອັນຈະແຈ້ງ. ຄະນະພັກກະຊວງ-ອົງການຂັ້ນສູນກາງ ແລະ ທ້ອງຖິ່ນຈຳນວນໜຶ່ງ ປະຕິບັດຫລັກການລວມສູນປະຊາທິປະໄຕ ບໍ່ທັນດີ. ຄວາມຮັບຜິດຊອບ, ຄວາມທ້າວທັນກະຕືລືລົ້ນ ໃນການເຮັດວຽກງານບໍ່ທັນດີ, ການຕໍ່ສູ້ພາຍໃນພັກ ບໍ່ທັນເລິກເຊິ່ງ ແລະ ແຂງແຮງ, ແນວຄິດຈົ່ງຈຽມ ຍັງແຜ່ຫລາຍ, ການລົງວິໄນຕໍ່ຜູ້ກະທຳຜິດ ຍັງບໍ່ທັນເດັດຂາດເຂັ້ມງວດ; ສະມາຊິກພັກຈຳນວນບໍ່ໜ້ອຍ ເສື່ອມຖອຍດ້ານຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ, ຕິດແສດ ແບບແຜນຫລິ້ນກົນຝູມເຝືອຍ, ສວຍໂອກາດ, ສໍ້ລາດບັງຫລວງ.

ຄ. <u>ສາເຫດ ຂອງຂໍ້ຄົງຄ້າງ</u>.

ບັນດາຂໍ້ຄົງຄ້າງທີ່ກ່າວມານັ້ນ ມີ<u>ສາເຫດນອກຕົວ ແລະ ໃນຕົວ</u> ຫລາຍຢ່າງ; ແຕ່ໃນນີ້ ໃຫ້ຖືສຳຄັນ ແລະ ທຳຄວາມເຂົ້າໃຈໃຫ້ເລິກເຊິ່ງ ກ່ຽວກັບ<u>ສາເຫດໃນຕົວຂອງພວກເຮົາ</u> ວ່າມີອັນໃດແດ່ ເພື່ອແກ້ໄຂ ເປັນຕົ້ນ :

❶ ການຈັດຕັ້ງເຜີຍແຜ່ຮ່ຳຮຽນ ແລະ ການຄົ້ນຄວ້າກຳແໜ້ນແນວທາງ ຂອງພັກ ເວົ້າ

ລວມ ກໍຄື ມະຕິກອງປະຊຸມໃຫຍ່ຄັ້ງທີ VIII ເວົ້າສະເພາະ ຍັງບໍ່ທັນມີການກຳນົດເປັນລະບອບການ ເພື່ອປະຕິບັດຢ່າງເຂັ້ມງວດ; ການຄົ້ນຄວ້າຜັນຂະຫຍາຍ ເປັນ ແຜນງານ ແລະ ເປັນໂຄງການ ຂອງຂະ ແໜງການສູນກາງ ແລະ ທ້ອງຖິ່ນ ບໍ່ເລິກເຊິ່ງ ແລະ ບໍ່ແທດຕົວຈິງ.

❷ ການຈັດສັນທຶນຮອນ ບໍ່ຖືກກັບແຜນງານ ແລະ ໂຄງການຈຸດສຸມທີ່ເປັນທ່າແຮງເຮັດໃຫ້ ການປະຕິບັດຊັກຊ້າ ແກ່ຍາວ ແລະ ມີປະສິດທິຜົນຕ່ຳ; ການຄຸ້ມຄອງ, ຊີ້ນຳ-ບັນຊາ, ຕິດຕາມກວດ ກາ ບໍ່ແທດເຖິງ ແລະ ເປັນປະຈຳ.

❸ ຄວາມເປັນເຈົ້າການ ປະດິດສ້າງ, ທັດສະນະກ້າຄິດ, ກ້າເຮັດ ແລະ ກ້າຮັບຜິດຊອບ ຍັງບໍ່ທັນສູງແທ້ ຍ້ອນວ່າ ກົນໄກ ແລະ ລະບຽບການ ຫລາຍອັນບໍ່ສອດຄ່ອງ ແລະ ບໍ່ແທດຕົວຈິງ; ພະນັກງານ, ສະມາຊິກພັກ ຈຳນວນໜຶ່ງ ບໍ່ທັນເຊີດຊູຄວາມເປັນແບບຢ່າງນຳໜ້າ ແລະ ຄວາມ ຮັບຜິດຊອບ ໃນການປະຕິບັດມະຕິຂອງພັກ ແລະ ຄຳສັ່ງຂອງລັດ.

❹ ຈຳນວນ ແລະ ຄຸນນະພາບ ຂອງລັດຖະກອນ ຍັງບໍ່ທັນຕອບສະໜອງຄວາມຮຽກຮ້ອງ ຕ້ອງການຂອງວຽກງານໃນໄລຍະໃໝ່, ການສັບຊ້ອນຈັດວາງພະນັກງານເພີ່ມໃຫ້ທ້ອງຖິ່ນ, ຣາກ ຖານຍັງເຮັດໄດ້ໜ້ອຍ; ການກຳນົດພາລະບົດບາດ, ໜ້າທີ່ ແລະ ສິດ ຂອງອົງການຈຳນວນໜຶ່ງ ບໍ່ຈະແຈ້ງ, ເຮັດໃຫ້ການເຄື່ອນໄຫວ ແລະ ການຊີ້ນຳ-ບັນຊາຊ້ຳຊ້ອນກ້າວກ່າຍກັນ; ເງິນເດືອນ ແລະ ການປະຕິບັດນະໂຍບາຍດ້ານຕ່າງໆ ຕໍ່ລັດຖະກອນ ຍັງບໍ່ທັນເໝາະສົມກັບຄ່າຄອງຊີບ ແລະ ບໍ່ເປັນການກະຕຸກຊຸກຍູ້ ທາງດ້ານຈິດໃຈ; ຄວາມຮັບຜິດຊອບ ໃນການນຳພາ-ຊີ້ນຳ ແລະ ການ ປະສານສົມທົບ ລະຫວ່າງ ສາຍຕັ້ງ-ສາຍຂວາງ ກ່ຽວກັບການຄຸ້ມຄອງພະນັກງານວິຊາການ ທີ່ປະ ຈຳຢູ່ທ້ອງຖິ່ນ ຍັງບໍ່ທັນກົມກຽວກັນຢ່າງໜັກແໜ້ນ. ການບຳລຸງຍົກລະດັບຄວາມຮູ້ຄວາມສາ ມາດ ແລະ ຄຸນທາດການເມືອງ ໃຫ້ແກ່ພະນັກງານ ຍັງບໍ່ທັນຕິດພັນກັບການທົດສອບໃນຂະບວນ ການວຽກງານຕົວຈິງ ຢ່າງເປັນລະບົບ.

๑. <u>ຂໍ້ສະຫລຸບເປັນບົດຮຽນ ຈາກການຈັດຕັ້ງປະຕິບັດຕົວຈິງ</u>.

ໃນມະຕິ IX ໄດ້ມີການສະຫລຸບບັນຫາສຳຄັນ ຈຳນວນໜຶ່ງ ເປັນ 5 ບົດຮຽນ ກ່ຽວກັບ ການນຳພາ ການຈັດຕັ້ງປະຕິບັດແນວທາງ ຂອງພັກ; ບົດຮຽນທັງ 5 ຂໍ້ນີ້ ລ້ວນແຕ່ມີຄວາມໝາຍ ສຳຄັນ ສຳລັບການສືບຕໍ່ນຳພາ-ຊີ້ນຳ ຂອງພັກເຮົາ ກໍຄື ຂອງຄະນະພັກ ຂັ້ນຕ່າງໆ. ສະນັ້ນ ຕ້ອງຄົ້ນ ຄວ້າສ້າງຄວາມເຂົ້າໃຈໃຫ້ເລິກເຊິ່ງ ກ່ຽວກັບບົດຮຽນເຫລົ່ານັ້ນ ຄື :

ບົດຮຽນທີໜຶ່ງ: ການເພີ່ມທະວີຄວາມສາມັກຄີ ເປັນອັນໜຶ່ງອັນດຽວ ຂອງທົ່ວປວງຊົນລາວ ແລະ ຄວາມເປັນເອກະພາບ ພາຍໃນພັກ ເປັນປັດໄຈພື້ນຖານ ເພື່ອຮັບປະກັນສະຖຽນລະພາບທາງ

ການເມືອງ-ສັງຄົມ, ການປະຕິບັດສອງໜ້າທີ່ຍຸດທະສາດ ປົກປັກຮັກສາ ແລະ ພັດທະນາປະເທດ ຊາດ ກໍຄື ການເຊື່ອມໂຍງກັບສາກົນໃຫ້ບັນລຸຜົນສຳເລັດ.

ບົດຮຽນທີສອງ: ການເພີ່ມທະວີບົດບາດ ແລະ ຄວາມສາມາດນຳພາ ຂອງພັກ ຢ່າງສົມຄູ່ ຕໍ່ທຸກວຽກງານ ເປັນຕົ້ນ ແມ່ນການນຳພາ-ຊີ້ນຳ ອົງການລັດ ໃນການຜັນຂະຫຍາຍແນວທາງ ແລະ ທິດທາງໜ້າທີ່ລວມ ຂອງພັກ ອອກເປັນແຜນງານ, ໂຄງການລະອຽດຢ່າງຖືກຕ້ອງ ແລະ ທັນການ ທັງສອດຄ່ອງກັບຈຸດພິເສດ ແລະ ທ່າແຮງຂອງແຕ່ລະບ່ອນ, ໄປຄວບຄູ່ ກັບການຮູ້ເສີມຂະຫຍາຍ ກຳລັງແຮງ ຂອງບັນດາພາກສ່ວນເສດຖະກິດ ແລະ ມູນເຊື້ອ ຂອງປະຊາຊົນບັນດາເຜົ່າ, ບັນດາຊັ້ນຄົນ ເຂົ້າຮ່ວມຈັດຕັ້ງປະຕິບັດ ແມ່ນເງື່ອນໄຂສຳຄັນແຫ່ງຜົນສຳເລັດ ຂອງການຈັດຕັ້ງປະຕິບັດແນວທາງ ຂອງພັກ.

ບົດຮຽນທີສາມ: ການຊີ້ນຳ, ບັນຊາ ຢ່າງເປັນເອກະພາບ ແລະ ແທດເຖິງຕົວຈິງ ຂອງຄະນະພັກ ແຕ່ລະຂັ້ນ ແລະ ແຕ່ລະຂະແໜງການ ບວກກັບຄວາມເອົາໃຈໃສ່ບຳລຸງສ້າງ ແລະ ເສີມຂະຫຍາຍຄວາມຮູ້ ຄວາມສາມາດ ຂອງພະນັກງານ, ເຊີດຊູຄວາມເປັນແບບຢ່າງນຳໜ້າ ຂອງສະມາຊິກພັກ ພະນັກງານ ໃນການປະຕິບັດໜ້າທີ່ ດ້ວຍຄວາມຮັບຜິດຊອບສູງ ແມ່ນສິ່ງຄ້ຳປະກັນໃຫ້ການຈັດຕັ້ງປະຕິບັດມະຕິ ແນວທາງຂອງພັກ ໃຫ້ມີຜົນສຳເລັດ.

ບົດຮຽນທີສີ່: ການຫັນລົງຮາກຖານ, ຕິດແທດກັບຕົວຈິງ, ດຳເນີນການຕິດຕາມກວດກາ ປະເມີນຜົນ ການຈັດຕັ້ງປະຕິບັດ ຢ່າງເປັນລະບົບປົກກະຕິ, ເບິ່ງບັນຫາຕາມຄວາມເປັນຈິງ, ມີຄວາມສະດຸ້ງໄວ ແລະ ມີຄວາມຕັດສິນໃຈສູງ ໃນການແກ້ໄຂ; ດຳເນີນການຍ້ອງຍໍສັນລະເສີນ ແລະ ປະຕິບັດນະໂຍບາຍອັນເໝາະສົມ ຕໍ່ຜູ້ທີ່ເຮັດວຽກດີມີຜົນງານ, ລົງວິໄນຕໍ່ຜູ້ກະທຳຜິດ ຢ່າງເດັດຂາດເຂັ້ມງວດ ແລະ ທັນການ ເປັນມາດຕະການອັນສຳຄັນ ຂອງການຈັດຕັ້ງປະຕິບັດແນວທາງ ຂອງພັກ ໃຫ້ມີຜົນສຳເລັດ.

ບົດຮຽນທີຫ້າ: ການຢຶດໝັ້ນ ແນວທາງການຕ່າງປະເທດສັນຕິພາບ, ເອກະ ລາດ ມິດຕະພາບ ແລະ ຮ່ວມມື ຢ່າງສະເໝີຕົ້ນສະເໝີປາຍ ຕິດແໜ້ນກັບການເຊີດຊູຄວາມຕັ້ງໜ້າເປັນເຈົ້າການ ໃນການປັບປຸງພາຍໃນ ໃຫ້ມີຄວາມເຂັ້ມແຂງ, ສ້າງສະພາບແວດລ້ອມທີ່ອຳນວຍ, ທັງປະຕິບັດຄຳໝັ້ນສັນຍາ ທີ່ປະເທດເຮົາ ມີກັບຕ່າງປະເທດ ແມ່ນປັດໄຈອັນຈຳເປັນ ແລະ ຂາດບໍ່ໄດ້ ສຳລັບການຮັກສາບົດບາດເປັນຄູ່ຮ່ວມມືທີ່ກ້າວໜ້າໄວ້ວາງໃຈ ຂອງພວກເຮົາ ຕໍ່ເພື່ອນມິດສາກົນ, ທັງເຮັດໃຫ້ພວກເຮົາ ສາມາດຍາດແຍ່ງກຳລັງແຮງ ຈາກພາຍນອກ ໄດ້ນັບມື້ນັບເພີ່ມຂຶ້ນ ສຳລັບການປະຕິບັດແນວທາງ ຂອງພັກ ໃຫ້ມີຜົນສຳເລັດ.

ຂໍ້ສະຫລຸບ ທີ່ເປັນບົດຮຽນຈາກພຶດຕິກຳ ແຫ່ງການນຳພາຂອງພັກເຮົາທັງ 5 ຂໍ້ນີ້ ມີຄວາມ ຫມາຍສຳຄັນທີ່ສຸດ; ສະມາຊິກພັກ, ພະນັກງານພວກເຮົາ ແຕ່ລະຄົນຕ້ອງກຳແຫນ້ນ ແລະ ນຳໃຊ້ ເຂົ້າກັບເງື່ອນໄຂຕົວຈິງ ໃນຊຸມປີຕໍ່ຫນ້າ ໃຫ້ເຫມາະສົມ.

ສະຫາຍ ຈູມມາລີ ໄຊຍະສອນ
ເລຂາທິການໃຫ່ຍ ຄະນະບໍລິຫານງານສູນກາງພັກ, ປະທານປະເທດແຫ່ງ ສປປ ລາວ
ລົງຊີ້ນຳການສ້າງເຂດຈຸດສຸມພັດທະນາຢູ່ຜາລະແວກ ເມືອງຮ່ຶມ ແຂວງວຽງຈັນ.

ພາກທີ II

ບັນດາທິດທາງຫນ້າທີ່ຈຸດສຸມໃນ 5 ປີ ຕໍ່ຫນ້າ (2011-2015).

ກ. <u>ຄາດຫມາຍຍຸດທະສາດ ຮອດປີ 2020 ແລະ 2015</u>.

❶ ກອງປະຊຸມໃຫຍ່ຄັ້ງທີ IX ໄດ້ຢືນຢັນ ຄາດຫມາຍຍຸດທະສາດ ດັ່ງນີ້: ເມື່ອ ຮອດປີ 2020 ປະເທດຂອງພວກເຮົາ ຕ້ອງຫລຸດພົ້ນຈາກຄວາມດ້ອຍພັດທະນາ.

ພັກເຮົາ ກໍານົດຍຸດທະສາດຄືແນວນັ້ນ ກໍຍ້ອນວ່າ :

- ຜ່ານໄລຍະ 35 ປີ ແຫ່ງການສ້າງສາພັດທະນາ ໂດຍສະເພາະ ແມ່ນ 25 ປີ ແຫ່ງການປ່ຽນແປງໃຫມ່ມານີ້ ທ່າ ແລະ ກໍາລັງແຮງຕົວຈິງ ຂອງປະເທດເຮົາ ໄດ້ເຕີບໃຫຍ່ເຂັ້ມແຂງຂຶ້ນ ຢ່າງຈະແຈ້ງ, ແຕ່ປະເທດເຮົາ ກໍຍັງບໍ່ທັນຫລຸດພົ້ນຈາກກຸ່ມປະເທດດ້ອຍພັດທະນາເທື່ອ.

- ເພາະສະນັ້ນ ການເຮັດໃຫ້ປະເທດເຮົາ ຫລຸດພົ້ນຈາກຄວາມດ້ອຍພັດທະນາ ຈຶ່ງແມ່ນພາລະຫນ້າທີ່ອັນສໍາຄັນຍິ່ງ ສໍາລັບທົ່ວພັກ ແລະ ທົ່ວປວງຊົນເຮົາ. ຖ້າຫາກປະເທດເຮົາ ບໍ່ຫລຸດພົ້ນຈາກຄວາມດ້ອຍພັດທະນາ ໃນປີ 2020 ລະດັບຄວາມແຕກໂຕນ ດ້ານການພັດທະນາ ລະຫວ່າງປະເທດເຮົາ ກັບບັນດາປະເທດໃນພາກພື້ນອາຊີອາຄະເນ ແລະ ປະເທດອື່ນໆ ທີ່ພັດທະນາແລ້ວ ຍິ່ງຈະຫ່າງອອກຕື່ມອີກ; ປະເທດເຮົາ ຍິ່ງຈະຈົມເລິກຢູ່ໃນຄວາມຫລ້າຫລັງ, ປະຊາຊົນເຮົາ ຈໍານວນຫລວງຫລາຍຍັງຈະຢູ່ໃນສະພາບທຸກຍາກຂາດເຂີນ, ປະເທດເຮົາ ຈະຢູ່ໃນສະພາບທີ່ອ່ອນນ້ອຍ-ດ້ອຍກຽດສັກສີ ຊໍ້າໃນທີ່ສຸດປະເທດອື່ນ ຈະບໍ່ໃຫ້ຄວາມສໍາຄັນ ແລະ ກາຍເປັນປະເທດທີ່ຖືກລືມ.

- ການເຮັດໃຫ້ປະເທດພວກເຮົາ ຫລຸດພົ້ນຈາກຄວາມດ້ອຍພັດທະນາ ໃນປີ 2020 ແມ່ນພາລະກໍາອັນຍິ່ງໃຫຍ່ ແລະ ມີລັກສະນະທ້າທາຍ; ສະນັ້ນ ພວກເຮົາທຸກຄົນ ຕ້ອງເຂົ້າຮ່ວມດ້ວຍຄວາມຕັດສິນໃຈສູງ ແລະ ເຮັດແທ້ທໍາຈິງ.

❷ ເພື່ອບັນລຸຄາດຫມາຍຍຸດທະສາດ ເຮັດໃຫ້ປະເທດເຮົາ ຫລຸດພົ້ນຈາກຄວາມດ້ອຍພັດທະນາ ໃນປີ 2020, ພວກເຮົາ ຕ້ອງສູ້ຊົນປະຕິບັດໃຫ້ເປັນຈິງ ຄາດຫມາຍ ຕົ້ນຕໍຈໍານວນຫນຶ່ງ ສໍາລັບໄລຍະຮອດປີ 2015 ດັ່ງນີ້ :

ຫນຶ່ງ: ສະຖຽນລະພາບທາງດ້ານການເມືອງ ມີຄວາມຫນັກແຫນ້ນ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ ໂດຍພື້ນຖານ.

ອັນນີ້ ຫມາຍຄວາມວ່າ ຕະຫລອດໄລຍະ 5 ປີ ຕໍ່ຫນ້ານີ້ໃນທົ່ວປະເທດຂອງພວກເຮົາຕ້ອງບໍ່ມີເຫດການອຸ້ນວາຍ ທາງການເມືອງໃດໆເກີດຂຶ້ນ, ລະບົບການເມືອງປະຊາທິປະໄຕປະຊາຊົນ ຊໍ້າ

ມີພັກເຮົາເປັນແກນນຳ ຕ້ອງມີຄວາມຫນັກແຫນ້ນແຕ່ຮາກຖານຂຶ້ນມາ, ປະຊາຊົນບັນດາເຜົ່າ ມີເງື່ອນໄຂເສີມຂະຫຍາຍສິດເປັນເຈົ້າ ຂອງປະເທດຊາດ ໄດ້ຫລາຍຂຶ້ນ, ທັງມີຄວາມສາມັກຄີປອງດອງ ເປັນພື້ນຖານໃຫ້ແກ່ຄວາມເປັນປຶກແຜ່ນ ຂອງຊາດເຮົາ.

ສອງ: ເສດຖະກິດແຫ່ງຊາດ ຂະຫຍາຍຕົວຕໍ່ເນື່ອງ ແລະ ຫມັ້ນທ່ຽງ, ການພັດທະນາ ຕ້ອງຫັນໄປຕາມທິດທີ່ຍືນຍົງ ດ້ວຍການເຮັດໃຫ້ການພັດທະນາ ທາງດ້ານສັງຄົມ-ວັດທະນະທຳ ດຳເນີນໄປຄຽງຄູ່ກັບການພັດທະນາ ທາງດ້ານເສດຖະກິດ ແລະ ຕິດ ພັນກັບການຮັກສາສິ່ງແວດລ້ອມ.

ການບັນລຸຄາດຫມາຍນີ້ ຕ້ອງສະແດງອອກ ຢູ່ໃນການເພີ່ມຂຶ້ນຂອງລວມຍອດມູນຄ່າຜະລິດຕະພັນພາຍໃນ ຢ່າງຕໍ່ເນື່ອງ ໃນລະດັບ 8% ຂຶ້ນໄປ ໃນແຕ່ລະປີ, ເມື່ອຮອດປີ 2015 ສະເລ່ຍລວມຍອດມູນຄ່າຜະລິດຕະພັນພາຍໃນ ຕໍ່ຫົວຄົນ ໃຫ້ໄດ້ 1.700 ໂດລາ (ຫລື ເທົ່າກັບ 13.613.600 ກີບ ຕາມອັດຕາແລກປ່ຽນ ປີ 2010); ມີແຕ່ຮັບປະກັນ ໃຫ້ ການເຕີບໂຕບັນລຸລະດັບ 8% ຂຶ້ນໄປ ຈຶ່ງເວົ້າໄດ້ວ່າ ການຂະຫຍາຍຕົວມີຄວາມຫມັ້ນທ່ຽງ ແລະ ຕໍ່ເນື່ອງ, ເມື່ອຮອດປີ 2020 ປະເທດເຮົາ ຈຶ່ງຈະຫລຸດພົ້ນຈາກສະພາວະປະເທດດ້ອຍພັດທະນາໄດ້. ພ້ອມກັນນັ້ນ ພວກເຮົາ ກໍຕ້ອງເຮັດໃຫ້ລາຍໄດ້ຕົວຈິງ ຂອງຄອບຄົວປະຊາຊົນ ໂດຍສະເພາະ ແມ່ນຜູ້ຢູ່ໃນເຂດຊົນນະບົດ, ເຂດພູດອຍຊົນເຜົ່າ ເພີ່ມຂຶ້ນເພື່ອສາມາດຫລຸດພົ້ນຈາກຄວາມທຸກຍາກ ແລະ ມີຊີວິດການເປັນຢູ່ດີຂຶ້ນ.

- ຫັນການພັດທະນາ ໄປຕາມທິດທີ່ຍືນຍົງ; ຫມາຍຄວາມວ່າ ໄປຄຽງຄູ່ກັບການເຮັດໃຫ້ເສດຖະກິດມີການເຕີບໂຕຢ່າງຕໍ່ເນື່ອງ ໃນລະດັບ 8% ຂຶ້ນໄປ ໃນແຕ່ລະປີນັ້ນ, ພວກເຮົາ ຍັງຕ້ອງເອົາໃຈໃສ່ ພັດທະນາຂະແຫນງການອື່ນໆ ຢ່າງສົມດູ່ ໂດຍສະເພາະ ແມ່ນຂະແຫນງສັງຄົມ-ວັດທະນະທຳ, ຊຶ່ງໃນນັ້ນ ແມ່ນຖືເອົາການພັດທະນາການສຶກສາ ແລະ ກໍ່ສ້າງຄົນເປັນໃຈກາງ; ໃນຂະນະດຽວກັນ ກໍຕ້ອງເພີ່ມທະວີການຄຸ້ມຄອງ ແລະ ປົກປັກຮັກສາ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃຫ້ດີ; ມີການຂຸດຄົ້ນ ແລະ ນຳໃຊ້ ຢ່າງລະມັດລະວັງ ແລະ ມີປະສິດທິຜົນສູງ; ເດັດຂາດເຂັ້ມງວດ ໃນການຈຳກັດ ແລະ ແກ້ໄຂການຕັດໄມ້ທຳລາຍປ່າ, ການລ່າສັດປ່າ ແລະ ການຂຸດຄົ້ນຊັບພະຍາກອນທຳມະຊາດແບບຊະຊາຍ ໂດຍບໍ່ໄດ້ຮັບອະນຸຍາດ ຢ່າງຖືກຕ້ອງຕາມລະບຽບກົດຫມາຍ.

ສາມ: ເມື່ອຮອດປີ 2015 ອັດຕາສ່ວນຄອບຄົວທຸກຍາກ ຍັງເຫລືອບໍ່ເກີນ 10% ຂອງຈຳນວນຄອບຄົວ ໃນທົ່ວປະເທດ (ໃນປີ 2010, ອັດຕາສ່ວນ ຂອງຄອບຄົວທຸກຍາກ ຢູ່ປະເທດເຮົາ ມີປະມານ 20,4%). ອັນນີ້ ເປັນຄາດຫມາຍທີ່ທ້າທາຍ; ຖ້າບໍ່ບຸກບືນດ້ວຍຄວາມພະຍາຍາມສູງສຸດ ແລະ ບໍ່ມີວິທີການທີ່ເປັນລະບົບຄົບຊຸດ ກໍຈະບໍ່ສາມາດປະຕິບັດໃຫ້ເປັນຈິງໄດ້. ສະນັ້ນ ທຸກກະຊວງ-ອົງການສູນກາງ ແລະ ທຸກທ້ອງຖິ່ນຕ້ອງສຸມຫມົດກຳລັງແຮງ ເພື່ອເຮັດໃຫ້ມັນໄດ້; ໃນແຕ່ລະປີຕ້ອງ

ໃຫ້ຫລຸດລົງໃນລະດັບ 3% ຂຶ້ນໄປ.

- ປະຕິບັດລະບອບການສຶກສາຊັ້ນປະຖົມ ແບບບັງຄັບ ໃຫ້ເປັນຈິງ ແລະ ໃຫ້ພົນລະເມືອງ ສ່ວນໃຫຍ່ ມີລະດັບການສຶກສາຈົບມັດທະຍົມຕອນຕົ້ນ ແລະ ມີອາຍຸຍືນ ສະເລ່ຍ 68,3 ປີ, ຫລຸດ ຜ່ອນ ການເສຍຊີວິດຂອງແມ່ ແລະ ເດັກ.

ອັນນີ້ ແມ່ນສິ່ງສຳຄັນ ສຳລັບການບັນລຸຄາດໝາຍສະຫັດສະວັດ ດ້ານການ ພັດທະນາ ໃນ ປີ 2015. ໝາຍຄວາມວ່າ ຕ້ອງໃຫ້ເດັກທີ່ຢູ່ໃນໄວຮຽນ ຕ້ອງໄດ້ຮຽນຈົບປະຖົມຫມົດ (ລວມທັງ ຜູ້ຢູ່ ຊົນນະບົດ ຫ່າງໄກສອກຫລີກ); ຕ້ອງເຮັດໃຫ້ຄົນລາວເຮົາ ເກີນກວ່າເຄິ່ງຫນຶ່ງ ມີຄວາມຮູ້ຈົບຊັ້ນມັດ ທະຍົມ 4. ພ້ອມກັນນັ້ນ ກໍຕ້ອງເອົາໃຈໃສ່ຕໍ່ການສົ່ງເສີມສຸຂະພາບ ແລະ ການກັນພະຍາດ ເພື່ອໃຫ້ ຄົນລາວເຮົາ ມີອາຍຸຍືນກວ່າເກົ່າ; ໃນນັ້ນ ຕ້ອງຫລຸດຜ່ອນການຕາຍ ຂອງແມ່ຍິງ ໃນຍາມເກີດລູກ ດ້ວຍການສ້າງເງື່ອນໄຂ ແລະ ປະຕິບັດນະໂຍບາຍ ໃຫ້ໄປເກີດລູກຢູ່ໂຮງຫມໍ ຫລື ຢູ່ສຸກສາລາ ໂດຍ ບໍ່ເສຍຄ່າໃດໆ; ເບິ່ງແຍງສຸຂະພາບ ຂອງແມ່ຍິງຖືພາ ແລະ ແມ່ລູກອ່ອນ; ເອົາໃຈໃສ່ຕໍ່ການລ້ຽງລູກ ດ້ວຍການໃຫ້ກິນນ້ຳນົມຂອງແມ່, ສັກຢາ ແລະ ຢອດຢາກັນພະຍາດ ໃຫ້ຄົບຖ້ວນ ແລະ ຖືກຕ້ອງ ຕາມກຳນົດເວລາ; ພໍ່ແມ່ ຕ້ອງນຳເອົາລູກນ້ອຍຂອງຕົນ ໄປກວດກາສຸຂະພາບ ເອົາໃຈໃສ່ຕໍ່ການລ້ຽງ ດູ ແລະ ຮັກສາສຸຂະພາບຂອງລູກ; ທຸກພາກສ່ວນ, ທຸກທ້ອງຖິ່ນຕ້ອງປົກປັກຮັກສາ ແລະ ເສີມຂະ ຫຍາຍວັດທະນະທຳອັນດີງາມຂອງຊາດ ແລະ ຂອງທຸກໆເຜົ່າລາວ ຢ່າງຕັ້ງຫນ້າ, ເຮັດໃຫ້ວັດທະນະ ທຳແຫ່ງຊາດ ນັບມື້ນັບອຸດົມຮັ່ງມີ.

ສີ: ສ.ປ.ປ ລາວ ມີເພື່ອນມິດສາກົນຢ່າງກ້ວາງຂວາງ ສາມາດເຂົ້າຮ່ວມໃນຂະບວນວິວັດ ແຫ່ງການເຊື່ອມໂຍງພາກພື້ນ ແລະ ສາກົນ ໄດ້ຢ່າງເປັນເຈົ້າການ, ທັງມີການປະກອບສ່ວນອັນຕັ້ງ ຫນ້າໃນພາລະກິດສັນຕິພາບ, ມິດຕະພາບ ແລະ ການຮ່ວມ ມືພັດທະນາ ໃນພາກພື້ນ ແລະ ໃນໂລກ.

ເພື່ອບັນລຸຄາດໝາຍດັ່ງກ່າວ, ພວກເຮົາ ຕ້ອງຍຶດຫມັ້ນໃນແນວທາງການຕ່າງ ປະເທດສັນ ຕິພາບ, ເອກະລາດ, ມິດຕະພາບ ແລະ ຮ່ວມມື ຢ່າງສະເຫມີຕົ້ນສະເຫມີປາຍ, ຕັ້ງຫນ້າເປັນເຈົ້າການ ສົ່ງເສີມການພົວພັນຮ່ວມມື ກັບຕ່າງປະເທດ ແບບຫລາຍທິດ, ຫລາຍຝ່າຍ, ຫລາຍລະດັບ ແລະ ຫລາຍຮູບແບບ ບົນພື້ນຖານຫລັກການ ເຄົາລົບເຊິ່ງກັນແລະກັນ ຕ່າງຝ່າຍຕ່າງມີຜົນປະໂຫຍດ. ສືບຕໍ່ ປົກປັກຮັກສາ ແລະ ເສີມຂະຫຍາຍ ມູນເຊື້ອ ແຫ່ງຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ກັບ ສ.ສ ຫວຽດ ນາມ, ເສີມຂະຫຍາຍສາຍພົວພັນທີ່ເປັນມູນເຊື້ອ ກັບ ສ.ປ ຈີນ ບົນຈິດໃຈເປັນຄູ່ຮ່ວມມື ຍຸດທະສາດຮອບດ້ານ ແລະ ຍາວນານ; ຮັດແຫນ້ນການພົວພັນ, ຮ່ວມມື ກັບປະເທດໃກ້ຄຽງ ທີ່ມີຊາຍ ແດນຮ່ວມກັນ ແລະ ເຂົ້າຮ່ວມການເຄື່ອນໄຫວ ໃນຂອບເຂດອາຊຽນ ຕາມຫລັກການກົດບັດອາຊຽນ.

ຄາດໝາຍສູ້ຊົນ ທີ່ກອງປະຊຸມໃຫຍ່ຄັ້ງທີ IX ວາງອອກນີ້ ແມ່ນມີລັກສະນະທ້າທາຍ ຕໍ່ບົດ ບາດ ແລະ ຄວາມສາມາດນຳພາ ຂອງພັກເຮົາ ຊຶ່ງຕ້ອງໄດ້ບຸກບືນສູ້ຊົນ ດ້ວຍການຂຸດຄົ້ນ ປຸກລະ ດົມ ກຳລັງແຮງສັງລວມສຸດຂີດ ຈຶ່ງປະຕິບັດໄດ້. ມີແຕ່ນຳພາປະຕິບັດຄາດໝາຍເຫລົ່ານັ້ນ ໃຫ້ເປັນ ຈິງ, ພັກເຮົາ ຈຶ່ງຮັກສາກຽດສັກສີ ແລະ ບົດບາດເປັນແກນນຳ ກໍຄື ລັກສະນະນຳໜ້າຂອງຕົນ ໄວ້ໄດ້; ມີແຕ່ເຮັດແນວນັ້ນ ພັກເຮົາ ຈຶ່ງເປັນພັກກຳອຳນາດ ແລະ ເປັນຕົວແທນໃຫ້ແກ່ຜົນປະໂຫຍດ ຂອງ ຊົນຊັ້ນກຳມະກອນ, ຂອງຊາວຜູ້ອອກແຮງງານ ແລະ ຂອງທັງຫມົດຊາດລາວ ໄດ້ຢ່າງສົມກຽດ; ມີ ແຕ່ເຮັດໄດ້ແນວນັ້ນ ຖານະກຳອຳນາດ ຂອງພັກເຮົາ ຈຶ່ງມີຄວາມໜັ້ນຄົງ.

ຂ. <u>ສ້າງບາດກ້າວບຸກທະລຸ ໃຫ້ເປັນຈິງ ທັງ 4 ດ້ານ</u>.

ກອງປະຊຸມໃຫຍ່ຄັ້ງທີ IX ໄດ້ກຳນົດວ່າ: ຖ້າຢາກປະຕິບັດບັນດາຄາດໝາຍສູ້ຊົນເທິງນັ້ນ ໃຫ້ເປັນຈິງ, ພັກເຮົາ ຕ້ອງເພີ່ມທະວີບົດບາດ ແລະ ຄວາມສາມາດນຳພາ ຕໍ່ທຸກຂົງເຂດວຽກງານໂດຍ ຍຶດໝັ້ນໃນ 6 ຫລັກການປ່ຽນແປງໃຫມ່, ທັງຕ້ອງມີຄວາມ ເດັດດ່ຽວ ປະດິດສ້າງ ໃນການຂຸດຄົ້ນກຳ ລັງແຮງສັງລວມ ແລະ ນຳໃຊ້ການລະໂອກາດ ແລະ ສ້າງບາດກ້າວບຸກທະລຸ ໃນການພັດທະນາ ໃຫ້ ເປັນຈິງ. ກ່ອນອື່ນ ຕ້ອງບຸກທະລຸ **ທາງດ້ານຈິນຕະນາການ; <u>ສອງ</u>, ບຸກທະລຸຢ່າງແຂງແຮງ ດ້ານການ ພັດທະນາຊັບພະຍາກອນມະນຸດ** ໂດຍສະເພາະ ແມ່ນການບຳລຸງສ້າງ ແລະ ຍົກລະດັບຄວາມຮູ້ ຄວາມສາມາດ ຂອງພະນັກງານ; <u>ສາມ</u>, ບຸກທະລຸ ດ້ານການແກ້ໄຂລະບຽບການບໍລິຫານ-ຄຸ້ມຄອງ ທີ່ຍັງກີດໜ່ວງ; <u>ສີ່</u>, ບຸກທະລຸ ດ້ານການແກ້ໄຂຄວາມທຸກຍາກ.

✪ *ການສ້າງບາດກ້າວບຸກທະລຸ ມີຄວາມສຳຄັນຫລາຍ; ສະນັ້ນ ຕ້ອງເຂົ້າໃຈໃຫ້ຖືກຕ້ອງ-ຄົບຖ້ວນ ແລະ ມີຄວາມຕັດສິນໃຈເຮັດແທ້ ຈຶ່ງໄດ້ :*

ການບຸກທະລຸ ຫມາຍເຖິງການຜ່ານ້ຳ ສິ່ງອັດຕັນ, ກີດຂວາງ ກີດໜ່ວງ ເພື່ອກ້າວເຂົ້າສູ່ ສະພາບໃຫມ່ ທີ່ອຳນວຍໃຫ້ແກ່ການພັດທະນາ, ສະນັ້ນ ການບຸກທະລຸໃນ**ດ້ານໜຶ່ງ** ແມ່ນຫມາຍເຖິງ ການທຳລາຍ ຫລື ຜ່ານ້ຳ ສິ່ງທີ່ອັດຕັນ, ສິ່ງທີ່ກີດຂວາງ ກີດໜ່ວງ; **ດ້ານທີ<u>ສອງ</u>** ແມ່ນຫມາຍເຖິງ ການສ້າງລວມທ່າແຮງໃນດ້ານຕ່າງໆ ແລ້ວເສີມຂະຫຍາຍມັນຢ່າງແຂງແຮງ ເພື່ອຍູ້ການພັດທະນາ ໃຫ້ມີ ບາດກ້າວໃຫມ່ທີ່ເດັ່ນຊັດ ແລະ ຖືກທິດ.

ກ່ອນໜ້ານີ້ ພັກເຮົາ ກໍໄດ້ນຳພາສ້າງບາດກ້າວບຸກທະລຸ ມາເທື່ອໜຶ່ງແລ້ວ ນັ້ນຄືການປ່ຽນ ແປງໃຫມ່ ພາຍໃຕ້ການນຳພາລິເລີ່ມ ຂອງ **ປະທານ ໄກສອນ ພົມວິຫານ**. ການປ່ຽນແປງໃຫມ່ ໄດ້ ສ້າງບາດກ້າວບຸກທະລຸ ຜ່ານ້ຳງຈິນຕະນາການ ແລະ ກົນໄກເກົ່າ ທີ່ຈຳກັດຮັດແຄບກຳລັງແຮງສັງ ລວມຂອງຊາດ ເຂົ້າໃນການພັດທະນາ ໄປສູ່ຈິນຕະນາການໃຫມ່ ແລະ ກົນໄກໃຫມ່ ທີ່ສ້າງໂອກາດ

ແລະ ເງື່ອນໄຂ ໃຫ້ແກ່ປະຊາຊົນພົນລະເມືອງ ກໍຄື ທຸກພາກສ່ວນເສດຖະກິດ ໄດ້ເຂົ້າຮ່ວມໃນການພັດທະນາເສດຖະກິດ-ສັງຄົມ ຂອງປະເທດ ຢ່າງຕັ້ງໜ້າ, ຊາວນາ ກໍບໍ່ໄດ້ທຳມາຫາກິນແບບລວມ ຫມູ່ເປັນສະຫະກອນ; ສິ່ງເສີມແຕ່ລະຄອບຄົວ ທຳການຜະລິດໃຫ້ໄດ້ຫລາຍ ແລະ ເອົາໄປຂາຍກໍໄດ້.

ແຕ່ໃນຊຸມປີຫລັງມານີ້ ໄດ້ສັງເກດເຫັນວ່າ ມີບາງທ້ອງຖິ່ນ, ບາງຂະແໜງການ ໄດ້ອອກລະບຽບການຄຸ້ມຄອງທີ່ຂັດຂວາງ-ກີດໜ່ວງ ການສືບຕໍ່ປ່ຽນແປງໃຫມ່ໃຫ້ມີຫມາກມີຜົນ, ທັງສ້າງຄວາມຫຍຸ້ງຍາກ ລຳບາກ ລຳຄານ ແກ່ປະຊາຊົນ ແລະ ຜູ້ປະກອບ ການຜະລິດທຸລະກິດ ເປັນຕົ້ນ ແມ່ນການອອກລະບຽບການເກັບຄ່າຕ່າງໆ ແລະ ການຕັ້ງດ່ານ ຢູ່ຕາມຖະໜົນຫົນທາງ ເພື່ອກວດກາສິນຄ້າ, ກວດລົດ, ກວດຄົນ ແລ້ວເລັ່ງໜວງໃຫ້ເສຍເງິນ, ບາງກໍລະນີ ກໍມີການປັບໃຫມດ້ວຍເຫດຜົນຕ່າງໆ ທີ່ບໍ່ສອດຄ່ອງກັບ ລະບຽບກົດໝາຍ.

ສະນັ້ນ ມີຄວາມຈຳເປັນ ຕ້ອງສ້າງບາດກ້າວບຸກທະລຸຄັ້ງໃຫມ່ຕື່ມອີກ ແນໃສ່ລຶບລ້າງແນວຄິດ ຈິນຕະນາການເກົ່າ ທີ່ຍັງຄົງຄ້າງ ກໍຄື ກຳຈັດກົນໄກ ແລະ ລະບຽບການຕ່າງໆ ທີ່ອັດຕັນ, ກີດໜ່ວງ ການພັດທະນາ.

ເນື້ອໃນ ຂອງການສ້າງບາດກ້າວບຸກທະລຸ ທັງ 4 ດ້ານ.

ໜຶ່ງ: *ຕ້ອງບຸກທະລຸໃຫ້ໄດ້ ທາງດ້ານຈິນຕະນາການ.*

ການບຸກທະລຸ ທາງດ້ານຈິນຕະນາການ ໃນໄລຍະໃຫມ່ນີ້ ກ່ອນອື່ນໝົດ ແມ່ນການລຶບລ້າງແນວຄິດ ແລະ ຄວາມເຄີຍຊິນແບບເກົ່າ ຂີ້ຄ້ານ ມັກງ່າຍ ຊຶ່ງແມ່ນກຳແພງອັດຕັນຄວາມກ້າວໜ້າໃນການທຳມາຫາກິນ ກໍຄື ກີດໜ່ວງຜົນສຳເລັດ ໃນການ ເຮັດວຽກງານ, **ເຊັ່ນຕົວຢ່າງ:** ແນວຄິດແລະຄວາມເຄີຍຊິນເກົ່າ ທີ່ບໍ່ຢາກປ່ຽນແນວພັນເຂົ້າ; ເຮັດນາ ເຄີຍໃສ່ເຂົ້າອັນໃດມາແຕ່ພໍ່ແຕ່ແມ່ ກໍເຮັດຕາມນັ້ນ, ບໍ່ປ່ຽນແປງຈັກເທື່ອ; ຜູ້ໃດມາເວົ້າ ມາແນະນຳ ກໍບໍ່ປ່ຽນ. ອັນນີ້ ຕ້ອງບຸກທະລຸໃຫ້ໄດ້ ເພື່ອໃຫ້ຊາວນາຜູ້ນັ້ນ ປ່ຽນໄປໃຊ້ແນວເຂົ້າປັບປຸງ ທີ່ໃຫ້ຜົນຜະລິດຫລາຍກວ່າ ແລະ ເຂົ້າ ມີຄຸນນະພາບ ດີກວ່າ; ຫລື ຕົວຢ່າງອື່ນໆອີກ (ໃຫ້ຍົກຂຶ້ນມາສົມທຽບ-ຢັ້ງຢືນ ໂດຍສອດຄ່ອງກັບສະພາບ ຂອງແຕ່ລະບ່ອນ).

ສອງ: *ຕ້ອງບຸກທະລຸຢ່າງແຂງແຮງ ດ້ານການພັດທະນາຊັບພະຍາກອນມະນຸດ.*

- ຄວາມຫມາຍຂອງຄຳວ່າ ຊັບພະຍາກອນມະນຸດ ນັ້ນ ແມ່ນກວມເອົາສະເພາະ ບຸກຄະລາກອນ ທີ່ເຮັດວຽກອອກແຮງງານ ດ້ວຍເຫື່ອແຮງ ແລະ ມັນສະໝອງ ເປັນຕົ້ນ ແມ່ນລັດຖະກອນ, ກຳມະກອນ, ກະສິກອນ, ນາຍຊ່າງ, ຜູ້ບໍລິຫານ-ຄຸ້ມຄອງ, ນັກວິຊາການ...

- ສະນັ້ນ ການບຸກທະລຸໃນດ້ານນີ້ ຕ້ອງມີຈຸດສຸມ **ຕົວຢ່າງ:**

+ ຕ້ອງແກ້ໄຂໃຫ້ຕົກ ສະພາບຂາດແຄນພະນັກງານ ຫລື ສະພາບມີພະນັກງານ " ເຫລືອບໍ່ພໍ ",

ຕ້ອງຮັບປະກັນ ໃຫ້ມີພະນັກງານພຽງພໍ ສຳລັບຂົງເຂດວຽກງານທີ່ຈຳເປັນ ສຳລັບການແກ້ໄຂບັນຫາ ຄວາມທຸກຍາກ ຂອງປະຊາຊົນ ແລະ ການບັນລຸຄາດໝາຍ ສະຫັດສະວັດ ດ້ານການພັດທະນາ ໃນ ປີ 2015, ຮັບປະກັນ ໃຫ້ການພັດທະນາເຂດຈຸດສຸມ ກຸ່ມບ້ານ ແລະ ການສ້າງບ້ານພັດທະນາ ໃນ ຊຸມປີສະເພາະໜ້າ ແລະ ຍາວນານ ມີຜົນສຳເລັດຕາມຄາດໝາຍ. ສະນັ້ນ ຕ້ອງຮັບປະກັນ ໃຫ້ມີຄູອາ ຈານ, ແພດໝໍ ແລະ ພະຍາບານ, ນັກວິຊາການ ດ້ານການປູກຝັ່ງ-ລ້ຽງສັດ ແລະ ສັດຕະວະແພດ ເພື່ອ ໄປເຮັດວຽກປະຈຳຢູ່ບ້ານ, ເຂດຈຸດສຸມ ກຸ່ມບ້ານຕ່າງໆ, ໃຫ້ພະນັກງານເຫລົ່ານັ້ນ ເຮັດໜ້າທີ່ແນະ ນຳຊ່ວຍເຫລືອປະຊາຊົນ ໃນການຜະລິດ ແລະ ແກ້ໄຂຄວາມທຸກຍາກ ເພື່ອບັນລຸເປົ້າໝາຍສະຫັດ ສະວັດ ດ້ານການພັດທະນາ ໃນປີ 2015. ພວກເຮົາ ຕ້ອງບຸກທະລຸຂອດທີ່ອັດຕັນ, ກີດໜ່ວງ ໃນ ດ້ານນີ້ໃຫ້ໄດ້ ດ້ວຍການບຳລຸງສ້າງພະນັກງານກັບທີ່ ແລະ ສະໜອງຈຳນວນຕົວເລກພະນັກງານ ເຫລົ່ານີ້ ໄວ້ສະເພາະສຳລັບຕອບສະໜອງຄວາມຕ້ອງການ ຂອງຮາກຖານ.

+ ບຸກທະລຸ ດ້ານການຍົກສູງຄຸນນະພາບ ແລະ ຄຸນທາດ ຂອງພະນັກງານ; ດ້ວຍການເພີ່ມ ທະວີ ວຽກງານສຶກສາອົບຮົມ ການເມືອງ-ແນວຄິດ, ຝຶກອົບຮົມ ຍົກລະດັບພະນັກງານ ໃຫ້ສູງຂຶ້ນໃນ ທຸກດ້ານ ເປັນຕົ້ນ ມານະຈິດປະຕິວັດ, ນ້ຳໃຈທ້າວທັນ ແລະ ບຸກບືນສູ້ຊົນ ໃນການເຮັດວຽກ, ເສີມ ສ້າງທັດສະນະຄະຕິ ແລະ ນ້ຳໃຈຮັບໃຊ້ປະຊາຊົນ ດ້ວຍຄວາມຊື່ສັດ ຈົງໃຈໄປຄຽງຄູ່ກັບການກຳຈັດປະ ກິດການຫຍໍ້ທໍ້ຕ່າງໆ ໃຫ້ຫລຸດໜ້ອຍລົງ.

ສາມ: ຕ້ອງບຸກທະລຸ ໃນການແກ້ໄຂລະບອບລະບຽບການ ບໍລິຫານ-ຄຸ້ມຄອງ ຂອງລັດ ທີ່ ຍັງກີດໜ່ວງ ການທຳມາຫາກິນຜະລິດເປັນສິນຄ້າ ຂອງປະຊາຊົນ ກໍຄື ການຜະລິດທຸລະກິດ ແລະ ການບໍລິການ ຂອງຜູ້ປະກອບການ-ນັກລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ຕົກໄປຢ່າງຂາດຕົວ, ສ້າງເງື່ອນໄຂສະດວກ ໃຫ້ແກ່ການເຄື່ອນໄຫວຂອງເຂົາເຈົ້າ ໃນການສ້າງຜົນຜະລິດໃຫ້ນັບ ມື້ນັບຫລາຍ ເປີດກ້ວາງການບໍລິການ ທີ່ມີຫລາຍຮູບຫລາຍສີ, ໃຫ້ຊາວໄຮ່ ຊາວນາ ແລະ ຜູ້ທຳ ມາຄ້າຂາຍ ຢູ່ໃນເຂດຊົນນະບົດ ສາມາດເອົາເຄື່ອງຂອງທີ່ຜະລິດໄດ້ ໄປຂາຍຢ່າງສະດວກ, ປາສະຈາກ ການສ້າງສິ່ງກີດຂວາງ ແລະ ການກວດກາ ເກັບຄ່າຕ່າງໆ ທີ່ບໍ່ຈຳເປັນ.

ສີ: *ຕ້ອງບຸກທະລຸ ໃນດ້ານການແກ້ໄຂຄວາມທຸກຍາກ ຂອງປະຊາຊົນ.*

ຄວາມທຸກຍາກ ແມ່ນບັນຫາໃຫຍ່ທີ່ເປັນພື້ນຖານກວ່າໝູ່ ຂອງປະເທດເຮົາ. ແກ້ໄຂຄວາມທຸກ ຍາກ ແມ່ນພາລະໜ້າທີ່ສຳຄັນ ທີ່ພັກເຮົາ ຕ້ອງນຳພາແກ້ໄຂໃຫ້ໄດ້. ເພື່ອສ້າງການບຸກທະລຸໃນດ້ານນີ້ ໃຫ້ເປັນຈິງ, ພວກເຮົາ ຕ້ອງສຸມໃສ່ບາງວຽກທີ່ສຳຄັນ ຄື :

❶ ຕ້ອງກຳແໜ້ນຈຳນວນຄອບຄົວທຸກຍາກ ແຕ່ລະບ້ານ, ແຕ່ລະເມືອງ, ແຕ່ລະແຂວງວ່າມີທໍ່

ໃດແທ້; ໂດຍສະເພາະ ແມ່ນຢູ່ແຕ່ລະບ້ານ ແຕ່ລະຮາກຖານ; ສຳຄັນ ແມ່ນຕ້ອງກຳໃຫ້ໄດ້ວ່າ ສາເຫດ ຂອງຄວາມທຸກຍາກ ຂອງແຕ່ລະຄອບຄົວ ແມ່ນອັນໃດແທ້; ຈາກນັ້ນ ຕ້ອງມີການຄົ້ນຄວ້າກຳນົດວິທີການ ແກ້ໄຂ ໃຫ້ແທດເໝາະກັບແຕ່ລະເປົ້າໝາຍຄອບຄົວ ຕາມເງື່ອນໄຂຂອງແຕ່ລະບ້ານ ແຕ່ລະຮາກຖານ.

❷ ຕ້ອງສຶກສາອົບຮົມ ປຸກລະດົມ, ອະທິບາຍຊີ້ແຈງ ໃຫ້ຄອບຄົວນັ້ນ ເຂົ້າໃຈ ແລະ ມີຄວາມຕື່ນ ຕົວເປັນເຈົ້າການ ແກ້ໄຂຄວາມທຸກຍາກພາຍໃນຄອບຄົວຂອງຕົນ ບົນພື້ນຖານການສະໜັບສະໜູນ ຊ່ວຍເຫລືອ ຂອງບ້ານ ກໍຄື ໜ່ວຍງານຕ່າງໆທີ່ກ່ຽວຂ້ອງ.

❸ ນຳເອົາຄວາມຮູ້ ໄປໃຫ້ປະຊາຊົນ ໂດຍເລີ່ມຈາກການສອນໃຫ້ຮູ້ອ່ານ ຮູ້ຂຽນ, ຮູ້ອະນາໄມ ກັນພະຍາດ, ຮູ້ບຳລຸງຮັກສາສຸຂະພາບ, ຄວາມຮູ້ດ້ານການທຳມາຫາກິນເປັນວິຊາຊີບ ເຊັ່ນ: ຄວາມ ຮູ້ດ້ານການປູກຝັງ-ລ້ຽງສັດ ແລະ ຄວາມຮູ້ອື່ນໆ.

❹ ພັດທະນາພື້ນຖານໂຄງລ່າງ ຮັບໃຊ້ການຜະລິດ ຊີວິດການເປັນຢູ່ ຂອງປະຊາຊົນ ບົນ ພື້ນຖານການຂຸດຄົ້ນ ເສີມຂະຫຍາຍທ່າແຮງ ຂອງແຕ່ລະທ້ອງຖິ່ນ, ແຕ່ລະບໍລິເວນ.

❺ ສົ່ງເສີມໃຫ້ເກີດມີການຈັດຕັ້ງການຜະລິດ ແລະ ການບໍລິການ ສ້າງລາຍໄດ້ເຂົ້າຄອບຄົວ ບົນພື້ນຖານການນຳໃຊ້ທ່າແຮງກັບທີ່ ແລະ ມີການລົງທຶນຢ່າງເໝາະສົມ ແລະ ມີການຊີ້ນຳຊ່ວຍ ເຫລືອ ແນະນຳຢ່າງໃກ້ຊິດ.

❻ ມີການຈັດຕັ້ງຊີ້ນຳ ແຕ່ເທິງຮອດຮາກຖານ ແລະ ມີການກຳນົດເຂດຈຸດສຸມພັດທະນາແກ້ ໄຂຄວາມທຸກຍາກ ໃຫ້ຈະແຈ້ງ ເປັນຕົ້ນ ເຂດຈຸດສຸມພັດທະນາທີ່ຫມັ້ນປະຕິວັດ, ເຂດຈຸດສຸມດ້ານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເຂດສະຫງວນຊັບພະຍາກອນທຳມະຊາດ ແລະ ສິ່ງແວດ ລ້ອມ, ເຂດຈັດສັນພູມລຳເນົາ ແລະ ບ່ອນທຳມາຫາກິນຄົງທີ່...

❼ ເລັ່ງລັດຄົ້ນຄວ້າ ອອກນະໂຍບາຍ ແລະ ມາດຕະການ ສົ່ງເສີມເປັນພິເສດ ຕໍ່ການລົງທຶນ ຂອງນັກລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃນໂຄງການຕ່າງໆ ໂດຍສະເພາະ ແມ່ນໂຄງການ ປູກຝັງ-ລ້ຽງສັດ ແລະ ປຸງແຕ່ງ ຢູ່ໃນເຂດທີ່ຍັງທຸກຍາກ ແລະ ຕ້ອງປະຕິບັດຢ່າງຈິງຈັງ.

ພວກເຮົາ ຕ້ອງເຂົ້າໃຈນຳກັນວ່າ ການບຸກທະລຸໃນແຕ່ລະດ້ານ ດັ່ງທີ່ໄດ້ກ່າວມານັ້ນ ຕ້ອງໄດ້ ດຳເນີນໄປພ້ອມໆກັນ ຢ່າງກົມກຽວ, ບໍ່ແມ່ນບຸກທະລຸພຽງດ້ານໃດດ້ານຫນຶ່ງທໍ່ນັ້ນ. ອັນສຳຄັນ ແມ່ນ ຄະນະພັກ ແລະ ອຳນາດການປົກຄອງ ທຸກຂັ້ນ ຕ້ອງນຳພາ, ບັນຊາ ເຮັດຕົວຈິງ ຢ່າງເປັນເອກະພາບ ແລະ ແທດເຖິງ.

ຄ. <u>ໜ້າທີ່ ແລະ ວຽກງານຈຸດສຸມ ດ້ານເສດຖະກິດ</u>.

ກອງປະຊຸມໃຫຍ່ຄັ້ງທີ IX ໄດ້ວາງໜ້າທີ່ ແລະ ທິດທາງວຽກງານຈຸດສຸມ ທາງດ້ານເສດຖະກິດ

ສຳລັບ 5 ປີ ຕໍ່ໜ້າ (2011 - 2015) ຢ່າງເປັນລະບົບ. ພວກເຮົາຕ້ອງເຊື່ອມຊຶມກຳແໜ້ນ, ທັງ ຕ້ອງເປັນເຈົ້າການ ຜັນຂະຫຍາຍເປັນໂຄງການລະອຽດ ຕາມພາລະບົດບາດ ແລະ ຄວາມຮັບຜິດ ຊອບຂອງຕົນ, ຈາກນັ້ນ ຕ້ອງສຸມທຸກກຳລັງ ຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ ແນໃສ່ສ້າງບາດ ກ້າວບຸກທະລຸ ໃນການພັດທະນາໃຫ້ເປັນຈິງ.

1. ສືບຕໍ່ຢຶດໝັ້ນ ເອົາການພັດທະນາເສດຖະກິດ ເປັນໃຈກາງ.

- ມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ໄດ້ເນັ້ນໜັກວ່າ: " ສືບຕໍ່ຢຶດໝັ້ນ ເອົາການພັດທະນາເສດຖະກິດ ເປັນໃຈກາງ ". ອັນນີ້ ແມ່ນການຢືນຢັນທີ່ຖືກຕ້ອງ ໃນເງື່ອນໄຂປັດຈຸບັນ ຂອງປະ ເທດເຮົາ ເພາະວ່າ ປະເທດຊາດ ຈະມັ່ງຄັ່ງເຂັ້ມແຂງ, ປະຊາຊົນ ຈະຮັ່ງມີຜາສຸກ ຫລືບໍ່ນັ້ນ ລ້ວນ ແຕ່ຂຶ້ນກັບເຫງົ້າພະລັງ ຫລື ກຳລັງຕົວຈິງທາງດ້ານເສດຖະກິດ ເປັນອັນຕັດສິນ.

ປະເທດເຮົາ ເປັນປະເທດນ້ອຍ ຍັງດ້ອຍພັດທະນາ, ສະນັ້ນ ຈຶ່ງມີຄວາມຈຳເປັນ ພັດທະນາ ເສດຖະກິດ ເພື່ອໃຫ້ມີເງື່ອນໄຂທາງດ້ານວັດຖຸ, ມີກຳລັງແຮງດ້ານການເງິນ ຮອງຮັບໃຫ້ແກ່ການພັດ ທະນາດ້ານອື່ນໆ; ເພາະວ່າ ຖ້າບໍ່ມີພື້ນຖານເສດຖະກິດ ທີ່ເຂັ້ມແຂງ ກໍບໍ່ມີເງື່ອນໄຂທາງດ້ານວັດຖຸ ສຳລັບການພັດທະນາຂົງເຂດສັງຄົມ-ວັດທະນະທຳ ແລະ ບໍ່ມີເງື່ອນໄຂດ້ານງົບປະມານ ສຳລັບໃຊ້ ຈ່າຍເປັນເງິນເດືອນ ຂອງພະນັກງານ, ທະຫານ, ຕຳຫລວດ ແລະ ການແກ້ໄຂຄວາມທຸກຍາກ ເພື່ອ ປັບປຸງຍົກສູງຊີວິດການເປັນຢູ່ ຂອງປະຊາຊົນ ໃຫ້ດີຂຶ້ນໄດ້.

✪ ຖືການພັດທະນາເສດຖະກິດ ເປັນໃຈກາງ, ບໍ່ໄດ້ຫມາຍຄວາມວ່າ ຕ້ອງປະລະການ ພັດທະນາດ້ານອື່ນ ຫລື ມີແຕ່ພັດທະນາເສດຖະກິດດ້ານດຽວທໍ່ນັ້ນ. ພັກເຮົາໄດ້ຢືນຢັນຕະຫລອດ ມາວ່າ ຕ້ອງພັດທະນາຂົງເຂດສັງຄົມ-ວັດທະນະທຳ ໄປຄຽງຄູ່ກັບການພັດທະນາ ຂົງເຂດເສດຖະ ກິດ, ຕ້ອງສ້າງຄວາມສີວິໄລທາງດ້ານຈິດໃຈ ໄປຄຽງຄູ່ກັບການສ້າງຄວາມຢູ່ດີກິນດີ ທາງດ້ານວັດຖຸ, ຕ້ອງພັດທະນາທັງສອງດ້ານ ປະສົມປະສານກັນໄປ, ເຮັດໃຫ້ມີການພົວພັນຊ່ວຍຊູຍູ້ໜູນເຊິ່ງກັນ ແລະກັນ. ແຕ່ໃນຊຸມປີຕໍ່ຫນ້ານີ້ຍັງຈຳເປັນ ຕ້ອງເອົາການພັດທະນາເສດຖະກິດເປັນໃຈກາງ ແລະ ເຮັດໃຫ້ການພັດທະນາເສດຖະກິດ ມີປະສິດທິຜົນສູງ ຈຶ່ງຈະມີເງື່ອນໄຂຕອບສະຫນອງຄວາມຕ້ອງ ການ ຂອງການພັດທະນາດ້ານອື່ນໆໄດ້ດີຂຶ້ນ, ລວມທັງຮັບປະກັນ ການຂະຫຍາຍຕົວຮອບດ້ານໃຫ້ ແກ່ຄົນເຮົາໃນອະນາຄົດ.

2. ຫັນເສດຖະກິດທຳມະຊາດ ໄປສູ່ເສດຖະກິດສິນຄ້າ. ການທີ່ພັກເຮົາເນັ້ນບັນຫານີ້ ກໍເນື່ອງ ຈາກວ່າ ພື້ນຖານເສດຖະກິດຂອງປະເທດເຮົາ ຍັງແມ່ນເສດຖະກິດກະສິກຳ ທີ່ອີງໃສ່ທຳມະຊາດ ແລະ ເຮັດແບບກຸ້ມຕົນເອງ ພາຍໃນຄອບຄົວເປັນສ່ວນຫລາຍ; ການອອກແຮງງານຜະລິດ ແລະ

ການນຳໃຊ້ເຕັກນິກ ກໍແມ່ນແບບປະຖິ້ມປະຖານ ເປັນອັນແຜ່ຫລາຍ, ຍ້ອນແນວນັ້ນ ການຜະລິດ ຈຶ່ງມີສະມັດຖະພາບຕ່ຳ, ເຮັດຫລາຍ ຈຶ່ງໄດ້ພໍກຸ້ມກິນ, ສ່ວນທີ່ເຫລືອຂາຍ ກໍຫນ້ອຍ; ການຜະລິດ ຂອງຫລາຍຄອບຄົວ ບໍ່ມີການຂະຫຍາຍຕົວ ເຮັດນາເຮັດໄຮ່ຫລາຍປີ ກໍຍັງຄືເກົ່າ, ຊີວິດການເປັນຢູ່ ຂອງປະຊາຊົນ ຈຳນວນບໍ່ຫນ້ອຍ ຍັງທຸກຍາກຂາດເຂີນ.

ສະຫາຍ ບຸນຍັງ ວໍລະຈິດ

ກຳມະການກົມການເມືອງ, ຜູ້ປະຈຳການ ຄະນະເລຂາທິການສູນກາງພັກ, ຮອງປະທານປະເທດ

ຢ້ຽມຢາມເບິ່ງການປູກຊາເປັນສິນຄ້າຂອງປະຊາຊົນແຂວງຜົ້ງສາລີ

- ຕ້ອງຫັນເສດຖະກິດທຳມະຊາດ ໄປສູ່ເສດຖະກິດສິນຄ້າ ຈຶ່ງຈະແກ້ໄຂຄວາມທຸກຍາກແລະ ສ້າງຄວາມພໍກິນພໍໃຊ້ພາຍໃນຄອບຄົວ ຂອງປະຊາຊົນ ສ່ວນຫລວງຫລາຍໄດ້. ສະນັ້ນ ຕ້ອງຫັນ ປ່ຽນຄວາມເຄີຍຊິນເກົ່າ ດ້ານການຜະລິດ ຂອງຊາວໄຮ່ນາ ໄປສູ່ຮູບການ ແລະ ວິທີການຜະລິດ ທີ່ກ້າວຫນ້າ ມີປະສິດທິຜົນ ດ້ວຍການນຳໃຊ້ວິທະຍາສາດ ວິທະຍາການ ເຂົ້າໃນການຜະລິດ, ເຮັດຫນ້ອຍ ແຕ່ໄດ້ຫລາຍ ຫລືເຮັດຊ້ຳເກົ່າ ແຕ່ໄດ້ຜົນຫລາຍກວ່າເກົ່າ ຈົນເຫລືອກິນ, ມີສ່ວນເຫລືອ ໄວ້ຂາຍ ແລະ ສະສົມໄວ້; ເຮັດແນວນັ້ນ ແມ່ນການຫັນສູ່ການຜະລິດເປັນສິນຄ້າ ເພື່ອຂາຍເອົາ ເງິນເປັນລາຍໄດ້ເຂົ້າຄອບຄົວ. ການຜະລິດເປັນສິນຄ້າ ແມ່ນການຜະລິດ ເພື່ອເອົາຜົນຜະລິດໄປ

ຂາຍ; ສະນັ້ນ ຜົນຜະລິດທີ່ອອກມາ ຕ້ອງມີຈຳນວນຫລາຍເຫລືອກິນ ແລະ ມີຄຸນນະພາບ ເປັນທີ່ຍອມຮັບຂອງຜູ້ຊື້, ຜົນຜະລິດ ຈຶ່ງຈະສາມາດຂາຍໄດ້; ການຜະລິດເປັນສິນຄ້າ ບໍ່ແມ່ນການຜະລິດເພື່ອໃຫ້ຕົນເອງ ແລະ ຄອບຄົວ, ແຕ່ຫາກແມ່ນການຜະລິດ ເພື່ອຜູ້ຊື້, ຊຶ່ງເປັນຜູ້ຕ້ອງການກິນ, ຕ້ອງການໃຊ້ ຜົນຜະລິດອັນນັ້ນ.

ສະນັ້ນ, ເພື່ອຫັນປ່ຽນເສດຖະກິດທຳມະຊາດ ໄປສູ່ເສດຖະກິດສິນຄ້າ ຕ້ອງປະຕິບັດໃຫ້ເປັນຈິງ ມາດຕະການ ແລະ ນະໂຍບາຍ ຈຳນວນໜຶ່ງ ດັ່ງນີ້:

ໜຶ່ງ: ຕ້ອງຈັດຕັ້ງຝຶກອົບຮົມ ຊາວກະສິກອນ ໃຫ້ຮູ້ເຮັດການຜະລິດ ດ້ວຍການນຳໃຊ້ເຕັກນິກ ວິທະຍາການໃຫມ່ ຫລື ເຮັດກະເສດສຸມ ຍົກສະມັດຖະພາບ ແລະ ຄຸນນະພາບ ຂອງຜົນຜະລິດ ໃຫ້ແທດເໝາະກັບຄວາມຕ້ອງການ ແລະ ສາມາດ ຕອບສະໜອງຄວາມຕ້ອງການ ຂອງຕະຫລາດ ໄດ້ເປັນປົກກະຕິ.

ສອງ: ຕ້ອງສະໜອງທຶນຮອນ ໃຫ້ແກ່ຊາວກະສິກອນ ເພື່ອຊື້ວັດຖຸອຸປະກອນ ຮັບໃຊ້ການຜະລິດ (ແນວພັນ, ຝຸ່ນ, ຢາປາບສັດຕູພືດ, ກົນຈັກ...) ເພື່ອທຳການຜະລິດ ແລະ ເປັນທຶນໝຸນວຽນ, ໂດຍມີການກຳນົດດອກເບ້ຍທີ່ເໝາະສົມ ແລະ ໃຫ້ໄລຍະກູ້ຢືມ ສອດຄ່ອງກັບຮອບວຽນການຜະລິດ ແຕ່ລະປະເພດຜະລິດຕະພັນ.

ສາມ: ມີການຊ່ວຍເຫລືອ ແນະນຳດ້ານວິຊາການ ຢ່າງເປັນປົກກະຕິ ໃຫ້ຊາວກະສິກອນ ກ່ຽວກັບການປູກຝັງ, ລ້ຽງສັດ ແຕ່ລະປະເພດ; ຊ່ວຍປ້ອງກັນ ແລະ ແກ້ໄຂ ກໍລະນີການລະບາດ ຂອງພະຍາດສັດ ແລະ ສັດຕູພືດ.

ສີ: ຕ້ອງມີການເກັບຊື້ຜົນຜະລິດ ຂອງຊາວກະສິກອນ ດ້ວຍລາຄາທີ່ເໝາະສົມ, ຮັບປະກັນ ໃຫ້ເຂົາເຈົ້າມີກຳໄລ, ມີລາຍໄດ້ ເພື່ອສືບຕໍ່ເປີດກ້ວາງການຜະລິດ ແລະ ປັບປຸງຍົກລະດັບຊີວິດການເປັນຢູ່ພາຍໃນຄອບຄົວ ໃຫ້ດີຂຶ້ນ.

ຫ້າ: ຂະຫຍາຍພື້ນຖານໂຄງລ່າງ ຮັບໃຊ້ການຜະລິດ ແລະ ຊີວິດການເປັນຢູ່ (ຖະໜົນຫົນທາງ, ໄຟຟ້າ, ຊົນລະປະທານ, ສຸກສາລາ, ໂຮງຮຽນ, ນ້ຳສະອາດ-ນ້ຳລິນ,...) ໄປສູ່ຊົນນະບົດ.

ຫົກ: ສືບຕໍ່ ມອບດິນ ໃຫ້ແກ່ຊາວກະສິກອນ ເພື່ອໃຫ້ແຕ່ລະຄອບຄົວ ມີທີ່ດິນທຳການປູກຝັງ, ລ້ຽງສັດ ບົນພື້ນຖານການຈັດສັນພູມລຳເນົາຄົງທີ່ ແລະ ຢຸດຕິການຖາງປ່າເຮັດໄຮ່ເລື່ອນລອຍ ໃຫ້ໄດ້; ມີການຈັດຕັ້ງ ເພື່ອຄຸ້ມຄອງ-ປົກປັກຮັກສາ ປ່າໄມ້ ແລະ ບ່ອນທຳມາຫາກິນລວມ ຂອງຊາວບ້ານ.

ເຈັດ: ສະໜອງຂໍ້ມູນຂ່າວສານ ກ່ຽວກັບການປູກ, ການລ້ຽງ ແລະ ການຕະຫລາດ ໃຫ້ແກ່ຊາວກະສິກອນ; ເດັດຂາດ ບໍ່ໃຫ້ມີການສວຍໂອກາດ ເອົາປຽບຜູ້ຜະລິດ ໃນທຸກຮູບແບບ.

3. ການສ້າງເສດຖະກິດຕະຫລາດ ຕາມທິດສັງຄົມນິຍົມ.

ຢູ່ໃນມະຕິກອງປະຊຸມໃຫຍ່ຄັ້ງທີ IX ໄດ້ກຳນົດໄວ້ວ່າ: " ສ້າງເສດຖະກິດຕະຫລາດ ຕາມທິດສັງຄົມນິຍົມ ". ອັນນັ້ນ, ຫມາຍຄວາມວ່າ ຕ້ອງສ້າງເສດຖະກິດຕະຫລາດ ໃຫ້ເປັນໄປຕາມທິດກຳນົດ ພາຍໃຕ້ການຕິດຕາມກວດກາ ແລະ ດັດສົມ ຂອງລັດເຮົານັ້ນ ຄືທິດສັງຄົມນິຍົມ.

ການສ້າງເສດຖະກິດຕະຫລາດ ໄປຕາມທິດສັງຄົມນິຍົມ ຕ້ອງກຳແຫນ້ນ ແລະ ຍຶດຫມັ້ນປະຕິບັດ ບາງວຽກທີ່ສຳຄັນ ດັ່ງນີ້ :

ຫນຶ່ງ : ຕ້ອງຍຶດຫມັ້ນຖືກຳມະສິດ ຂອງລັດ ເປັນພື້ນຖານ ໂດຍສະເພາະ ແມ່ນກຳມະສິດຂອງລັດ ຕໍ່ຊັບສິນສ່ວນລວມ ຂອງວົງຄະນາຍາດແຫ່ງຊາດ. ຊັບສິນສ່ວນລວມ ທີ່ເປັນຂອງວົງຄະນາຍາດແຫ່ງຊາດ ຊຶ່ງມີລັດເປັນຕົວແທນກຳມະສິດນັ້ນ ຍັງມີຫລາຍພໍສົມຄວນ ຢູ່ປະເທດເຮົາ ເຊັ່ນ: ທີ່ດິນ, ປ່າໄມ້, ແຮ່ທາດ, ແມ່ນ້ຳລຳເຊ, ຫ້ວຍຮ່ອງ ຫນອງບຶງ... ເວົ້າລວມ ແມ່ນທຸກສິ່ງທຸກຢ່າງ ທີ່ເກີດຂຶ້ນໃນທຳມະຊາດ ຊຶ່ງບັນພະບູຣຸດເຮົາ ໄດ້ປົກປັກຮັກສາເອົາໄວ້ນັ້ນ ລ້ວນແຕ່**ຕ້ອງເປັນກຳມະສິດຂອງລັດ**. ອັນນີ້ ພວກເຮົາຕ້ອງຍຶດຫມັ້ນ ຖືເປັນກຳມະສິດຂອງລັດ ແລະ ລັດ ຕ້ອງຄຸ້ມຄອງມັນໃຫ້ດີທີ່ສຸດ. ນອກຈາກນີ້ ລັດຕ້ອງຍຶດຫມັ້ນໃນກຳມະສິດ ຕໍ່ຊັບສິນສ່ວນລວມ ທີ່ສ້າງຂຶ້ນດ້ວຍທຶນຮອນ, ງົບປະມານ, ການກູ້ຢືມ ແລະ ການຮ່ວມມືຖືຫຸ້ນຂອງລັດຕື່ມອີກ.

ສອງ: ຕ້ອງສ້າງ ແລະ ປັບປຸງເສດຖະກິດຂອງລັດ ແລະ ລັດວິສາຫະກິດ ໃຫ້ມີປະສິດທິຜົນສູງຂຶ້ນ ສາມາດເປັນກຳລັງແຮງພື້ນຖານ (ຫລື ເປັນເຈົ້າພາຫາງ) ໃນລະບົບເສດຖະກິດແຫ່ງຊາດ. ເພາະວ່າ ເມື່ອໃດເສດຖະກິດຂອງລັດ ກໍຄື ລັດວິສາຫະກິດ ມີປະສິດທິຜົນ ແລະ ມີຄວາມເຂັ້ມແຂງ ເຖິງລະດັບມີບົດບາດເປັນຂໍກຸນແຈ ລັດເຮົາຈຶ່ງຈະມີເງື່ອນໄຂ ຈັດສັນແບ່ງປັນລາຍໄດ້ໄປໃຫ້ເປົ້າຫມາຍຕ່າງໆໃນສັງຄົມ ໄດ້ຢ່າງທົ່ວເຖິງ ແລະ ເປັນທຳ. ສະນັ້ນ ***ໃນມະຕິ IX ຈຶ່ງເນັ້ນຫນັກວ່າ:*** *" ພາກສ່ວນເສດຖະກິດລັດ ແລະ ລັດວິສາຫະກິດ ແມ່ນກຳລັງສຳຄັນອັນຫນຶ່ງ ຂອງລັດເຮົາ ທີ່ຈະຕ້ອງໄດ້ຮັບການປັບປຸງ ກໍ່ສ້າງ ໃຫ້ມີຄວາມເຂັ້ມແຂງ ເພື່ອເປັນກຳລັງແຮງ ຮ່ວມກັບພາກສ່ວນເສດຖະກິດອື່ນໆ ໃນການພັດທະນາເສດຖະກິດ-ສັງຄົມ ຂອງປະເທດ... ລັດວິສາຫະກິດ ຕ້ອງເສີມຂະຫຍາຍຫົວຄິດປະດິດສ້າງ ແລະ ຄວາມຮັບຜິດຊອບ ຢ່າງເຕັມປ່ຽມ ໃນຖານະນິຕິບຸກຄົນ ດຳເນີນການຜະລິດ, ທຸລະກິດ ແລະ ການບໍລິການ ແບບເປັນເຈົ້າຕົນເອງ ຢ່າງຂາດຕົວ, ໂດຍມີຄວາມຮັບຜິດຊອບຢ່າງເຕັມປ່ຽມ ຕໍ່ຜົນໄດ້ຜົນເສຍທັງຫມົດ ໂດຍຕົນເອງ ຕໍ່ຫນ້າກົດຫມາຍ... ຕ້ອງປັບປຸງລັດວິສາຫະກິດ ໃຫ້ມີປະສິດທິຜົນ ແລະ ທັນສະໄຫມ ດ້ວຍມາດຕະການຕ່າງໆ ອັນເຫມາະສົມ ເຊັ່ນ: ທັນໄປສູ່ວິສາຫະກິດປະສົມ ຫລື ຫຸ້ນສ່ວນ, ເອົາວິສາຫະກິດ ທີ່ມີ*

ເງື່ອນໄຂພຽງພໍ ເຂົ້າຕະຫລາດຫລັກຊັບ ".

- ພວກເຮົາ ຍັງຈຳເປັນຕ້ອງຄົ້ນຄວ້າໃຫ້ລະອຽດ ກ່ຽວກັບການສ້າງຕັ້ງລັດວິສາຫະກິດຂຶ້ນໃຫມ່; ບ່ອນໃດມີເງື່ອນໄຂ ແລະ ມີຄວາມສາມາດ ດຳເນີນງານໄດ້ຢ່າງມີປະສິດທິຜົນ ແລະ ເຫັນວ່າ ຈຳເປັນ ສຳລັບການປະຕິບັດໜ້າທີ່ສາທາລະນະປະໂຫຍດ ຊຶ່ງພາກສ່ວນເສດຖະກິດອື່ນ ບໍ່ມີຄວາມສົນໃຈ ຫລື ບໍ່ມີຄວາມສາມາດເຮັດ, ບ່ອນນັ້ນ ລັດເຮົາອາດຈະຕັ້ງລັດວິສາຫະກິດຂຶ້ນ ເພື່ອເຮັດພາລະໜ້າທີ່ສະເພາະ ຮັບໃຊ້ຈຸດປະສົງຂອງລັດ ບົນພື້ນຖານການມີລະບຽບການເຄື່ອນໄຫວ ແລະ ລະບອບການຄຸ້ມຄອງທີ່ຮັດກຸມ ໃນຖານະນິຕິບຸກຄົນ.

ສາມ: ຮັບຮູ້ການຄົງຕົວ ຢ່າງຍາວນານ ຂອງບັນດາພາກສ່ວນເສດຖະກິດ ຖືທຸກພາກສ່ວນເສດຖະກິດ ເປັນກຳລັງແຮງຂອງຊາດ ຕິດພັນກັບການປະຕິບັດນະໂຍບາຍ ສົ່ງເສີມຄຸນປະໂຫຍດ ແລະ ໃຫ້ຄວາມສະເໝີພາບ ຕໍ່ທຸກພາກສ່ວນເສດຖະກິດ ຢ່າງສະເໝີຕົ້ນສະເໝີປາຍ ເປັນຕົ້ນ :

- ຖືສຳຄັນການສົ່ງເສີມ ແລະ ຂະຫຍາຍເສດຖະກິດຮ່ວມມື ຂອງປະຊາຊົນ ຕາມຄວາມສະໝັກໃຈຂອງເຂົາເຈົ້າ ດ້ວຍຮູບການທີ່ເໝາະສົມ ເຊັ່ນ: ການສ້າງກອງທຶນຕ່າງໆ, ສະຫະກອນຜະລິດ ແລະ ບໍລິການ (ສະຫະກອນສິນເຊື່ອ, ສະຫະກອນເກັບຊື້ຜົນຜະລິດ, ກຸ່ມຫັດຖະກຳຈັກສານ, ຕ່ຳຫູກ... ແລະ ອື່ນໆ). ພ້ອມນີ້ ກໍສົ່ງເສີມເສດຖະກິດຄອບຄົວ ເປັນຕົ້ນ ແມ່ນເສດຖະກິດຄອບຄົວແບບເປີດກ້ວາງ ໃຫ້ແຜ່ຫລາຍ.

ສຳລັບພາກສ່ວນເສດຖະກິດເອກະຊົນນັ້ນ ລັດເຮົາ ກໍຊຸກຍູ້ສົ່ງເສີມເຊັ່ນດຽວກັນ ແລະ ພວກເຮົາ ກໍບໍ່ມີຄວາມອະຄະຕິ ຫລື ຈຳແນກພາກສ່ວນນີ້; ຕ້ອງຖືວ່າ ເຂົາເຈົ້າ ກໍແມ່ນອົງປະກອບສຳຄັນອັນໜຶ່ງ ຂອງລະບົບເສດຖະກິດແຫ່ງຊາດ, ທັງເປັນພາກສ່ວນທີ່ມີບົດບາດສຳຄັນ ໃນເສດຖະກິດຕະຫລາດ, ພາກສ່ວນເສດຖະກິດເອກະເທດ ເອກະຊົນ ມີສິດສະເໝີພາບຕໍ່ໜ້າກົດໝາຍ, ເຂົາເຈົ້າ ສາມາດເຄື່ອນໄຫວຜະລິດ-ທຸລະກິດ ໄດ້ໃນທຸກຂະແໜງການ ທີ່ກົດໝາຍບໍ່ຫ້າມ.

ສີ: ລັດ ຕ້ອງປະຕິບັດພາລະບົດບາດ ຄຸ້ມຄອງຕະຫລາດ ເພື່ອເສີມຂະຫຍາຍດ້ານຕັ້ງໜ້າຂອງຕະຫລາດ, ເຮັດໃຫ້ຕະຫລາດ ເປັນຕົວກຳນົດການນຳໃຊ້ທຶນຮອນ, ແຫລ່ງວັດຖຸດິບ ໃຫ້ເກີດມີປະໂຫຍດສູງສຸດ, ທັງກະຕຸກຊຸກຍູ້ຜູ້ປະກອບການ ໃຫ້ມີຄວາມຫ້າວຫັນ ປະດິດສ້າງ ນຳໃຊ້ວິທະຍາສາດ ວິທະຍາການໃຫມ່ ເຂົ້າໃນການຜະລິດທຸລະກິດ ແລະ ການບໍລິການ.

ຫ້າ : ລັດຕ້ອງປະຕິບັດລະບອບການແຈກຢາຍ ທີ່ເໝາະສົມ ແລະ ເປັນທຳ.

ມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ໄດ້ກຳນົດອອກຢ່າງຈະແຈ້ງວ່າ: *"ການດັດສົມການແຈກຢາຍລາຍໄດ້ ໃຫ້ສົມເຫດສົມຜົນ ຕາມທິດຕອບສະໜອງຜົນປະໂຫຍດ ຂອງຜູ້ອອກແຮງງານ, ຂອງຜູ້*

ປະກອບການ, ຂອງລັດ ແລະ ລວມໝູ່ ຢ່າງເປັນທຳ ແລະ ກົມກຽວ,... ເຮັດໃຫ້ການແຈກຢາຍ ກາຍ ເປັນປັດໄຈກະຕຸກຊຸກຍູ້ ແລະ ສົ່ງເສີມການລົງທຶນ, ການອອກແຮງງານ ແລະ ການຄົ້ນຄວ້າ ປະດິດສ້າງ ອັນໃໝ່ ທີ່ກ້າວໜ້າຂຶ້ນເລື້ອຍໆ ເພື່ອກ້າວໄປເຖິງການເສີມສ້າງຄວາມຢູ່ດີ ກິນດີ ໃຫ້ແກ່ປະຊາຊົນຄົນ ສ່ວນໃຫຍ່ ຂອງປະເທດ ແລະ ສາມາດປະຕິບັດນະໂຍບາຍອັນເໝາະສົມ ຕໍ່ຜູ້ທີ່ທຸກຍາກຂາດເຂີນ ແລະ ດ້ອຍໂອກາດ ".

ອັນນີ້ ໝາຍຄວາມວ່າ ການແຈກຢາຍ ຕ້ອງຖືປະສິດທິຜົນເປັນຫລັກ ແລະ ຕ້ອງຄຳນຶງເຖິງ ຄວາມຍຸຕິທຳ; ຕ້ອງສົ່ງເສີມການອຸທິດເຫື່ອແຮງ ແລະ ສະຕິປັນຍາ ຄວາມຮູ້ຄວາມສາມາດຂອງຄົນ, ທ້ຽງຕ້ານກັບລັດທິສະເລ່ຍ, ທ້ຽງສະກັດກັ້ນ ການມີລາຍໄດ້ແຕກໂຕນກັນຫລາຍເກີນໄປ; ອັນນັ້ນ ໝາຍ ຄວາມວ່າ **ການແຈກຢາຍທຳອິດ** ຕ້ອງຖືປະສິດທິຜົນເປັນຫລັກ, ເອົາການແຈກຢາຍຕາມທຶນ, ຕາມ ແຮງງານ, ຕາມຄວາມຮູ້ ຄວາມສາມາດ ເປັນຕົ້ນຕໍ ; ສ່ວນ**ການແຈກຢາຍເທື່ອທີສອງ** (ແຈກຢາຍຄືນ ໃໝ່) ຈຶ່ງເນັ້ນການດັດສົມ ເພື່ອໃຫ້ເກີດການກະຈາຍລາຍໄດ້ທີ່ເປັນທຳ ຮັບປະກັນຄວາມສະເໝີພາບ ແລະ ສະກັດກັ້ນ ການຫລຸດໂຕນກັນຫລາຍເກີນໄປດ້ານລາຍໄດ້, ຊຶ່ງຈະນຳໄປສູ່ການແຍກຂໍ້ວທຸກ-ຮັ່ງ ໃນສັງຄົມ.

ຫົກ: ຕ້ອງສ້າງລະບົບປະກັນສັງຄົມ ໃຫ້ນັບມື້ນັບກ້ວາງຂວາງ ແລະ ໝັ້ນຄົງ.

ຄືຮູ້ນຳກັນແລ້ວວ່າ ໃນເສດຖະກິດຕະຫລາດນັ້ນ ມັນມີຄວາມສ່ຽງ ແລະ ສິ່ງທ້າທາຍຫລາຍຢ່າງ ທີ່ ອາດຈະກະທົບເຖິງຊີວິດການເປັນຢູ່ ຂອງກຳມະກອນ, ຊາວກະສິກອນ ລວມທັງພະນັກງານ, ທະຫານ, ຕຳຫລວດ... ສະນັ້ນ ຢູ່ຫລາຍປະເທດ ຈຶ່ງມີການຈັດຕັ້ງ ລະບົບປະກັນສັງຄົມຂຶ້ນ ເພື່ອປົກປ້ອງຜົນປະ ໂຫຍດ ຂອງກຳມະກອນ ແລະ ຜູ້ອອກແຮງງານ. ສຳລັບຢູ່ປະເທດເຮົາ ກໍມີການຈັດຕັ້ງລະບົບປະກັນ ສັງຄົມ ຂຶ້ນເຊັ່ນກັນ, ແຕ່ຄັງປະກັນສັງຄົມ ຍັງບໍ່ທັນເຂັ້ມແຂງເທື່ອ ແລະ ຂອບເຂດການປະກັນ ຍັງບໍ່ທັນ ກ້ວາງຂວາງ ເຖິງທຸກເປົ້າໝາຍທີ່ຈຳເປັນ. ສະນັ້ນ ***ໃນມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ຈຶ່ງເນັ້ນ ວ່າ:*** *" ໃຫ້ຄວາມສຳຄັນພິເສດ ຕໍ່ການປະຕິບັດລະບອບປະກັນສັງຄົມ ໃຫ້ທົ່ວເຖິງເປົ້າໝາຍຕ່າງໆ; ທ້ຽງມີ ກົນໄກ ແລະ ລະບຽບການບໍລິການ ທີ່ມີປະສິດທິພາບ ແລະ ມີການເຂົ້າຮ່ວມຢ່າງເປັນເຈົ້າການ ຂອງຜູ້ ອອກແຮງງານ ແລະ ຜູ້ປະກອບການ ".* ເວົ້າລວມແລ້ວ, ການປະກັນສັງຄົມ ແມ່ນເນື້ອໃນສຳຄັນອັນໜຶ່ງ ຂອງສັງຄົມນິຍົມ. ສະນັ້ນ ການປະຕິບັດລະບອບປະກັນສັງຄົມ ຕ້ອງດຳເນີນໄປຢ່າງສົມດູ່ ກັບການຂະ ຫຍາຍຕົວຂອງເສດຖະກິດ.

4. ພັດທະນາຊົນນະບົດ, ສ້າງບ້ານພັດທະນາ, ສ້າງບ້ານໃຫຍ່ ໃຫ້ກາຍເປັນຕົວເມືອງນ້ອຍ ຢູ່ໃນ ຊົນນະບົດ, ຕາມຄຳສັ່ງແນະນຳ ເລກທີ 03/ກມສພ, ສະບັບລົງວັນທີ 30/05/2011 ໃຫ້ບັນລຸຕາມ 4

ຄາດໝາຍ ແລະ 4 ເນື້ອໃນ ດັ່ງນີ້ :

❶ *<u>ການສ້າງບ້ານເປັນໜ່ວຍພັດທະນາ</u>* ໝາຍເຖິງ ຂະບວນວິວັດແຫ່ງການປັບປຸງ ກໍ່ສ້າງ ໜ່ວຍພື້ນຖານ ຂອງລະບອບປະຊາທິປະໄຕປະຊາຊົນ ໃຫ້ມີຄວາມເຂັ້ມແຂງ ດ້ວຍການດຳເນີນມາດ ຕະການຍຸດທະສາດ ທັນລົງກໍ່ສ້າງຮາກຖານການເມືອງ ຕິດພັນກັບການພັດທະນາຊົນນະບົດຮອບດ້ານ ເພື່ອແກ້ໄຂຄວາມທຸກຍາກ ແລະ ປັບປຸງຍົກລະດັບຊີວິດການເປັນຢູ່ ທາງດ້ານວັດຖຸ ແລະ ຈິດໃຈ ຂອງ ປະຊາຊົນບັນດາເຜົ່າ ຢູ່ຊົນນະບົດ ໃຫ້ສູງຂຶ້ນ ຢ່າງບໍ່ຢຸດຢັ້ງ, ເຮັດໃຫ້ບ້ານ ກາຍເປັນພື້ນຖານທາງການ ເມືອງ ເສດຖະກິດ-ສັງຄົມ-ວັດທະນະທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ອັນໜັ້ນຄົງ ຍືນ ຍົງ ຂອງລະບອບປະຊາທິປະໄຕປະຊາຊົນ. ເພາະສະນັ້ນ ການສ້າງບ້ານ ໃຫ້ເປັນໜ່ວຍພັດທະນາ ຈຶ່ງ ກວມເອົາໜົດກິດຈະກຳພັດທະນາດ້ານຕ່າງໆ ທີ່ປະຕິບັດຢູ່ໃນບ້ານ ເຊັ່ນ: ການກໍ່ສ້າງຮາກຖານການ ເມືອງ, ການພັດທະນາຊົນນະບົດ, ສົ່ງເສີມການຜະລິດ ແລະ ການບໍລິການເປັນສິນຄ້າ, ການສ້າງບ້ານ ວັດທະນະທຳ, ການສ້າງບ້ານປອດຄະດີ, ບ້ານປອດຢາເສບຕິດ ແລະ ອື່ນໆອີກ ໝາຍຄວາມວ່າ ທັງ ໜົດບັນດາກິດຈະກຳ ຂອງການພັດທະນາບ້ານໂຮມເຂົ້າກັນ ເອີ້ນເປັນຂະບວນການ ສ້າງບ້ານເປັນໜ່ວຍ ໜ່ວຍພັດທະນາ, ຊຶ່ງຜົນໄດ້ຮັບອັນສຸດທ້າຍ ແມ່ນບ້ານພັດທະນາ.

❷ *<u>ບ້ານພັດທະນາ ຕ້ອງບັນລຸໄດ້ 4 ຄາດໝາຍ ດັ່ງນີ້</u> :*

- ບ້ານ ມີລະບົບການເມືອງເຂັ້ມແຂງ, ໃນນັ້ນ ມີໜ່ວຍພັກທີ່ໄດ້ຮັບການກໍ່ສ້າງ ແລະ ຍັ້ງຢືນ ເປັນໜ່ວຍພັກແຂງ, ມີອົງການປົກຄອງບ້ານ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ທີ່ ເຄື່ອນໄຫວຕາມພາລະໜ້າທີ່ ຢ່າງເປັນປົກກະຕິ ສາມາດເຕົ້າໂຮມຄວາມສາມັກຄີ ປະຊາຊົນບັນດາ ຊົນເຜົ່າ, ບັນດາເຜົ່າ ພາຍໃນບ້ານ, ທັງປຸກລະດົມ ແລະ ຈັດຕັ້ງນຳພາ ຊາວບ້ານ ເປັນກຳລັງແຮງໃນການ ສ້າງສາພັດທະນາບ້ານຊ່ອງ.

- ຊາວບ້ານ ໄດ້ຮັບການສຶກສາອົບຮົມ ດ້ານການເມືອງ-ແນວຄິດ, ມີຄວາມຕື່ນຕົວການເມືອງ ແລະ ມີຄວາມທ້າວທັນ ເປັນເຈົ້າການ ເຂົ້າຮ່ວມໃນວຽກງານລວມ ຂອງບ້ານ ກໍຄື ໃນການທຳມາຫາກິນແກ້ ໄຂຄວາມທຸກຍາກ, ສ້າງຄວາມຢູ່ດີ ກິນດີ ແລະ ຄວາມຮັ່ງມີ ແກ່ຄອບຄົວ; ທັງມີຄວາມສາມັກຄີປອງດອງ ແລະ ນ້ຳໃຈເອື້ອເຟື້ອຊ່ວຍເຫລືອກັນ ເປັນຊຸມຊົນ ທີ່ມີການຄຸ້ມຄອງກັນແໜ້ນ, ຮູ້ໄກ່ເກ່ຍ ແກ້ໄຂບັນຫາ ນຳກັນ ຢ່າງຖືກຕ້ອງເປັນທຳ.

- ບ້ານ ມີພື້ນຖານໂຄງລ່າງ ຫລື ພື້ນຖານວັດຖຸເຕັກນິກ ຮັບໃຊ້ການຜະລິດ ແລະ ຊີວິດການ ເປັນຢູ່ ໃນລະດັບທີ່ສາມາດຮັບປະກັນ ໃຫ້ຊາວບ້ານດຳເນີນການຜະລິດ ແລະ ການບໍລິການເປັນສິນຄ້າ ສ້າງລາຍໄດ້ເຂົ້າຄອບຄົວ ເປັນປົກກະຕິ; ພາຍໃນບ້ານ ບໍ່ມີຄອບຄົວທຸກຍາກ, ທຸກຄອບຄົວ ລ້ວນແຕ່ມີ

ພໍກິນພໍໃຊ້ ແລະ ມີຊີວິດການເປັນຢູ່ປົກກະຕິດີ; ເດັກໃນເກນອາຍຸເຂົ້າຮຽນ ໄດ້ຮຽນຫນັງສືບໍ່ຫລຸດ 98%, ຜູ້ໃຫຍ່ ທີ່ມີອາຍຸ 15 ປີ ຂຶ້ນໄປ ຕ້ອງມີລະດັບການສຶກສາຈົບຊັ້ນປະຖົມບໍາລຸງ ແລະ ມີແໜມຍົກລະດັບສູງຂຶ້ນເລື້ອຍໆ; ບ້ານ ໄດ້ຮັບການຢັ້ງຢືນ ເປັນບ້ານແບບຢ່າງ ດ້ານສາທາລະນະສຸກ, ທຸກຄອບຄົວ ຢູ່ກິນມີສຸຂະອະນາໄມ, ມີນໍ້າສະອາດໃຊ້ ແລະ ມີວິດຖ່າຍ, ເດັກໃນບ້ານ ໄດ້ຮັບການສັກຢາ ແລະ ຢອດຢາກັນພະຍາດ ບໍ່ຫລຸດ 95%; ອັດຕາສ່ວນການຕາຍ ຂອງເດັກ ແລະ ຂອງແມ່ ຕ້ອງຕໍ່ກວ່າຄາດໝາຍລວມທີ່ລັດວາງອອກ ໃນແຕ່ລະໄລຍະ; ເປັນບ້ານ ທີ່ເປັນລະບຽບຈັບງາມ ແລະ ມີສິ່ງແວດລ້ອມທີ່ດີ.

- ບ້ານມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ເປັນບ້ານປອດຢາເສບຕິດ ເປັນບ້ານປອດຄະດີ ໂດຍມີຊາວບ້ານເອງເຂົ້າຮ່ວມ ເປັນກໍາລັງຕົ້ນຕໍ ໃນໜ່ວຍກອງຫລອມ ແລະ ໜ່ວຍປ້ອງກັນຄວາມສະຫງົບບ້ານ.

❸ *<u>ການສ້າງບ້ານໃຫຍ່ ໃຫ້ເປັນຕົວເມືອງນ້ອຍ ໃນຊົນນະບົດ</u>.*

ໃນຂະບວນວິວັດ ແຫ່ງການສ້າງບ້ານພັດທະນານັ້ນ ຢູ່ບາງເຂດ-ບາງບໍລິເວນ ຈະມີຄວາມຈໍາເປັນເຕົ້າໂຮມເອົາບ້ານ ທີ່ຢູ່ໃກ້ກັນຈໍານວນໜຶ່ງ ເຂົ້າເປັນບ້ານດຽວ ຫລື ຢູ່ໃກ້ຄຽງກັນ ເພື່ອສະດວກໃນການຂະຫຍາຍ ແລະ ນໍາໃຊ້ພື້ນຖານໂຄງລ່າງ ຮັບໃຊ້ການຜະລິດ ແລະ ຊີວິດການເປັນຢູ່ ເຊັ່ນ: ລະບົບຊົນລະປະທານ, ຫົນທາງ, ໄຟຟ້າ, ນໍ້າລິນ-ນໍ້າ ສະອາດ; ໂຮງຮຽນ, ສຸກສາລາ ແລະ ອື່ນໆອີກ ຊຶ່ງຈະໃຫ້ບໍລິເວນເຂດແຄ້ວນັ້ນ ມີການຂະຫຍາຍຕົວ. ບ້ານທີ່ໂຮມເຂົ້າກັນ ຈະກາຍເປັນບ້ານໃຫຍ່ ແລະ ເປັນໃຈກາງທາງດ້ານການ ປົກຄອງ-ເສດຖະກິດ-ວັດທະນະທໍາ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ດ້ານອື່ນໆ.

ການສ້າງບ້ານໃຫຍ່ ໃຫ້ກາຍເປັນຕົວເມືອງນ້ອຍ ຕ້ອງມີການສຶກສາຄົ້ນຄວ້າ ຢ່າງຮອບດ້ານ ວ່າຈະເອົາບ້ານໃດ ເປັນຈຸດໃຈກາງ ສໍາລັບການເຕົ້າໂຮມ ເພື່ອໃຫ້ສາມາດເສີມຂະຫຍາຍທ່າແຮງ ຂອງບໍລິເວນເຂດແຄ້ວນັ້ນ ເຂົ້າໃນການພັດທະນາ ໄດ້ຢ່າງມີປະສິດທິຜົນ. ບ້ານທີ່ເປັນຈຸດໃຈກາງນັ້ນ ຕ້ອງເປັນບ້ານພັດທະນາ ຕາມ 4 ຄາດໝາຍ ທີ່ກໍານົດໄວ້, ທັງຕ້ອງມີເງື່ອນໄຂ ທາງດ້ານທີ່ຕັ້ງພູມສາດ ກໍຄື ດ້ານພື້ນຖານໂຄງລ່າງ ທາງດ້ານເສດຖະກິດ, ວັດຖຸ-ເຕັກນິກ-ວັດທະນະທໍາ ແລະ ດ້ານອື່ນໆ ສໍາລັບການເປັນຕົວເມືອງນ້ອຍ ເຊັ່ນ: ມີຖະໜົນຫົນທາງ ໄປ-ມາ ສະດວກ, ເຊື່ອມຈອດເຖິງເມືອງ ແລະ ບ້ານ ອື່ນໆ; ມີພື້ນຖານການຜະລິດ ແລະ ປຸງແຕ່ງ ເປັນສິນຄ້າ ທີ່ໜັ້ນຄົງ, ມີຕະຫລາດ, ມີໂຮງຮຽນປະຖົມ ແລະ ມັດທະຍົມສົມບູນ, ມີສຸກສາລາ ຫລື ໂຮງໝໍນ້ອຍ; ມີສະໂມສອນ ຫລື ຫໍວັດທະນະທໍາ ຂອງບ້ານ, ມີຫ້ອງສະໝຸດ ແລະ ຫ້ອງອ່ານໜັງສື, ມີບ່ອນຫລິ້ນ ກິລາບາງປະເພດ ແລະ ມີສະຖານທີ່ສາທາລະນະ... ບ້ານໃຫຍ່ ທີ່ເປັນຕົວເມືອງນ້ອຍ ໃນເຂດຊົນນະບົດພູດອຍ ຄວນມີພົນລະເມືອງແຕ່ໜຶ່ງພັນຄົນຂຶ້ນໄປ; ສ່ວນຢູ່ໃນເຂດຊົນນະບົດທົ່ງພຽງ ຄວນມີພົນລະເມືອງແຕ່ສາມພັນຄົນຂຶ້ນໄປ.

❹ ***<u>ກຸ່ມບ້ານພັດທະນາ.</u>*** ແມ່ນການຈັດຕັ້ງບ້ານ ໃຫ້ເປັນລະບົບຕິດລ່ຽນ ເພື່ອມີເງື່ອນໄຂສະດວກ ໃນການເສີມຂະຫຍາຍທີ່ຕັ້ງ ຂອງແຕ່ລະບ້ານ ເຂົ້າໃນການປະຕິບັດໜ້າທີ່ ຫລື ຮັບໃຊ້ຈຸດປະສົງເປົ້າ ໝາຍສະເພາະ. ກຸ່ມບ້ານ ປະກອບດ້ວຍຫລາຍບ້ານ ທີ່ບໍ່ສາມາດ ແລະ ບໍ່ຈຳເປັນເຕົ້າໂຮມ ເຂົ້າເປັນ ບ້ານໃຫຍ່ ອັນເນື່ອງມາຈາກ ມີຄວາມຈຳເປັນຕ້ອງໃຫ້ແຕ່ລະບ້ານ ປະຕິບັດໜ້າທີ່ ຫລື ເປົ້າໝາຍສະ ເພາະ ເຊັ່ນ: ການປົກປັກຮັກສາພື້ນທີ່ຊາຍແດນ, ປົກປັກຮັກສາເຂດສະຫງວນ ດ້ານຊັບພະຍາກອນທຳ ມະຊາດ ຫລື ເຂດທີ່ຍັງມີບັນຫາດ້ານອື່ນ. ຈຸດປະສົງຕົ້ນຕໍ ຂອງການສ້າງກຸ່ມບ້ານ ແມ່ນເພື່ອໃຫ້ມີຄວາມ ສະດວກ, ມີກຳລັງແຮງໃນການນຳພາ-ຊີ້ນຳ ຂອງຄະນະພັກ, ອົງການປົກຄອງເມືອງ ທັງໃນດ້ານການພັດ ທະນາເສດຖະກິດ-ສັງຄົມ ກໍຄື ໃນດ້ານວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ. ສະນັ້ນ ໃນກຸ່ມ ໜຶ່ງ ຈະໃຫ້ມີທໍ່ໃດບ້ານ ແມ່ນໃຫ້ອີງໃສ່ສະພາບດ້ານທີ່ຕັ້ງ ແລະ ໜ້າທີ່ຈຸດສຸມຕົ້ນຕໍ ຂອງກຸ່ມບ້ານນັ້ນ; ແຕ່ຢ່າງໜ້ອຍ ໃນກຸ່ມໜຶ່ງ ຄວນມີ 3 ບ້ານຂຶ້ນໄປ.

ການສ້າງ **ກຸ່ມບ້ານ** ບໍ່ໝາຍເຖິງການສ້າງຕັ້ງຂັ້ນໜຶ່ງຂຶ້ນຕື່ມ ໃນລະບົບການປົກຄອງທ້ອງຖິ່ນ; ກຸ່ມ ບ້ານ ບໍ່ແມ່ນຫົວໜ່ວຍການປົກຄອງທ້ອງຖິ່ນ ແລະ ກໍບໍ່ແມ່ນຕາແສງຄືແຕ່ກ່ອນ. ສະນັ້ນ ການສ້າງກຸ່ມ ບ້ານ ແມ່ນເພື່ອຈຸດປະສົງເປົ້າໝາຍ ອັນແນ່ນອນ, ສະນັ້ນຈຶ່ງເອີ້ນວ່າ **ເຂດຈຸດສຸມກຸ່ມບ້ານ**. ໝາຍ ຄວາມ ວ່າ ກຸ່ມບ້ານນັ້ນ ຕັ້ງຂຶ້ນໂດຍແນໃສ່ແກ້ໄຂບັນຫາຈຸດສຸມໃດໜຶ່ງ ຫລື ປະຕິບັດໜ້າທີ່ຈຸດສຸມໃດໜຶ່ງ.

✪ ***ເນື້ອໃນ ຂອງການສ້າງບ້ານພັດທະນາ.***

ການສ້າງບ້ານພັດທະນາ ຢູ່ປະເທດເຮົາ ຕ້ອງດຳເນີນໄປຕາມ 4 ເນື້ອໃນ ຫລື ຕາມ 4 ໜ້າວຽກ ຕົ້ນຕໍ ດັ່ງນີ້:

❶ ດຳເນີນວຽກງານໂຄສະນາສຶກສາອົບຮົມ ການເມືອງ-ແນວຄິດ ຕິດແໜ້ນກັບການປັບປຸງ ກໍ່ສ້າງຮາກຖານການເມືອງ ໃຫ້ໜັກແໜ້ນເຂັ້ມແຂງ ຖືວ່ານີ້ ເປັນອັນຕັດສິນຜົນສຳເລັດ ຂອງການສ້າງ ບ້ານພັດທະນາ :

- ໂຄສະນາສຶກສາອົບຮົມ ແນວທາງນະໂຍບາຍ ຂອງພັກ ແລະ ລະບຽບກົດໝາຍຂອງລັດ ໃຫ້ ປະຊາຊົນ ຮັບຮູ້-ເຂົ້າໃຈ ນັບມື້ນັບເລິກເຊິ່ງ, ໃນນັ້ນ ເອົາໃຈໃສ່ເປັນພິເສດ ຕໍ່ຜູ້ເປັນຫລັກແຫລ່ງ ເພື່ອຊ່ວຍ ໂຄສະນາອະທິບາຍ ແລະ ເປັນແບບຢ່າງນຳພາຜູ້ອື່ນເຮັດຕາມ.

- ສຶກສາອົບຮົມ ປຸກລະດົມ ປະຊາຊົນ ໃຫ້ມີຄວາມຕື່ນຕົວ ເປັນເຈົ້າການທຳມາຫາກິນ ແກ້ໄຂ ຄວາມທຸກຍາກ ແລະ ສ້າງຄວາມຢູ່ດີ ກິນດີ ແກ່ຄອບຄົວ; ປະກອບສ່ວນ ເຂົ້າໃນການສ້າງສາພັດທະນາ ບ້ານຊ່ອງ ແລະ ປະຕິບັດພັນທະໜ້າທີ່ ຂອງພົນລະເມືອງ; ເວົ້າລວມ ແມ່ນເຮັດແນວໃດ ໃຫ້ຊາວບ້ານ ມີ ແນວຄິດພັດທະນາ, ມີນ້ຳໃຈສາມັກຄີເອື້ອເຟື້ອຊ່ວຍເຫລືອກັນ, ພ້ອມພຽງກັນ ຜ່ານຜ່າອຸປະສັກ ແລະ

ຄວາມຫຍຸ້ງຍາກ ເພື່ອປັບປຸງ ແລະ ຍົກລະດັບຄຸນນະພາບຊີວິດ ຂອງຕົນ ໃຫ້ສູງຂຶ້ນເລື້ອຍໆ.

- ປັບປຸງ-ກໍ່ສ້າງໜ່ວຍພັກ ໃຫ້ເປັນໜ່ວຍພັກແຂງ, ສະມາຊິກພັກ ມີຄວາມທ້າວທັນ ເປັນແບບຢ່າງນຳໜ້າ ທັງຮູ້ສຶກສາອົບຮົມ ປຸກລະດົມ ຈັດຕັ້ງນຳພາຊາວບ້ານ ທຳມາຫາກິນ ປູກຝັ່ງ-ລ້ຽງສັດ ເປັນສິນຄ້າ, ຮູ້ຈັກຊື້-ຂາຍ, ເຮັດການບໍລິການ ສ້າງລາຍໄດ້ ເພື່ອແກ້ໄຂຄວາມທຸກຍາກ ແລະ ສ້າງຄວາມຢູ່ດີກິນດີ ແກ່ຄອບຄົວ; ພ້ອມກັນນັ້ນ ກໍເປັນແບບຢ່າງ ໃນການບຸກບືນສູ້ຊົນຮ່ຳຮຽນ, ຍົກລະດັບການສຶກສາ ຂອງຕົນ ໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ.

- ປັບປຸງການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການແນວລາວສ້າງຊາດ ແລະ ອົງການມະຫາຊົນອື່ນໆ ຢູ່ຂັ້ນບ້ານ ໃຫ້ເປັນກຳລັງແຮງ ຊ່ວຍໜູນການພັດທະນາບ້ານຊ່ອງ.

❷ ສຸມທຸກກຳລັງ ແລະ ສຸມທຸກການຊີ້ນຳ ເຂົ້າໃສ່ການແກ້ໄຂຄວາມທຸກຍາກ ດ້ວຍ ການສົ່ງເສີມການຜະລິດ ແລະ ການບໍລິການ ເປັນສິນຄ້າ, ປັບປຸງຄຸນນະພາບຊີວິດ ຂອງຊາວຊົນນະບົດ ໃຫ້ດີຂຶ້ນ ໂດຍຖືອັນນີ້ ເປັນໜ້າທີ່ວຽກງານໃຈກາງ ຂອງການສ້າງບ້ານພັດທະນາ :

- ກຳແໜ້ນຈຳນວນຄອບຄົວທຸກຍາກ, ໂດຍຈຳແນກໃຫ້ແຈ້ງ ສາເຫດຂອງມັນ ເພື່ອກຳນົດວິທີການມາດຕະການແກ້ໄຂ ໃຫ້ຖືກຕ້ອງແທດເໝາະ ໂດຍແນໃສ່ສຳເລັດຕາມຄາດໝາຍ ຄື: ເຖິງປີ 2015 ຢູ່ແຕ່ລະບ້ານ ບໍ່ໃຫ້ມີຄອບຄົວທຸກຍາກ ເກີນ 10% ຂອງຈຳນວນຄອບຄົວທັງໝົດ.

- ໃນການແກ້ໄຂຄວາມທຸກຍາກ ແລະ ສ້າງຄວາມຢູ່ດີ ກິນດີ ຂອງຄອບຄົວນັ້ນ ໃຫ້ເອົາໃຈໃສ່ສ້າງເງື່ອນໄຂ ຫລື ປັດໄຈອັນຈຳເປັນ ຈຳນວນໜຶ່ງ ດັ່ງນີ້ :

+ ກໍ່ສ້າງ ແລະ ຂະຫຍາຍພື້ນຖານໂຄງລ່າງ ຮັບໃຊ້ການຜະລິດ ແລະ ຊີວິດການເປັນຢູ່ ຂອງປະຊາຊົນ ໂດຍສະເພາະ ແມ່ນຫົນທາງ, ໄຟຟ້າ, ຊົນລະປະທານ, ສູນສົ່ງເສີມການຜະລິດກະສິກຳ...

+ ເອົາໃຈໃສ່ ຕໍ່ການຈັດຕັ້ງຝຶກອົບຮົມ, ໃຫ້ຄວາມຮູ້ພື້ນຖານ ແກ່ປະຊາຊົນ ກ່ຽວກັບການປູກຝັ່ງ-ລ້ຽງສັດເປັນສິນຄ້າ ໂດຍອີງໃສ່ທ່າແຮງ ຂອງແຕ່ລະພື້ນທີ່ຕົວຈິງ ແລະ ຈັດຕັ້ງຝຶກອົບຮົມກັບທີ່ເປັນຕົ້ນຕໍ.

+ ຕອບສະໜອງທຶນ (ເປັນເງິນ, ເປັນສັດລ້ຽງ, ເປັນແນວພັນພືດ ຫລື ເປັນວັດຖຸອື່ນໆ) ທີ່ຈຳເປັນໃຫ້ແກ່ປະຊາຊົນ (ໂດຍສະເພາະ ແມ່ນຜູ້ທີ່ມີຄວາມຕື່ນຕົວ ຢາກເຮັດແທ້ທຳຈິງ) ໂດຍມີການອະທິບາຍແນະນຳ ໃຫ້ລະອຽດຈະແຈ້ງ ກ່ຽວກັບວິທີການນຳໃຊ້ ຄຸ້ມຄອງ, ແຕ່ບໍ່ມີເງື່ອນໄຂຜູກມັດຫລາຍ.

+ ມີການຕິດຕາມ, ແນະນຳ-ຊ່ວຍໜູນ ທາງດ້ານວິຊາການ ເພື່ອໃຫ້ການປູກຝັ່ງ- ລ້ຽງສັດ ຂອງເຂົາເຈົ້າ ມີປະສິດທິຜົນ.

+ ຕ້ອງມີຕະຫລາດ ຊື້-ຂາຍ ຮອງຮັບ (ຜະລິດອອກມາແລ້ວ ໃຫ້ໄດ້ຂາຍ) ແລະ ມີການປຸງແຕ່ງ

ຍິ່ງເປັນການດີ.

+ ຈັດຕັ້ງ ໃຫ້ມີກອງທຶນແກ້ໄຂຄວາມທຸກຍາກ ຫລື ສະຫະກອນສິນເຊື່ອ, ສະຫະກອນບໍລິການ; ສະຫະກອນຜະລິດ ລວມທັງທະນາຄານເຂົ້າ, ທະນາຄານສັດ... ເພື່ອຊຸກຍູ້ສົ່ງເສີມການຜະລິດ ແລະ ການບໍລິການສ້າງລາຍໄດ້ ຂອງປະຊາຊົນ.

+ ຈັດຕັ້ງກຸ່ມຜູ້ຜະລິດ, ກຸ່ມລ້ຽງສັດ, ກຸ່ມນຳໃຊ້ນ້ຳ, ກຸ່ມຫັດຖະກຳ, ກຸ່ມຜູ້ຜະລິດເຂົ້າ-ພືດຜັກ ປອດສານພິດ... ເພື່ອສະດວກໃນການຈັດຕັ້ງຝຶກອົບຮົມ ແລະ ໃຫ້ການບໍລິການ ທາງດ້ານວິຊາການ, ລວມທັງ ໃຫ້ຂໍ້ມູນຂ່າວສານ ແລະ ການປົກປ້ອງຜົນປະໂຫຍດ ຂອງກຸ່ມ.

+ ຄົ້ນຄວ້າອອກນະໂຍບາຍ ແລະ ມາດຕະການສົ່ງເສີມເປັນພິເສດ ຕໍ່ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄປລົງທຶນເຂົ້າໃນໂຄງການແກ້ໄຂຄວາມທຸກຍາກ ຂອງປະຊາຊົນ ໃນເຂດທີ່ຢູ່ຫ່າງໄກສອກຫລີກ ແລະ ທຸລະກັນດານ, ເພື່ອສ້າງບາດກ້າວບຸກທະລຸ ໃນການແກ້ໄຂຄວາມທຸກຍາກ ໃຫ້ເປັນຈິງ.

+ ໃຫ້ຈັດສັນພື້ນທີ່ທຳການຜະລິດ ແລະ ຕັ້ງຖິ່ນຖານພູມລຳເນົາຄົງທີ່ ໃຫ້ແກ່ປະຊາຊົນ, ກ່ອນອື່ນ ແມ່ນຜູ້ທີ່ບໍ່ມີບ່ອນທຳມາຫາກິນ ແລະ ບໍ່ມີຖິ່ນຖານຖາວອນ, ຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການພັດທະນາຕ່າງໆ, ຜູ້ທີ່ເຮັດໄຮ່ເລື່ອນລອຍ, ຜູ້ທີ່ປະສົບກັບໄພພິບັດທາງທຳມະຊາດ ແລະ ອື່ນໆ... ເພື່ອສະກັດກັ້ນ ແລະ ແກ້ໄຂສະພາບການເຄື່ອນຍ້າຍ ແບບຊະຊາຍ ຂອງພົນລະເມືອງ ໃຫ້ຕົກໄປ; ໃຫ້ປະຊາຊົນ ມີຄວາມອຸ່ນອຽນ ໃນການທຳມາຫາກິນແກ້ໄຂຄວາມທຸກຍາກ ແລະ ສ້າງຄວາມຢູ່ດີ ກິນດີ ໃຫ້ແກ່ຄອບຄົວ ບົນພື້ນຖານການມີດິນເປັນຂອງຕົນເອງ.

❸ ພັດທະນາຂົງເຂດສັງຄົມ-ວັດທະນະທຳ ໃຫ້ສົມຄູ່ກັບເສດຖະກິດ ໂດຍສະເພາະ ແມ່ນການສົ່ງເສີມການສຶກສາ ແລະ ການຂະຫຍາຍຕາໜ່າງບໍລິການ ດ້ານສາທາລະນະສຸກ ໃຫ້ທົ່ວເຖິງແຕ່ລະບ້ານ ເພື່ອສ້າງເງື່ອນໄຂ ໃຫ້ແກ່ການບັນລຸເປົ້າໝາຍສະຫັດສະວັດ ດ້ານການພັດທະນາ ໃນປີ 2015 ແລະ ເປັນພື້ນຖານອັນໜັກແໜ້ນ ໃຫ້ແກ່ການພັດທະນາ ໃນຂັ້ນຕໍ່ໄປ.

ບ້ານ ແມ່ນບ່ອນດຳລົງຊີວິດ ແລະ ທຳມາຫາກິນ ເປັນປະຈຳໃນແຕ່ລະວັນ ຂອງປະຊາຊົນ, ສະນັ້ນ ຕ້ອງເຮັດໃຫ້ບ້ານມີການພັດທະນາ ທາງດ້ານສັງຄົມ-ວັດທະນະທຳ ທີ່ສົມຄູ່ກັບເສດຖະກິດ ເພື່ອໃຫ້ບ້ານເປັນບ່ອນຢູ່ອາໄສ ທີ່ມີຊີວິດຊີວາ ແລະ ມີພື້ນຖານ ແຫ່ງການພັດທະນາແບບຍືນຍົງ; ເມື່ອເປັນແນວນັ້ນ ຕ້ອງເອົາໃຈໃສ່ ດັ່ງນີ້ :

- ອະນຸລັກຮັກສາ ແລະ ເສີມຂະຫຍາຍ ມູນເຊື້ອວັດທະນະທຳ-ປະເພນີ ຂອງປະຊາຊົນບັນດາເຜົ່າ ໃນແຕ່ລະບ້ານ; ເສີມສ້າງຄວາມສາມັກຄີປອງດອງ ລະຫວ່າງເຜົ່າ ໃຫ້ແໜ້ນແຟ້ນ ບໍ່ໃຫ້ມີການຈຳ

ແນກ ຫລື ຫມິ່ນປະຫມາດເຜົ່ານັ້ນ ເຜົ່ານີ້, ທັງມີສະຕິຕໍ່ກັນອຸບາຍແບ່ງແຍກຄວາມສາມັກຄີ ລະຫວ່າງເຜົ່າ ກໍຄື ການສວຍໃຊ້ບັນຫາສາສະຫນາ ແລະ ບັນຫາອື່ນໆ...

- ຈັດຕັ້ງເທສະການ ຫລື ກິດຈະກໍາ ສົ່ງເສີມວັດທະນະທໍາ ຂອງເຜົ່າຕ່າງໆ ເປັນປະຈໍາ ຕາມມູນເຊື້ອ ແລະ ປະເພນີ ຂອງແຕ່ລະເຜົ່າ (ງານບຸນປະເພນີ) ຢູ່ໃນບ້ານ ເພື່ອສ້າງບັນຍາກາດສາມັກຄີເປັກບານ, ເຮັດໃຫ້ຊາວບ້ານ ໂດຍສະເພາະ ແມ່ນໄວຫນຸ່ມ ມີຄວາມຮັກ ຄວາມຜູກພັນກັບບ້ານ, ຢາກດໍາລົງຊີວິດຢູ່ບ້ານ (ບໍ່ຢາກຫນີໄປຢູ່ບ່ອນອື່ນ). ສະນັ້ນ ຢູ່ບ້ານ ຫລື ກຸ່ມບ້ານ ໃຫ້ມີສະໂມສອນ ຫລື ຫໍວັດທະນະທໍາ, ມີຫ້ອງສະຫມຸດ ຫລື ຫ້ອງອ່ານຫນັງສື, ມີໂທລະໂຄ່ງ ແລະ ກະດານແຈ້ງຂ່າວ, ມີເດີ່ນຫລິ້ນກິລາ ບາງປະເພດ; ມີສະຖານທີ່ສາທາລະນະ ເພື່ອເປັນບ່ອນເຕົ້າໂຮມມວນຊົນ...

- ຢູ່ແຕ່ລະບ້ານ ຕ້ອງມີການຈັດຕັ້ງຮຽນຫນັງສື ເພື່ອລົບລ້າງການກົກຫນັງສື ແລະ ບໍາລຸງວັດທະນະທໍາ ໃຫ້ປະຊາຊົນ ໂດຍຕິດພັນກັບການຝຶກອົບຮົມ ສິ່ງຄວາມຮູ້ ກ່ຽວກັບການທໍາມາຫາກິນ ປູກຝັ່ງ-ລ້ຽງສັດ; ຈັດຕັ້ງການໂຄສະນາສຸຂະສຶກສາ ເປັນປົກກະຕິ, ປ້ອງກັນ ແລະ ເຝົ້າລະວັງ ການເກີດພະຍາດລະບາດ ໃນຄົນ ແລະ ໃນສັດ; ຮັບປະກັນ ໃຫ້ປະຊາຊົນ ໄດ້ຮັບການກວດກາສຸຂະພາບ, ປິ່ນປົວພະຍາດ ແລະ ໄດ້ຮັບບໍລິການ ດ້ານສາທາລະນະສຸກ ຢ່າງທົ່ວເຖິງ; ໃນສະເພາະຫນ້ານີ້ ຕ້ອງປະຕິບັດນະໂຍບາຍຮຽນຈົບຊັ້ນປະຖົມ ພາກບັງຄັບ ແລະ ການເກີດລູກ ຢູ່ສຸກສາລາ, ຢູ່ໂຮງຫມໍ ໂດຍບໍ່ເສຍຄ່າໃດໆ ໃຫ້ເປັນຈິງ.

❹ ຈັດຕັ້ງປະຕິບັດ ແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ ຢູ່ຮາກຖານບ້ານ ແລະ ກຸ່ມບ້ານ ຢ່າງເປັນລະບົບ ຕໍ່ເນື່ອງ ປົກກະຕິ; ສ້າງບ້ານປ້ອມຫມັ້ນ ແລະ ກຸ່ມບ້ານສູ້ຮົບຕິດລ່ຽນ ໃນບັນດາເຂດ ແລະ ບໍລິເວນຈຸດສຸມ; ແກ້ໄຂໃຫ້ໄດ້ ຫມໍ່ແຫນ່ງ ແລະ ປັດໄຈ ຂອງຄວາມບໍ່ສະຫງົບປອດໄພ :

- ຈັດຕັ້ງຫນ່ວຍກອງຫລອນ ແລະ ຫນ່ວຍປ້ອງກັນຄວາມສະຫງົບ ຂອງບ້ານ ແລະ ກຸ່ມບ້ານ ໂດຍມີການຫັດແອບ, ຝຶກຊ້ອມ ເປັນປົກກະຕິ; ມີການປະກອບອາວຸດ ຢ່າງເຫມາະສົມ.

- ກໍານົດລະບຽບການເຄື່ອນໄຫວ, ປະສານສົມທົບ ແລະ ຂອບເຂດຄວາມຮັບຜິດຊອບ ໃຫ້ຈະແຈ້ງ ລະຫວ່າງກໍາລັງຕ່າງໆ, ທັງມີການປະຕິບັດລະບອບນະໂຍບາຍ ຢ່າງເຫມາະສົມ.

- ກໍານົດລະບຽບການຄຸ້ມຄອງພົນລະເມືອງ ແລະ ລະບຽບການຮັກສາຄວາມສະຫງົບ-ຄວາມເປັນລະບຽບຮຽບຮ້ອຍ, ລວມທັງ ລະບຽບການເສຍຄ່າທໍານຽມຕ່າງໆ ສໍາລັບພົນລະເມືອງ ຢູ່ຂັ້ນບ້ານ ໃຫ້ເປັນລະບົບເອກະພາບ.

- ຕັ້ງຫນ້າກໍາຈັດ ແລະ ແກ້ໄຂການປູກຝິ່ນ, ບັນຫາຢາເສບຕິດ (ໂດຍສະເພາະ ໃນໂຮງຮຽນ

ແລະ ຖ້ຳແຖວຊາວໜຸ່ມ), ບັນຫາການພະນັນ ແລະ ປະກົດການຫຍໍ້ທໍ້ອື່ນໆ ໃນສັງຄົມ ຢ່າງຈິງຈັງ ດ້ວຍ ກຳລັງແຮງສັງລວມ ທີ່ມີຢູ່ໃນແຕ່ລະຮາກຖານບ້ານ, ເຮັດໃຫ້ບ້ານ ເປັນບ້ານປອດຢາເສບຕິດ, ເປັນບ້ານ ປອດຄະດີ...

5. ພັດທະນາກະສິກຳ ແບບປະສົມປະສານ, ຮັບປະກັນຄວາມໝັ້ນຄົງ ດ້ານສະບຽງອາຫານ.

ແບບຢ່າງການຫັນເປັນທັນສະໄໝໃນການຜະລິດເຂົ້າເປັນສິນຄ້າ.

ການກະສິກຳ ຍັງເປັນທ່າແຮງ ແລະ ເປັນຂະແໜງການພື້ນຖານ ໃນໂຄງປະກອບເສດ ຖະກິດ ຂອງປະເທດເຮົາ. ການກຳນົດຄືດັ່ງກ່າວ ແທດເໝາະກັບເງື່ອນໄຂດ້ານພູມສາດ ຂອງປະ ເທດເຮົາ ທີ່ປະກອບດ້ວຍພູຜາປ່າດົງ 85%, ພູພຽງ-ທົ່ງພຽງ 15%, ປະຊາຊົນລາວບັນດາເຜົ່າ ສ່ວນ ຫລວງຫລາຍປະກອບອາຊີບກະສິກຳ (ປູກຝັງ-ລ້ຽງສັດ) ກວມປະມານ 80% ແລະ ດຳລົງຊີວິດຢູ່ ເຂດຊົນນະບົດ ໃນເຂດທຸກຍາກ ແລະ ຫ່າງໄກສອກຫລີກ; ອັດຕາສ່ວນ ຂອງມູນຄ່າຜົນຜະລິດກະ ສິກຳ ໃນລວມຍອດ ມູນຄ່າຜະລິດຕະພັນພາຍໃນປະເທດ ຫລື GDP ກໍກວມເຖິງ 36% (ຕົວເລກ ປີ 2010). ສະນັ້ນ ຖືເອົາການກະສິກຳເປັນພື້ນຖານ ຈຶ່ງຫມາຍເຖິງການພັດທະນາຂະແໜງເສດ ຖະກິດທີ່ສຳຄັນຂອງຊາດ, ແມ່ນການນຳເອົາຄວາມຢູ່ດີກິນດີ ມາໃຫ້ປະຊາຊົນຄົນສ່ວນໃຫຍ່ຂອງປະ ເທດ, ແມ່ນການພັດທະນາຊົນນະບົດ ແລະ ຊາວກະສິກອນ ກໍຄື ການພັດທະນາຊັບພະຍາກອນ

ທຳມະຊາດ ໃຫ້ອຸດົມຮັ່ງມີຍິ່ງຂຶ້ນ ເປັນຕົ້ນ ແມ່ນທີ່ດິນ, ແຫລ່ງນ້ຳ, ປ່າໄມ້, ສັດປ່ານາໆຊະນິດ ໃນເຂດ ທົ່ງພຽງ, ພູພຽງ ແລະ ພູດອຍ.

ມະຕິກອງປະຊຸມໃຫຍ່ຄັ້ງທີ IX ກຳນົດວ່າ *" ພວກເຮົາຕ້ອງສຸມໃສ່ເສີມຂະຫຍາຍຄວາມອາດສາ ມາດບົ່ມຊ້ອນ ທາງດ້ານກະສິກຳ-ປ່າໄມ້ ຂອງປະເທດເຮົາ ຢ່າງຮອບດ້ານ, ສ້າງໃຫ້ມີການຫັນປ່ຽນທີ່ ຕັ້ງໜ້າ ຕາມທິດ**ເຮັດກະສິກຳສະອາດ**, ຂະຫຍາຍການ**ເຮັດກະເສດສຸມ ທີ່ທັນສະໄໝ ແລະ ມີສະ ມັດຖະພາບສູງ**. ເພື່ອບັນລຸເປົ້າໝາຍ ດັ່ງກ່າວ ຕ້ອງພັດທະນາ **ກະສິກຳແບບປະສົມປະສານ** ທັງມີ ການນຳໃຊ້ວິທະຍາສາດ-ວິທະຍາການ ທີ່ກ້າວໜ້າທັນສະໄໝ ເຂົ້າໃສ່ພື້ນຖານການຜະລິດ ໃຫ້ ນັບມື້ນັບກ້ວາງຂວາງ, ຈຳກັດການຜະລິດ ແບບເປີດກ້ວາງເນື້ອທີ່ ".* (ປຶ້ມມະຕິ IX, ໜ້າ 30-31).

- ສະນັ້ນ ຈະຕ້ອງຄົ້ນຄວ້າຜັນຂະຫຍາຍ ທິດຊີ້ນຳເທິງນັ້ນ ໃຫ້ເລິກເຊິ່ງ ເພື່ອປະຕິບັດໃຫ້ເປັນ ຮູບປະທຳ ເຊັ່ນ: ເຮັດກະສິກຳສະອາດ ຈະຕ້ອງເຮັດຢູ່ໃສ, ເຮັດອັນໃດ (ປູກອັນໃດ, ລ້ຽງອັນໃດ),ໃຜຈະ ເປັນຜູ້ແນະນຳຊ່ວຍເຫລືອ ດ້ານວິຊາການ ຊ່ວຍຜູ້ຜະລິດ ຫລື ຈະເອົາໄປຮຽນ ໄປຝຶກອົບຮົມເບິ່ງຕົວ ຈິງຢູ່ໃສ; ຜະລິດອອກມາແລ້ວ ຈະເອົາໄປຂາຍຢູ່ໃສ, ຂາຍໃຫ້ຜູ້ໃດ, ລາຄາ ຄືແນວໃດ... ເວົ້າລວມແລ້ວ, ເຮັດກະສິກຳສະອາດ ຈະຕ້ອງມີການຈັດຕັ້ງການຜະລິດ ແລະ ການຈຳໜ່າຍທີ່ເປັນລະບົບ, ມັນແມ່ນ ການຜະລິດທີ່ລະອຽດລະອໍ, ຮຽກຮ້ອງໃຫ້ມີຄວາມອົດທົນ ແລະ ເອົາໃຈໃສ່ເຮັດແທ້ທຳຈິງ, ມັນແມ່ນ ການຜະລິດທີ່ມີອະນາຄົດ ແລະ ມີຜົນປະໂຫຍດດີ ຖ້າຫາກເຮັດຖືກຕາມມາດຕະຖານເງື່ອນໄຂຂອງມັນ.

+ ສ່ວນການເຮັດ**ກະເສດສຸມ** ແລະ **ການກະເສດແບບປະສົມປະສານ** ນັ້ນ ກໍແມ່ນ ແບບວິທີ ການຜະລິດກະສິກຳທີ່ທັນສະໄໝ ເພີ່ມປະສິດທິພາບ ເພີ່ມລາຍໄດ້ ດ້ວຍການເພີ່ມສະມັດຖະພາບ ການຜະລິດ ແລະ ຄຸນນະພາບ ຂອງຜະລິດຕະພັນ ໃຫ້ດີຂຶ້ນ.

ໃນການເຮັດກະເສດສຸມນັ້ນ ຕ້ອງມີເງື່ອນໄຂ ແລະ ຕ້ອງນຳໃຊ້ປັດໄຈ ທີ່ຈຳເປັນ ຈຳນວນໜຶ່ງ ເຊັ່ນ :

- ຝຸ່ນ (ຝຸ່ນຄອກ, ຝຸ່ນຊີວະພາບ, ຝຸ່ນເຄມີ); ແນວພັນປັບປຸງ (ພືດ, ສັດ), ການເກັບ-ຮັກສາ-ຈັດ ສັນນ້ຳ (ຊົນລະປະທານ), ການປັບປຸງ ແລະ ຮັກສາຄວາມອຸດົມສົມບູນ ຂອງດິນ ຕາມແຕ່ລະເຂດ ແຕ່ລະພື້ນທີ່ນິເວດກະສິກຳ, ອຸປະກອນ, ເຕັກນິກ ກົນຈັກກະສິກຳ, ວິທະຍາສາດ-ວິທະຍາການ; ປະສົມປະສານ ການປູກຝັງ-ລ້ຽງສັດ ໄປພ້ອມກັນ, ປູກພືດຫລາຍຊະນິດ ໃນເນື້ອທີ່ດຽວກັນ, ລວມ ທັງການເພີ່ມຮອບວຽນການຜະລິດ ໃນແຕ່ລະປີ.

ສະນັ້ນ ການເຮັດກະເສດສຸມ ຈຶ່ງແມ່ນການຜະລິດກະສິກຳແບບໃໝ່ ທີ່ກ້າວໜ້າ ຊຶ່ງ ແຕກຕ່າງກັບການຜະລິດກະສິກຳ ຕາມຄວາມຊິນເຄີຍເກົ່ານັ້ນ ຢ່າງສິ້ນເຊີງ, ມັນແມ່ນພື້ນຖານ ຂອງ ການຜະລິດກະສິກຳເປັນສິນຄ້າ, ມັນແມ່ນທິດທາງຕົ້ນຕໍ ເພື່ອສ້າງການຫັນປ່ຽນໃນການຜະລິດກະສິກຳ

ຢູ່ປະເທດເຮົາ ໃຫ້ມີບາດກ້າວໃຫມ່ ສຳລັບການສ້າງ**ຄວາມຫມັ້ນຄົງດ້ານສະບຽງອາຫານ.**

- ການສ້າງຄວາມຫມັ້ນຄົງ ດ້ານສະບຽງອາຫານ.

ໃນໂລກປັດຈຸບັນ, ຄວາມຫມັ້ນຄົງດ້ານສະບຽງອາຫານ ໄດ້ກາຍເປັນບັນຫາສຳຄັນ ແລະ ພົ້ນເດັ່ນຂຶ້ນ ຍ້ອນວ່າ: **ໃນດ້ານຫນຶ່ງ** ຈຳນວນປະຊາກອນໂລກ ນັບມື້ ນັບເພີ່ມຂຶ້ນ ແຕ່ເນື້ອທີ່ດິນ ສຳລັບການຜະລິດກະສິກຳ ພັດມີຈຳກັດ, ຍິ່ງໄປກວ່ານັ້ນ ພັດຖືກທັນໄປນຳໃຊ້ໃນເປົ້າຫມາຍອື່ນ ທີ່ ບໍ່ແມ່ນກະສິກຳ ຫລື ຜະລິດອັນອື່ນ ທີ່ບໍ່ແມ່ນສະບຽງອາຫານ. **ໃນດ້ານທີສອງ** ຍ້ອນສະພາບແວດ ລ້ອມທຳມະຊາດ ມີການປ່ຽນແປງຫລາຍ ເຊັ່ນ: ການປ່ຽນແປງ ຂອງສະພາບອາກາດ (ໂລກຮ້ອນ), ເກີດ ໄພແຫ້ງແລ້ງ, ນ້ຳຖ້ວມຮ້າຍແຮງ ແລະ ຖີ່ຂຶ້ນກວ່າເກົ່າ ພາໃຫ້ການຜະລິດຕົກຕ່ຳ, ການສະຫນອງສະ ບຽງອາຫານໃນໂລກ ຫລຸດລົງ ແລະ ລາຄາສະບຽງອາຫານ ກໍແພງຂຶ້ນ.

ສຳລັບປະເທດເຮົາ, ການຜະລິດສະບຽງອາຫານ ເປັນຕົ້ນ ແມ່ນການປູກເຂົ້າ ຍັງກວມເອົາ 68% ຫລື ເທົ່າກັບ 1,8 ລ້ານເຮັກຕາ ຂອງເນື້ອທີ່ທຳການຜະລິດທົ່ວປະເທດ, ມີສະມັດຖະພາບ ສະເລ່ຍ 1,5-3,5 ໂຕນ ຕໍ່ເຮັກຕາ (ຢູ່ໄຫ 2,5-3,5 ໂຕນ ຕໍ່ເຮັກຕາ, ຢູ່ຫວຽດນາມ 3,5-4,2 ໂຕນ ຕໍ່ເຮັກຕາ), ເວລາໃດຖືກຮັບຜົນກະທົບ ຈາກສະພາບການປ່ຽນແປງ ຂອງດິນຟ້າອາກາດ ຫລື ເກີດ ໄພທຳມະຊາດ ກໍມີຄວາມສ່ຽງຕໍ່ຄວາມຫມັ້ນຄົງ ດ້ານສະບຽງອາຫານ.

ສະນັ້ນ ພັກ, ລັດຖະບານເຮົາ ຈຶ່ງຖືເອົາຄວາມຫມັ້ນຄົງ (ການຄ້ຳປະກັນ) ດ້ານສະບຽງອາ ຫານ ເປັນວຽກບູລິມະສິດສູງສຸດ. ຄວາມຫມັ້ນຄົງ ດ້ານສະບຽງອາຫານ ຂອງປະເທດ ແມ່ນຫມາຍເຖິງ ການຮັບປະກັນໃຫ້ທຸກພາກສ່ວນໃນສັງຄົມ ສາມາດເຂົ້າເຖິງແຫລ່ງສະບຽງອາຫານ ທີ່ປອດໄພ ແລະ ພຽງພໍ ກັບການບໍລິໂພກ ເພື່ອສຸຂະພາບທີ່ສົມບູນ. ຖ້າເວົ້າໃນລະດັບຄົວເຮືອນ ແມ່ນເນັ້ນໃສ່ສະ ມາຊິກທຸກຄົນໃນຄອບຄົວ ຕ້ອງມີອາຫານການກິນຢ່າງພຽງພໍ. ສະນັ້ນ ຕ້ອງປະຕິບັດຢ່າງເຖິງຖອງ ແລະ ເປັນຈິງ ***ທິດນຳໃນມະຕິ IX ທີ່ວ່າ: "ຕ້ອງຈັດສັນທີ່ດິນ ແລະ ມອບສິດນຳໃຊ້ທີ່ດິນ ຢ່າງຍາວ ນານ ໃຫ້ແຕ່ລະຄອບຄົວຊາວກະສິກອນ ຢູ່ຊົນນະບົດ ເພື່ອໃຫ້ເຂົາເຈົ້າ ມີເງື່ອນໄຂ ແລະ ອຸ່ນໃຈ ທຳການຜະລິດສ້າງຄວາມພໍຢູ່ພໍກິນ ແລະ ຄວາມຮັ່ງມີແກ່ຕົນເອງ ຕະຫລອດໄປ ".*** ພ້ອມກັນນີ້ ກໍ ຕ້ອງເຂົ້າໃຈແຈ້ງວ່າ ການຂາດຄວາມຫມັ້ນຄົງ ດ້ານສະບຽງອາຫານ (ອາຫານການກິນບໍ່ພຽງພໍ) ຈະເປັນສາເຫດ ພາໃຫ້ເກີດຄວາມອຸ້ນວາຍ ທາງເສດຖະກິດ-ສັງຄົມ ແລະ ການເມືອງໄດ້; ຈະເປັນ ປັດໄຈ ກະທົບເຖິງຄວາມຫມັ້ນຄົງ ຂອງລັດ ກໍຄື ຂອງຊາດ.

ເພື່ອບັນລຸເປົ້າຫມາຍດັ່ງກ່າວມາຂ້າງເທິງ ຕ້ອງກຳແຫນ້ນທິດທາງວຽກງານຈຸດສຸມ ໃນຂົງເຂດ ກະສິກຳ ແລະ ມີຄວາມເປັນເຈົ້າການສູງ ໃນການຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດໃຫ້ເປັນຈິງ ຄື :

- ຮີບຮ້ອນ ຈັດວາງໂຄງປະກອບການປູກຝັງ, ລ້ຽງສັດ ຄົ້ນໃຫມ່ ໃຫ້ເຫມາະສົມຕາມທ່າແຮງ ຂອງແຕ່ລະບໍລິເວນ, ສ້າງໃຫ້ມີເຂດຜະລິດກະສິກຳສະເພາະ ເຊັ່ນ: ເຂດປູກເຂົ້າ, ເຂດປູກພືດຜັກປອດສານພິດ (ກະສິກຳສະອາດ, ກະສິກຳອິນຊີ), ເຂດປູກພືດອຸດສາຫະກຳ, ເຂດລ້ຽງສັດ...

+ ເອົາໃຈໃສ່ ຕໍ່ການຄົ້ນຄວ້າຜະລິດແນວພັນ ແລະ ນຳໃຊ້ແນວພັນໃຫມ່ (ພືດ, ສັດ) ກໍຄື ເຕັກນິກ ແລະ ວິທະຍາການໃຫມ່ ເຂົ້າໃນການຜະລິດ ໃຫ້ວ່ອງໄວ ຕິດພັນກັບການສ້າງຄອບຄົວ ຕົວແບບ ໃຫ້ແຜ່ຫລາຍ.

+ ເລັ່ງລັດການຈັດສັນທີ່ດິນກະສິກຳ ໃນຂອບເຂດທົ່ວປະເທດໃຫ້ສຳເລັດ ໂດຍຮັບປະກັນໃຫ້ມີເນື້ອທີ່ດິນສຳລັບການຜະລິດສະບຽງອາຫານ ຢ່າງພຽງພໍ, ໃນນີ້ ໃຫ້ສຸມໃສ່ພັດທະນາ 7 ທົ່ງພຽງບູລິມະສິດ ແລະ ບັນດາທົ່ງພຽງນ້ອຍ ຢູ່ພາກເຫນືອ ແລະ ເຂດພູດອຍ ຢ່າງເປັນລະບົບຄົບຊຸດ ເພື່ອສ້າງຄວາມຫມັ້ນຄົງດ້ານສະບຽງອາຫານ.

+ ສຸມໃສ່ປັບປຸງຍົກລະດັບ ຊົນລະປະທານ ຕາມທິດສ້າງຊົນລະປະທານທີ່ແຫນ້ນຫນາ ຖາວອນ, ທັງຄຸ້ມຄອງນຳໃຊ້ ໃຫ້ມີປະສິດທິຜົນສູງ (ຮັບໃຊ້ຊົນລະກະເສດ, ປະຊາຊົນ ມີສ່ວນຮ່ວມ ໃນການຄຸ້ມຄອງ-ນຳໃຊ້).

+ ສ້າງຕັ້ງ ແລະ ປັບປຸງ ສູນສົ່ງເສີມ ຫລື ສູນພັດທະນາກະສິກຳ ເພື່ອຜະລິດແນວພັນ, ໃຫ້ການແນະນຳຝຶກອົບຮົມ ແລະ ບໍລິການ ທາງດ້ານວິຊາການ ແກ່ຊາວກະສິກອນ.

+ ຈັດຕັ້ງກຸ່ມຜະລິດ ຂອງຊາວກະສິກອນ ເພື່ອສະດວກໃນການຝຶກອົບຮົມ, ຊ່ວຍຫນູນດ້ານທຶນຮອນ-ວິຊາການ, ສ້າງຄວາມສາມາດ ໃນການແຂ່ງຂັນ, ເຂົ້າເຖິງຂໍ້ມູນຕະຫລາດ ແລະ ປົກປ້ອງຜົນປະໂຫຍດ ຂອງເຂົາເຈົ້າ.

6. ປົກປັກຮັກສາ ແລະ ຟື້ນຟູບູລະນະປ່າໄມ້ ເພີ່ມພື້ນທີ່ສີຂຽວຂອງປະເທດ.

ຕັ້ງແຕ່ໃດໆມາປ່າໄມ້ ແລະ ທີ່ດິນປ່າໄມ້ ແມ່ນມີຄວາມສຳຄັນຕໍ່ການດຳລົງຊີວິດ ຂອງປະຊາຊົນລາວບັນດາເຜົ່າ ແລະ ໃຫ້**ຄຸນປະໂຫຍດໂດຍກົງ** ເຊັ່ນ: ສະຫນອງໄມ້ ເພື່ອປຸກສ້າງເຮືອນ, ເຮັດເຄື່ອງໃຊ້ໃນເຮືອນ, ເຮັດຟືນ; ນອກຈາກນັ້ນ ໄມ້ ແລະ ເຄື່ອງປ່າຂອງດົງຈຳນວນຫນຶ່ງ ຍັງໃຊ້ເປັນຢາປົວພະຍາດ, ເປັນແຫລ່ງວັດຖຸດິບໃຫ້ແກ່ຫັດຖະກຳ-ອຸດສາຫະກຳ, ເປັນບ່ອນທ່ອງທ່ຽວທຳມະຊາດ, ເປັນບ່ອນຄົ້ນຄວ້າ ທົດລອງ ວິທະຍາສາດ ແລະ ເປັນບ່ອນຢູ່ອາໄສຂອງສັດປ່ານາໆຊະນິດ.

ປ່າໄມ້ ຍັງເປັນທ່າແຮງ ສຳລັບການຮັກສາຄວາມສົມດູນ ແລະ ຄວາມຊຸ່ມຊື່ນ ຂອງດິນຟ້າອາກາດ, ຊ່ວຍປົກປັກຮັກສາສິ່ງແວດລ້ອມ ໂດຍສະເພາະ ແມ່ນແຫລ່ງນ້ຳ ເພື່ອສະຫນອງນ້ຳແກ່ຊົນລະປະທານ, ໂຄງການໄຟຟ້ານ້ຳຕົກ, ນ້ຳປະປາ, ນ້ຳສະອາດ... ປົກປັກຮັກສາລະບົບນ້ຳໃຕ້ດິນ ແລະ ຮັກ

ສາຄຸນນະພາບຂອງດິນ; ປ້ອງກັນໄພພິບັດ ທາງທຳມະຊາດ; ເປັນຊາຍແດນລະຫວ່າງຊາດ (ປະເທດ ລາວ-ບັນດາປະເທດອ້ອມຂ້າງ).

✪ ຖ້າຫາກປ່າໄມ້ຖືກທຳລາຍຫມົດໄປ ຫລື ຍັງເຫລືອບໍ່ພໍທໍ່ໃດ, ມັນຈະກໍ່ໃຫ້ເກີດຄວາມບໍ່ສົມດູນ ໃນທຳມະຊາດ ແລະ ເກີດການປ່ຽນແປງ ດ້ານດິນຟ້າອາກາດ ຫລືຍິ່ງໄປກວ່ານັ້ນ ແມ່ນເກີດໄພພິບັດຮ້າຍແຮງທາງທຳມະຊາດຫລາຍຢ່າງ ເຊັ່ນ: ເກີດສະພາວະໂລກຮ້ອນ, ເກີດສະພາບການເປັນທະເລຊາຍ, ນ້ຳຊຸທົ່ງ, ດິນແຫ້ງກະແດ້ງເສື່ອມຄຸນ, ສັດນ້ຳ-ສັດປ່າ ບໍ່ມີທີ່ຢູ່ອາໄສ ແລະ ອາດຈະສູນພັນ, ບໍ່ມີເຄື່ອງປ່າຂອງດົງ... ຊຶ່ງໃນທີ່ສຸດແລ້ວ ຈະເຮັດໃຫ້ປະເທດເຮົາ ຂາດປັດໄຈອັນພື້ນຖານຂອງການພັດທະນາແບບຍືນຍົງ ແລະ ຫມົດຄວາມອຸດົມສົມບູນໄປ ຢ່າງຫນ້າເສຍດາຍ.

ໂດຍເຫັນໄດ້ຄວາມສຳຄັນຄືດັ່ງກ່າວ ***ມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ໄດ້ກຳນົດວ່າ "*** *ໃນຊຸມປີຕໍ່ຫນ້ານີ້, ພວກເຮົາຕ້ອງໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ຫລາຍ ກວ່າເກົ່າ ຕໍ່ວຽກງານຄຸ້ມຄອງປ່າໄມ້ ເພື່ອເພີ່ມເນື້ອທີ່ສີຂຽວ, ເພີ່ມເນື້ອທີ່ປົກຫຸ້ມຂອງປ່າໄມ້ທຳມະຊາດ ໃຫ້ກວມເນື້ອທີ່ສ່ວນໃຫຍ່ ຂອງປະເທດ "*(ປຶ້ມມະຕິ IX, ຫນ້າ 32). ອີງຕາມທິດຊີ້ນຳດັ່ງກ່າວ, ວຽກງານປ່າໄມ້ ຕ້ອງຮັບປະກັນ 2 ດ້ານ ໄປພ້ອມໆກັນ ຄື :

ດ້ານທີຫນຶ່ງ: ຕ້ອງສະກັດກັ້ນ ແລະ ແກ້ໄຂໃຫ້ໄດ້ ສາເຫດທີ່ພາໃຫ້ເນື້ອທີ່ປ່າໄມ້ຫລຸດລົງ; (ປີ 1982 ເນື້ອທີ່ປ່າໄມ້ ຍັງກວມ 49,7%, ປີ 2002 ຍັງເຫລືອ 41,5% ສະເລ່ຍປ່າໄມ້ຖືກທຳລາຍ ປະມານ 134.000 ຮຕ/ປີ ຫລື ເທົ່າກັບ 0,6% ຂອງເນື້ອທີ່ທົ່ວປະເທດ; ປີ 2010 ເນື້ອທີ່ປ່າໄມ້ ຍັງເຫລືອ ປະມານ 40%); ສະນັ້ນ ຕ້ອງເພີ່ມທະວີ ການຄຸ້ມຄອງປ່າໄມ້, ຈຳກັດການລັກຕັດໄມ້ທຳລາຍປ່າ ຫລື ການຕັດໄມ້ເກີນກຳນົດອະນຸຍາດ ຂອງລັດຖະບານ ຢ່າງເດັດຂາດ ເຂັ້ມງວດ; ແກ້ໄຂດ້ວຍມາດຕະການຄົບຊຸດ ແລະ ເຫມາະສົມ ການຖາງປ່າເຮັດໄຮ່ປູກເຂົ້າແບບເລື່ອນລອຍ ຂອງປະຊາຊົນບັນດາເຜົ່າ.

ດ້ານທີສອງ: ຕ້ອງປະຕິບັດໃຫ້ເປັນຈິງ ມາດຕະການຕ່າງໆ ກ່ຽວກັບການປ້ອງກັນ ແລະ ຟື້ນຟູບູລະນະປ່າໄມ້ ສຳລັບໄລຍະຮອດປີ 2015 ດັ່ງນີ້ :

ປະຕິບັດໃຫ້ເປັນຈິງ ຄາດຫມາຍຍົກລະດັບປົກຫຸ້ມ ຂອງປ່າໄມ້ ໃຫ້ໄດ້ 65% ດ້ວຍການຟື້ນຟູປ່າທຳມະຊາດ ໃຫ້ໄດ້ 3,9 ລ້ານເຮັກຕາ, ປູກໄມ້ໃຫ້ໄດ້ 2 ແສນເຮັກຕາ, ຈັດສັນ ແລະ ປະກາດໃຊ້ປ່າ 3 ປະເພດ (ປ່າສະຫງວນ, ປ່າປ້ອງກັນ, ປ່າຜະລິດ) ໃຫ້ໄດ້ 60% ແລະ ຂະຫຍາຍເຂດປ່າໄມ້ ໃຫ້ໄດ້ 10% ຂອງປ່າຜະລິດທັງຫມົດ; ສືບຕໍ່ສ້າງແຜນຈັດສັນ ຄຸ້ມຄອງ ເຂດປ່າສະຫງວນແຫ່ງຊາດ (24 ແຫ່ງ), ປ່າປ້ອງກັນແຫ່ງຊາດ (49 ແຫ່ງ), ປ່າຜະລິດແຫ່ງຊາດ (51 ແຫ່ງ) ກໍຄື ປ່າສະຫງວນ, ປ່າປ້ອງກັນ, ປ່າຜະລິດ ຂອງແຂວງ, ຂອງເມືອງ, ປ່າໄມ້ບ້ານ, ປ່າໄມ້ຊຸມຊົນ ໃຫ້ສຳເລັດຕາມແຜນການ; ຈັດສັນ ແລະ ຄຸ້ມຄອງ ບັນດາ

ທຸລະກິດປຸງແຕ່ງໄມ້ ຮັບໃຊ້ພາຍໃນ ແລະ ເປັນຂາອອກ ໃຫ້ເປັນລະບົບລະບຽບ; ຈັດສັນປະຊາຊົນ ທີ່ດຳລົງຊີວິດ ແລະ ທຳມາຫາກິນ ຢູ່ໃນເຂດພູຜາປ່າດົງ ຫ່າງໄກສອກຫລີກ ໃຫ້ອອກມາຕັ້ງຖິ່ນຖານ ແລະ ທຳມາຫາກິນໃນພື້ນທີ່ ທີ່ເໝາະສົມ, ແກ້ໄຂບັນຫາການເຮັດໄຮ່ເລື່ອນລອຍ ແລະ ການເຄື່ອນຍ້າຍຕັ້ງຖິ່ນຖານຕາມລຳພັງໃຈ ຂອງປະຊາຊົນ ໃຫ້ຂາດຕົວ; ເພີ່ມທະວີການໂຄສະນາ ປຸກລະດົມ, ປູກຈິດສຳນຶກ ກ່ຽວກັບການອະນຸລັກຮັກສາປ່າໄມ້ ໄປຄວບຄູ່ກັບການສົ່ງເສີມບັນດາຜູ້ປະກອບການ ກໍຄື ປະຊາຊົນບັນດາເຜົ່າ ແລະ ອົງການຈັດຕັ້ງໃນສັງຄົມ ປູກຕົ້ນໄມ້ໃຫ້ເປັນຂະບວນກ້ວາງຂວາງ; ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ ໃນການປົກປັກຮັກສາ, ຟື້ນຟູບູລະນະ, ປູກ ແລະ ນຳໃຊ້ໄມ້ ຮັບໃຊ້ຜົນປະໂຫຍດຕົວຈິງ ຂອງເຂົາເຈົ້າຢ່າງຕໍ່ເນື່ອງ, ຍາວນານ (ປູກໄມ້ໃຫ້ຫຼາຍ, ໄມ້ອຸດສາຫະກຳ, ເຂດທ່ອງທ່ຽວອະນຸລັກທຳມະຊາດ ແບບປະຊາຊົນມີສ່ວນຮ່ວມ...) ຕິດພັນກັບຂະບວນ ມອບດິນ-ມອບປ່າ, ຂະບວນຈັດສັນທີ່ດິນທຳການຜະລິດ, ວັນປູກຕົ້ນໄມ້ແຫ່ງຊາດ, ວັນສຳຄັນຕ່າງໆ ຂອງຊຸມຊົນ-ທ້ອງຖິ່ນ; ເອົາການປູກຈິດສຳນຶກ ຕິດພັນກັບການຮຽນຮູ້ກົດໝາຍ ແລະ ລະບຽບການຕ່າງໆ ກ່ຽວກັບປ່າໄມ້ ເປັນສິ່ງກະຕຸກຊຸກຍູ້ການອະນຸລັກຮັກສາ ແລະ ເພີ່ມຄຸນຄ່າ (ໂດຍທາງກົງ-ໂດຍທາງອ້ອມ) ຂອງປ່າໄມ້; ປະກອບສ່ວນຮ່ວມກັບປະຊາຄົມໂລກ ໃນການຕໍ່ສູ້ແກ້ໄຂສະພາວະໂລກຮ້ອນ ແລະ ການປ່ຽນແປງ ຂອງດິນຟ້າອາກາດ ດ້ວຍການປົກປັກຮັກສາປ່າໄມ້ ໃຫ້ອຸດົມສົມບູນຕະຫລອດໄປ.

7. ປະຕິບັດຍຸດທະສາດ ຫັນເປັນອຸດສາຫະກຳ - ຫັນເປັນທັນສະໄໝ.

ມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ໄດ້ກຳນົດວ່າ *"ການຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝ ແມ່ນສິ່ງທີ່ຕ້ອງເປັນໄປ, ມັນແມ່ນວຽກງານລວມ ແລະ ສອດຫ້ອຍໄປໃນທຸກຂົງເຂດວຽກງານ ແລະ ຂະແໜງການ ທັງພາກລັດ ແລະ ເອກະຊົນ, ເວົ້າລວມ ແມ່ນຂອງທົ່ວສັງຄົມ, ທັງແມ່ນໜ້າທີ່ສະເພາະໜ້າ ແລະ ຍາວນານ ບົນເສັ້ນທາງແຫ່ງການສ້າງຄວາມັ່ງຄັ່ງເຂັ້ມແຂງ ໃຫ້ແກ່ປະເທດຊາດ ແລະ ຄວາມຮັ່ງມີຜາສຸກ ໃຫ້ແກ່ປະຊາຊົນເຮົາ. ສະນັ້ນ ພັກເຮົາ ຕ້ອງນຳພາຊີ້ນຳ ການຫັນເປັນອຸດສາຫະກຳ ແລະ ຫັນເປັນທັນສະໄໝ ໃຫ້ເປັນຈິງ ດ້ວຍບາດກ້າວອັນເໝາະສົມ ໂດຍເລີ່ມຈາກຂະແໜງການ ແລະ ບໍລິເວນເຂດແຄ້ວນ ທີ່ພວກເຮົາມີເງື່ອນໄຂຄວາມສາມາດ ແລະ ມີທ່າແຮງເຮັດໄດ້, ປະສົມປະສານອັນທີ່ເປັນມູນເຊື້ອ ກັບອັນທັນສະໄໝ; ດຳເນີນໂຄງການຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່ ໄປຄຽງຄູ່ກັນ; ສົ່ງເສີມທັງພາກລັດ ແລະ ເອກະຊົນ, ທັງພາຍໃນ ແລະ ຕ່າງປະເທດ "* (ປຶ້ມມະຕິ IX, ໜ້າ 33).

✪ ການປະຕິບັດຍຸດທະສາດ ຫັນເປັນອຸດສາຫະກຳ ຫັນເປັນທັນສະໄໝ ຢູ່ປະເທດເຮົາ ໃນຊຸມປີຕໍ່ໜ້ານີ້ ຈະຕ້ອງເປັນໄປຕາມທິດແຫ່ງການພັດທະນາ ແບບຍືນຍົງ; ເລີ່ມຈາກຂະແໜງການ ທີ່

ພວກເຮົາມີເງື່ອນໄຂ ແລະ ສາມາດເຮັດໄດ້ ເຊັ່ນ: ຂະແໜງໄຟຟ້ານ້ຳຕົກ, ຂະແໜງແຮ່ທາດ, ຂະແໜງໂທລະຄົມ ແລະ ການສື່ສານ... ເພື່ອໃຫ້ພວກເຮົາມີທຶນຮອນ ແລະ ມີພື້ນຖານ ສຳລັບການສືບຕໍ່ພັດທະນາໃນຊຸມປີຕໍ່ໆໄປ.

- ການຫັນເປັນອຸດສາຫະກຳ ຫັນເປັນທັນສະໄໝ ຈະບໍ່ເຮັດແບບຟ້າວຟັ່ງກ້າວກະໂດດ, ແຕ່ຈະດຳເນີນດ້ວຍຄວາມຮອບຄອບ ຕາມແຜນຍຸດທະສາດທີ່ກຳນົດໄວ້ ຖືປະສິດທິຜົນ ແລະ ຜົນປະໂຫຍດອັນຍາວນານ ຂອງປະເທດຊາດ ເປັນຫລັກ, ຊຶ່ງຈະສະແດງອອກ ດັ່ງນີ້ :

+ ຮອດປີ 2015 ສູ້ຊົນສ້າງການຫັນປ່ຽນໃນໂຄງປະກອບ ຂະແໜງການເສດຖະກິດ ໄປຕາມທິດທີ່ຕັ້ງໜ້າ ຄື: ອັດຕາສ່ວນກະສິກຳ-ປ່າໄມ້ ໃນ GDP ໃຫ້ຫລຸດລົງ ຢູ່ໃນລະດັບ 23%; ອຸດສາຫະກຳ ໃຫ້ເພີ່ມຂຶ້ນຢູ່ໃນລະດັບ 39% ແລະ ການບໍລິການ ເພີ່ມຂຶ້ນຢູ່ໃນລະດັບ 38%.

+ ການຫັນເປັນອຸດສາຫະກຳ ແລະ ຫັນເປັນທັນສະໄໝ ຈະດຳເນີນບົນພື້ນຖານການລົງທຶນທີ່ມີປະສິດທິຜົນ, ຮັບປະກັນ ໃຫ້ເສດຖະກິດມີການເຕີບໂຕ ແລະ ມີສະຖຽນລະພາບ; ພ້ອມກັນນັ້ນ ກໍຕ້ອງມີການພັດທະນາສັງຄົມ ແລະ ປົກປັກຮັກສາສິ່ງແວດລ້ອມ ໄປຄຽງຄູ່ກັນ; ຕ້ອງມີການນຳໃຊ້ພາຫະນະ ແລະ ອຸປະກອນອັນທັນສະໄໝ, ປະຢັດວັດຖຸດິບ, ປະຢັດພະລັງງານ, ຫລຸດຜ່ອນມົນລະພິດ...

+ ຮອດປີ 2015 ຕ້ອງສ້າງບຸກຄະລາກອນ ແລະ ກຳລັງແຮງງານ ໃຫ້ສາມາດຕອບສະໜອງຄວາມຕ້ອງການ ໄດ້ໂດຍພື້ນຖານ, ອັດຕາສ່ວນແຮງງານ ໃນຂະແໜງກະສິກຳ-ປ່າໄມ້ ໃຫ້ຫລຸດລົງມາຢູ່ໃນລະດັບ 70%, ໃນຂະແໜງອຸດສາຫະກຳ ໃຫ້ເພີ່ມຂຶ້ນຢູ່ໃນລະດັບ 7% ແລະ ແຮງງານໃນຂະແໜງບໍລິການ ເພີ່ມຂຶ້ນຢູ່ໃນລະດັບ 23%.

*ເພາະສະນັ້ນ ຈຶ່ງມີ **ການກຳນົດທິດ** ສຳລັບການຫັນເປັນອຸດສາຫະກຳ-ຫັນເປັນທັນສະໄໝ ໃນຫັນດາຂະແໜງການເສດຖະກິດ ຈຳນວນໜຶ່ງ **ເຊັ່ນຕົວຢ່າງ** :*

- ***ຂະແໜງກະສິກຳ:*** ເນັ້ນໜັກ ການຫັນເປັນຊົນລະກະເສດ, ຫັນເປັນກົນຈັກ, ຄົ້ນຄວ້າການນຳໃຊ້ແນວພັນໃຫມ່, ເຕັກນິກ, ວິທະຍາການໃຫມ່, ປັບປຸງສູນສົ່ງເສີມ ຫລືສູນພັດທະນາກະສິກຳ ທີ່ມີແລ້ວ (ຈຳນວນ 216 ແຫ່ງ) ໃຫ້ມີຄວາມເຂັ້ມແຂງ, ຂະຫຍາຍຕົ້ມໃຫ້ໄດ້ຫລາຍກວ່າ 500 ແຫ່ງ ໃນທົ່ວປະເທດ; ຝຶກອົບຮົມ ແລະ ບໍລິການ ດ້ານວິຊາການ ໃຫ້ຊາວກະສິກອນ, ຈັດຕັ້ງກຸ່ມການຜະລິດໃຫ້ເຂັ້ມແຂງ.

- ***ຂະແໜງອຸດສາຫະກຳ:*** ແມ່ນເລັ່ງລັດໂຄງການຂະຫນາດໃຫຍ່ ດ້ານພະລັງງານໄຟຟ້ານ້ຳຕົກ, ໄຟຟ້າຄວາມຮ້ອນດ້ວຍຖ່ານຫີນ ແລະ ພະລັງງານທາງເລືອກອື່ນ ໂດຍຕິດພັນກັບການຮັກສາປ່າໄມ້ ແລະ ແຫລ່ງນ້ຳ ເພື່ອຮັບປະກັນຄວາມຍືນຍົງ, ປະຕິບັດແຜນຂະຫຍາຍ ແລະ ຊົມໃຊ້ໄຟຟ້າ ຢູ່ຊົນນະບົດ ໃຫ້ໄດ້ຕາມຄາດໝາຍ (ປີ 2015 ທົ່ວປະເທດ ໃຫ້ໄດ້ຊົມໃຊ້ໄຟຟ້າ ກວມ 80% ຂອງຈຳນວນຄອບ

ຄ໊ວທ້ຽງຫມ໊ດ) ແລະ ອື່ນໆອີກ.

- ດຳເນີນການຫັນເປັນອຸດສາຫະກຳ, ຫັນເປັນທັນສະໄຫມ ຕ້ອງດຳເນີນໂດຍຕິດພັນກັບການຈັດ ສັນພື້ນລະເມືອງ ກ໋ຄື ການຫັນເປັນຕົວເມືອງ ແລະ ພັດທະນາຕົວເມືອງ ຢ່າງເຫມາະສົມ; ກ່ອນອື່ນຫມ໊ດ ຕ້ອງ ຫັນການຕັ້ງໂຮງງານອຸດສາຫະກຳ ໄປຢູ່ເຂດທີ່ຫນ່ໍກັບແຫລ່ງວັດຖຸດິບ ແລະ ມີກຳລັງແຮງງານຫລາຍ; ຕ້ອງຫັນ ບັນດາໂຄງການພັດທະນາອຸດສາຫະກຳ ໃຫ້ກາຍເປັນໃຈກາງ ກະຕຸ້ນການພັດທະນາບໍລິເວນອ້ອມຮອບ ເພື່ອໃຫ້ເກີດມີຖານການຜະລິດ ແລະ ການບໍລິການ ຕອບສະຫນອງໃຫ້ແກ່ໂຄງການ; ພ້ອມກັນນັ້ນ ກ໋ຕ້ອງ ຫັນບັນດາຕົວເມືອງຫລັກ ຂອງທ້ອງຖິ່ນ ຫລ໊ ບໍລິເວນເຂດແຄ້ວນນັ້ນ ໃຫ້ເປັນໃຈກາງດຶງດູດການລົງທຶນ ແລະ ການພັດທະນາ ຢູ່ແຕ່ລະບໍລິເວນ.

ໂຮງຈັກຜະລິດພະລັງງານໄຟຟ້າຂອງເຂື່ອນນ໊ເທີນ II

8. ການເຊື່ອມໂຍງເສດຖະກິດ ກັບອະນຸພາກພື້ນ, ພາກພື້ນ ແລະ ສາກົນ.

✪ ຄືຮູ້ນຳກັນແລ້ວວ່າ, ການຮ່ວມມືລະຫວ່າງປະເທດ ເພື່ອຜົນປະໂຫຍດຮ່ວມກັນ ພວມເປັນທ່າອ່ຽງລວມຂອງໂລກ; ສະນັ້ນ ຈຶ່ງມີກຸ່ມການຮ່ວມລະຫວ່າງປະເທດ ເກີດຂຶ້ນຢູ່ໃນພາກພື້ນຕ່າງໆ ຂອງໂລກ. ການເກີດຂຶ້ນ ຂອງກຸ່ມຮ່ວມມືລະຫວ່າງປະເທດ ດັ່ງກ່າວນັ້ນ ໄດ້ກໍ່ໃຫ້ເກີດການເຊື່ອມໂຍງເສດຖະກິດ ຂອງປະເທດຕ່າງໆ ເຂົ້າກັນເປັນກຸ່ມ, **ເຊັ່ນຕົວຢ່າງ**: ຢູ່ພາກພື້ນອາຊີອາຄະເນ ກໍມີການເຊື່ອມໂຍງເສດຖະກິດອາຊຽນ ເພື່ອສ້າງເປັນປະຊາຄົມເສດຖະກິດ ໃນປີ 2015. ສ່ວນຢູ່ໃນອະນຸພາກພື້ນແມ່ນ້ຳຂອງ ຫລື GMS ກໍມີການເຊື່ອມໂຍງເຂົ້າກັນໃນຫລາຍດ້ານ ທາງເສດຖະກິດ. ເມື່ອເປັນເຊັ່ນນັ້ນ ການເຊື່ອມໂຍງເຂົ້າກັບບັນດາປະເທດ ໃນພາກພື້ນ ແລະ ອະນຸພາກພື້ນລຸ່ມແມ່ນ້ຳຂອງ ຈຶ່ງແມ່ນຄວາມຈຳເປັນ ພາວະວິໄສ, ຫລີກລ່ຽງບໍ່ໄດ້ ສຳລັບປະເທດເຮົາ.

✪ ເພື່ອໃຫ້ປະເທດເຮົາ ສາມາດເຊື່ອມໂຍງເສດຖະກິດ ເຂົ້າກັບອະນຸພາກພື້ນ, ພາກພື້ນ ແລະ ສາກົນ ໄດ້ຢ່າງເປັນເຈົ້າ, ພວກເຮົາ ຕ້ອງຢຶດໝັ້ນປະຕິບັດທິດຊີ້ນຳ ຂອງພັກ ທີ່ວ່າ: ຢຶດໝັ້ນ ປະຕິບັດນະໂຍບາຍການຕ່າງປະເທດ ແລະ ເປີດກ້ວາງການຮ່ວມມື ແບບສະເໝີພາບ ຕ່າງຝ່າຍຕ່າງມີຜົນປະໂຫຍດ, ຮັບປະກັນ ຄວາມເປັນເອກະລາດ ແລະ ອະທິປະໄຕ ຂອງກັນແລະກັນ; ບໍ່ແຊກແຊງເຂົ້າວຽກງານພາຍໃນ ຂອງກັນແລະກັນ; ໃນຂະບວນວິວັດແຫ່ງການເຊື່ອມໂຍງນັ້ນ ເວລາໃດ ພວກເຮົາກໍຕ້ອງເຊີດຊູຈິດໃຈຊາດເອກະລາດ, ເປັນເຈົ້າຕົນເອງ, ທ້າຕ້ອງກຳແໜ້ນ ແລະ ມີຄວາມກ້າຫານ ນຳໃຊ້ກາລະໂອກາດຢ່າງທັນການ ເພື່ອສ້າງສາພັດທະນາປະເທດຊາດ, ພ້ອມກັນນັ້ນ ກໍຕ້ອງມີຄວາມສະຫຼຸ້ງໄວ ຕໍ່ການຜັນແປຂອງສະພາບແວດລ້ອມພາຍນອກ ເພື່ອຈະວາງມາດຕະການສະກັດກັ້ນ, ແກ້ໄຂຜົນກະທົບໃນດ້ານຕ່າງໆ ຢ່າງທັນການ ແລະ ມີປະສິດທິຜົນ.

- ຕ້ອງປັບປຸງ ແລະ ຍົກສູງຄວາມສາມາດ ຂອງພະນັກງານ ແລະ ເພີ່ມທະວີການຊີ້ນຳຕໍ່ການເຊື່ອມໂຍງ ຢ່າງເລິກເຊິ່ງ; ຕ້ອງເພີ່ມຄວາມສາມາດ ຂອງປະເທດເຮົາຂຶ້ນຕື່ມອີກ ໃນການແຂ່ງຂັນກັບປະເທດອື່ນໆ ດ້ວຍການຊ່ວຍຊູຢູ້ໜູນກັນ ລະຫວ່າງພາກລັດ ກັບພາກທຸລະກິດ, ເປີດກ້ວາງການຮ່ວມມືໃຫ້ມີຫລາຍລະດັບ, ຫລາຍທິດ, ຫລາຍຝ່າຍ, ຫລາຍຮູບຫລາຍສີ, ມີຫລັກໝັ້ນມິດ-ສັດຕູ, ກຳແໜ້ນຜົນປະໂຫຍດ ຂອງຊາດ ແລະ ຜົນປະໂຫຍດ ຂອງບັນດາຄູ່ຮ່ວມມື ໂດຍສອດຄ່ອງກັບສະພາບ ແລະ ເງື່ອນໄຂຕົວຈິງ. ພ້ອມກັນນັ້ນ ກໍຕ້ອງສ້າງປະເທດເຮົາ ເປັນຄູ່ຮ່ວມມືທີ່ດີ, ມີຄວາມຈິງຈັງ ເອົາການເອົາງານ ກັບປະເທດເພື່ອນມິດ ແລະ ສາກົນ, ບໍ່ແຂງກະດ້າງ ແຕ່ກໍບໍ່ມະລຸ້ມມະລ້ວຍ ດ້ານການຮ່ວມມື ແລະ ຮັບເອົາການຊ່ວຍເຫລືອຕ່າງໆ.

9. ເພີ່ມທະວີການຄຸ້ມຄອງລັດຕໍ່ເສດຖະກິດຕະຫລາດ ເພື່ອຮັບປະກັນທິດສັງຄົມນິຍົມ.

- ນັບແຕ່ ປະທານ ໄກສອນ ພົມວິຫານ ໄດ້ນຳພາລິເລີ່ມປ່ຽນແປງໃໝ່ເປັນຕົ້ນມາ, ຢູ່ປະເທດ

ເຮົາ ໄດ້ກ້າວສູ່ເສດຖະກິດສິນຄ້າ ແລະ ເສດຖະກິດຕະຫລາດ.

- ເສດຖະກິດຕະຫລາດ ມີດ້ານຕັ້ງໜ້າ ແລະ ດ້ານຫຍໍ້ທໍ້, ມັນເຄື່ອນໄຫວໄປຕາມ ກົດເກນສະເພາະຂອງມັນ; ສະນັ້ນ ລັດຕ້ອງຄຸ້ມຄອງ ເພື່ອເສີມຂະຫຍາຍດ້ານຕັ້ງໜ້າ ແລະ ເພື່ອຈຳກັດດ້ານຫຍໍ້ທໍ້ ຂອງມັນ; ຖ້າລັດປ່ອຍປະ ຫລີ ບໍ່ມີການຄຸ້ມຄອງ ເສດຖະກິດຕະຫລາດ ຈະຂະຫຍາຍຕົວໄປຕາມມັນເອງ. ຖ້າຢາກໃຫ້ມັນຂະຫຍາຍຕົວ ໄປຕາມທິດສັງຄົມນິຍົມ ລັດຕ້ອງເຮັດໜ້າລະບົດບາດ ຕິດຕາມກວດກາ ແລະ ດຳເນີນການຄຸ້ມຄອງ ດັດສົມຕະຫລາດ ຕາມລະບຽບກົດໝາຍ ແລະ ນະໂຍບາຍ.

1). ຄຸ້ມຄອງຊັບສິນສ່ວນລວມ ຂອງຊາດ ກໍຄື ຂອງວົງຄະນາຍາດແຫ່ງຊາດ ໃຫ້ດີ ເປັນຕົ້ນ ແມ່ນຊັບສິນທີ່ເກີດຈາກທຳມະຊາດ ຊຶ່ງບັນພະບູຮຸດເຮົາ ໄດ້ປົກປັກຮັກສາເອົາໄວ້ໃຫ້ ເຊັ່ນ: ທີ່ດິນ, ປ່າໄມ້, ແຫລ່ງນ້ຳ (ແມ່ນ້ຳລຳເຊ, ຫ້ວຍໜອງຄອງບຶງ...) ແຮ່ທາດ, ສັດປ່າ ແລະ ຊີວະນາໆພັນ (ເວົ້າລວມ ແມ່ນຊັບໃນດິນ ສິນໃນນ້ຳ)... ນອກນັ້ນ ກໍມີຊັບສິນທີ່ສ້າງຂຶ້ນດ້ວຍທຶນຮອນ ແລະ ຊັບພະຍາກອນຂອງ ລັດ ເຊັ່ນ: ໂຮງຈັກໂຮງງານ, ອາຄານ ບ້ານເຮືອນ ແລະ ສິ່ງປຸກສ້າງອື່ນໆ...

ໃນເສດຖະກິດຕະຫລາດ ຊັບສິນເຫລົ່ານັ້ນ ລ້ວນແຕ່ມີຄ່າສູງ ແລະ ຜູ້ໃດກໍຢາກໄດ້ມາເປັນເຈົ້າຂອງ, ສະນັ້ນ ລັດຕ້ອງຄຸ້ມຄອງຊັບສິນເຫລົ່ານັ້ນ ໃຫ້ດີ (ບໍ່ໃຫ້ຜູ້ອື່ນມາຈັບຈ່ອງ ແລະ ໂອນໄປເປັນຂອງສ່ວນຕົວ ຫລື ຄອບຄົວ), ຕ້ອງບູລະນະຮັກສາ ແລະ ຄຸ້ມຄອງນຳໃຊ້ ໃຫ້ມັນເກີດປະໂຫຍດສູງສຸດ ແກ່ປະເທດຊາດ ບ້ານເມືອງ.

2). ລັດ ຕ້ອງຄຸ້ມຄອງການເຄື່ອນໄຫວ ຂອງຕະຫລາດ, ຮັບປະກັນ ໃຫ້ກົນໄກຕະຫລາດ ດຳລົງບົດບາດກະຕຸກຊຸກຍູ້ການຜະລິດ ແລະ ການບໍລິການ ໃຫ້ຂະຫຍາຍຕົວ ຫລື ເວົ້າຢ່າງໜຶ່ງ ແມ່ນ ຮັບປະກັນໃຫ້ກົນໄກການຊື້-ຂາຍ ເປັນສິ່ງຊຸກຍູ້ການຜະລິດ ແລະ ການບໍລິການ ໃຫ້ຂະຫຍາຍຕົວນັ້ນເອງ.

ສະນັ້ນ ລັດ ຕ້ອງສົ່ງເສີມໃຫ້ມີຕະຫລາດ, ໃຫ້ມີການຊື້-ການຂາຍ ເພື່ອກະຕຸກຊຸກຍູ້ການຜະລິດ ແລະ ການບໍລິການ; ພ້ອມກັນນັ້ນ ກໍຕ້ອງຄຸ້ມຄອງລາຄາຊື້-ລາຄາຂາຍ ໃນຕະຫລາດ ດ້ວຍລະບຽບກົດໝາຍ ຫລື ດ້ວຍນະໂຍບາຍ ແລະ ມາດຕະການດັດສົມຕ່າງໆ ແບບທາງກົງ ແລະ ທາງອ້ອມ, ບໍ່ປະປ່ອຍຕະຫລາດ ຫລື ປະປ່ອຍໃຫ້ການຊື້- ຂາຍ ດຳເນີນໄປໂດຍບໍ່ມີການຕິດຕາມກວດກາດັດສົມ ຂອງລັດ.

3). ລັດຕ້ອງຄຸ້ມຄອງ ບໍ່ໃຫ້ເກີດເງິນເຟີ້ແຮງ, ບໍ່ໃຫ້ລາຄາສິນຄ້າແພງ ແລະ ບໍ່ໃຫ້ເກີດການປັ່ນປ່ວນ ດ້ານອັດຕາແລກປ່ຽນ ຊຶ່ງຈະເປັນສາເຫດເຮັດໃຫ້ຄ່າຄອງຊີບສູງ ເສດຖະກິດ ແລະ ຊີວິດການເປັນຢູ່ ຕົກຕ່ຳ.

4). ລັດຕ້ອງຄຸ້ມຄອງ ດ້ານແຮງງານ ແລະ ຄ່າຈ້າງ ໃຫ້ເໝາະສົມ; ໂດຍສະເພາະແມ່ນຕ້ອງສ້າງເງື່ອນໄຂ ໃຫ້ປະຊາຊົນພົນລະເມືອງ ມີວຽກເຮັດງານທຳ; ບໍ່ໃຫ້ເກີດການຫວ່າງງານຫລາຍ; ສ້າງຕຳ

ແຫນ່ງງານໃຫ້ເພີ່ມຂຶ້ນ ເພື່ອໃຫ້ຄົນມີວຽກເຮັດ, ມີລາຍໄດ້ເຂົ້າຄອບຄົວ; ຕ້ອງຄຸ້ມຄອງ ຄ່າແຮງງານ (ຫລື ຄ່າຈ້າງ) ໃຫ້ເຫມາະສົມ ບໍ່ເປັນການເອົາປຽບ ຫລື ຂູດຮີດ ຜູ້ອອກແຮງງານ, ພ້ອມກັນນັ້ນ ກໍຕ້ອງເປັນຜູ້ ດູແລການພົວພັນ ລະຫວ່າງຜູ້ປະກອບການ ກັບຜູ້ອອກແຮງງານ ໃຫ້ມີຄວາມເປັນທໍາ.

5). ລັດ ຕ້ອງປະຕິບັດການແຈກຢາຍ ທີ່ເຫມາະສົມ, ເປັນທໍາ ແລະ ດັດສົມການແຈກຢາຍໃຫ້ ສົມເຫດສົມຜົນ ຕາມທິດຕອບສະຫນອງຜົນປະໂຫຍດ ຂອງຜູ້ອອກແຮງງານ, ຂອງຜູ້ປະກອບການ ຂອງ ລັດ ແລະ ລວມຫມູ່ ໄດ້ຢ່າງກົມກຽວ. ຫມາຍຄວາມວ່າ ການແຈກຢາຍ ຕ້ອງຖືປະສິດທິຜົນເປັນຫລັກ ແລະ ຄໍານຶງເຖິງຄວາມຍຸຕິທໍາ; ຕ້ອງສົ່ງເສີມການອຸທິດເຫື່ອແຮງ ແລະ ຄວາມຮູ້, ຄວາມສາມາດ ຂອງ ຄົນ; ທ້ຽງຕ້ານ ກັບລັດທິສະເລ່ຍ, ທ້ຽງສະກັດກັ້ນ ການມີລາຍໄດ້ແຕກໂຕນກັນຫລາຍເກີນໄປ. ສໍາລັບ **ການແຈກຢາຍ ຂັ້ນທໍາອິດ** ຍິ່ງຕ້ອງເນັ້ນປະສິດທິຜົນ; ຜູ້ລົງທຶນ, ຜູ້ປະກອບການ ດໍາເນີນກິດຈະການດີ, ຖືກຕ້ອງຕາມລະບຽບກົດຫມາຍ ຕ້ອງໃຫ້ເຂົາເຈົ້າມີລາຍໄດ້ຮັ່ງມີຂຶ້ນກ່ອນ; ຜູ້ທີ່ມີຄວາມສາມາດ ອອກ ແຮງງານເກັ່ງ-ດຸຫມັ່ນປະດິດສ້າງ ເຮັດໄດ້ຫລາຍ ກໍຕ້ອງໃຫ້ເຂົາເຈົ້າໄດ້ຮັບຫລາຍ. **ແຈກຢາຍຂັ້ນທີສອງ** (ແຈກຢາຍຄືນໃຫມ່) ຈຶ່ງເບິ່ງດ້ານຄວາມສະເຫມີພາບ ແລະ ຄວາມຍຸຕິທໍາ ເພື່ອບໍ່ໃຫ້ເກີດຄວາມແຕກ ໂຕນກັນຫລາຍເກີນໄປ ດ້ານລາຍໄດ້.

10. ກະຊວງ-ອົງການ ອັນເຂົ້າສູນກາງ ເຮັດພາລະບົດບາດຄຸ້ມຄອງມະຫາພາກ ແມ່ນເຮັດຫຍັງແດ່ ?.

ຕ້ອງສຸມໃສ່ເຮັດ 5 ວຽກໃຫຍ່ຕົ້ນຕໍ ແລະ ມີລັກສະນະກວມລວມ ທົ່ວຂະແຫນງການ ແລະ ທົ່ວປະເທດ ດັ່ງນີ້ :

ຫນຶ່ງ: ສ້າງແຜນຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຫລືທັນແນວທາງ ຂອງພັກ ເປັນແຜນງານ ເປັນໂຄງການວຽກງານ ຂອງກະຊວງ-ອົງການ ຂອງຕົນ ຫລື ເປັນແຜນຍຸດທະ ສາດພັດທະນາ ຂະແຫນງການຂອງຕົນໃນຂອບເຂດທົ່ວປະເທດ ໃຫ້ວ່ອງໄວທັນການ ແລະ ຊີ້ນໍາການ ຈັດຕັ້ງປະຕິບັດ ໃຫ້ເປັນຈິງ.

ສອງ: ຄົ້ນຄວ້າປັບປຸງ, ອອກນະໂຍບາຍ ຫລື ກົດຫມາຍ ສໍາລັບການຄຸ້ມຄອງຂະແຫນງການ ໃຫ້ຄົບຖ້ວນສົມບູນ.

ສາມ: ຂຶ້ນແຜນກໍານົດ ແລະ ຈັດຕັ້ງກໍ່ສ້າງ-ບໍາລຸງຍົກລະດັບ ພະນັກງານ ໃຫ້ຂະແຫນງການ ຂອງຕົນ ໃນຂອບເຂດທົ່ວປະເທດ; ຖ້າບໍ່ມີເງື່ອນໄຂຈັດຕັ້ງການກໍ່ສ້າງ-ບໍາລຸງຍົກລະດັບ ດ້ວຍຕົນເອງໄດ້ ກໍຕ້ອງໃຫ້ຂະແຫນງສຶກສາ ຫລື ຂະແຫນງການອື່ນ ສ້າງໃຫ້ ຫລື ສົ່ງໄປສ້າງຝຶກອົບຮົມຢູ່ຕ່າງປະເທດ.

ສີ: ຄົ້ນຄວ້າວິທະຍາສາດ ແລະ ເຜີຍແຜ່ແນະນໍາ ການນໍາໃຊ້ວິທະຍາສາດ ວິທະຍາ ການໃຫມ່ ເຂົ້າ ໃນການພັດທະນາຂະແຫນງການວຽກງານຂອງຕົນ ໃນຂອບເຂດທົ່ວປະເທດ.

ຫ້າ: ຕິດຕາມກວດກາ ປະເມີນຜົນ ແລະ ຊ່ວຍຊູຍູ້ໜູນ ທ້ອງຖິ່ນ ແລະ ຫົວໜ່ວຍ ຈຸລະພາກ ໃນການຈັດຕັ້ງປະຕິບັດກົດໝາຍ, ນະໂຍບາຍ ແລະ ວຽກງານຕ່າງໆ ຂອງຂະແໜງການຕົນ ໃຫ້ຖືກ ຕ້ອງ ແລະ ໄດ້ຮັບຜົນດີ.

ສະຫາຍ ທອງສິງ ທຳມະວົງ
ກຳມະການກົມການເມືອງ, ນາຍົກລັດຖະມົນຕີ ແຫ່ງ ສ ປປ ລາວ
ເປັນປະທານກອງປະຊຸມລັດຖະບານ.

11. ເປີດກ້ວາງການຮ່ວມມື ແລະ ສົ່ງເສີມການລົງທຶນໂດຍກົງ ຈາກຕ່າງປະເທດ.

- ເພື່ອສ້າງສາພັດທະນາປະເທດພວກເຮົາ ໃຫ້ບັນລຸຜົນຕາມຄາດໝາຍທີ່ວາງໄວ້ ສຳລັບໄລ ຍະຮອດປີ 2015 ແລະ 2020 ນັ້ນ ຈະຕ້ອງໃຊ້ທຶນຮອນຢ່າງຫລວງຫລາຍ,ແຕ່ຄວາມສາມາດຕອບສະ ໜອງ ຈາກພາຍໃນປະເທດ ໂດຍສະເພາະ ແມ່ນຈາກແຫລ່ງ ງົບປະມານ ຂອງລັດເຮົານັ້ນ ແມ່ນຈຳກັດ.

- ສະນັ້ນ ພັກເຮົາ ຈຶ່ງມີແຜນນະໂຍບາຍ ສືບຕໍ່ການຮ່ວມມື ກັບຕ່າງປະເທດ ແລະ ອົງການ ຈັດຕັ້ງສາກົນ, ລວມທັງບັນດາອົງການ ທີ່ບໍ່ຂຶ້ນກັບລັດຖະບານ ໂດຍຍຶດໝັ້ນ ຢູ່ໃນຫລັກການ ແລະ ທິດນຳ ຂອງພັກ ແລະ ລັດເຮົາ; ທັງນີ້ ກໍເພື່ອຍາດແຍ່ງເອົາການສະໜັບສະໜູນ ຊ່ວຍເຫລືອລ້ຳ ໃນຮູບ ແບບຕ່າງໆ ແລະ ການໃຫ້ກູ້ຢືມ ດ້ວຍເງື່ອນໄຂອັນເໝາະສົມ ເພື່ອນຳມາພັດທະນາຂະແໜງການອັນ

ຈຳເປັນ ທີ່ພວກເຮົາຍັງຂາດເຂີນທຶນຮອນ ໃນການລົງທຶນດ້ວຍຕົນເອງ.

ສ່ວນໃນດ້ານຫນຶ່ງອີກ ກໍສືບຕໍ່ແຜນນະໂຍບາຍ ສົ່ງເສີມການລົງທຶນໂດຍກົງ ຈາກຕ່າງປະເທດ ເຂົ້າໃນຂະແຫນງການ ແລະ ໂຄງການພັດທະນາຕ່າງໆ ຕື່ມອີກໂດຍສະເພາະ ແມ່ນໂຄງການຂະຫນາດໃຫຍ່ ທີ່ໃຊ້ທຶນຫລາຍ, ໃຊ້ເຕັກນິກ ແລະ ເຕັກໂນໂລຢີ ທີ່ກ້າວຫນ້າທັນສະໄຫມ ຊຶ່ງຈະຊ່ວຍເຮັດ ໃຫ້ປະເທດເຮົາ ມີທ່າແຮງ ຫລື ມີຄວາມສາມາດແຂ່ງຂັນສູງຂຶ້ນ, ເປັນຕົ້ນ ແມ່ນໂຄງການລົງທຶນ ໃນຂະ ແຫນງກະສິກຳ-ປ່າໄມ້, ພະລັງງານ ແລະ ບໍ່ແຮ່, ບໍລິການຜ່ານ ແລະ ການຂົນສົ່ງໂດຍສານ ໃນອະນຸພາກພື້ນ...

ສົ່ງເສີມການຮ່ວມມື ແລະ ດຶງດູດການລົງທຶນ ຈາກຕ່າງປະເທດ ໄດ້ດີ ພວກເຮົາຈຶ່ງມີເງື່ອນໄຂ ດ້ານທຶນຮອນ ເພື່ອພັດທະນາໃຫ້ບັນລຸຜົນຕາມຄາດຫມາຍ; ສ້າງໃຫ້ເປັນຈິງ ພື້ນຖານການຫັນເປັນອຸດ ສາຫະກຳ ແລະ ທັນເປັນທັນສະໄຫມ; ເພີ່ມທະວີໄດ້ທ່າແຮງ ແລະ ຄວາມສາມາດແຂ່ງຂັນ ຂອງປະ ເທດເຮົາ ໃນຂະບວນການເຊື່ອມໂຍງເສດຖະກິດ ກັບບັນດາປະເທດໃກ້ຄຽງ ແລະ ສາກົນ.

ງ. <u>ຫນ້າທີ່ ແລະ ວຽກງານຈຸດສຸມ ດ້ານສັງຄົມ-ວັດທະນະທຳ</u>.

ກອງປະຊຸມໃຫຍ່ຄັ້ງທີ IX ໄດ້ເນັ້ນວ່າ: ຕ້ອງພັດທະນາ ຂົງເຂດສັງຄົມ-ວັດທະນະທຳ ໃຫ້ສົມຄູ່ ກັບການພັດທະນາເສດຖະກິດ, ສ້າງຄວາມສີວິໄລ ທາງດ້ານຈິດໃຈ ໄປຄຽງຄູ່ກັບການສ້າງຄວາມຢູ່ດີ ກິນດີ ແລະ ຄວາມສີວິໄລ ທາງດ້ານວັດຖຸ.

ເພື່ອບັນລຸທັດສະນະຊີ້ນຳດັ່ງກ່າວ, ພວກເຮົາ ຕ້ອງເອົາໃຈໃສ່ບາງວຽກສຳຄັນ ດັ່ງນີ້:

1. <u>ສູ້ຊົນ ບັນລຸເປົ້າຫມາຍສະຫັດສະວັດ ດ້ານການພັດທະນາ (ຫລື MDGs) ໃນປີ 2015, ຊຶ່ງ ຕ້ອງສະແດງອອກ ໃນບາງດ້ານທີ່ສຳຄັນ ດັ່ງນີ້</u> :

ເປົ້າຫມາຍທີຫນຶ່ງ: *ຕ້ອງລຶບລ້າງຄວາມທຸກຍາກ ແລະ ໄພອຶດຫິວ.* ກ່ອນອື່ນຕ້ອງສູ້ຊົນຫລຸດ ຈຳນວນຄອບຄົວທຸກຍາກ ລົງໃຫ້ໄດ້ ຢູ່ໃນລະດັບທີ່ຕ່ຳກວ່າ 10% ຂອງຈຳນວນ ຄອບຄົວທັງຫມົດ; ສ່ວນ ໄພອຶດຫິວນັ້ນ ແມ່ນພວກເຮົາສາມາດແກ້ໄຂໄດ້ ໂດຍພື້ນຖານແລ້ວ. ເຖິງວ່າມີ ກໍແມ່ນໃນບາງກໍລະນີ ເຊັ່ນ: ກໍລະນີ ເກີດໄພພິບັດທາງທຳມະຊາດ ຫລື ມີກໍລະນີ ບາງຄອບຄົວທຸກຍາກ ທີ່ມີອາຫານການກິນ ບໍ່ພຽງພໍ ຫລື ເດັກ ທີ່ບໍ່ໄດ້ກິນອາຫານຄົບຫມູ່ ຫລື ກິນບໍ່ພຽງພໍ ຈຶ່ງເກີດມີສະພາບເດັກນ້ອຍ ຈ່ອຍຜອມ ຂາດສານອາຫານ ຫລື ໃຫຍ່ບໍ່ເຕັມທີ່ (ເປັນຄົນເຕ້ຍ, ນ້ຳຫນັກບໍ່ພໍ...).

ອັນນີ້ ເປັນເປົ້າຫມາຍສຳຄັນ ທີ່ຕ້ອງໄດ້ເອົາໃຈໃສ່ແກ້ໄຂໃຫ້ບັນລຸຕົວຈິງ ຫລືມີການປ່ຽນແປງ ທີ່ດີຂຶ້ນ.

ເປົ້າຫມາຍທີສອງ: *ໃຫ້ທຸກຄົນ ໄດ້ຮັບການສຶກສາຂັ້ນປະຖົມ ຢ່າງທົ່ວເຖິງ.* ອັນນີ້ ຫມາຍຄວາມ ວ່າ ຕ້ອງໃຫ້ເດັກຢູ່ໃນເກນອາຍຸຮຽນຫນັງສື ໃນທົ່ວປະເທດ ຕ້ອງໄດ້ຮຽນຈົບຊັ້ນປະຖົມ; ສະນັ້ນ ຕ້ອງ

ປະຕິບັດໃຫ້ເປັນຈິງ ລະບອບການສຶກສາຊັ້ນປະຖົມແບບບັງຄັບ; ທັງຕ້ອງເອົາໃຈໃສ່ການລຶບລ້າງຄວາມ ບໍ່ຮູ້ ຫນັງສື ຂອງຜູ້ໃຫຍ່ ທີ່ມີອາຍຸແຕ່ 15- 24 ປີ ແລະ ເຮັດໃຫ້ອັດຕາສ່ວນຄົນທີ່ຮູ້ຫນັງສື ເພີ່ມຂຶ້ນຮອດ 99%.

ເປົ້າຫມາຍທີ່ສາມ: *ສົ່ງເສີມບົດບາດຍິງ-ຊາຍ ແລະ ເສີມສ້າງຄວາມເຂັ້ມແຂງ ໃຫ້ແກ່ແມ່ຍິງ.* ສິ່ງ ທີ່ຕ້ອງໄດ້ເອົາໃຈໃສ່ຫລາຍທີ່ສຸດ ສຳລັບການບັນລຸເປົ້າຫມາຍນີ້ ແມ່ນການ ເຮັດໃຫ້ອັດຕາສ່ວນ ຂອງເດັກ ຍິງ ທີ່ໄດ້ເຂົ້າຮຽນຫນັງສື ໃນທຸກລະດັບການສຶກສານັ້ນ ເພີ່ມຂຶ້ນ ເມື່ອທຽບກັບເດັກຊາຍ.

ເປົ້າຫມາຍທີ່ສີ່: *ຫລຸດຜ່ອນການເສຍຊີວິດ ຂອງເດັກ, ໂດຍສະເພາະ ແມ່ນເດັກເກີດໃຫມ່-ມີ ອາຍຸຕ່ຳກວ່າ 1 ປີ ແລະ ເດັກທີ່ມີອາຍຸຕ່ຳກວ່າ 5 ປີ* ດ້ວຍການປະຕິບັດນະໂຍບາຍ ແລະ ເງື່ອນໄຂອັນ ເຫມາະສົມ ເພື່ອໃຫ້ແມ່ຍິງຖືພາ ໄດ້ໄປເກີດລູກຢູ່ໂຮງຫມໍ, ຢູ່ສຸກສາລາ ແລະ ສະຖານທີ່ເກີດລູກ ທີ່ຈັດ ໄວ້ສະເພາະ ໂດຍບໍ່ໄດ້ເສຍຄ່າ; ປະຕິບັດລະບອບສັກຢາ, ຢອດຢາ ກັນພະຍາດເດັກ ໃຫ້ຄົບຖ້ວນ ແລະ ທົ່ວເຖິງທຸກເປົ້າຫມາຍ.

ເປົ້າຫມາຍທີ່ຫ້າ: *ສົ່ງເສີມສຸຂະພາບ ຂອງແມ່,* ຕ້ອງເຮັດທຸກສິ່ງທຸກຢ່າງ ເພື່ອຮັບປະກັນໃຫ້ມີ ຜູ້ຍິງເສຍຊີວິດຫນ້ອຍທີ່ສຸດ ໃນເວລາເກີດລູກ ແລະ ໃຫ້ຜູ້ທີ່ເກີດລູກແລ້ວ ໄດ້ຮັບການດູແລ ແລະ ເບິ່ງ ແຍງສຸຂະພາບ; ມີເງື່ອນໄຂໄດ້ລ້ຽງດູລູກຂອງຕົນ ໃຫ້ເຕີບໃຫຍ່ເຂັ້ມແຂງ. ສະນັ້ນ ຕ້ອງມີການວາງແຜນ ຄອບຄົວ, ມີການໂຄສະນາ ສຶກສາອົບຮົມ ຄວາມຮູ້ກ່ຽວກັບສຸຂະພາບຈະເລີນພັນ ແລະ ການລ້ຽງດູລູກ ໃຫ້ ແກ່ກຸ່ມເປົ້າຫມາຍ ຢ່າງກ້ວາງຂວາງ.

ເປົ້າຫມາຍທີ່ຫົກ: *ສະກັດກັ້ນການແຜ່ລະບາດ ຂອງພະຍາດເອດສ໌ (HIV), ໄຂ້ຍຸງ ແລະ ພະຍາດຕິດຕໍ່ອື່ນໆ.* ອັນນີ້ ພວກເຮົາກໍໄດ້ດຳເນີນການມາຢ່າງຕໍ່ເນື່ອງ ແລະ ມີບົດຮຽນພໍສົມຄວນແລ້ວ, ແຕ່ກໍຍັງເປັນບັນຫາພົ້ນເດັ່ນ ທີ່ຕ້ອງໄດ້ເອົາໃຈໃສ່ເພີ່ມທະວີ ໃນການປ້ອງກັນ ແລະ ແກ້ໄຂ ໂດຍສະ ເພາະ ແມ່ນການລະບາດໄຂ້ຍຸງ (ໄຂ້ຍຸງລາຍ-ໄຂ້ເລືອດອອກ) ຕາມລະດູການ; ຕ້ອງເພີ່ມທະວີ ການ ໂຄສະນາສຸຂະສຶກສາ ຕິດພັນກັບການປຸກລະດົມ ຈັດຕັ້ງຂະບວນການຕ້ານ ແລະ ກຳຈັດໄຂ້ຍຸງ ແລະ ພະຍາດຕິດຕໍ່ອື່ນໆ ຢ່າງເປັນປົກກະຕິ.

ເປົ້າຫມາຍທີ່ເຈັດ: *ຮັບປະກັນຄວາມຍືນຍົງ ດ້ານສິ່ງແວດລ້ອມ.* ສຳລັບການບັນລຸເປົ້າຫມາຍ ນີ້, ສິ່ງທີ່ຕ້ອງໄດ້ເອົາໃຈໃສ່ ແມ່ນການປົກປັກຮັກສາ-ຟື້ນຟູບູລະນະປ່າໄມ້, ການປູກໄມ້ ເພີ່ມເນື້ອທີ່ ສີຂຽວ ແລະ ການຮັກສາສັດນ້ຳ-ສັດປ່າ ກໍຄື ຊີວະນາໆພັນ ທີ່ພວກເຮົາມີຢູ່ໃນປັດຈຸບັນ ໃຫ້ເພີ່ມຄວາມ ອຸດົມຮັ່ງມີຂຶ້ນຕື່ມ; ບໍ່ໃຫ້ມັນຫລຸດຫນ້ອຍລົງ. ພ້ອມກັນນັ້ນ ກໍຕ້ອງສ້າງເງື່ອນໄຂໃຫ້ປະຊາຊົນເຮົາ ໄດ້ ຊົມໃຊ້ນ້ຳທີ່ສະອາດໃຫ້ຫລາຍຂຶ້ນ ດ້ວຍການຂຸດສ້າງ, ຂຸດບາດານ, ສ້າງອ່າງເກັບກັກນ້ຳ ເຮັດນ້ຳປະປາ ຊຸມຊົນ ແລະ ອື່ນໆອີກ, ລວມທັງການນຳໃຊ້ວິດຖ່າຍ.

ເປົ້າຫມາຍທີແປດ: *ສ້າງຄູ່ຮ່ວມງານດ້ານການພັດທະນາ ໃນຂອບເຂດທົ່ວໂລກ.* ອັນນີ້ ແມ່ນ ພົວພັນເຖິງການປະຕິບັດເງື່ອນໄຂຕ່າງໆ ສຳລັບພົວພັນຮ່ວມມື ກັບຕ່າງປະເທດ ແລະ ອົງການຈັດ ຕັ້ງສາກົນ ເພື່ອໄດ້ຮັບການຊ່ວຍເຫລືອທາງການ ສຳລັບການພັດທະນາ ແລະ ການເຊື່ອມໂຍງເສດ ຖະກິດ.

ເປົ້າຫມາຍທີເກົ້າ: *(ອັນໃຫມ່ເພີ່ມ) ຫລຸດຜ່ອນຜົນກະທົບ ຈາກລູກລະເບີດບໍ່ທັນແຕກ ໃນ ສ.ປ.ປ ລາວ.* ເປົ້າຫມາຍນີ້ ໄດ້ຈັດເຂົ້າເພີ່ມ ໂດຍອີງໃສ່ຂໍ້ສະເຫນີຂອງພວກເຮົາ, ທັງນີ້ ກໍເນື່ອງຈາກວ່າ ປະເທດເຮົາ ໄດ້ຮັບຜົນຮ້າຍຈາກລະເບີດບໍ່ທັນແຕກນີ້ ຮ້າຍແຮງທີ່ສຸດ ກວ່າປະເທດໃດໆ; ການ ຫລຸດຜ່ອນຜົນກະທົບໄດ້ຫລາຍທໍ່ໃດ ກໍຍິ່ງເປັນຜົນດີສຳລັບການສ້າງສາພັດທະນາປະເທດຊາດ ຂອງ ພວກເຮົາ.

✪*ການສູ້ຊົນໃຫ້ບັນລຸເປົ້າຫມາຍສະຫັດສະວັດ ດ້ານການພັດທະນາ ໃນປີ 2015, ແມ່ນຄວາມ ຫມັ້ນຫມາຍ ຂອງປະເທດເຮົາ ຕໍ່ສາກົນ; ສະນັ້ນ ພວກເຮົາ ຕ້ອງປະຕິບັດໃຫ້ເປັນຈິງ.*

2. <u>ຖືການພັດທະນາ ລະບົບການສຶກສາແຫ່ງຊາດ ກໍຄື ການສ້າງຄົນເປັນໃຈກາງ ຂອງການ ພັດທະນາ ຂົງເຂດສັງຄົມ-ວັດທະນະທຳ</u>.

ຊາວໜຸ່ມ-ນັກຮຽນ ກຳລັງຄົ້ນຄວ້າບົດຮຽນ

- ຖືການພັດທະນາການສຶກສາ ແລະ ກໍ່ສ້າງຄົນເປັນໃຈກາງ ໃນການພັດທະນາສັງຄົມນັ້ນ ແມ່ນສອດຄ່ອງກັບທິດທາງການພັດທະນາ ແບບຍືນຍົງ ກໍຄື ການພັດທະນາຕາມທິດສັງຄົມນິຍົມ.

- ແນວທາງພື້ນຖານ ຂອງພັກເຮົາ ກ່ຽວກັບການພັດທະນາການສຶກສາ ແມ່ນ: ສືບຕໍ່ປະຕິຮູບ ລະບົບການສຶກສາແຫ່ງຊາດ ໃຫ້ມີຄຸນນະພາບ ໄປຄຽງຄູ່ກັບການຂະຫຍາຍ ໂອກາດ ດ້ານການສຶກສາ ໃຫ້ກ້ວາງຂວາງທົ່ວເຖິງກວ່າເກົ່າ ໂດຍສະເພາະ ແມ່ນຊົນເຜົ່າ, ແມ່ຍິງ ແລະ ຜູ້ດ້ອຍໂອກາດ; ຮັບປະກັນໃຫ້ການສຶກສາ ດຳເນີນໄປຢ່າງກົມກຽວ ຕາມ 5 ຫລັກມູນ (ຄື: ຄຸນສົມບັດສຶກສາ, ປັນຍາສຶກສາ, ສິລະປະສຶກສາ, ກາຍຍະສຶກສາ ແລະ ແຮງງານສຶກສາ), ທັງມີລັກສະນະຊາດ, ກ້າວໜ້າ ແລະ ທັນສະໄໝ.

- ການສຶກສາ ແລະ ກໍ່ສ້າງຄົນ ໃນຊຸມປີຕໍ່ໜ້າ ຕ້ອງສຸມໃສ່ສ້າງບຸກຄະລາກອນ ປະເພດຕ່າງໆ ເຊັ່ນ: ກຳມະກອນວິຊາຊີບ, ນາຍຊ່າງ, ນັກວິຊາການ, ວິສາວະກອນ, ຜູ້ຄຸ້ມຄອງ-ບໍລິຫານ, ຜູ້ປະກອບການ, ຜູ້ຈັດການ... ໃຫ້ໄດ້ທັງຈຳນວນ ແລະ ຄຸນນະພາບ ເພື່ອຕອບສະໜອງຄວາມຕ້ອງການຂອງໜ້າທີ່ວຽກງານ ຢູ່ໃນອົງການພັກ-ລັດ ແລະ ໃນທົ່ວສັງຄົມ.

ຈຸດສຸມໜຶ່ງອີກ ແມ່ນການສົ່ງເສີມການສຶກສາທາງກ້ວາງ ເພື່ອປະກອບສ່ວນເຂົ້າໃນການແກ້ໄຂຄວາມທຸກຍາກ ຂອງປະຊາຊົນ ແລະ ການບັນລຸເປົ້າໝາຍສະຫັດສະວັດ ດ້ານການພັດທະນາ ໃນປີ 2015 ໂດຍຖືເອົາການລຶບລ້າງຄວາມບໍ່ຮູ້ໜັງສື ຕິດພັນກັບການຈັດຕັ້ງການຮຽນ ແລະ ການຝຶກອົບຮົມ ໃຫ້ຄວາມຮູ້ພື້ນຖານ ດ້ານການທຳມາຫາກິນ ປູກຝັງ-ລ້ຽງສັດ ເປັນສິນຄ້າ ແລະ ການດຳລົງຊີວິດທີ່ຖືກຫລັກສຸຂະອະນາໄມ.

ເພື່ອປະຕິບັດໃຫ້ເປັນຈິງ ແນວທາງພື້ນຖານ ກໍຄື ທິດຈຸດສຸມ ຂອງການພັດທະນາການສຶກສາ ໃນຊຸມປີຕໍ່ໜ້ານີ້ ຂະແໜງການສຶກສາ ຕ້ອງໄດ້ເອົາໃຈໃສ່: ຄົ້ນຄວ້າເຊື່ອມຊຶມ ແນວທາງພື້ນຖານ ແລະ ທິດທາງຈຸດສຸມ ຂອງການພັດທະນາການສຶກສາ ທີ່ກ່າວມາເທິງນັ້ນ ແລ້ວສ້າງເປັນແຜນງານ ໂຄງການລະອຽດ ແລະ ຈັດຕັ້ງປະຕິບັດຢ່າງຖືກຕ້ອງ; ເພີ່ມທະວີວຽກງານສຶກສາອົບຮົມການເມືອງ-ແນວຄິດ ຕໍ່ຖັນແຖວພະນັກງານ, ຄູອາຈານ, ນັກຮຽນ-ນັກສຶກສາ ໃຫ້ເລິກເຊິ່ງ, ກ້ວາງຂວາງ ແລະ ດ້ວຍຫລາຍວິທີການ; ຍົກຄຸນນະພາບການສຶກສາ ໃຫ້ມີການຫັນປ່ຽນຢ່າງຕັ້ງໜ້າ ແລະ ເປັນຮູບປະທຳຫລາຍຂຶ້ນ, ປັບປຸງຫລັກສູດ, ເນື້ອໃນການຮຽນ-ການສອນ ແຕ່ຊັ້ນອະນຸບານ ຈົນເຖິງມະຫາວິທະຍາໄລ ໃຫ້ສອດຄ່ອງກວ່າເກົ່າ; ຄົ້ນຄວ້າຫາສາເຫດຕົວຈິງ ທີ່ເປັນອຸປະສັກກີດໜ່ວງ ຖ່ວງດຶງ ຄຸນນະພາບຂອງການສຶກສາ ດ້ວຍການກວດກາ ແລະ ປັບປຸງແກ້ໄຂ ບັນດານິຕິກຳ ແລະ ນະໂຍບາຍຕ່າງໆ ໃຫ້ສາມາດຈັດຕັ້ງປະຕິບັດໄດ້; ຂະຫຍາຍການສຶກສາ ໄປສູ່ເຂດຫ່າງໄກ

ສອກຫລີກ ໃຫ້ຫລາຍກວ່າເກົ່າ ດ້ວຍການສ້າງບ້ານ ຕ້ອງມີໂຮງຮຽນ, ສ້າງໂຮງຮຽນ ຕ້ອງມີຄູສອນ ແລະ ມີຜູ້ຮຽນ; ສ້າງໂຮງຮຽນຕົວແບບຮອບດ້ານ ຕິດພັນກັບການສ້າງບ້ານ-ກຸ່ມບ້ານພັດທະນາ ແລະ ການກໍ່ສ້າງຮາກຖານການເມືອງ ໃນເຂດຈຸດສຸມພັດທະນາຊົນນະບົດ ແກ້ໄຂຄວາມທຸກຍາກ ຕາມ 4 ເນື້ອໃນ 4 ຄາດໝາຍ; ປັບປຸງກົງຈັກການຈັດຕັ້ງ, ລະບຽບກົນໄກການຄຸ້ມຄອງການສຶກສາ ທຸກຂັ້ນ ທັງພາກລັດ ແລະ ເອກະຊົນ ໃຫ້ມີຄວາມໜັກແໜ້ນ ເຂັ້ມແຂງກວ່າເກົ່າ, ແບ່ງຂັ້ນຄຸ້ມຄອງ ການສຶກສາ ລະຫວ່າງສູນກາງ ກັບທ້ອງຖິ່ນ, ລະຫວ່າງສາຍຕັ້ງ ກັບສາຍຂວາງ ໃຫ້ລະອຽດຈະແຈ້ງ; ແບ່ງຄວາມຮັບຜິດຊອບ ແລະ ເພີ່ມທະວີບົດບາດ ຂອງຄະນະພັດທະນາການສຶກສາແຕ່ລະຂັ້ນ ຢ່າງ ເອົາຈິງ ເອົາຈັງ; ຍາດແຍ່ງທຶນຮອນ ຈາກຕ່າງປະເທດ, ປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ ແລະ ນິຕິບຸກຄົນ ໃຫ້ປະກອບສ່ວນເຂົ້າໃນການພັດທະນາການສຶກສາ ເພື່ອໃຫ້ການສຶກສາ ເປັນພາ ລະກິດຂອງ ທົ່ວປວງຊົນ.

3. <u>ໃຫ້ຄວາມສຳຄັນຫລາຍກວ່າເກົ່າ ຕໍ່ການສ້າງຄົນ ທາງດ້ານການເມືອງ-ແນວຄິດ ແລະ ດ້ານຄຸນສົມບັດສິນທຳ ເພື່ອເປັນພົນລະເມືອງດີ ໃນລະບອບປະຊາທິປະໄຕປະຊາຊົນ</u>.

- ການສ້າງຄົນລາວເຮົາໃນດ້ານນີ້ ມີຄວາມໝາຍສຳຄັນຫລາຍ, ເພາະວ່າ ຄົນຈະມີແຕ່ຄວາມ ຮູ້, ມີແຕ່ວິຊາອາຊີບ ແລະ ມີແຕ່ຄວາມສາມາດ ທໍ່ນັ້ນ ແມ່ນບໍ່ພໍ ສຳລັບການເປັນພົນລະເມືອງດີ ຂອງລະບອບປະຊາທິປະໄຕປະຊາຊົນ. ເພື່ອສ້າງລະບອບ ປະຊາທິປະໄຕປະຊາຊົນ ສູ່ຈຸດໝາຍສັງ ຄົມນິຍົມນັ້ນ ມັນມີຄວາມຈຳເປັນຢ່າງຍິ່ງ ທີ່ຕ້ອງສ້າງຄົນ ໃຫ້ມີແນວຄິດ ແລະ ຄຸນສົມບັດສິນທຳປະ ຕິວັດ, ມີໂລກະທັດ ແລະ ຊີວະທັດ ທີ່ກ້າວໜ້າ ຮູ້ອະນຸລັກຮັກສາ ແລະ ສືບທອດເສີມຂະຫຍາຍມູນ ເຊື້ອວັດທະນະທຳອັນດີງາມ ຂອງຊາດ ທັງຮູ້ຮັບເອົາສິ່ງທີ່ມີຄ່າ ຈາກວັດທະນະທຳ ຂອງນາໆຊາດ.

ອັນທີ່ເປັນພື້ນຖານກວ່າໝູ່ ໃນການສ້າງຄົນ ທາງດ້ານການເມືອງ-ແນວຄິດ ແລະ ຄຸນສົມບັດ ນັ້ນ ແມ່ນສ້າງແນວຄິດຮັກຊາດ ແລະ ນ້ຳໃຈເສຍສະຫລະເພື່ອຊາດ ເພື່ອສ່ວນລວມ, ບໍ່ເຫັນແກ່ແຕ່ ຜົນປະໂຫຍດສ່ວນຕົວເປັນໃຫຍ່ ທັງມີນ້ຳໃຈສາມັກຄີເອື້ອເຟື້ອ, ມີຄວາມປອງດອງເປັນປຶກແຜ່ນ ແລະ ຮູ້ຊ່ວຍເຫລືອເພື່ອແພ່ ເພື່ອນຮ່ວມຊາດຄຽງກັນ; ພ້ອມກັນນັ້ນ ກໍເປັນຄົນທີ່ມີຄວາມອົດທົນ ສູ້ ຊົນ ແລະ ມີຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່ວຽກງານ, ທັງມີຄວາມຊື່ສັດ ຈົງໃຈ ຕໍ່ໝູ່ຄູ່-ເພື່ອນຮ່ວມງານ, ບໍ່ປະຈົບປະແຈງ ຂີ້ເພິ່ນຍໍໂຕ ແລະ ບໍ່ຂີ້ສໍ້ຄິດໂກງ, ສໍ້ລາດບັງຫລວງ; ຮູ້ປະຢັດ ມັດທະຍັດ, ບໍ່ຟຸມເຟືອຍ ແລະ ບໍ່ໂອ້ອວດ ຖານະຄວາມຮັ່ງມີ; ດຳລົງຊີວິດແບບລຽບງ່າຍ; ກິນຢູ່ ມີ ສຸຂະອະນາໄມ ໃສ່ໃຈຕໍ່ສຸຂະພາບ; ເປັນຄົນທີ່ມີລະບຽບວິໄນ, ມີສະຕິເຄົາລົບກົດໝາຍ, ມີຈິດໃຈ ມະນຸດສະທຳ ແລະ ຍຸຕິທຳ ຮູ້ຖືກ-ຮູ້ຜິດ, ຮູ້ເຫດ-ຮູ້ຜົນ, ຮູ້ຄຸນ-ຮູ້ໂທດ, ຖ່ອມຕົວ ແລະ ຮູ້ສຳມາຄາຣະວະ.

ເພື່ອບັນລຸເປົ້າຫມາຍການສ້າງຄົນ ທາງດ້ານການເມືອງ-ແນວຄິດ ຄືດັ່ງກ່າວນັ້ນ, ພວກເຮົາ ຕ້ອງໄດ້ສຶກສາ, ໂຄສະນາ, ອົບຮົມສັ່ງສອນ ແລະ ສ້າງສະພາບແວດລ້ອມ ໃຫ້ແກ່ການບຳລຸງສ້າງ ຄົນລາວເຮົາ ຢ່າງເຫມາະສົມ ເປັນຕົ້ນ :

+ ສຶກສາອົບຮົມມູນເຊື້ອ ຂອງຊາດ ແລະ ຄວາມເປັນແບບຢ່າງທີ່ດີ ຂອງບັນພະບູຣຸດ ກໍຄື ອຸດົມຄະຕິ ແລະ ມານະຈິດປະຕິວັດ.

+ ບັນດາອົງການຈັດຕັ້ງພັກ-ລັດ, ບັນດາອົງການຈັດຕັ້ງມະຫາຊົນ ແລະ ບັນດາຊັ້ນຄົນໃນ ສັງຄົມ, ສະຖາບັນຄອບຄົວ ແລະ ໂຮງຮຽນ ຕ້ອງປະກອບສ່ວນຢ່າງຕັ້ງຫນ້າ ເຂົ້າໃນການສຶກສາ ອົບຮົມ ຄຸນສົມບັດ ແລະ ຈະຣິຍະທຳ.

+ ຕ້ອງປັບປຸງເນື້ອໃນ ແລະ ສ້າງຫລັກສູດ ການຮຽນ-ການສອນ ວິຊາສຶກສາພົນລະເມືອງ ໃຫ້ ແທດເຫມາະກັບສະພາບການ ແລະ ເງື່ອນໄຂເສດຖະກິດ ໃນໄລຍະໃຫມ່.

+ ປັບປຸງຮູບແບບ ແລະວິທີການໂຄສະນາ ສຶກສາອົບຮົມ ໃຫ້ສອດຄ່ອງກັບຈິດຕະສາດ ແລະ ຄວາມຮັບຮູ້ ຂອງຄົນ ໃນແຕ່ລະເປົ້າຫມາຍ ເພື່ອສ້າງຈິດສຳນຶກ ແລະ ຄວາມນິຍົມຊົມຊອບ ທີ່ ຖືກຕ້ອງດີງາມ; ຕີຖອຍ ແບບດຳລົງຊີວິດ ແລະ ຄວາມນັກ ຄວາມນິຍົມ ທີ່ເສື່ອມຊາມ ຝືນກັບຮີດຄອງ ປະເພນີ ແລະ ວັດທະນະທຳອັນດີງາມ ຂອງຊາດ ກໍຄື ທີ່ຝືນກັບອຸດົມການ ແຫ່ງການສ້າງສັງຄົມ ສາມັກຄີປອງດອງ, ມີປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

✪ ພວກເຮົາ ຕ້ອງສ້າງຄົນລາວ ໃຫ້ມີຄວາມສີວິໄລທາງດ້ານຈິດໃຈ ທີ່ຮູ້ສຶບທອດ ເສີມ ຂະຫຍາຍ ມູນເຊື້ອວັດທະນະທຳ ຂອງຊາດ ແລະ ຂອງເຜົ່າຕ່າງໆ ຮູ້ແລກປ່ຽນຮຽນຮູ້ ຮັບເອົາສິ່ງທີ່ມີ ຄຸນຄ່າ ຈາກວັດທະນະທຳ ຂອງນາໆຊາດ.

ສະນັ້ນ ຕ້ອງເພີ່ມການລົງທຶນ ແລະ ເອົາໃຈໃສ່ຫລາຍກວ່າເກົ່າ ຕໍ່ຂົງເຂດວັດທະນະທຳ; ສ້າງສະພາບແວດລ້ອມ ໃຫ້ແກ່ຄົນໃນສັງຄົມ ໂດຍສະເພາະ ຖັນແຖວເຍົາວະຊົນຄົນຮຸ່ນຫນຸ່ມ ໄດ້ ຮຽນຮູ້ ເຂົ້າໃຈ ແລະ ຖະຫນອມຫອມຮັກ ວັດທະນະທຳ ທີ່ເປັນເອກະລັກຂອງຊາດ, ຝຶກຝົນຕົນເອງ ທາງດ້ານຄຸນສົມບັດສົມທຳ ແລະ ຈະຣິຍະທຳ.

- ສະຫນອງ ສິ່ງພິມ ແລະ ຂໍ້ມູນຂ່າວສານ ທີ່ມີສາລະປະໂຫຍດແກ່ສັງຄົມ ໃຫ້ຫລາກຫລາຍ, ກ້ຳສ້າງ ແລະ ຂະຫຍາຍຫໍສະຫມຸດ, ຫໍພິພິທະພັນ, ຫໍມູນເຊື້ອ, ຫໍວັດທະນະທຳ, ຫ້ອງອ່ານ ແລະ ບ່ອນຈຳຫນ່າຍປຶ້ມ ໃຫ້ກ້ວາງຂວາງທົ່ວເຖິງຫລາຍຂຶ້ນ.

- ສົ່ງເສີມການປະດິດຄິດແຕ່ງ, ການອ່ານ, ການຂຽນ, ການສະແດງ, ການສ້າງກິດຈະກຳ ແລະ ຂະບວນການຕ່າງໆ ຢ່າງເປັນປະຈຳ ເພື່ອໃຫ້ປະຊາຊົນ ໄດ້ຮຽນຮູ້ ແລະ ໄດ້ເຫັນປະຈັກຕາ ກ່ຽວ

ກັບມໍລະດົກວັດທະນະທຳ ທາງວັດຖຸ ແລະ ຈິດໃຈ ຂອງຊາດ.

- ເປີດກ້ວາງ ການຮ່ວມມື ແລະ ການແລກປ່ຽນ ທາງດ້ານວັດທະນະທຳ ກັບນາໆຊາດ.

4. <u>ສ້າງຄົນລາວ ໃຫ້ມີຄວາມເຂັ້ມແຂງທາງຮ່າງກາຍ, ມີພະລານາໄມສົມບູນ</u>.

- ປະຊາຊົນ ມີຮ່າງກາຍເຂັ້ມແຂງ ມີພະລານາໄມສົມບູນ ແມ່ນຄວາມອຸດົມຮັ່ງມີທີ່ສຳຄັນ ຍິ່ງ ຂອງປະເທດຊາດ. ເວົ້າຢູ່ໃນຄອບຄົວ, ຖ້າບໍ່ມີຜູ້ໃດເຈັບເປັນ, ທຸກຄົນ ລ້ວນແຕ່ຢູ່ດີມີແຮງ ກໍຖືວ່າ ຄອບຄົວນັ້ນ ຢູ່ດີມີສຸກ. ການມີສຸຂະພາບດີ ມີຮ່າງກາຍເຂັ້ມແຂງ ແມ່ນພື້ນຖານສຳຄັນ ສຳລັບການ ສ້າງຄວາມຢູ່ດີ ກິນດີ ໃຫ້ແກ່ຄອບຄົວ ແລະ ຄວາມຮັ່ງມີເຂັ້ມແຂງ ໃຫ້ແກ່ປະເທດຊາດ. ເພາະສະ ນັ້ນ ພວກເຮົາ ຕ້ອງໄດ້ເພີ່ມຄວາມເອົາໃຈໃສ່ ຕໍ່ການສ້າງເງື່ອນໄຂໃນຫລາຍໆດ້ານ ເພື່ອບັນລຸເປົ້າ ຫມາຍດັ່ງກ່າວ :

+ ກ່ອນອື່ນ ຕ້ອງສືບຕໍ່ປະຕິບັດນະໂຍບາຍ ສາທາລະນະສຸກ ຕາມທິດຖືເອົາການກັນພະ ຍາດ ແລະ ສົ່ງເສີມສຸຂະພາບ ເປັນຕົ້ນຕໍ ໄປພ້ອມກັບການຖືເອົາການປິ່ນປົວ ທີ່ມີຄຸນນະພາບ ແລະ ສະຫນອງການບໍລິການ ດ້ານສາທາລະນະສຸກຢ່າງທົ່ວເຖິງ ເປັນສຳຄັນ; ເອົາໃຈໃສ່ ດຳເນີນວຽກງານ ໂຄສະນາສຸຂະສຶກສາ ແລະ ການອະນາໄມກັນພະຍາດ ໃຫ້ແຂງແຮງ, ເປັນປະຈຳ ແລະ ທົ່ວເຖິງ; ຈັດຕັ້ງການກັນ-ເຝົ້າລະວັງ ແລະ ຄວບຄຸມພະຍາດຕິດຕໍ່ ໃຫ້ມີປະສິດທິພາບ; ສຶກສາອົບຮົມໃຫ້ຄວາມຮູ້ ກ່ຽວກັບໂພຊະນາການ ທີ່ເປັນປະໂຫຍດຕໍ່ຮ່າງກາຍ, ສົ່ງເສີມການອອກກຳລັງກາຍ ຫລິ້ນ ກິລາ ເພື່ອ ສຸຂະພາບ; ປະຕິບັດນະໂຍບາຍ ປິ່ນປົວທີ່ບໍ່ເສຍຄ່າ ຕໍ່ເປົ້າຫມາຍທີ່ທຸກຍາກຂາດເຂີນ ແລະ ດ້ອຍ ໂອກາດ; ຂະຫຍາຍຕາຫນ່າງບໍລິການ ດ້ານສາທາລະນະສຸກ ໄປຍັງເຂດຊົນນະບົດ ພູດອຍ ຫ່າງໄກ ສອກຫລີກ, ໂດຍໃຫ້ຈຸດສຸມກຸ່ມບ້ານ ມີສຸກສາລາ ທັງມີຢາ ແລະ ແພດຫມໍປະຈຳ; ຍົກລະດັບຄວາມ ທັນສະໄຫມ ແລະ ຄຸນນະພາບ ດ້ານບໍລິການຂອງໂຮງຫມໍແຫ່ງຕ່າງໆ ໂດຍຍົກລະດັບຄວາມຮູ້, ຄວາມຊຳນານດ້ານວິຊາສະເພາະ ແລະ ດ້ານຄຸນສົມບັດສິນທຳ ກໍຄື ກິລິຍາທ່າທີ ບໍລິການຮັບໃຊ້ ຂອງແພດຫມໍ ແລະ ພະຍາບານ. ດຳເນີນການຄົ້ນຄວ້າ ປຸງແຕ່ງ, ນຳໃຊ້ຢາພື້ນເມືອງ ເຂົ້າໃນການຮັກ ສາສຸຂະພາບ ແລະ ປ້ອງພະຍາດ ຕາມຫລັກວິທະຍາສາດ ໄປຄຽງຄູ່ກັບການປູກພືດເປັນຢາ ທີ່ມີຄ່າສູງ; ປັບປຸງນິຕິກຳ ແລະ ລະບົບຄຸ້ມຄອງ ອາຫານ ແລະ ຢາ, ສະຖານທີ່ບໍລິການສຸຂະພາບ ໃຫ້ຮັດກຸມ, ເຂັ້ມງວດ; ສືບຕໍ່ປະຕິບັດນະໂຍບາຍ ສົ່ງເສີມພາກເອກະຊົນ ເຂົ້າໃນການພັດທະນາ ສະຖານທີ່ບໍລິການສຸຂະພາບ ທີ່ທັນສະໄຫມ.

ຂະບວນການສັກຢາກັນພະຍາດ-ຮັກສາສຸຂະພາບຂອງແມ່ ແລະ ເດັກ

5. <u>ຕັ້ງໜ້າແກ້ໄຂບັນຫາທາງສັງຄົມ ແລະ ປະຕິບັດນະໂຍບາຍທາງສັງຄົມ ຢ່າງ ເໝາະສົມ</u>.

ມະຕິກອງປະຊຸມໃຫຍ່ຄັ້ງທີ IX ໄດ້ເນັ້ນວ່າ: *" ໃນຂະບວນວິວັດແຫ່ງການພັດທະນານັ້ນ ຢູ່ປະເທດເຮົາ ກໍມີບັນຫາທາງສັງຄົມ ຄົງຄ້າງຢູ່ຈຳນວນໜຶ່ງ ເຊັ່ນ: ບັນຫາການຫວ່າງງານ, ບັນຫາການສໍ້ລາດບັງຫລວງ, ບັນຫາຢາເສບຕິດ, ບັນຫາຄວາມເລື່ອມລຳ ແຕກໂຕນກັນດ້ານລາຍໄດ້, ບັນຫາຄວາມສະເໝີພາບ ລະຫວ່າງຍິງ-ຊາຍ, ບັນຫາຄວາມ ຮຸນແຮງໃນຄອບຄົວ, ການຄ້າມະນຸດ ແລະ ບັນຫາຫຍໍ້ທໍ້ອື່ນໆອີກ. ສະນັ້ນ ການແກ້ໄຂບັນຫາທາງສັງຄົມ ຈຶ່ງຍັງເປັນໜ້າທີ່ສຳຄັນອັນໜຶ່ງ ໃນການນຳພາ-ຊີ້ນຳຂອງພັກ ແລະ ການຄຸ້ມຄອງ ຂອງລັດ, ແກ້ໄຂບັນຫາທາງສັງຄົມ ໄດ້ດີ ແມ່ນການສ່ອງແສງເຖິງຜົນສຳເລັດ ຂອງການພັດທະນາ ທີ່ດີ ".*

- ກົງກັນຂ້າມ ຖ້າແກ້ໄຂບັນຫາທາງສັງຄົມ ບໍ່ໄດ້ດີ, ປະໃຫ້ບັນຫາເຫລົ່ານັ້ນ ເພີ່ມຫລາຍຂຶ້ນ, ໃນທີ່ສຸດ ມັນຈະກາຍເປັນສາເຫດ ພາໃຫ້ສັງຄົມມີຄວາມແຕກແຫງ, ແຍກເປັນກຸ່ມ ເປັນພວກ ທີ່ມີຄວາມຂັດແຍ້ງປໍລະປັກກັນ ຈາກນັ້ນ ກໍຈະເກີດການທະເລາະວິວາດກັນ ໃນສັງຄົມ ແລ້ວເກີດຄວາມປັ່ນປ່ວນ ວຸ້ນວາຍ ກະທົບເຖິງສະຖຽນລະພາບ ແລະ ຄວາມໝັ້ນຄົງ ຂອງປະເທດຊາດ.

ສະນັ້ນ ຕ້ອງຕັ້ງໜ້າແກ້ໄຂ ບັນຫາທາງສັງຄົມ ຕັ້ງແຕ່ຫົວທີ, ບໍ່ປະໃຫ້ມັນສະສົມໄວ້ຫລາຍຂຶ້ນ ກາຍເປັນພິດ ເປັນໄພ ທາງສັງຄົມ :

+ ກ່ອນອື່ນ ຕ້ອງຕັ້ງໜ້າແກ້ໄຂ ບັນຫາການສວຍໂອກາດ ສໍ້ລາດບັງຫລວງ, ການຍັກໂກຍເອົາຂອງ ລັດ ຂອງຫລວງ ເປັນຂອງສ່ວນຕົວ, ການສົມຮູ້ຮ່ວມຄິດ ລັກລອບເອົາເງິນ ພາສີ-ອາກອນ ຂອງລັດ, ການຮັບສິນບົນ; ການຟຸມເຟືອຍ ໃນການໃຊ້ຈ່າຍງົບປະມານ ເງິນຄຳ ຂອງລັດ ເພື່ອໃຫ້ຕົນໄດ້ຮັບຜົນປະໂຫຍດ ແລະ ບັນຫາຫຍໍ້ທໍ້ອື່ນໆອີກ ໃນກົງຈັກພັກ-ລັດ ກໍຄື ໃນຖັນແຖວສະມາຊິກພັກ-ພະນັກງານເຮົາ.

+ ຕັ້ງໜ້າແກ້ໄຂ ປະກົດການຫຍໍ້ທໍ້ໃນສັງຄົມ ເປັນຕົ້ນ: ການປຸ້ນຈີ້ ຂົ້ລັກ, ການພະນັນເຖື່ອນ, ໂສເພນີ, ຢາເສບຕິດ ແລະ ກຸ່ມແກ໊ງອັນທະພານຕ່າງໆ... ດ້ວຍກຳລັງແຮງສັງລວມ ຂອງທົ່ວສັງຄົມ ສົມທົບກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ເພື່ອຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ໃນສັງຄົມ.

- ເອົາໃຈໃສ່ເປັນພິເສດ ຕໍ່ການແກ້ໄຂບັນຫາການຫວ່າງງານ (ລວມທັງ ການຫວ່າງງານຕາມລະດູການ), ການປະກອບວຽກເຮັດງານທຳ ໃຫ້ພົນລະເມືອງ ເພື່ອມີລາຍໄດ້ ດ້ວຍການສົ່ງເສີມການລົງທຶນ ສ້າງຕຳແໜ່ງງານໃຫ້ຫລາຍຂຶ້ນ; ມີການສະໜອງນອາຊີບ ແລະ ຕຳແໜ່ງງານ ໃຫ້ແກ່ຄົນລາວ ຕິດພັນກັບການກວດກາ ຄຸ້ມຄອງ ແຮງງານຊາວຕ່າງປະເທດ; ຄຸ້ມຄອງກວດກາ ການໄປອອກແຮງງານ ຂອງຄົນລາວເຮົາ ຢູ່ຕ່າງປະເທດ ເພື່ອບໍ່ໃຫ້ເປັນແຮງງານເຖື່ອນ ຖືກເຂົາເອົາປຽບ ຂູດຮີດໜັກໜ່ວງ, ສົ່ງແຮງງານທີ່ມີຄຸນນະພາບ-ມີມາດຕະຖານ ໄປຕ່າງປະເທດ ຢ່າງຖືກຕ້ອງ; ຄຸ້ມຄອງ ຄ່າແຮງງານຢູ່ພາຍໃນປະເທດ ໃຫ້ເໝາະສົມ ຕາມແຕ່ລະປະເພດງານ ແລະ ຄວາມຮູ້ ຄວາມຊຳນານງານ; ຈຳກັດ ການເອົາປຽບ ຫລື ຄວາມບໍ່ຍຸຕິທຳ; ປະຕິບັດລະບອບປະກັນສັງຄົມ ໃຫ້ທົ່ວເຖິງເປົ້າໝາຍຕ່າງໆ ຫລາຍຂຶ້ນ.

- ພ້ອມກັນນີ້ ກໍປະຕິບັດນະໂຍບາຍ ທາງສັງຄົມຕໍ່ເປົ້າໝາຍຕ່າງໆ ໃຫ້ເໝາະສົມຕື່ມອີກ ເປັນຕົ້ນ :

+ ຕໍ່ພະນັກງານປະຕິວັດອາວຸໂສ ຮຸ່ນເຂົ້າຮ່ວມຂະບວນການຕໍ່ຕ້ານ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ ແລະ ຄອບຄົວຂອງເຂົາເຈົ້າ ໃຫ້ສຳເລັດຢ່າງທົ່ວເຖິງ ແລະ ສົມບູນ; ປັບປຸງ ລະບອບເງິນເດືອນ, ລະບອບເບ້ຍບຳນານ ແລະ ນະໂຍບາຍອື່ນໆ ຕໍ່ພະນັກງານ ລັດຖະກອນ ແລະ ພະນັກງານປະຕິວັດອາວຸໂສ ໃຫ້ເໝາະສົມຕື່ມ; ຄົ້ນຄວ້າລະບອບນະໂຍບາຍ ດ້ານທີ່ພັກພາອາໄສ, ພາຫະນະຮັບໃຊ້ອັນຈຳເປັນ ໃຫ້ພະນັກງານຂັ້ນຕ່າງໆ ໂດຍມີການລິເລີ່ມເຮັດທົດລອງ ຢູ່ບາງຂະແໜງການ ຫລື ບາງແຂວງ ທີ່ມີເງື່ອນໄຂ; ກຳນົດນະໂຍບາຍ, ການຍ້ອງຍໍສັນລະເສີນ ຕໍ່ຜູ້ທີ່ມີຄຸນງາມຄວາມດີ ຫລືຜູ້ມີຜົນງານໂດດເດັ່ນ ໃນການປະຕິບັດພາລະກິດ ປົກປັກຮັກສາ ແລະ ສ້າງສາປະເທດຊາດ ໃຫ້ຈະແຈ້ງ ແລະ ເປັນລະບອບການຄັກແນ່; ເອົາໃຈໃສ່ສ້າງຕັ້ງ ແລະ ປັບປຸງ ບັນດາກອງທຶນ, ມູນນິທິ ຊ່ວຍເຫລືອຜູ້ທຸກຍາກ ແລະ ຜູ້ດ້ອຍໂອກາດ ໃຫ້ມີຄວາມເຂັ້ມແຂງ, ມີກຳລັງແຮງ ໃນການສົງເຄາະຊ່ວຍເຫລືອຫລາຍ

ຂຶ້ນ ທັງມີການເຄື່ອນໄຫວເປັນລະບົບລະບຽບຕື່ມອີກ; ເອົາໃຈໃສ່ຊ່ວຍເຫລືອເດັກຊົນເຜົ່າ, ເດັກພິການ ແລະ ເດັກກຳພ້າ ກຳພອຍ ທີ່ດ້ອຍໂອກາດ ດ້ວຍການປຸກລະດົມ ສົ່ງເສີມທົ່ວສັງຄົມ ເຂົ້າຮ່ວມໃນການ ປະຕິບັດນະໂຍບາຍສັງຄົມ ໃຫ້ເປັນຂະບວນກ້ວາງຂວາງ ແລະ ແຂງແຮງຍິ່ງໆຂຶ້ນ.

ຈ. <u>ສ້າງລັດເຮົາ ເປັນລັດແຫ່ງກົດໝາຍ ຂອງປະຊາຊົນ ໂດຍປະຊາຊົນ ເພື່ອປະ ຊາຊົນ ແລະ ມີຄວາມໝັ້ນຄົງ</u>.

❶ ລັດແຫ່ງກົດໝາຍ.

- ລັດແຫ່ງກົດໝາຍ ແມ່ນລັດທີ່ຖືກົດໝາຍເປັນສິ່ງສູງສຸດ; ພົນລະເມືອງທຸກຄົນ ມີຄວາມສະ ເໝີພາບ ຕໍ່ໜ້າກົດໝາຍ, ດຳລົງຊີວິດ ແລະ ເຄື່ອນໄຫວຕາມກົດໝາຍ ຢ່າງເຄັ່ງຄັດ; ໝາຍຄວາມ ວ່າ ເອົາກົດໝາຍເປັນສິ່ງສູງສຸດ ໃນການດັດສົມການພົວພັນ ແລະ ຜົນປະໂຫຍດ ຂອງສະມາຊິກສັງຄົມ ໃຫ້ກົມກຽວກັນ; ເອົາກົດໝາຍ ເປັນສິ່ງປົກປ້ອງສິດ ແລະ ຜົນປະໂຫຍດ ຂອງພົນລະເມືອງ ແລະ ຈຳ ກັດການລ່ວງອຳນາດ ຂອງຜູ້ປົກຄອງ, ໃຫ້ຜູ້ປົກຄອງ ເຮັດແຕ່ໃນສິ່ງທີ່ກົດໝາຍກຳນົດໄວ້ທ່ານັ້ນ, ສ່ວນ ພົນລະເມືອງ ແມ່ນສາມາດເຮັດໄດ້ທຸກຢ່າງ ທີ່ກົດໝາຍບໍ່ຫ້າມ. ສະນັ້ນ ຢູ່ໃນລັດແຫ່ງກົດໝາຍ ພົນ ລະເມືອງແຕ່ລະຄົນ ສາມາດປະຕິບັດສິດ ແລະ ພັນທະ ຂອງຕົນ ຢ່າງຄົບຖ້ວນ; ຢູ່ໃນລັດແຫ່ງກົດ ໝາຍ ປະຊາຊົນ ເປັນຜູ້ມີອຳນາດສູງສຸດ.

- ການສ້າງລັດແຫ່ງກົດໝາຍ ແມ່ນສອດຄ່ອງກັບທາດແທ້ ຂອງລັດປະຊາທິປະໄຕປະຊາຊົນ ຂອງພວກເຮົາ, ເພາະວ່າ ມັນແມ່ນລັດ ທີ່ເກີດຈາກການຕໍ່ສູ້ ເສຍສະຫລະອັນໃຫຍ່ຫລວງ ຂອງປະຊາ ຊົນລາວບັນດາເຜົ່າ-ບັນດາຊັ້ນຄົນທີ່ຮັກຊາດ ພາຍໃຕ້ການນຳພາ ຂອງພັກ ທີ່ຍຶດເຍື້ອກວ່າ 30 ປີ; ລັດ ປະຊາທິປະໄຕປະຊາຊົນ ແມ່ນລັດ ທີ່ມາຈາກປະຊາຊົນ, ສິດອຳນາດທັງໝົດ ແມ່ນຂຶ້ນກັບປະຊາຊົນ.

❷ ປະຕິບັດໃຫ້ເປັນຈິງ ທິດນຳ " ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງ ເປັນ ຫົວໜ່ວຍ ເຂັ້ມແຂງຮອບດ້ານ, ສ້າງບ້ານ ເປັນຫົວໜ່ວຍພັດທະນາ ".

ສ້າງແຂວງ ເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງ ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງ ບ້ານເປັນຫົວໜ່ວຍພັດທະນາ ແມ່ນການສືບຕໍ່ເສີມຂະຫຍາຍທິດນຳເດີມ " ສ້າງແຂວງ ເປັນຫົວ ໜ່ວຍຍຸດທະສາດ, ສ້າງເມືອງ ເປັນຫົວໜ່ວຍແຜນການ-ການເງິນ, ສ້າງບ້ານ ເປັນຫົວໜ່ວຍພື້ນ ຖານຈັດຕັ້ງປະຕິບັດ " ຊຶ່ງພວກເຮົາ ໄດ້ປະຕິບັດຜ່ານ ມາແລ້ວຫລາຍປີ. ເພື່ອໃຫ້ສອດຄ່ອງ ກັບທິດທາງ ການບູລະນະການປົກຄອງ ຕາມທ່າອ່ຽງເພີ່ມສິດອຳນາດ, ເພີ່ມຄວາມຮັບຜິດຊອບ ໃຫ້ແກ່ທ້ອງຖິ່ນ ຫລາຍຂຶ້ນ ກໍຄື ຍຸດທະສາດ ການສ້າງທ່າສະຫນາມສົງຄາມປະຊາຊົນ 3 ຂັ້ນ; ມີຄວາມຈຳເປັນ ຕ້ອງ ປັບປຸງທິດນຳຄືນໃຫມ່ ດ້ວຍຄຳສັບທີ່ວ່າ ສ້າງເມືອງ ໃຫ້ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານ

ເປັນຫົວໜ່ວຍພັດທະນາ, ແຕ່ເປົ້າໝາຍ ກໍຍັງແມ່ນການສ້າງຄວາມໝັ້ນຄົງ ໃຫ້ແກ່ລັດປະຊາທິປະໄຕປະຊາຊົນ.

✪ ***ສືບຕໍ່ຍືດໝັ້ນ ສ້າງແຂວງ ເປັນຫົວໜ່ວຍຍຸດທະສາດ;*** ຍ້ອນວ່າ ແຂວງ ເປັນຫົວໜ່ວຍປົກຄອງສູງສຸດຂັ້ນທ້ອງຖິ່ນ, ມີຄວາມຮັບຜິດຊອບແທນລັດຖະບານ ໃນການຄຸ້ມຄອງ-ບໍລິຫານລັດ ປະຈຳຢູ່ທ້ອງຖິ່ນ. ສະນັ້ນ ແຂວງ ຕ້ອງເປັນຫົວໜ່ວຍນຳພາ, ຄຸ້ມຄອງ ແລະ ປົກຄອງ ທີ່ສາມາດວາງຍຸດທະສາດການພັດທະນາທ້ອງຖິ່ນ ສຳລັບໄລຍະຍາວ ກໍຄື ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານໃນແຕ່ລະປີ; ແຂວງ ຕ້ອງໄດ້ຮັບການຈັດສັນແບ່ງປັນຜົນປະໂຫຍດ ອັນເໝາະສົມ ຈາກການພັດທະນາໂຄງການຕ່າງໆ ດ້ວຍການລົງທຶນ ຈາກພາຍໃນ ແລະ ຕ່າງປະເທດ ຊຶ່ງມີການນຳໃຊ້ຊັບພະຍາກອນທຳມະຊາດ ຢູ່ໃນແຂວງນັ້ນໆ ເພື່ອໃຫ້ແຂວງສາມາດດຳເນີນການພັດທະນາ ພາຍໃນທ້ອງຖິ່ນຂອງຕົນ ໄດ້ຢ່າງເປັນເຈົ້າການ ແລະ ຮັບປະກັນຄວາມຍືນຍົງ; ແຂວງ ຕ້ອງເປັນຫົວໜ່ວຍຍຸດທະສາດ ດ້ານປ້ອງກັນຊາດ ໂດຍມີຄວາມຮັບຜິດຊອບທິດໜຶ່ງທີ່ແນ່ນອນ ໃນ ຮູບແຖວຍຸດທະບັ້ນຮົບ; ແຂວງ ຕ້ອງໄດ້ຮັບການກໍ່ສ້າງ ປັບປຸງ ຍົກລະດັບ ດ້ານການພົວພັນຮ່ວມມື ກັບຕ່າງປະເທດ ໃຫ້ສົມຄູ່ກັບຄວາມຮຽກຮ້ອງຕ້ອງການ ດ້ານການເຊື່ອມໂຍງ ກັບພາຍນອກ ໃນໄລຍະໃໝ່.

✪ ***ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ;*** ເມືອງເປັນຫົວໜ່ວຍນຳພາ ແລະ ຄຸ້ມຄອງ-ບໍລິຫານ ກໍຄື ເປັນຫົວໜ່ວຍປົກຄອງທ້ອງຖິ່ນ ທີ່ຂຶ້ນກັບແຂວງ ຢູ່ກາງ ລະຫວ່າງແຂວງ ກັບບ້ານ; ສະນັ້ນ ເມືອງ ຈຶ່ງມີທີ່ຕັ້ງ ແລະ ບົດບາດສຳຄັນ ໃນລັກສະນະເປັນຂົວຕໍ່ ດ້ານການນຳພາ-ບັນຊາ-ຊີ້ນຳ ໃນທຸກດ້ານ ຈາກແຂວງ ຫາບ້ານ. ຖ້າຫາກເມືອງ ບໍ່ເຂັ້ມແຂງຮອບດ້ານ ການນຳພາ-ບັນຊາ-ຊີ້ນຳ ກໍຈະບໍ່ເຂັ້ມແຂງ, ບໍ່ແທດເຖິງ ບັນດາບ້ານທີ່ຢູ່ຮາກຖານ; ເມືອງ ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ຈຶ່ງສາມາດ ນຳພາ-ຊີ້ນຳ-ບັນຊາ ການສ້າງບ້ານ ແລະ ກຸ່ມບ້ານພັດທະນາ ຕິດພັນກັບການແກ້ໄຂຄວາມທຸກຍາກ ໄດ້ດີ. ສະນັ້ນ ໃນສະເພາະໜ້ານີ້ ຕ້ອງຄົ້ນຄວ້າກຳນົດທິດ ໃຫ້ຈະແຈ້ງ, ເປັນລະບົບ ກ່ຽວກັບການສ້າງເມືອງ ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ດັ່ງນີ້ :

+ ຕ້ອງຮີບຮ້ອນປັບປຸງກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ໂດຍມີການລະບຸໃຫ້ແຈ້ງຕື່ມກ່ຽວກັບທີ່ຕັ້ງ, ພາລະບົດບາດ ສິດ ແລະ ໜ້າທີ່ ຂອງແຂວງ, ເມືອງ ແລະ ບ້ານ; ຕ້ອງໃຫ້ເມືອງ ສາມາດເປັນຫົວໜ່ວຍແຜນການ-ການເງິນ ແລະ ສາມາດຮັບຜິດຊອບຄຸ້ມຄອງ ໂຄງການພັດທະນາໄດ້ຕາມເງື່ອນໄຂທີ່ເໝາະສົມ; ເມືອງ ຕ້ອງໄດ້ຮັບການປັບປຸງ ທາງດ້ານການຈັດຕັ້ງກົງຈັກ ແລະ ປະກອບບຸກຄະລາກອນ ໃຫ້ເໝາະ ກັບທີ່ຕັ້ງ-ພາລະບົດບາດ ແລະ ຄວາມຮັບຜິດຊອບໃໝ່ ເພື່ອກ້າວໄປສູ່ຄວາມເຂັ້ມແຂງຮອບດ້ານ ສາມາດຊ່ວຍແຂວງໄດ້ ຢ່າງເອົາການເອົາງານ ແລະ ນຳພາ-ບັນຊາ-ຊີ້ນຳ

ບ້ານ ໄດ້ຢ່າງເລິກເຊິ່ງເຖິງຖອງ; ຕ້ອງຖືການປະກອບພະນັກງານໃຫ້ເມືອງ ເປັນບູລິມະສິດ ແລະ ຖືເອົາ ການສ້າງນິຕິກຳໃຫມ່ ເປັນຕົ້ນ ແມ່ນລະບຽບການ-ກົນໄກ ຄວາມຮັບຜິດຊອບ ລະຫວ່າງແຂວງ ກັບ ເມືອງ ເປັນວຽກຈຸດສຸມຮີບດ່ວນ; ສະນັ້ນ ແຕ່ລະແຂວງຕ້ອງສຶມທົບເມືອງ ຄົ້ນຄວ້າໃຫ້ເລິກເຊິ່ງ ກ່ຽວກັບ ທິດທາງການສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ຈາກນັ້ນ ຈຶ່ງມີຄວາມເຫັນສະເໜີແນະ ຕໍ່ຄະນະຄົ້ນຄວ້າຂັ້ນສູນກາງ ເພື່ອສັງລວມບັນຫາຕ່າງໆໃຫ້ເປັນລະບົບ ສະເໜີຕໍ່ຂັ້ນເທິງ ພິຈາລະນາ ຮັບຮອງເອົາ.

+ ໃຫ້ແຕ່ລະແຂວງ ຄົ້ນຄວ້າກຳນົດເອົາເມືອງເປົ້າໝາຍ ເພື່ອຈັດຕັ້ງເຮັດທົດລອງ ເປັນຕົວແບບ ສຳລັບການຖອດຖອນບົດຮຽນກ່ຽວກັບການສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານໂດຍສະ ເພາະ ແມ່ນເມືອງທີ່ມີເງື່ອນໄຂຄວາມສາມາດ ດ້ານເສດຖະກິດ-ການເງິນ-ງົບປະມານ... ການສ້າງ ເມືອງ ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ຍັງຕ້ອງຕິດພັນກັບການສ້າງເມືອງເປັນຫົວໜ່ວຍສູ້ຮົບເອກະ ລາດ ທີ່ເຂັ້ມແຂງ ໃນຮູບແຖວສູ້ຮົບບໍລິເວນປ້ອງກັນແຂວງ ທັງຕ້ອງກຸ້ມຕົນເອງ ດ້ານສະບຽງອາຫານ ແລະ ແຜນການສູ້ຮົບ.

✪ ***ສ້າງບ້ານ ເປັນຫົວໜ່ວຍພັດທະນາ;*** ແມ່ນວຽກສຳຄັນຕົ້ນຕໍ ໃນຍຸດທະສາດ ການກໍ່ສ້າງ ຮາກຖານການເມືອງຕິດພັນກັບການພັດທະນາຊົນນະບົດຮອບດ້ານ ເພື່ອສ້າງຫົວໜ່ວຍປົກຄອງ ລຸ່ມສຸດ ທີ່ເປັນພື້ນຖານ ຂອງລະບອບປະຊາທິປະໄຕປະຊາຊົນ ໃຫ້ມີຄວາມເຂັ້ມແຂງ. ຖ້າຫາກ ບ້ານ ສ່ວນຫລວງຫລາຍ ຢູ່ປະເທດເຮົາ ໄດ້ເປັນບ້ານພັດທະນາ ແລະ ມີຄວາມເຂັ້ມແຂງລະບອບ ກໍຄື ລັດ ປະຊາທິປະໄຕປະຊາຊົນ ກໍມີຄວາມເຂັ້ມແຂງຫມັ້ນຄົງ, ການພັດທະນາ ກໍມີຄວາມຍືນຍົງ.

ການສ້າງບ້ານພັດທະນາ ຕ້ອງດຳເນີນໄປ ບົນພື້ນຖານຄຳສັ່ງແນະນຳ ຂອງກົມການເມືອງ ສະບັບເລກທີ 03/ກມສພ, ລົງວັນທີ 30/05/2011; ຕາມ 4 ຄາດໝາຍ ແລະ 4 ເນື້ອໃນ (ຢູ່ໃນຂໍ້ 4 ໜ້າ 26 ຂອງປຶ້ມຫົວນີ້). ເພື່ອໃຫ້ການສ້າງບ້ານພັດທະນາ ປະສົບຜົນສຳເລັດ ຕ້ອງປະຕິບັດຕາມ **10 ມາດຕະການ** ທີ່ກຳນົດໄວ້ໃນຄຳສັ່ງແນະນຳ ເລກທີ 03/ກມສພ ດັ່ງນີ້ :

1). ໃຫ້ຄົ້ນຄວ້າເນື້ອໃນ ຂອງຄຳສັ່ງແນະນຳສະບັບນີ້ ຢ່າງລະອຽດເລິກເຊິ່ງ; ຈາກນັ້ນ ຈຶ່ງຜັນ ຂະຫຍາຍ ແລະ ກຳນົດບາດກ້າວຈັດຕັ້ງປະຕິບັດ ໃຫ້ເປັນຮູບປະທຳ ໂດຍອີງໃສ່ທ່າແຮງ ແລະ ສະ ພາບຈຸດພິເສດ ຂອງແຕ່ລະທ້ອງຖິ່ນ ແຕ່ລະຂະແໜງການ; ກຳແໜ້ນບົດຮຽນ ທີ່ດີ ມີຜົນສຳເລັດ ໃນຊຸມປີທີ່ຜ່ານມາ ແລະ ໃຫ້ເປັນເຈົ້າການສືບຕໍ່ເສີມຂະຫຍາຍ ຢ່າງກ້ວາງຂວາງ ທົ່ວເຖິງ, ພ້ອມ ກັນນັ້ນ ກໍປັບປຸງແກ້ໄຂ ອັນທີ່ເຮັດບໍ່ຖືກ-ເຮັດບໍ່ໄດ້ຮັບຜົນ ເພື່ອສ້າງບາດກ້າວບຸກທະລຸ ໃນການແກ້ ໄຂຄວາມທຸກຍາກ ແລະ ສ້າງບ້ານພັດທະນາ ໃຫ້ມີຈຳນວນຫລາຍຂຶ້ນ.

2). ໃຫ້ບັນດາອົງການຂັ້ນສູນກາງ ທີ່ກ່ຽວຂ້ອງ ສົມທົບກັບແຂວງ ເພື່ອກຳນົດ ໃຫ້ຈະແຈ້ງ ຄາດໝາຍສູ້ຊົນ ທີ່ຕ້ອງປະຕິບັດໃຫ້ເປັນຈິງ ສຳລັບ 4-5 ປີ ຕໍ່ໜ້າ ດັ່ງນີ້ :

+ ຄາດໝາຍການສ້າງບ້ານພັດທະນາ ຈະໃຫ້ໄດ້ທໍ່ໃດ, ມີບ້ານໃດແດ່, ຢູ່ເມືອງໃດ, ໃນແຕ່ ລະແຂວງ, ຈາກນັ້ນ ສະຫລຸບເປັນຄາດໝາຍລວມ ໃນທົ່ວປະເທດ.

+ ຄາດໝາຍການສ້າງບ້ານໃຫຍ່ (ໂຮມບ້ານ) ໃຫ້ເປັນຈຸດສຸມພັດທະນາ ເພື່ອກາຍເປັນຕົວ ເມືອງນ້ອຍ ໃນຊົນນະບົດ ນັ້ນ ຈະສຸມໃສ່ບ່ອນໃດແດ່, ບ່ອນນັ້ນ ມີເງື່ອນໄຂ ແລະ ມີທີ່ຕັ້ງສຳຄັນ ໃນ ດ້ານຕ່າງໆ ຄືແນວໃດ; ມີໂຄງການ-ມີກິດຈະການພັດທະນາ ອັນໃດແດ່ ເພື່ອຫັນໃຫ້ເປັນຕົວເມືອງ ນ້ອຍ ເທື່ອລະກ້າວ ໂດຍມີການຫ້ຽງຫາກະກຽມ ໃຫ້ລະອຽດຮອບຄອບ, ເມື່ອໂຮມເຂົ້າກັນແລ້ວ ຕ້ອງ ມີເງື່ອນໄຂສະດວກກວ່າເກົ່າ, ຮັບປະກັນ ບໍ່ໃຫ້ປະຊາຊົນ ກັບຄືນບ້ານເກົ່າ ຫລື ຫນີໄປຢູ່ບ່ອນໃຫມ່.

+ ຈະກຳນົດໃຫ້ມີຈັກກຸ່ມບ້ານຈຸດສຸມ (ຕາມຄວາມຈຳເປັນ ຕ້ອງຮັກສາເປັນກຸ່ມ), ແຕ່ລະກຸ່ມ ບ້ານນັ້ນ ມີຈຸດປະສົງເປົ້າຫມາຍຫຍັງ ເປັນຕົ້ນຕໍ ແລະ ຕ້ອງດຳເນີນວຽກງານອັນໃດແດ່ ເພື່ອສ້າງກຸ່ມ ນັ້ນ ໃຫ້ເຂັ້ມແຂງ ກ່ອນອື່ນ ແມ່ນສ້າງບ້ານທີ່ເປັນໃຈກາງ ຂອງກຸ່ມ.

+ ໃຫ້ກຳນົດເຂດຈຸດສຸມພັດທະນາ (ໂຄງການຈຸດສຸມ) ຂອງສູນກາງ, ຂອງແຂວງ ແລະ ຂອງ ເມືອງ ໃຫ້ຈະແຈ້ງ ໂດຍສະເພາະ ເຂດຈຸດສຸມພັດທະນາ ທີ່ຫມັ້ນປະຕິວັດ, ເຂດຈຸດສຸມ ດ້ານ ປກຊ-ປກສ; ເຂດຈຸດສຸມ ເພື່ອສະຫງວນຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ເຂດຈຸດສຸມ ເພື່ອ ຈັດສັນພູມລຳເນົາ ແລະ ບ່ອນທຳມາຫາກິນຄົງທີ່ ທີ່ຍືນຍົງ ເພື່ອຢຸດຕິການຖາງປ່າເຮັດໄຮ່ ແບບ ເລື່ອນລອຍ ແລະ ເພື່ອຮອງຮັບ ຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການພັດທະນາຕ່າງໆ.

ໃຫ້ກຳນົດແຈ້ງວ່າ ເຂດຈຸດສຸມນັ້ນ ຢູ່ໃສ, ໃຜເປັນຜູ້ຮັບຜິດຊອບ, ມີໂຄງການວຽກງານ ອັນ ໃດແດ່, ໃຊ້ທຶນຮອນ ຄືແນວໃດ, ທຶນຮອນ ມາຈາກໃສ, ໄລຍະຈັດຕັ້ງ ປະຕິບັດ ທໍ່ໃດປີ...

3). ໃຫ້ລັດຖະບານ ຮີບຮ້ອນຄົ້ນຄວ້າ ອອກນະໂຍບາຍ ແລະ ມາດຕະການ ສິ່ງເສີມເປັນພິ ເສດ ເພື່ອຊຸກຍູ້ໃຫ້ນັກລົງທຶນ ຫລື ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ໄປລົງທຶນໃນ ໂຄງການຕ່າງໆ ທີ່ຕິດພັນກັບການແກ້ໄຂຄວາມທຸກຍາກ ແລະ ພັດທະນາຊົນນະບົດ (ການລ້ຽງທຶນ ປູກຝັ່ງ, ລ້ຽງສັດ; ປຸງແຕ່ງຜົນຜະລິດ ກະສິກຳ-ປ່າໄມ້ ແລະ ຫັດຖະກຳ; ການປູກພືດ ເປັນຢາ; ການ ບໍລິການ ເກັບຊື້ ແລະ ການບໍລິການ ທາງດ້ານເຕັກນິກວິຊາການ, ການຟື້ນຟູບູລະນະຮັກສາປ່າໄມ້ ແລະ ຊີວະນາໆພັນ ເພື່ອການສຶກສາຄົ້ນຄວ້າ ແລະ ການທ່ອງທ່ຽວ...) ໃນເຂດ ທີ່ຍັງຫຍຸ້ງຍາກ- ຫ່າງໄກ ສອກຫລີກ ແລະ ທຸລະກັນດານ, ເປັນຕົ້ນແມ່ນ :

+ ນະໂຍບາຍ ດ້ານການເຊົ່າ ແລະ ສຳປະທານທີ່ດິນ.

+ ນະໂຍບາຍ ດ້ານການຍົກເວັ້ນ ແລະ ຫລຸດຜ່ອນການເສຍພາສີ-ອາກອນ.

+ ນະໂຍບາຍ ດ້ານການນຳເຂົ້າພາຫະນະ, ອຸປະກອນ ຮັບໃຊ້ການຜະລິດ ແລະ ສິ່ງອອກຜົນຜະລິດ.

+ ນະໂຍບາຍ ດ້ານແຮງງານ, ການຝຶກອົບຮົມຍົກລະດັບ ສີມືແຮງງານ ແລະ ດ້ານອື່ນໆອີກ.

4). ໃຫ້ລັດຖະບານ ຮີບຮ້ອນປະກາດໃຊ້ ແລະ ຊີ້ນຳ ການປະຕິບັດນະໂຍບາຍລະອຽດ ທາງດ້ານການສຶກສາ ແລະ ສາທາລະນະສຸກ ສຳລັບປະຊາຊົນ ທີ່ຢູ່ຊົນນະບົດ, ກ່ອນອື່ນ ແມ່ນຜູ້ທີ່ຍັງທຸກຍາກຂາດເຂີນໃຫ້ມີເງື່ອນໄຂ ໄດ້ຮັບການສຶກສາ ແລະ ການບໍລິການດ້ານສາທາລະນະສຸກຢ່າງທົ່ວເຖິງກວ່າເກົ່າ ແນໃສ່ບັນລຸຄາດໝາຍສະຫັດສະວັດດ້ານການພັດທະນາ ໃນປີ 2015 ກ່ອນອື່ນ ແມ່ນສຳເລັດການສຶກສາ ຊັ້ນປະຖົມພາກບັງຄັບ, ການເກີດລູກ ຢູ່ໂຮງໝໍ ແລະ ສຸກສາລາ ໂດຍບໍ່ເສຍຄ່າ; ການປິ່ນປົວພະຍາດ ສຳລັບເດັກອາຍຸຕ່ຳກວ່າ 5 ປີ ໂດຍບໍ່ໄດ້ເສຍຄ່ານັ້ນ ໃຫ້ໄດ້ຢ່າງແທ້ຈິງ.

5). ໃຫ້ລັດຖະບານ ປະຕິບັດລະບອບນະໂຍບາຍສິ່ງເສີມສຳລັບເປົ້າໝາຍພະນັກງານນາຍຄູ, ນາຍໝໍ, ພະນັກງານວິຊາການ... ຜູ້ທີ່ລົງເຮັດວຽກປະຈຳການ ຢູ່ຮາກຖານບ້ານ ໃນເຂດຊົນນະບົດຫ່າງໄກສອກຫລີກ ແລະ ທຸລະກັນດານ ໃຫ້ແທດເໝາະຕົວຈິງ.

ພ້ອມກັນນັ້ນ ກໍໃຫ້ກຳນົດລະບອບການສັບຊ້ອນ ເອົານັກຮຽນ, ນັກສຶກສາທີ່ສຳເລັດຈາກສະຖາບັນການສຶກສາວິຊາຊີບ ແລະ ມະຫາວິທະຍາໄລ ລົງເຮັດວຽກປະຈຳຢູ່ຮາກຖານ ເພື່ອຝຶກຝົນທົດສອບໃນວຽກງານຕົວຈິງ, ຈາກນັ້ນ ຈຶ່ງຮັບເຂົ້າເປັນລັດຖະກອນ ຕາມຜົນງານຕົວຈິງ ຂອງແຕ່ລະຄົນ ແລະ ຕາມຄວາມຮຽກຮ້ອງຕ້ອງການຕົວຈິງ.

- ໃຫ້ສະຫງວນໂຄຕ້າພະນັກງານປະຈຳປີ ສຳລັບເຂດຈຸດສຸມພັດທະນາ ເພື່ອຈະມີເງື່ອນໄຂຕອບສະໜອງ ຄວາມຕ້ອງການພະນັກງານ ຂອງເຂດດັ່ງກ່າວ ໃຫ້ໄດ້ຢ່າງພຽງພໍ ໂດຍສະເພາະແມ່ນພະນັກງານຄູ, ແພດໝໍ, ພະນັກງານວິຊາການກະ ສິກຳ ປູກຝັງ-ລ້ຽງສັດ-ສັດຕະວະແພດ...

6). ໃຫ້ຄະນະພັກແຂວງ ສົມທົບກັບຄະນະພັກເມືອງ ແລະ ຄະນະພັກຮາກຖານ ປຶກສາຫາລື ແລະ ຕົກລົງ ຢ່າງເປັນເອກະພາບ ກ່ຽວກັບການຫັນເອົາພະນັກງານ (ທັງພະນັກງານການເມືອງ ແລະ ພະນັກງານວິຊາການ) ລົງປະຈຳຢູ່ຈຸດສຸມພັດທະນາ, ຢູ່ກຸ່ມບ້ານ ຫລື ຢູ່ບ້ານ ໂດຍສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງໂຄງການວຽກງານ ຢູ່ແຕ່ລະບ່ອນ, ທັງນີ້ ກໍເພື່ອຫລີກເວັ້ນການຫັນເອົາພະນັກງານ ລົງໄປຮາກຖານແບບເປັນຂະບວນ, ເປັນແຕ່ລະປັ້ນ ແຕ່ລະຍາມ ທຽວຂຶ້ນທຽວລົງ ແຕ່ບໍ່ມີປະສິດທິຜົນຕົວຈິງ, ຍິ່ງໄປກວ່ານັ້ນ ພາໃຫ້ສິ້ນເປືອງງົບປະມານ ຢ່າງຫລວງຫລາຍ; ໃນກໍລະນີ ບໍ່ມີພະນັກງານ (ເພື່ອເຮັດວຽກຈຸດສຸມ ຂອງໂຄງການ) ກໍໃຫ້ສະເໜີຂຶ້ນມາຫາສູນກາງ

ພິຈາລະນາຈັດຫາໃຫ້; ໃນສະເພາະໜ້ານີ້ ຕ້ອງປະຕິບັດໃຫ້ເປັນຈິງ ທິດນຳທີ່ວ່າ *"ທຸກວຽກຈຸດສຸມ ສຳຄັນ ຕ້ອງມີຜູ້ເຮັດຕົວຈິງ ແລະ ມີຜູ້ຮັບຜິດຊອບນຳພາ-ຊີ້ນຳເປັນປະຈຳ".*

7). ໃຫ້ຄະນະພັກ ບັນດາອົງການອ້ອມຂ້າງສູນກາງ ເພີ່ມຄວາມເອົາໃຈໃສ່ຊີ້ນຳ ພະນັກງານ ຕາມຂະແໜງການສາຍຕັ້ງ ຂອງຕົນ ເພື່ອໃຫ້ເຂົາເຈົ້າປະກອບສ່ວນ ຢ່າງຕັ້ງໜ້າ ເຂົ້າໃນວຽກງານ ສ້າງບ້ານພັດທະນາ, ສ້າງເຂດຈຸດສຸມ ແລະ ກຸ່ມບ້ານພັດທະນາ ຕາມການນຳພາ-ຊີ້ນຳ ຂອງຄະນະ ພັກທ້ອງຖິ່ນ.

ພ້ອມກັນນີ້ ກໍໃຫ້ດຳເນີນການສຶກສາອົບຮົມການເມືອງ-ແນວຄິດ ແຕ່ງຕັ້ງມອບໝາຍພະ ນັກງານຂອງຕົນ ລົງເຮັດວຽກປະຈຳຢູ່ຮາກຖານບ້ານ, ກຸ່ມບ້ານ ແລະ ເຂດຈຸດສຸມ ຕາມຄວາມຮຽກ ຮ້ອງຕ້ອງການ ຂອງໂຄງການວຽກງານ ແຕ່ລະບ່ອນ.

ບັນດາສະຫາຍການນຳ ຂອງບັນດາອົງການອ້ອມຂ້າງສູນກາງ ຕ້ອງມີລະບອບ ລົງທ້ອງຖິ່ນ ຮາກຖານ ເພື່ອຊ່ວຍຊຸກຍູ້ ສະໜັບສະໜູນວຽກງານສຳຄັນນີ້ ຕາມພາລະບົດບາດ ຂອງຕົນ.

8). ໃຫ້ຮີບຮ້ອນປັບປຸງລະບົບການຈັດຕັ້ງ ແລະ ບຸກຄະລາກອນ ລວມທັງກົນໄກ ແລະ ລະ ບອບແບບແຜນການຊີ້ນຳ ການພັດທະນາຊົນນະບົດ ຢູ່ຂັ້ນສູນກາງ ໃຫ້ເປັນອົງການລວມສູນເອກະ ພາບ, ເປັນກົງຈັກການຈັດຕັ້ງທີ່ກະທັດລັດ ແຕ່ມີເງື່ອນໄຂຄວາມສາມາດ ຊ່ວຍກົມການເມືອງ ແລະ ລັດຖະບານ ໃນການດຳເນີນວຽກງານອັນສຳຄັນນີ້ ໄດ້ຢ່າງມີປະສິດທິພາບ.

- ສຳລັບຢູ່ແຂວງ ແລະ ເມືອງ ຕ້ອງມອບໝາຍໃຫ້ສະຫາຍໜຶ່ງໃນຄະນະປະຈຳພັກ ເປັນຜູ້ ຮັບຜິດຊອບວຽກນີ້ ໂດຍມີໜ່ວຍງານໜຶ່ງ ທີ່ຂຶ້ນກັບຫ້ອງວ່າການ ເປັນເສນາທິການຊ່ວຍວຽກ.

9). ໃຫ້ລັດຖະບານ ສືບຕໍ່ຈັດເອົາໂຄງການສ້າງບ້ານ, ສ້າງເຂດຈຸດສຸມ ແລະ ກຸ່ມບ້ານພັດ ທະນາ (ຕິດພັນກັບວຽກງານ ກໍ່ສ້າງຮາກຖານການເມືອງ) ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ໂດຍຈັດໄວ້ເປັນສາລະບານສະເພາະ ແລະ ຈັດເປັນແຜນລົງທຶນ ຫລື ຮ່ວງງົບປະມານ ການໃຊ້ຈ່າຍປະຈຳແຕ່ລະສົກປີສະເພາະໃຫ້ຈະແຈ້ງ; ຈາກນັ້ນ ຕ້ອງມອບທັງໂຄງການ, ທັງງົບປະ ມານ ແລະ ມອບຄວາມຮັບຜິດຊອບໃຫ້ທ້ອງຖິ່ນ ຈັດຕັ້ງປະຕິບັດ.

- ພ້ອມກັນນີ້ ກໍໃຫ້ສືບຕໍ່ຂົນຂວາຍ ຍາດແຍ່ງເອົາການສະໜັບສະໜູນ ຊ່ວຍເຫລືອ ເອົາ ທຶນຮອນ, ເຕັກນິກວິຊາການ ແລະ ບົດຮຽນ ຈາກປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ ແລະ ອົງ ການບໍ່ສັງກັດລັດຖະບານ; ລວມທັງນິຕິບຸກຄົນ ແລະ ບັນດາຊັ້ນຄົນ ພາຍໃນ ແລະ ຕ່າງປະເທດ ເຂົ້າ ໃນວຽກງານນີ້ຢ່າງກ້ວາງຂວາງ ແລະ ມີຈຸດສຸມກວ່າເກົ່າ; ທັງມີການຄຸ້ມຄອງການຈັດຕັ້ງປະຕິບັດ ໂຄງການຕ່າງໆ ຢ່າງຮອບດ້ານ ແລະ ມີປະສິດທິຜົນ.

10). ໃຫ້ລັດຖະບານ ຮີບຮ້ອນຄົ້ນຄວ້າກຳນົດເປັນນະໂຍບາຍ ອັນຈະແຈ້ງ ກ່ຽວ ກັບການຈັດ ສັນລາຍຮັບລວມ ຂອງລັດຖະບານ ຈາກໂຄງການລົງທຶນ ທີ່ນຳໃຊ້ແຫລ່ງ ຊັບພະຍາກອນທຳມະ ຊາດ, ເປັນຕົ້ນ ແມ່ນແຮ່ທາດ, ນ້ຳ, ທີ່ດິນຈຳນວນຫລວງຫລາຍ ທັງມີຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມຢູ່ທ້ອງຖິ່ນໃດໃຫ້ທ້ອງຖິ່ນນັ້ນ ໃນອັດຕາສ່ວນທີ່ເໝາະສົມ ເພື່ອໃຫ້ທ້ອງຖິ່ນນັ້ນ ສາ ມາດນຳໃຊ້ເປັນທຶນຮອນ ສຳລັບການພັດທະນາບ້ານ, ປົວແປງ ແລະ ຍົກສູງຄຸນນະພາບຊີວິດ ຂອງ ປະຊາຊົນ ໃນທ້ອງຖິ່ນນັ້ນໆ ຫລື ນຳໃຊ້ເຂົ້າໃນວຽກງານອື່ນໆ ທີ່ຈຳເປັນ ໂດຍມີການກຳນົດລະບຽບ ການໃຊ້ຈ່າຍ ແລະ ລະບອບການຕິດຕາມກວດກາ ໃຫ້ໂປ່ງໃສ-ຮັດກຸມ.

❸ ***ຄວາມໝັ້ນຄົງ ຂອງລັດປະຊາທິປະໄຕປະຊາຊົນ.*** ການສ້າງແຂວງເປັນຫົວໜ່ວຍຍຸດທະ ສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານ ເປັນຫົວໜ່ວຍພັດທະນາ ແມ່ນມາດ ຕະການສັງລວມ ທີ່ມີລັກສະນະຍຸດທະສາດ ສຳລັບການສ້າງຄວາມໝັ້ນຄົງ ທັງ 5 ດ້ານ ແກ່ລັດ ປະຊາທິປະໄຕປະຊາຊົນ ຄື :

ໜຶ່ງ: ສ້າງຄວາມໝັ້ນຄົງ ທາງດ້ານການເມືອງ; ຊຶ່ງໝາຍເຖິງ ການມີຄວາມໝັ້ນຄົງ ທາງດ້ານແນວຄິດ ແລະ ອຸດົມການ ແຫ່ງການສ້າງສາພັດທະນາປະເທດຊາດ ສູ່ຈຸດໝາຍສັງຄົມ ນິຍົມ; ໝາຍເຖິງ ການມີຄວາມໝັ້ນຄົງ ຂອງບັນດາອົງການອຳນາດແຫ່ງລັດ ແລະ ບັນດາອົງ ການຈັດຕັ້ງທາງການເມືອງ ສັງຄົມ ແລະ ວິຊາຊີບທີ່ສ້າງຕັ້ງ ແລະ ເຄື່ອນໄຫວ ຢ່າງຖືກຕ້ອງຕາມ ລະບຽບກົດໝາຍ ຂອງລັດປະຊາທິປະໄຕປະຊາຊົນ ເພື່ອສ້າງເງື່ອນໄຂ ໃຫ້ແກ່ການມີສ່ວນຮ່ວມ ທາງການເມືອງ ຂອງພົນລະເມືອງລາວ.

ສອງ: ສ້າງຄວາມໝັ້ນຄົງ ທາງດ້ານເສດຖະກິດ; ໝາຍເຖິງ ການມີລະບົບເສດຖະກິດແຫ່ງ ຊາດ ທີ່ຂະຫຍາຍຕົວຢ່າງໝັ້ນທ່ຽງ ຕາມທິດທີ່ຍືນຍົງບົນພື້ນຖານໂຄງປະກອບທີ່ມີຫລາຍພາກສ່ວນ ແລະ ຫລາຍຮູບການກຳມະສິດ, ຫລາຍຂະແໜງການຜະລິດ ແລະ ຫລາຍປະເພດຜະລິດຕະພັນ; ຫລາຍຮູບການຈັດຕັ້ງທຸລະກິດການຜະລິດ ແລະ ການບໍລິການ ທັງຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່ ທີ່ຕອບສະໜອງຜົນປະໂຫຍດຂອງແຕ່ລະພາກສ່ວນ ໄດ້ຢ່າງເໝາະສົມ-ເປັນທຳ.

ສາມ: ສ້າງຄວາມໝັ້ນຄົງ ທາງສັງຄົມ; ໝາຍເຖິງ ຄວາມໝັ້ນຄົງ ຂອງວົງຄະນາຍາດແຫ່ງ ຊາດລາວເອກະພາບ; ຊຶ່ງບັນດາເຜົ່າຊົນ, ຊັ້ນຄົນ ມີຄວາມເປັນປຶກແຜ່ນ ແລະ ສາມັກຄີປອງດອງ, ດຳລົງຊີວິດ, ທຳມາຫາກິນ ດ້ວຍຄວາມສະເໝີພາບ ແລະ ຍຸຕິທຳ, ເພື່ອຄວາມຢູ່ດີ ກິນດີ ທາງດ້ານ ວັດຖຸ ແລະ ມີຄວາມສີວິໄລ ທາງດ້ານຈິດໃຈ.

ສີ: ສ້າງຄວາມເຂັ້ມແຂງ ດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ຫມາຍຄວາມວ່າ ມີເຫງົ້າ ພະລັງ ແລະ ມີຄວາມສາມາດພຽງພໍ ໃນການປົກປັກຮັກສາອຳນາດອະທິປະໄຕ ແລະ ຜືນແຜ່ນ ດິນອັນຄົບຖ້ວນຂອງຊາດ ໄວ້ຢ່າງຫມັ້ນຄົງ; ມີຄວາມເດັດຂາດ ເຂັ້ມງວດໃນການແກ້ໄຂປະກົດການ ຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນ ຢູ່ໃນສັງຄົມ, ເຮັດໃຫ້ສັງຄົມມີຄວາມສະຫງົບປອດໄພ ແລະ ມີຄວາມເປັນ ລະບຽບຮຽບຮ້ອຍ.

ຫ້າ: ສ້າງຄວາມຫມັ້ນຄົງ ດ້ານການພົວພັນຮ່ວມມື ກັບສາກົນ; ຫມາຍເຖິງ ການ ຢຶດຫມັ້ນ ຢ່າງສະເຫມີຕົ້ນ ສະເຫມີປາຍ ໃນແນວທາງການຕ່າງປະເທດເອກະລາດ ສັນຕິພາບ ມິດຕະພາບ ແລະ ຮ່ວມມື; ພົວພັນຮ່ວມມື ກັບທຸກປະເທດ ແລະ ອົງການຈັດຕັ້ງສາກົນ ບົນຫລັກການສະເຫມີ ພາບ, ຕ່າງຝ່າຍຕ່າງມີຜົນປະໂຫຍດ ບໍ່ແຊກແຊງເຂົ້າ ວຽກງານພາຍໃນ ຂອງກັນ ແລະ ກັນ.

❹ ສ້າງຄວາມເຂັ້ມແຂງ ໃຫ້ແກ່ລະບົບອຳນາດແຫ່ງລັດ.

- ລັດປະຊາທິປະໄຕປະຊາຊົນລາວ ປະຕິບັດລະບອບການແບ່ງງານ ແບ່ງຄວາມ ຮັບຜິດຊອບ ລະຫວ່າງອົງການອຳນາດແຫ່ງລັດ ຄື: ອົງການນິຕິບັນຍັດ (ສະພາແຫ່ງຊາດ), ອົງການບໍລິຫານ (ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ) ແລະ ອົງການຕຸລາການ (ສານ ແລະ ໄອຍະການ ປະຊາຊົນ) ບົນຫລັກການ ລວມສູນເປັນເອກະພາບ ອຳນາດແຫ່ງລັດ ພາຍໃຕ້ການນຳພາ ຂອງພັກ.

- ແຕ່ລະອົງການອຳນາດແຫ່ງລັດ ລ້ວນແຕ່ມີພາລະບົດບາດສະເພາະ ແລະ ເຄື່ອນໄຫວ ໂດຍມີການປະສານງານກັນ ເພື່ອຮັບປະກັນຄວາມກົມກຽວ ໃນການປະຕິບັດແນວທາງ ແຜນນະໂຍ ບາຍ ຂອງພັກ ແລະ ຄວາມສັກສິດ ຂອງອຳນາດລັດ ຕາມທິດທາງ ດັ່ງນີ້ :

ຫນຶ່ງ: ສະພາແຫ່ງຊາດ; ໃນຖານະອົງການຕົວແທນ ແຫ່ງສິດອຳນາດ ແລະ ຜົນປະໂຫຍດ ຂອງປະຊາຊົນບັນດາເຜົ່າ, ທັງເປັນອົງການນິຕິບັນຍັດ ຕ້ອງເຊີດຊູບົດບາດ ແລະ ຄວາມສາມາດໃນ ການຄົ້ນຄວ້າ ຕົກລົງບັນຫາສຳຄັນ ຂອງປະເທດຊາດ ໃຫ້ສູງຂຶ້ນຕື່ມ; ພິເສດ ແມ່ນການພິຈາລະນາ ຮັບຮອງເອົາກົດຫມາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານປະຈຳປີ ກໍຄື ໃນການ ຕິດຕາມກວດກາ ການເຄື່ອນໄຫວ ຂອງອົງການບໍລິຫານ ແລະ ອົງການຕຸລາການ ຕາມທີ່ໄດ້ກຳນົດໄວ້ ໃນລັດຖະທຳມະນູນ ແລະ ກົດຫມາຍໃຫ້ໄດ້ຢ່າງເລິກເຊິ່ງ ຮອບດ້ານ ແລະ ມີຜົນສັກສິດ; ສະມາ ຊິກສະພາແຫ່ງຊາດ ຕ້ອງລົງພົບປະໃກ້ຊິດຕິດແທດປະຊາຊົນ ຢູ່ເຂດເລືອກຕັ້ງຕ່າງໆ ໃຫ້ເປັນປົກກະຕິ ແລະ ທົ່ວເຖິງ ເພື່ອເກັບກຳສະພາບ ແລະ ຄວາມຄິດຄວາມເຫັນ ຂອງປະຊາຊົນ; ສືບຕໍ່ປັບປຸງກົງຈັກ ການຈັດຕັ້ງ ຂອງສະພາແຫ່ງຊາດ ລວມທັງຫ້ອງວ່າການ ຄະນະສະມາຊິກສະພາແຫ່ງຊາດ ຂອງແຕ່ ລະເຂດເລືອກຕັ້ງ; ຍົກລະດັບຄວາມຮູ້ ຄວາມສາມາດ ແລະ ຄຸນນະພາບການເມືອງ ຂອງສະມາຊິກ

ສະພາແຫ່ງຊາດ ໃຫ້ສົມຄູ່ກັບທີ່ຕັ້ງພາລະບົດບາດຂອງຕົນ ຕື່ມອີກ; ເພີ່ມຈຳນວນຜູ້ປະຈຳການ ແລະ ຈຳນວນຜູ້ແທນ ຢູ່ເຂດເລືອກຕັ້ງຕ່າງໆ ໃຫ້ເຫມາະສົມ; ສືບຕໍ່ຄົ້ນຄວ້າ ກ່ຽວກັບການສ້າງຕັ້ງສະພາປະຊາຊົນ ຂັ້ນທ້ອງຖິ່ນ ໃຫ້ເລິກເຊິ່ງ ຮອບດ້ານ ຖີ່ຖ້ວນ ເພື່ອພິຈາລະນາຕົກລົງໃນຕໍ່ຫນ້າ.

ສະຫາຍ ນາງ ປານີ ຢາທໍ່ຕູ້
ກຳມະການກົມການເມືອງ, ປະທານສະພາແຫ່ງຊາດ
ລົງຢ້ຽມຢາມພົບປະປະຊາຊົນ

ສອງ: ອົງການບໍລິຫານ; ຕ້ອງໄດ້ຮັບການປັບປຸງຢ່າງເລິກເຊິ່ງ ຕາມທິດ **ກະທັດຮັດ, ສົມເຫດ ສົມຜົນ ແລະ ມີປະສິດທິພາບ**; ບັນດາກະຊວງ ອົງການບໍລິຫານ ຂັ້ນສູນກາງ ຕ້ອງເຮັດພາລະບົດ ບາດມະຫາພາກ ເປັນຕົ້ນຕໍ, ຜັນຂະຫຍາຍແນວທາງ ແລະ ນະຕິ ຂອງພັກ ເປັນແຜນງານ, ເປັນ ໂຄງການ ຂອງຂະແຫນງຕົນ, ທັງຊີ້ນຳ ການຈັດ ຕັ້ງປະຕິບັດ ໃຫ້ເກີດຜົນເປັນຈິງ; ພ້ອມນັ້ນ ກໍຕ້ອງເພີ່ມ ຄວາມເປັນເຈົ້າການ ໃນການຜັນຂະຫຍາຍບັນດາກົດຫມາຍທີ່ສະພາແຫ່ງຊາດ ໄດ້ຮັບຮອງເອົາແລ້ວ ໃຫ້ເປັນອັນລະອຽດ ແລະ ຈັດຕັ້ງປະຕິບັດໃຫ້ສັກສິດ.

+ ບູລະນະກົງຈັກການຈັດຕັ້ງຂອງລັດຖະບານ ເພື່ອໃຫ້ສາມາດປະຕິບັດພາລະບົດບາດ ບໍລິ ຫານລັດ ໄດ້ຢ່າງເຂັ້ມແຂງ ແລະ ມີປະສິດທິພາບ, ທັງບໍ່ໃຫ້ປົນເປຊ້ຳຊ້ອນກັນ ລະຫວ່າງກະຊວງ ທີ່ເຮັດ

ພາລະບົດບາດຄຸ້ມຄອງມະຫາພາກ ທົ່ວຂະແໜງການ ກັບ ບັນດາອົງການ ທີ່ເຮັດພາລະບົດບາດເປັນ ເສນາທິການ ຂອງລັດຖະບານ.

+ ຮັບປະກັນ ໃຫ້ອົງການບໍລິຫານທ້ອງຖິ່ນ ມີເງື່ອນໄຂ, ມີກົນໄກ ແລະ ມີຄວາມສາມາດ ປະຕິ ບັດແຜນພັດທະນາເສດຖະກິດ-ສັງຄົມ ຢູ່ທ້ອງຖິ່ນ ໄດ້ຢ່າງເປັນເຈົ້າການ; ຮີບຮ້ອນຄົ້ນຄວ້າ ປັບປຸງ, ແກ້ໄຂ ກົດໝາຍ ແລະ ນິຕິກຳ ຈຳນວນໜຶ່ງ ທີ່ກ່ຽວຂ້ອງເພື່ອຮອງຮັບໃຫ້ແກ່ການປະຕິບັດທິດນຳ ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນ ຫົວໜ່ວຍພັດທະນາ ໃຫ້ເປັນຈິງ; ພ້ອມກັນນັ້ນ ກໍຕ້ອງສືບຕໍ່ບູລະນະລະບົບການບໍລິຫານລັດ ໃຫ້ກະທັດ ຮັດ-ສະດວກ ວ່ອງໄວ ໂປ່ງໃສ, ພິເສດ ແມ່ນອົງການບໍລິຫານລັດ ຢູ່ທ້ອງຖິ່ນ ຮາກຖານ ຕ້ອງເອົາໃຈ ໃສ່ເປັນພິເສດ ຕໍ່ການມາພົວພັນວຽກງານ ຂອງປະຊາຊົນ, ຮັບເອົາຂໍ້ສະເໜີ ແລະ ຄຳຮ້ອງຂໍຕ່າງໆ ຂອງເຂົາເຈົ້າ ເພື່ອນຳສະເໜີຕໍ່ຂະແໜງການ ກໍຄື ບຸກຄົນທີ່ກ່ຽວຂ້ອງ ພິຈາລະນາຊ່ວຍເຫລືອ-ແກ້ໄຂ.

+ ປັບປຸງວຽກງານຄຸ້ມຄອງລັດຖະກອນ ໃຫ້ທັນສະໄໝ, ແກ້ໄຂໃຫ້ໄດ້ ບັນຫາ " ເຫລືອ-ບໍ່ພໍ " ຕິດພັນກັບການຫັນໄປປະກອບ ໃຫ້ເມືອງ ແລະ ໂຄງການວຽກງານຕົວຈິງຢູ່ຮາກຖານ ໃຫ້ພຽງພໍ; ປະຕິບັດລະບອບການເລືອກເຟັ້ນ ແລະ ຝຶກຝົນທິດສອບພະນັກງານ ເຂົ້າໃນຕຳແໜ່ງງານທີ່ສຳຄັນ, ລວມທັງການຈັດຕັ້ງຝຶກອົບຮົມວິຊາການອັນຈຳເປັນ, ລວມທັງ ຄວາມຮູ້ດ້ານການເມືອງ ການກໍ່ສ້າງ ຮາກຖານ-ພັດທະນາຊົນນະບົດ ແລະ ວຽກງານປົກຄອງ ໃຫ້ແກ່ຂັ້ນເມືອງ ແລະ ຂັ້ນບ້ານ.

+ ປັບປຸງລະບອບການແບ່ງຂັ້ນຄຸ້ມຄອງ ລະຫວ່າງສູນກາງ ກັບທ້ອງຖິ່ນຕາມທິດ ສ້າງແຂວງເປັນ ຫົວໜ່ວຍຍຸດທະສາດ, ເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ບ້ານເປັນຫົວໜ່ວຍພັດທະນາ; ມອບໂຄງການ, ມອບສິດ ແລະ ມອບຄວາມຮັບຜິດຊອບແກ່ທ້ອງຖິ່ນ ໃຫ້ຈະແຈ້ງ; ເສີມຂະຫຍາຍ ຄວາມເປັນເຈົ້າການ, ຄວາມຮັບຜິດຊອບ ຂອງທ້ອງຖິ່ນ ໄປພ້ອມກັບການເພີ່ມທະວີ ການກວດກາ ຂອງສູນກາງ ແລະ ຂະແໜງການສາຍຕັ້ງ ໃຫ້ຫລາຍຂຶ້ນ.

+ ປັບປຸງດັດແປງ ຫລື ລຶບລ້າງ ນະໂຍບາຍ, ກົນໄກ, ນິຕິກຳ ແລະ ລະບຽບການຕ່າງໆ ທີ່ ກີດໜ່ວງ ແລະ ບໍ່ເໝາະສົມ; ສ້າງອັນໃໝ່ ໃຫ້ພຽງພໍ ແລະ ມີລັກສະນະສົ່ງເສີມ ສຳລັບການບໍລິ ຫານລັດ ໃນເງື່ອນໄຂຂອງເສດຖະກິດຕະຫລາດ.

+ ເດັດຂາດ-ເຂັ້ມງວດ ໃນການກຳຈັດ ແກ້ໄຂແບບແຜນອາດຍາສິດ ແລະ ຊ່ອງຫວ່າງ ຕ່າງໆ ທີ່ພາໃຫ້ມີການສວຍໂອກາດ ສໍ້ລາດບັງຫລວງ ຂອງພະນັກງານທຸກຂັ້ນ.

ສາມ: ອົງການຕຸລາການ; ຕ້ອງໄດ້ຮັບການປັບປຸງ ໃຫ້ມີຄວາມເຂັ້ມແຂງທາງດ້ານການຈັດ ຕັ້ງຫນັກແໜ້ນດ້ານບຸກຄະລາກອນ ແລະ ມີພື້ນຖານວັດຖຸ ເຕັກນິກ ທີ່ທັນສະໄໝ ສາມາດປະ

ຕິບັດພາລະບົດບາດໄດ້ຢ່າງສັກສິດ ແລະ ມີປະສິດທິພາບ, ທັງສອດຄ່ອງກັບລະດັບການຂະຫຍາຍ ຕົວ ທາງດ້ານເສດຖະກິດ-ສັງຄົມ ໃນໄລຍະໃຫມ່. ໃນນີ້ ຖືສຳຄັນເປັນພິເສດ ການພັດທະນາຖັນແຖວ ພະນັກງານ ໃຫ້ມີທັງຄວາມຮູ້ວິຊາສະເພາະ ແລະ ຄວາມຮູ້ດ້ານທິດສະດີ-ແນວທາງການເມືອງ ຂອງ ພັກ ແລະ ດ້ານອື່ນໆທີ່ຈຳເປັນ; ພ້ອມກັນນັ້ນ ກໍຍົກສູງຄວາມສາມາດ ແລະ ຈັນຍາບັນ ໃຫ້ແກ່ຜູ້ ພິພາກສາ, ພະນັກງານ, ລັດຖະກອນ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງພົນ ລະເມືອງ; ປົກປ້ອງກົດໝາຍ ໃຫ້ມີຄວາມສັກສິດ ແລະ ມີຄວາມຍຸຕິທຳ.

ສ. <u>ເພີ່ມທະວີບົດບາດແນວໂຮມ ແລະ ບົດບາດມະຫາຊົນ ຂອງພັກ</u>.

ບົດບາດແນວໂຮມ ແລະ ບົດບາດມະຫາຊົນ ແມ່ນບົດບາດຍຸດທະສາດ ຂອງພັກເຮົາ. ໃນ ເງື່ອນໄຂໃຫມ່, ເງື່ອນໄຂເປັນພັກກຳອຳນາດ ນຳພາ ແລະ ມີຄວາມຮັບຜິດຊອບ ຕໍ່ທົ່ວສັງຄົມ; ບົດບາ ດແນວໂຮມ ແລະ ບົດບາດມະຫາຊົນ ຍິ່ງມີຄວາມສຳຄັນເປັນຕາຍ ສຳລັບການເຕົ້າໂຮມ ແລະ ເສີມຂະຫຍາຍກຳລັງແຮງ ຂອງບັນດາຊົນຊັ້ນ, ຊັ້ນຄົນ, ຊົນເຜົ່າ ແລະ ເພດໄວ ເຂົ້າໃນການສ້າງສາ ພັດທະນາປະເທດຊາດ ໃຫ້ມີຜົນສຳເລັດ. ***ໃນມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກເຮົາ ໄດ້ເນັ້ນ ຫນັກວ່າ:*** *"ເພີ່ມທະວີ ຄວາມສາມັກຄີປອງດອງ ລະຫວ່າງເຜົ່າ, ຊັ້ນຄົນ, ເພດໄວ, ສາສະຫນາ ແລະ ການສ້າງກ້ອນກຳລັງມະຫາສາມັກຄີ ທົ່ວປວງຊົນລາວ ອ້ອມຂ້າງພັກ ແມ່ນມີຄວາມສຳຄັນຕັດສິນ ຕໍ່ ໄຊຊະນະອັນສົມບູນຂອງການປະຕິວັດຊາດ-ປະຊາທິປະໄຕ ກໍຄື ຕໍ່ຄວາມຫມັ້ນຄົງ ແລະ ການພັດ ທະນາທີ່ຍືນຍົງ ຂອງຊາດເຮົາ ".*

ຫນຶ່ງ: ອົງການແນວລາວສ້າງຊາດ ທຸກຂັ້ນ; ຕ້ອງສືບຕໍ່ເສີມຂະຫຍາຍ ບົດຮຽນ ແລະ ມູນ ເຊື້ອອັນດີງາມຂອງຕົນ ໃນການດຳເນີນວຽກງານແນວໂຮມ ໂດຍສອດຄ່ອງກັບສະພາບຈຸດພິເສດ ທາງ ດ້ານເສດຖະກິດ-ສັງຄົມ ໃນໄລຍະໃຫມ່; ຍົກຫມັ້ນ ເສີມສ້າງ ຄວາມສາມັກຄີປອງດອງ ແລະ ຄວາມ ເປັນປຶກແຜ່ນ ຂອງທົ່ວປວງຊົນລາວ ໃຫ້ມີຄວາມ ຫນັກແຫນ້ນ ເພື່ອເປັນເງື່ອນໄຂຮັບປະກັນ ໃຫ້ແກ່ ສະຖຽນລະພາບ ທາງການເມືອງ ແລະ ຄວາມສະຫງົບປອດໄພ-ຄວາມເປັນລະບຽບຮຽບຮ້ອຍ ໃນ ສັງຄົມ; ຕ້ອງຕອບຕ້ານ ແລະ ຕີຖອຍ ທຸກກົນອຸບາຍ ກໍຄື ການເຄື່ອນໄຫວ ຂອງອົດທິກຳລັງປໍລະປັກ ທີ່ຫວັງທຳລາຍມ້າງເພ ຄວາມສາມັກຄີເປັນປຶກແຜ່ນ ຂອງປະຊາຊົນບັນດາເຜົ່າ ໂດຍສະເພາະ ແມ່ນ ປັ່ນປ່ວນທາງດ້ານແນວຄິດ ຈິດຕະສາດ ເພື່ອໃຫ້ເກີດຄວາມຂັດແຍ້ງ ແລະ ອາຄາດບາດຫມາງ ແລ້ວ ເກີດການຂັດແຍ້ງກັນ ລະຫວ່າງເຜົ່ານັ້ນ ກັບເຜົ່ານີ້; ພວກເຮົາ ຕ້ອງຕີຖອຍ ແລະ ລຶບລ້າງ ແນວ ຄິດຈຳແນກ-ແບ່ງແຍກເຜົ່າ ໃຫ້ຫມົດໄປຢ່າງສິ້ນເຊີງ ໂດຍສະເພາະ ແນວຄິດຖືເຜົ່າຕົນ ສູງກວ່າເຜົ່າ ອື່ນ ດູຖູກຫມິ່ນປະຫມາດເຜົ່າອື່ນ, ພ້ອມກັນນັ້ນ ກໍຕ້ອງກຳຈັດ ແກ້ໄຂ ລັດທິເຜົ່າຊົນຄັບແຄບ ເຫັນ

ແກ່ແຕ່ເຜົ່າຕົນເອງ; ຕ້ອງສົ່ງເສີມ ຄວາມສະເໝີພາບ ແລະ ຄວາມສາມັກຄີ ລະຫວ່າງເຜົ່າ ຢ່າງແຂງ ແຮງ ດ້ວຍການຢູ່ຮ່ວມກັນດ້ວຍຄວາມປອງດອງ ຊ່ວຍເຫລືອເພື່ອແພ່ກັນ, ຮັກຫອມຕູ້ມຕ່ອມກັນ ເຄົາລົບນັບຖືຂະນົບທຳນຽມປະເພນີ ແລະ ວັດທະນະທຳ ຂອງກັນແລະກັນ, ເອົາໃຈໃສ່ ພັດທະນາ ເຂດພູດອຍຊົນເຜົ່າ ໃຫ້ມີການປ່ຽນແປງດີຂຶ້ນ ດ້ວຍການຈັດສັນຖິ່ນຖານພູມລຳເນົາ ແລະ ບ່ອນທຳມາ ຫາກິນຄົງທີ່ ໃຫ້ເໝາະສົມ ເພື່ອທຳການຜະລິດ ແກ້ໄຂຄວາມທຸກຍາກ ແລະ ປັບປຸງຊີວິດການເປັນຢູ່ ໃຫ້ດີຂຶ້ນ.

- ອົງການແນວລາວສ້າງຊາດ ຕ້ອງສືບຕໍ່ເສີມຂະຫຍາຍບົດຮຽນທີ່ດີ ກ່ຽວກັບການສ້າງກອງ ທຶນພັດທະນາບ້ານ, ເພີ່ມທະວີ ການຊີ້ນຳ ແລະ ປັບປຸງການເຄື່ອນໄຫວ ຂອງກອງທຶນດັ່ງກ່າວ ໃຫ້ມີ ປະສິດທິຜົນດີຂຶ້ນ ເພື່ອໃຫ້ກອງທຶນນັ້ນ ເປັນປັດໄຈໜຶ່ງທີ່ສຳຄັນ ໃນການເສີມສ້າງຄວາມສາມັກຄີ ກໍຄື ໃນການຊ່ວຍເຫລືອເກື້ອກູນກັນ ແລະ ແກ້ໄຂຄວາມທຸກຍາກ ພາຍໃນບ້ານ.

- ອົງການແນວລາວສ້າງຊາດ ທຸກຂັ້ນ ຕ້ອງເປັນເຈົ້າການ ໃນການເຄື່ອນໄຫວ ເຕົ້າໂຮມ ຄວາມສາມັກຄີ ລະຫວ່າງຊັ້ນຄົນ ແລະ ຊົນເຜົ່າ ຢູ່ໃນແຕ່ລະທ້ອງຖິ່ນ ຮາກຖານ, ເຊີດຊູບົດບາດ ຂອງຜູ້ຊົງຄຸນນະວຸດ ເຖົ້າແກ່ແນວໂຮມ ເຂົ້າໃນການພັດທະນາ ແລະ ແກ້ໄຂບັນຫາຕ່າງໆ; ຄຸ້ມຄອງ ການເຄື່ອນໄຫວ ຂອງສາສະໜາ ກໍຄື ສາສະນິກະຊົນ ໃຫ້ດຳເນີນໄປຢ່າງຖືກຕ້ອງຕາມລະບຽບກົດ ໝາຍບ້ານເມືອງ, ບໍ່ໃຫ້ການເຊື່ອຖືສາສະໜາ ກາຍເປັນການຈຳແນກ ແບ່ງແຍກຄວາມສາມັກຄີ ລະຫວ່າງເຜົ່າ ແລະ ເຄື່ອນໄຫວຂັດກັບ ລະບຽບການປົກຄອງບ້ານເມືອງ ຂອງພວກເຮົາ.

ເວົ້າລວມແລ້ວ ອົງການແນວລາວສ້າງຊາດ ທຸກຂັ້ນ ຕ້ອງເປັນຜູ້ນຳໜ້າ ໃນການປະຕິບັດ ວຽກງານແນວໂຮມ ຂອງພັກ ເພື່ອສາມາດເຕົ້າໂຮມ ແລະ ເສີມຂະຫຍາຍ ກຳລັງແຮງ ຂອງທຸກຊັ້ນ ຄົນ, ຊົນເຜົ່າ, ເພດໄວ ແລະ ທຸກຊົນຊັ້ນ ໃນສັງຄົມ ເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາ ປະເທດຊາດ ໃຫ້ມີຜົນສຳເລັດ.

ສອງ: ຄະນະຊາວໜຸ່ມ ປະຊາຊົນປະຕິວັດລາວ; ຕ້ອງອອກແຮງສຶກສາອົບຮົມ ຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ ໃຫ້ເປັນຮຸ່ນຄົນສືບທອດ ມູນເຊື້ອອັນສັກສິດ ຂອງຊາດ ແລະ ຂອງການປະ ຕິວັດ, ທັງເປັນຜູ້ ທີ່ຮູ້ອະນຸລັກ ແລະ ຮູ້ສືບທອດເສີມຂະຫຍາຍ ມູນເຊື້ອວັດທະນະທຳ ຂອງຊາດ ແລະ ຂອງເຜົ່າ; ເປັນຄົນທີ່ມີຄວາມກະຕືລືລົ້ນ, ຄວາມອົດທົນບາກບັ່ນໃນການຄົ້ນຄວ້າຮ່ຳຮຽນ; ຊາວ ໜຸ່ມ ຕ້ອງເປັນຜູ້ນຳໜ້າໃນການຮຽນຮູ້ ທາງດ້ານວິທະຍາສາດ ແລະ ວິທະຍາການໃໝ່; ຊາວ ໜຸ່ມ ຕ້ອງຮຽນຮູ້ ກ່ຽວກັບວິຊາອາຊີບ ແລະ ການປະດິດສ້າງ; ທັງມີຄວາມອົດທົນ ສູ້ຊົນ ໃນການ ເຮັດວຽກຕາມວິຊາອາຊີບ ເພື່ອອະນາຄົດທີ່ໝັ້ນຄົງຂອງຕົນ; ບໍ່ສ້າງພາລະ ແລະ ບັນຫາໃຫ້ແກ່

ຄອບຄົວ ແລະ ສັງຄົມ, ດຳລົງຊີວິດປອດໃສ ຫ່າງໄກຢາເສບຕິດ ແລະ ການມົ້ວສຸມໃນສັງຄົມ, ສະ ນັ້ນ ຕ້ອງມີການໂຄສະນາ ສຶກສາອົບຮົມ ການເມືອງ-ແນວຄິດຕໍ່ຊາວໜຸ່ມ, ເຍົາວະຊົນ ດ້ວຍຫລາຍ ເນື້ອໃນ, ຮູບການ ແລະ ວິທີການ ແທດເໝາະກັບແຕ່ລະກຸ່ມເປົ້າໝາຍ ເພື່ອໃຫ້ຄົນຮຸ່ນໜຸ່ມ ມີ ຄວາມເຂົ້າໃຈ ຕໍ່ແນວທາງນະໂຍບາຍ ຂອງພັກ, ລະບຽບກົດໝາຍຕ່າງໆ, ຮູ້ອັນຖືກ-ອັນຜິດ, ຮູ້ອັນ ຄວນ-ອັນບໍ່ຄວນ; ສິ່ງສຳຄັນ ແມ່ນຕ້ອງສ້າງເງື່ອນໄຂ ໃຫ້ຄົນແຖວຊາວໜຸ່ມ ໄດ້ເຂົ້າເປັນສະມາຊິກ ແລະ ເຄື່ອນໄຫວ ໃນອົງການຈັດຕັ້ງໃດໜຶ່ງຂອງສັງຄົມ ເພື່ອໃຫ້ເຂົາເຈົ້າ ໄດ້ສະແດງອອກຊຶ່ງຄວາມ ຮູ້ ຄວາມສາມາດ, ຄວາມມັກ ແລະ ຄວາມນິຍົມຊົມຊອບ ອັນດີງາມຂອງຕົນ. ຄະນະຊາວໜຸ່ມ ປະຊາຊົນປະຕິວັດລາວ ແຕ່ລະຂັ້ນ ຕ້ອງໄດ້ເປັນເຈົ້າການ ໃນການປັບປຸງແບບແຜນວິທີເຮັດວຽກ ໃຫ້ມີລັກສະນະມະຫາຊົນ ເພື່ອສາມາດເຕົ້າໂຮມ ຊາວໜຸ່ມ ຢູ່ໃນໂຮງຮຽນ, ສະຖາບັນການສຶກສາ, ສຳນັກງານອົງການ, ກົມກອງ ໜ່ວຍງານ ແລະ ຄຸ້ມບ້ານຕ່າງໆ ເຂົ້າໃນການຈັດຕັ້ງ ທັງມີການນຳ ພາ-ຊີ້ນຳ ການເຄື່ອນໄຫວ ຕ່າງໆ ທີ່ຈະເປັນຜົນດີແກ່ຊາວໜຸ່ມເອງ ແລະ ສັງຄົມໂດຍລວມ.



ງານມະຫາກຳກິລາຊີເກມ ຄັ້ງທີ 25 ຈັດຂຶ້ນທີ່ນະຄອນຫລວງວຽງຈັນ.

- ເພີ່ມທະວີການຈັດຕັ້ງແຂ່ງຂັນ ຕາມ ຂໍ້ແຂ່ງຂັນ 2 ສາມັກຄີ, 3 ດີ, 4 ພັດທະນາ ຂອງຊາວ ໜຸ່ມ, ຂໍ້ແຂ່ງຂັນ 3 ດີ, 4 ຮູ້ ຂອງເຍົາວະຊົນ ຕິດພັນກັບແຜນການສ້າງບ້ານ ແລະ ກຸ່ມບ້ານພັດທະ

ນາ, ດຶງດູດຊາວໜຸ່ມ-ເຍົາວະຊົນ ເຂົ້າຮ່ວມຂະບວນການຕ່າງໆ, ສ້າງໃຫ້ໄດ້ວຽກດີຄົນເດັ່ນ, ວຽກຈິງຄົນແທ້ ໃນຂະບວນການ ນັບມື້ນັບຫລາຍ. ສືບຕໍ່ຊຸກຍູ້ ການຜະລິດເປັນສິນຄ້າ ຂອງຊາວໜຸ່ມ ໃຫ້ແຜ່ຫລາຍ ເປັນຕົ້ນ ແມ່ນການສົ່ງເສີມຕົວແບບດ້ານການປູກຝັງ, ການລ້ຽງສັດ, ການຫັດຖະກຳ, ການບໍລິການ... ເຮັດໃຫ້ໜ່ວຍຊາວໜຸ່ມ, ຄອບຄົວຊາວໜຸ່ມ ຫລຸດພົ້ນອອກຈາກຄວາມທຸກຍາກ, ມີພໍກິນພໍໃຊ້ ນັບມື້ນັບຫລາຍ.

- ເພີ່ມທະວີການປະສານສົມທົບ ແລະ ການຮ່ວມມື ກັບທຸກພາກສ່ວນ ເພື່ອສະກັດກັ້ນບັນດາປະກົດການຫຍໍ້ທໍ້ ໃນຖັນແຖວຊາວໜຸ່ມ-ເຍົາວະຊົນ, ໂດຍສຸມໃສ່ແກ້ໄຂບັນຫາຢາເສບຕິດ, ອຸປະຕິເຫດຕາມທ້ອງຖະໜົນ, ການມົ້ວສຸມຟູມເຟືອຍ, ການປະລະການຮຽນ ແລະ ສິ່ງຫຍໍ້ທໍ້ອື່ນໆ.

ສາມ: ສະຫະພັນແມ່ຍິງລາວ; ຕ້ອງເອົາໃຈໃສ່ສົ່ງເສີມ ແລະ ສ້າງເງື່ອນໄຂ ໃຫ້ແມ່ຍິງໄດ້ຮັບການພັດທະນາ ໃນທຸກດ້ານ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຕົນເອງ ແລະ ຄອບຄົວ, ສາມາດປະກອບສ່ວນຢ່າງແຂງແຮງ ເຂົ້າໃນການປະຕິບັດໜ້າທີ່ການເມືອງ ຂອງຕົນ ກໍຄື ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ. ສະນັ້ນ ສະຫະພັນແມ່ຍິງ ແຕ່ລະຂັ້ນ ຕ້ອງຍູ້ແຮງຂະບວນການແຂ່ງຂັນ ແມ່ຍິງ 3 ດີ, ເອົາໃຈໃສ່ສ້າງກິດຈະກຳຕ່າງໆ ທີ່ນຳເອົາຜົນປະໂຫຍດຕົວຈິງ ມາໃຫ້ແມ່ຍິງ; ເປັນເຈົ້າການ ປະສານສົມທົບ ກັບພາກສ່ວນກ່ຽວຂ້ອງ ຈັດຕັ້ງການກໍ່ສ້າງບຳລຸງ, ຍົກລະດັບ ພະນັກງານເພດຍິງ ໃຫ້ມີຄຸນນະພາບສູງຂຶ້ນກວ່າເກົ່າ; ສົ່ງເສີມຄວາມສະເໝີພາບ ຍິງ-ຊາຍ ໃນຄອບຄົວ ສັງຄົມ ໃຫ້ຖືກຕ້ອງ ແລະ ກ້ວາງຂວາງ. ສະກັດກັ້ນ ແລະ ຕ້ານອະການຈຳແນກ ແລະ ໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ; ສົ່ງເສີມບົດບາດຂອງແມ່ຍິງລາວບັນດາເຜົ່າ ແລະ ບັນດາຊັ້ນຄົນ ໃນການແກ້ໄຂຄວາມທຸກຍາກ, ສ້າງຄວາມພໍຢູ່ພໍກິນ ແລະ ຄວາມອົບອຸ່ນຮັກແພງ ໃນຄອບຄົວ; ເພີ່ມທະວີບົດບາດ ຂອງແມ່ ໃນການອົບຮົມສັ່ງສອນລູກເຕົ້າ ໃຫ້ສືບທອດແບບຢ່າງທີ່ດີ ຂອງພໍ່ແມ່ ແລະ ເປັນຄົນດີ ຂອງສັງຄົມ, ຢຶດໝັ້ນປົກປັກຮັກສາ ແລະ ສົ່ງເສີມວັດທະນະທຳອັນດີງາມຂອງຊາດ ລວມທັງສີໄມ້ລາຍມື ແລະ ການນຸ່ງຖື ທີ່ເປັນເອກະລັກຂອງແມ່ຍິງລາວບັນດາເຜົ່າ ໃຫ້ຄົງຢູ່ກັບແມ່ຍິງລາວ ແລະ ຊາດລາວຕໍ່ໆໄປ. ສະນັ້ນ ຕ້ອງສືບຕໍ່ປັບປຸງການຈັດຕັ້ງ, ແບບແຜນ ແລະ ວິທີການເຄື່ອນໄຫວ ຂອງສະຫະພັນແມ່ຍິງ ແຕ່ລະຂັ້ນ ໃຫ້ມີຫລາຍຮູບແບບ, ສອດຄ່ອງ ກັບສະພາບຈຸດພິເສດ ແລະ ຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງແມ່ຍິງ ໃນແຕ່ລະກຸ່ມເປົ້າໝາຍ ເພື່ອປະຕິບັດບົດບາດ ເປັນຕົວແທນແຫ່ງສິດຜົນປະໂຫຍດ ຂອງແມ່ຍິງລາວບັນດາເຜົ່າ ໃຫ້ໄດ້ດີ.

ສີ່: ສະຫະພັນກຳມະບານລາວ; ຕ້ອງເພີ່ມທະວີການຊີ້ນຳ ຕໍ່ວຽກງານກຳມະບານ ທຸກຂັ້ນ ໃນການປັບປຸງການຈັດຕັ້ງ ຂອງຕົນ ໃຫ້ເຂັ້ມແຂງ ເພື່ອໃຫ້ສາມາດດຳເນີນການສຶກສາອົບຮົມ ແລະ ກໍ່

ສ້າງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານລາວ ໃຫ້ມີສະຕິຊົນຊັ້ນ, ມີຄວາມຕື່ນຕົວທາງ ການເມືອງ, ມີລະບຽບວິໄນ ກາຍເປັນກຳລັງແຮງຂອງພັກ ແລະ ຂອງຊາດ, ເປັນກຳລັງຫລັກແຫລ່ງ ຂອງການພັດທະນາ, ແກ້ໄຂຄວາມ ທຸກຍາກ ແລະ ການຫັນເປັນປະເທດອຸດສາຫະກຳ, ຫັນເປັນທັນ ສະໄໝ.

- ສະຫະພັນກຳມະບານລາວ ແຕ່ລະຂັ້ນ ຕ້ອງເປັນຕົວແທນປົກປ້ອງສິດທິ ແລະ ຜົນປະໂຫຍດອັນ ຊອບທຳ ຂອງກຳມະກອນ ແລະ ຊາວຜູ້ອອກແຮງງານລາວ ໃຫ້ດີຕື່ມອີກ; ປະສານສົມທົບແໜ້ນ ກັບ ບັນດາອົງການທີ່ກ່ຽວຂ້ອງ ຂອງພັກ ແລະ ລັດ ດຳເນີນການຝຶກອົບຮົມ ກໍ່ສ້າງ, ຍົກລະດັບຄວາມຮູ້ ຄວາມສາມາດ ແລະ ຄວາມຊຳນານງານ ຂອງກຳມະກອນ ແລະ ຊາວຜູ້ອອກແຮງງານ ໃຫ້ສູງຂຶ້ນ; ເປັນເຈົ້າການ ຈັດຕັ້ງນຳພາຊຸກຍູ້ ການອອກແຮງງານຜະລິດ ແລະ ເຮັດບໍລິການ ໃຫ້ມີສະມັດຖະພາບ ແລະ ມີຄຸນນະພາບສູງ.

- ຍົກສູງຄຸນນະພາບ ວຽກງານສຶກສາອົບຮົມ ແລະ ກໍ່ສ້າງ ຊົນຊັ້ນກຳມະກອນ, ຊາວຜູ້ອອກ ແຮງງານລາວ ແນໃສ່ເຮັດໃຫ້ເປັນພົນລະເມືອງດີ, ມີລະບຽບແບບແຜນ ໃນການອອກແຮງງານ, ມີ ຄວາມຕື່ນຕົວ ທາງດ້ານການເມືອງ, ສ້າງເງື່ອນໄຂ ໃຫ້ກຳມະບານ ໄດ້ເຂົ້າຮ່ວມໃນການສ້າງແຜນນະ ໂຍບາຍ, ກົດໝາຍ ທີ່ກ່ຽວຂ້ອງ ແລະ ຕິດຕາມ, ກວດກາ ການເຄື່ອນໄຫວປະຕິບັດພາລະບົດບາດ ຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຂອງອົງການລັດ ເພື່ອສາມາດເປັນຕົວແທນ ໃຫ້ແກ່ສິດ ແລະ ຜົນປະໂຫຍດ ຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານ ໄດ້ຢ່າງແທ້ຈິງ.

ຫ້າ: ສະຫະພັນນັກຮົບເກົ່າແຫ່ງຊາດລາວ; ຕ້ອງເອົາໃຈໃສ່ຫລາຍກວ່າເກົ່າ ໃນການຍົກສູງ ບົດບາດ ຂອງຕົນ ກ່ອນອື່ນໝົດ ແມ່ນຕ້ອງຕັ້ງໜ້າ ປັບປຸງການຈັດຕັ້ງແຕ່ລະຂັ້ນ ໃຫ້ເຂັ້ມແຂງ, ໜັກ ແໜ້ນ, ສາມາດປະຕິບັດພາລະບົດບາດ ເປັນຕົວແທນແຫ່ງສິດຜົນປະໂຫຍດອັນຊອບທຳ, ທັງມີ ຄວາມສາມາດປຸກລະດົມ ຫັນແຖວນັກຮົບເກົ່າ ໃຫ້ເສີມຂະຫຍາຍ ຫາດແທ້ມູນເຊື້ອປະຕິວັດອັນ ດີງາມ ຂອງຕົນ.

- ສະຫະພັນນັກຮົບເກົ່າ ຕ້ອງເປັນເຈົ້າການເຕົ້າໂຮມຄວາມສາມັກຄີ ໃນຫັນແຖວນັກຮົບ ເກົ່າ, ປະສານສົມທົບ ກັບອົງການຂອງພັກ ແລະ ລັດ ໃນການປະຕິບັດນະໂຍບາຍ ຕໍ່ຜູ້ທີ່ມີຜົນງານ, ມີຄຸນງາມຄວາມດີ ໃຫ້ທົ່ວເຖິງ ແລະ ຖືກຕ້ອງ; ຊຸກຍູ້ໃຫ້ນັກຮົບເກົ່າ ປະກອບສ່ວນສຶກສາອົບຮົມຮຸ່ນ ຄົນສືບທອດ ໃຫ້ມີນ້ຳໃຈຮັກຊາດ, ມີຄວາມເອກອ້າງທະນົງໃຈ ຕໍ່ຜົນງານການອຸທິດ ຂອງນັກຮົບເກົ່າ ແລະ ເສີມຂະຫຍາຍ ມູນເຊື້ອ ອັນສະຫງ່າລາສີ ຂອງນັກຮົບປະຕິວັດ.

- ຕ້ອງປັບປຸງ ການຈັດຕັ້ງສະຫະພັນນັກຮົບເກົ່າ ແຕ່ລະຂັ້ນ ໃຫ້ສາມາດເປັນຕົວແທນແຫ່ງ

ສິດຜົນປະໂຫຍດ ຂອງຖັນແຖວນັກຮົບເກົ່າ ໄດ້ຢ່າງແທ້ຈິງ ແລະ ເຄື່ອນໄຫວປຸກລະດົມຂົນຂວາຍ ນັກຮົບເກົ່າ ເຂົ້າໃນການຈັດຕັ້ງ ແລະ ໂຄສະນາສຶກສາອົບຮົມ ໃຫ້ພວກເພິ່ນ ສືບຕໍ່ເສີມຂະຫຍາຍມູນ ເຊື້ອຮັກຊາດ, ຮັກສາກຽດສັກສີ ແລະ ຄວາມເປັນແບບຢ່າງ ແກ່ລູກຫລານ ແລະ ຮຸ່ນຄົນສືບທອດ; ສ້າງກົດຈະກຳ ເພື່ອສ້າງບັນຍາກາດສາມັກຄີເປີກບານ ຕິດພັນກັບການເລົ່າມູນເຊື້ອ ສັນລະເສີນ ກຽດຕິຄຸນ ຂອງເພິ່ນ; ສະຫະພັນນັກຮົບເກົ່າ ແຕ່ລະຂັ້ນ ຕ້ອງເປັນເຈົ້າການສົມທົບ ກັບກະຊວງ, ອົງ ການ ແລະ ທ້ອງຖິ່ນກ່ຽວຂ້ອງຕິດຕາມ, ກວດກາ ຊຸກຍູ້ ການປະຕິບັດນະໂຍບາຍຂອງພັກ, ຂອງລັດ ຕໍ່ນັກຮົບເກົ່າ, ເປັນຕົ້ນ ແມ່ນນັກຮົບເກົ່າ ແຕ່ປີ 1954 ຄືນຫລັງ ໃຫ້ສຳເລັດ ລວມທັງການປະຕິບັດນະ ໂຍບາຍອື່ນໆ ຂອງລັດ ທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຖັນແຖວນັກຮົບເກົ່າ.

ທີ່ກ: ຄະນະພັກ ແລະ ອົງການປົກຄອງ ແຕ່ລະຂັ້ນ ຕ້ອງເອົາໃຈໃສ່ຄຸ້ມຄອງ ***ອົງການຈັດ ຕັ້ງສັງຄົມວິຊາຊີບ ແລະ ສະມາຄົມຕ່າງໆ*** ໃຫ້ດີ, ຮັບປະກັນໃຫ້ການເຄື່ອນໄຫວ ຂອງບັນດາອົງການ ຈັດຕັ້ງສັງຄົມວິຊາຊີບ ແລະ ສະມາຄົມຕ່າງໆ ທີ່ສ້າງຕັ້ງຂຶ້ນ ດຳເນີນໄປຢ່າງຖືກຕ້ອງຕາມລະບຽບ ກົດໝາຍ, ທັງສອດຄ່ອງ ກັບພາລະບົດບາດ ແລະ ຈຸດປະສົງ ຂອງອົງການນັ້ນໆ; ຕ້ອງຊຸກຍູ້ສົ່ງເສີມ ເພື່ອໃຫ້ອົງການຈັດຕັ້ງເຫລົ່ານັ້ນ ປຸກລະດົມ ແລະ ເຕົ້າໂຮມກຳລັງ ຂອງບັນດາສະມາຊິກ ເຂົ້າໃນ ການພັດທະນາເສດຖະກິດ- ສັງຄົມ, ຕອບສະໜອງຜົນປະໂຫຍດ ຂອງສະມາຊິກ ແລະ ຊ່ວຍເຫລືອ ເກື້ອກູນສັງຄົມ ເປັນຕົ້ນ ແມ່ນຜູ້ທຸກຍາກ ແລະ ຜູ້ດ້ອຍໂອກາດ ໃຫ້ໄດ້ຫລາຍຂຶ້ນ.

ສຳລັບ ການເຄື່ອນໄຫວ ຂອງສາສະໜາ ນັ້ນ ພວກເຮົາ ຕ້ອງຢຶດໝັ້ນໃນການ ເຄົາລົບສິດ ເສລີພາບ ໃນການເຊື່ອຖື ຫລື ບໍ່ເຊື່ອຖືສາສະໜາ ຂອງພົນລະເມືອງ; ແຕ່ຕ້ອງມີສະຕິເປັນເຈົ້າການ ໃນການຕິດຕາມກວດກາ ເພື່ອບໍ່ໃຫ້ເກີດກໍລະນີ ຈຳແນກ ແບ່ງແຍກ ແລະ ສ້າງຄວາມເປັນປໍລະປັກຂັດ ແຍ້ງກັນ ລະຫວ່າງຜູ້ທີ່ເຊື່ອຖືສາສະໜາຕ່າງກັນ; ເຮັດໃຫ້ການເຄື່ອນໄຫວຂອງສາສະໜາຕ່າງໆ ກາຍເປັນກຳລັງແຮງໃນຂະບວນການສ້າງສາພັດທະນາປະເທດຊາດຂອງພວກເຮົາ.

ຊ. <u>ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ</u>.

ກ່ອນອື່ນໝົດ ຕ້ອງຢຶດໝັ້ນປະຕິບັດ ຕາມທິດນຳທີ່ວ່າ: *"ປະຕິບັດແນວທາງ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ ໃຫ້ເລິກເຊິ່ງ ກ້ວາງຂວາງ, ສົມທົບວຽກງານປ້ອງກັນ ຊາດ-ປ້ອງກັນຄວາມສະຫງົບ ກັບການພັດທະນາເສດຖະກິດ- ສັງຄົມ ແລະ ການພົວພັນຮ່ວມມື ກັບ ຕ່າງປະເທດ ຢ່າງກົມກຽວ ເພື່ອຊ່ວຍໜູນເຊິ່ງ ກັນແລະກັນ ແລະ ຮັບປະກັນ ຄວາມໝັ້ນຄົງຂອງ ຊາດ ຢ່າງໜັກແໜ້ນ, ທັງສ້າງເງື່ອນໄຂໃຫ້ການພັດທະນາຢ່າງຕໍ່ເນື່ອງ".*

- ຕ້ອງສືບຕໍ່ ເພີ່ມທະວີການເສີມຂະຫຍາຍມູນເຊື້ອ, ທາດແທ້ປະຕິວັດ ແລະ ທາດແທ້ປະ

ຊາຊົນ ໃຫ້ເປັນກຳລັງທີ່ຈົ່ງຮັກພັກດີ ແລະ ເຄື່ອນໄຫວ ຢູ່ພາຍໃຕ້ການນຳພາໂດຍກົງ, ຮອບດ້ານ ແລະ ເດັດຂາດ ຂອງພັກ; ຕັ້ງໜ້າ ເຂົ້າຮ່ວມວຽກງານກໍ່ສ້າງຮາກຖານ, ການພັດທະນາເສດຖະກິດ-ສັງຄົມ ຕິດແໜ້ນກັບການສ້າງທ່າສະໜາມປ້ອງກັນຊາດ ທົ່ວປວງຊົນ; ປັບປຸງ ກໍ່ສ້າງກຳລັງ ຫລວງ ໃຫ້ມີກຳລັງແຮງສູ້ຮົບ, ເປັນຫລັກແຫລ່ງ ແລະ ສາມາດຕອບຕ້ານ, ແກ້ໄຂສະພາບການທີ່ເກີດ ຂຶ້ນ ໄດ້ຢ່າງມີປະສິດທິພາບ; ເພີ່ມທະວີການປັບປຸງ ກໍ່ສ້າງກຳລັງທ້ອງຖິ່ນ ແລະ ຮາກຖານ ໃຫ້ ສາມາດເປັນກຳລັງຈັ້ງທ່າ, ຊ່ວຍໜູນ ແລະ ແກ້ໄຂສະພາບການທີ່ເກີດຂຶ້ນ ຢູ່ທ້ອງຖິ່ນຂອງຕົນ; ປະ ກອບພາຫະນະ-ເຕັກນິກ ທີ່ທັນສະໄໝ ໃຫ້ແກ່ກົມກອງເຫລົ່າຮົບ ແລະ ຍົກລະດັບພະນັກງານ, ນັກຮົບ ໃນກຳລັງປະກອບອາວຸດ ດ້ວຍການຈັດຕັ້ງຝຶກແອບຢ່າງເປັນປະຈຳ ເພື່ອໃຫ້ສາມາດເຄື່ອນ ໄຫວ ປະຕິບັດວຽກງານວິຊາສະເພາະໄດ້ດີ, ມີຄວາມຊຳນານໃນການເຄື່ອນໄຫວ ສູ້ຮົບ ແລະ ອອກ ແຮງງານປະດິດສ້າງ; ປັບປຸງ ວຽກງານພະລາທິການ ແລະ ການລ້ຽງດູທັບ, ປະຕິບັດລະບອບນະ ໂຍບາຍຕ່າງໆ ຕໍ່ນາຍ ແລະ ພົນທະຫານ ໃຫ້ດີຂຶ້ນເປັນກ້າວໆ.

- ກໍ່ສ້າງ ແລະ ປັບປຸງກຳລັງປ້ອງກັນຄວາມສະຫງົບ ໃຫ້ໜັກແໜ້ນ ທາງດ້ານການເມືອງ-ແນວຄິດ, ຄຸນສົມບັດສິນທຳ, ເຂັ້ມແຂງ ທາງດ້ານການຈັດຕັ້ງ, ການຊີ້ນຳບັນຊາ ແລະ ມີຄວາມສາ ມາດ ດ້ານວິຊາສະເພາະ ເພື່ອເປັນຫລັກແຫລ່ງແກ່ນສານ ໃຫ້ແກ່ພາລະກິດຮັກສາຄວາມສະຫງົບ ປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ໃນສັງຄົມ; ເພີ່ມທະວີ ການກໍ່ສ້າງກຳລັງປ້ອງກັນ ຄວາມສະຫງົບ ຢູ່ຮາກຖານບ້ານ ໃຫ້ສາມາດຮັບປະກັນ ຄວາມສະຫງົບປອດໄພ ໃຫ້ແກ່ການດຳລົງ ຊີວິດ-ທຳມາຫາກິນ ຂອງປະຊາຊົນ, ພ້ອມກັນນັ້ນ ກໍປັບປຸງກົນໄກ ແລະ ນິຕິກຳຕ່າງໆ ດ້ານປ້ອງກັນ ຄວາມສະ ຫງົບ ແລະ ການຄຸ້ມຄອງພົນລະເມືອງ ໃຫ້ມີຄວາມເຂັ້ມງວດ, ສະດວກ ແລະ ຮັດກຸມ.

ຍ. <u>ວຽກງານການຕ່າງປະເທດ</u>; ຍຶດໝັ້ນແນວທາງການຕ່າງປະເທດສັນຕິພາບ, ເອກະລາດ, ມິດຕະພາບ ແລະ ຮ່ວມມື ຢ່າງສະເໝີຕົ້ນສະເໝີປາຍ, ຕັ້ງໜ້າເປັນເຈົ້າການ ສົ່ງເສີມການພົວ ພັນຮ່ວມມື ກັບຕ່າງປະເທດ ແບບຫລາຍທິດ ຫລາຍຝ່າຍ, ຫລາຍລະດັບ, ຫລາຍຮູບ ຫລາຍແບບ ບົນພື້ນຖານ ການເຄົາລົບເຊິ່ງກັນແລະກັນ ຕ່າງຝ່າຍຕ່າງມີຜົນປະໂຫຍດ.

- ຕັ້ງໜ້າເຜີຍແຜ່ ໃຫ້ຕ່າງປະເທດເຂົ້າໃຈ ນັບມື້ນັບເລິກເຊິ່ງ ກ່ຽວກັບແນວທາງຂອງພັກ ແລະ ກ່ຽວກັບປະເທດລາວເຮົາ ແນໃສ່ເສີມສ້າງໄມຕີຈິດ ມິດຕະພາບ ແລະ ຄວາມໄວ້ເນື້ອເຊື່ອໃຈ ກັບນາໆຊາດ ໃຫ້ນັບມື້ນັບກ້ວາງຂວາງ, ສ້າງສະພາບແວດລ້ອມ ທີ່ອຳນວຍໃຫ້ແກ່ການຍາດແຍ່ງ ເອົາ ກຳລັງແຮງຈາກພາຍນອກ ເພື່ອປະກອບ ສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແລະ ປົກ ປັກຮັກສາປະເທດຊາດຂອງພວກເຮົາ; ອອກແຮງເຄື່ອນໄຫວຕ່າງປະເທດ ເພື່ອປະກອບສ່ວນຢ່າງສົມ

ກຽດ ຮ່ວມກັບບັນດາປະຊາຊາດ ໃນການປົກປັກຮັກສາສັນຕິພາບ ໄວ້ໃຫ້ຍືນຍາວ ແລະ ເພີ່ມທະວີການຮ່ວມມື ເພື່ອພ້ອມກັນພັດທະນາ; ຢຶດໝັ້ນ ເພີ່ມທະວີການພົວພັນມິດຕະພາບ, ຄວາມສາມັກຄີ ແລະ ການຮ່ວມມື ກັບບັນດາປະເທດສັງຄົມນິຍົມ, ໃນນັ້ນ ສືບຕໍ່ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອແຫ່ງຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ກັບ ສ.ສ ຫວຽດນາມ, ເສີມຂະຫຍາຍ ສາຍພົວພັນທີ່ເປັນມູນເຊື້ອ ກັບ ສ.ປ ຈີນ ບົນຈິດໃຈເປັນຄູ່ຮ່ວມມືຍຸດທະສາດຮອບດ້ານ ແລະ ຍາວນານ; ເສີມຂະຫຍາຍການພົວພັນທີ່ດີ ກັບປະເທດອ້າຍນ້ອງອື່ນໆ, ຮັດແໜ້ນການພົວພັນຮ່ວມມື ກັບບັນດາປະເທດໃກ້ຄຽງ ທີ່ມີຊາຍແດນຮ່ວມກັນ, ຕັ້ງໜ້າເຂົ້າຮ່ວມການເຄື່ອນໄຫວ ໃນຂອບຂອງອາຊຽນ ເພື່ອຜົນປະໂຫຍດລວມ ແລະ ຊ່ວຍເຫລືອເຊິ່ງກັນແລະກັນ ຕາມຫລັກການພື້ນຖານ ຂອງກົດບັດອາຊຽນ; ສືບຕໍ່ພົວພັນ ກັບບັນດາປະເທດທີ່ພັດທະນາແລ້ວ ແລະ ບັນດາປະເທດທີ່ກຳລັງພັດທະນາ, ຂະບວນການບໍ່ຮ່ວມກຸ່ມ, ກຸ່ມ 77, ກຸ່ມປະເທດທີ່ໃຊ້ພາສາຝຣັ່ງ, ກຸ່ມປະເທດກຳລັງພັດທະນາ ທີ່ບໍ່ມີຊາຍແດນຕິດທະເລ ແລະ ບັນດາອົງການຈັດຕັ້ງສາກົນອື່ນໆ; ເພີ່ມທະວີການພົວພັນສາມັກຄີ, ການຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນ ກັບບັນດາພັກກອມມູນິດ, ພັກກຳມະກອນ ແລະ ບັນດາພັກຝ່າຍຊ້າຍອື່ນໆ, ສືບຕໍ່ພົວພັນ ກັບບັນດາພັກກຳອຳນາດ, ພັກຮ່ວມລັດຖະບານ, ຂະບວນການກ້າວໜ້າໃນໂລກ; ເຂົ້າຮ່ວມ ໃນການແກ້ໄຂ, ໄກ່ເກ່ຍບັນຫາສຳຄັນ ຂອງພາກພື້ນ ແລະ ສາກົນ, ສະໜັບສະໜູນການຕໍ່ສູ້ ເພື່ອສັນຕິພາບ, ຕ້ານໄພອັນຕະລາຍ ຂອງສົງຄາມ, ການຊ່ວງເສັງປະກອບອາວຸດ, ການກໍ່ການຮ້າຍ... ເພື່ອການສ້າງລະບຽບການ ດ້ານການເມືອງ, ເສດຖະກິດຂອງໂລກ ທີ່ມີປະຊາທິປະໄຕ ແລະ ເປັນທຳ; ປະກອບສ່ວນ ເຂົ້າໃນການສະໜັບສະໜູນ ການປະຕິຮູບ ໃນລະບົບສະຫະປະຊາຊາດ, ປະຕິບັດໜ້າທີ່ພັນທະສາກົນ ທີ່ ສ.ປ.ປ ລາວ ເປັນພາຄີ; ເຂົ້າຮ່ວມ ການແກ້ໄຂພາວະໂລກຮ້ອນ ແລະ ການປ່ຽນແປງຂອງດິນຟ້າອາກາດ ເພື່ອຍາດແຍ່ງເອົາຜົນປະໂຫຍດລວມອັນຊອບທຳມາໃຫ້ປະເທດເຮົາ ກໍຄື ໃຫ້ບັນດາປະເທດກຳລັງພັດທະນາ ແລະ ໃຫ້ແກ່ມວນມະນຸດ.

ພາກທີ III

ເພີ່ມທະວີການນຳພາ ຂອງພັກ, ສ້າງພັກ ໃຫ້ປອດໃສ ຫນັກແຫນ້ນ ແລະ ເຂັ້ມແຂງ.

ກ. <u>ເພີ່ມທະວີບົດບາດນຳພາ ຂອງພັກ</u>.

ພັກເຮົາ ມີຕົ້ນກຳເນີດ ແລະ ສືບທອດອຸດົມການ ມາຈາກພັກກອມມູນິດອິນດູຈີນ. ພັກ ໄດ້ ນຳພາປະຊາຊົນລາວບັນດາເຜົ່າ ຕໍ່ສູ້ເອົາຊະນະ ຈັກກະພັດຜູ້ຮຸກຮານໂຕຫົວໂປ່ທີ່ເຂັ້ມແຂງ, ໄດ້ນຳ ພາປົກປັກຮັກສາ ລະບອບໃຫມ່ ແລະ ສ້າງສາພັດທະນາ ປະເທດຊາດ ຢ່າງມີໄຊ ເຖິງວ່າ ໄດ້ປະສົບ ກັບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍທົດສອບ ອັນຫນັກຫນ່ວງກໍຕາມ. ໂດຍກຳແຫນ້ນການປ່ຽນ ແປງ ຂອງສະພາບແວດລ້ອມສາກົນ ແລະ ສະພາວະຄວາມເປັນຈິງ ຂອງປະເທດຊາດ; ເມື່ອຮອດ ທ້າຍ ຂອງຊຸມປີ 1980 ພັກເຮົາ ໄດ້ເປັນເຈົ້າການ ນຳພາລິເລີ່ມການປ່ຽນແປງໃຫມ່ ແລະ ສືບຕໍ່ນຳ ພາ-ຊີ້ນຳ ມາຮອດຊ່ວງເວລານີ້ ຢ່າງມີຜົນສຳເລັດ.

ຜົນງານການນຳພາ ຂອງພັກເຮົາ ໄດ້ເຮັດໃຫ້ປະຊາຊົນລາວບັນດາເຜົ່າ ແລະ ບັນດາຊັ້ນຄົນ ໃນສັງຄົມຮັບຮູ້ ແລະ ໃຫ້ຄວາມໄວ້ວາງໃຈ ຕໍ່ບົດບາດເປັນພັກກຳອຳນາດ ນຳພາປະເທດຊາດ.

ແຕ່ໃນເງື່ອນໄຂໃຫມ່ນີ້, ປະເທດຊາດຂອງພວກເຮົາ ຈະຄົງຕົວ ແລະ ຂະຫຍາຍຕົວ ກ້າວ ຂຶ້ນຢ່າງຫນັກແຫນ້ນ ໄດ້ຫລືບໍ່, ການສ້າງສາພັດທະນາ ຕາມທິດສັງຄົມນິຍົມ ຈະສຳເລັດຫລືບໍ່ ລ້ວນ ແຕ່ຂຶ້ນກັບວ່າ ພັກເຮົາ ຈະເຊີດຊູບົດບາດ ແລະ ຄວາມສາມາດນຳພາ ໄດ້ທຽມທັນກັບຄວາມຮຽກ ຮ້ອງຕ້ອງການ ຂອງສະພາບການລວມ ກໍຄື ຂອງການພັດທະນາ ໄດ້ຫລືບໍ່; ຈະສາມາດເປັນກຳລັງ ນຳຫນ້າ ຂອງຊາດ ໄດ້ຫລືບໍ່.

ອັນນັ້ນຊີ້ບອກວ່າ ວຽກງານກໍ່ສ້າງພັກ ຍັງເປັນວຽກສຳຄັນຍຸດທະສາດ ທີ່ຕ້ອງໄດ້ປະຕິບັດ ບົນຈິດໃຈບຸກທະລຸ ເພື່ອເພີ່ມທະວີບົດບາດນຳພາ ແລະ ເຊີດຊູຄວາມສາມາດກຳອຳນາດ ຂອງພັກ ເຮົາ ຂຶ້ນຢ່າງສົມຄູ່ກັບເງື່ອນໄຂໃຫມ່.

ຂ. <u>ຢຶດຫມັ້ນທາດແທ້ເປັນຕົວແທນ ຂອງພັກເຮົາ ໃຫ້ແກ່ຜົນປະໂຫຍດ ຂອງຊົນຊັ້ນກຳມະ ກອນ, ຊາວຜູ້ອອກແຮງງານ ແລະ ຂອງຊາດລາວທັງຫມົດ</u>.

- ໂດຍຢຶດຫມັ້ນ ໃນອຸດົມການ ແລະ ມູນເຊື້ອ ຂອງພັກເຮົາ, ກອງປະຊຸມໃຫຍ່ຄັ້ງທີ IX ໄດ້ ຢືນຢັນ ຮັບຮອງເອົາກົດລະບຽບສະບັບປັບປຸງໃຫມ່ ຊຶ່ງໃນນັ້ນ ໄດ້ກຳນົດຢ່າງຈະແຈ້ງວ່າ: *" ພັກປະ ຊາຊົນປະຕິວັດລາວ ເປັນຕົວແທນທີ່ຈົງຮັກພັກດີ ຕໍ່ຜົນປະໂຫຍດ ຂອງຊົນຊັ້ນກຳມະກອນ, ຊາວຜູ້*

ອອກແຮງງານ ແລະ ຂອງຊາວລາວທັງຫມົດ ". ການເນັ້ນ ກ່ຽວກັບການເປັນຕົວແທນທີ່ຈົງຮັກພັກດີ ຕໍ່ຜົນປະໂຫຍດ ຂອງຊົນຊັ້ນກຳມະກອນນັ້ນ ແມ່ນເພື່ອສະແດງໃຫ້ເຫັນທາດແທ້ ກໍຄື ເຈດຈຳນົງອັນ ສູງສົ່ງ ຂອງພັກເຮົາ ຊຶ່ງເວລາໃດ ກໍຖືເປັນພັກຂອງຊົນຊັ້ນກຳມະກອນ. ສຳລັບການເປັນຕົວແທນ ໃຫ້ ແກ່ຊາວຜູ້ອອກແຮງງານນັ້ນ ໃນກິດລະບຽບ ກໍໄດ້ເນັ້ນຢ່າງຈະແຈ້ງເຊັ່ນກັນ ຊຶ່ງໄດ້ສະແດງໃຫ້ເຫັນ ການເປັນຕົວແທນ ໃຫ້ແກ່ຊັ້ນຄົນ, ກຸ່ມຄົນຜູ້ອອກແຮງງານ ທີ່ຫລາກຫລາຍ ໃນສັງຄົມເຮົາ ເປັນຕົ້ນ ແມ່ນກະສິກອນ-ຊາວໄຮ່ນາ, ນາຍຊ່າງ, ວິສາວະກອນ, ນັກຮຽນຮູ້ປັນຍາຊົນ, ຜູ້ຄຸ້ມຄອງບໍລິຫານ, ຜູ້ ປະກອບການ ໃນສາຂາອາຊີບຕ່າງໆ ແລະ ອື່ນໆອີກ ທີ່ອອກແຮງງານດ້ວຍມື ແລະ ມັນສະຫມອງ.

ເວົ້າລວມແລ້ວ, ພັກເຮົາ ແມ່ນເປັນຕົວແທນໃຫ້ແກ່ຜົນປະໂຫຍດ ຂອງທັງຫມົດຊາດລາວ. ພັກເຮົາ ເວລາໃດກໍຖືຜົນປະໂຫຍດ ຂອງຊາດ ເປັນກຽດ ແລະ ເຫນືອກວ່າຜົນປະໂຫຍດ ຂອງພັກ ເອງ; ຖືບັນຫາຊາດ ແລະ ຜົນປະໂຫຍດ ຂອງຊາດ ສູງກວ່າບັນຫາຊົນຊັ້ນ ແລະ ຜົນປະໂຫຍດ ຂອງ ຊົນຊັ້ນ.

ຄ. <u>ການຮັກສາຖານະກຳອຳນາດ ຂອງພັກເຮົາ, ສ້າງພັກ ໃຫ້ຫນັກແຫນ້ນ ເຂັ້ມແຂງ ໃນທຸກ ດ້ານ</u>.

❶ ຖານະກຳອຳນາດ ຂອງພັກເຮົາ ໄດ້ຖືກບັນຍັດໄວ້ ໃນລັດຖະທຳມະນູນ ແຫ່ງ ສ.ປ.ປ ລາວ. ອັນນັ້ນ ທັງແມ່ນກຽດສັກສີ ແລະ ທັງແມ່ນຄວາມຮັບຜິດຊອບອັນສູງສົ່ງ.

- ເມື່ອເວົ້າເຖິງ ພັກກຳອຳນາດ ໃນເນື້ອແທ້ ມັນແມ່ນການຮັກສາອຳນາດ ຂອງພັກ. ສະນັ້ນ ເມື່ອເປັນພັກກຳອຳນາດແລ້ວ ພັກຕ້ອງຖືສຳຄັນ ການເຕົ້າໂຮມກຳລັງແຮງ ຂອງທຸກຊົນຊັ້ນ ແລະ ຊັ້ນ ຄົນ ໃນສັງຄົມ ເຂົ້າໃສ່ການພັດທະນາ ໃຫ້ມີຜົນສຳເລັດ ເພື່ອ ຄວາມຢູ່ດີ ກິນດີ ແລະ ຄວາມຮັ່ງມີຜາ ສຸກ ຂອງປະຊາຊົນ ກໍຄື ຄວາມມັ່ງຄັ່ງເຂັ້ມແຂງ ຂອງປະເທດຊາດ. ພັກກຳອຳນາດ ຕ້ອງຢຶດຫມັ້ນໃນ ລັກສະນະຊົນຊັ້ນ ຂອງພັກ ດັ່ງທີ່ກ່າວມາເທິງນັ້ນ, ແຕ່ບໍ່ຖືການຕໍ່ສູ້ຊົນຊັ້ນ ເປັນອັນຕົ້ນຕໍ; ພັກຕ້ອງມີ ສະຕິຊົນຊັ້ນ ແຕ່ກໍຢຶດຫມັ້ນ ໃນການເສີມສ້າງຄວາມສາມັກຄີປອງດອງ ລະຫວ່າງຊົນຊັ້ນ ແລະ ຊັ້ນຄົນ ໃນສັງຄົມ ເພື່ອສ້າງເງື່ອນໄຂອັນສະຫງົບສັນຕິ ແກ່ການສ້າງສາພັດທະນາ.

- ພັກກຳອຳນາດ ຕ້ອງກຳແຫນ້ນອົງການສິດອຳນາດແຫ່ງລັດ ກໍຄື ອົງການປົກຄອງທຸກຂັ້ນ ແຕ່ສູນກາງ ຮອດຮາກຖານ; ພ້ອມກັນນັ້ນ ກໍຕ້ອງນຳພາ-ຊີ້ນຳ ຢ່າງຈິດຈໍ່ ຕໍ່ອົງການອຳນາດແຫ່ງລັດ ແລະ ອົງການປົກຄອງແຕ່ລະຂັ້ນ ເພື່ອໃຫ້ຜົນຂະຫຍາຍ ແລະ ຈັດຕັ້ງປະຕິບັດແນວທາງ ກໍຄື ມະຕິ ຕ່າງໆ ຂອງພັກ ປະກົດຜົນເປັນຈິງ. ຄະນະພັກແຕ່ລະຂັ້ນ ຕ້ອງກຳແຫນ້ນສະເຫມີວ່າ ອັນສຳຄັນທີ່ ສຸດໃນການນຳພາ-ຊີ້ນຳ ອົງການລັດ ແລະ ອຳນາດການປົກຄອງ ນັ້ນ ແມ່ນການນຳພາ-ຊີ້ນຳ ການ

ເຮັດຕົວຈິງ ເພື່ອຮັບປະກັນ ໃຫ້ມັນຖືກຕາມແນວທາງ ແຜນນະໂຍບາຍ ແລະ ໃຫ້ມັນເກີດດອກອອກຜົນຕາມຈຸດປະສົງຄາດຫມາຍ ທີ່ວາງໄວ້. ພັກນຳພາ ບໍ່ແມ່ນມີແຕ່ປະຊຸມ ແລະ ອອກມະຕິ ຄຳສັ່ງ; ພັກນຳພາ ແມ່ນຊີ້ນຳ-ບັນຊາເຮັດຕົວຈິງ ໃຫ້ມີຜົນສຳເລັດ.

- ພັກກຳອຳນາດ ຕ້ອງກຳແຫນ້ນລະບົບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການຈັດຕັ້ງໃນລະບົບການເມືອງ, ກຳແຫນ້ນຮາກຖານ, ກຳແຫນ້ນປະຊາຊົນບັນດາເຜົ່າ ບັນດາຊັ້ນຄົນ; ພັກ ຕ້ອງນຳພາ-ຊີ້ນຳ ບັນດາອົງການຈັດຕັ້ງໃນລະບົບການເມືອງ ເຄື່ອນໄຫວ ເພື່ອຮັບໃຊ້ ແລະ ຕອບສະຫນອງສິດ-ຜົນປະໂຫຍດ ຂອງປະຊາຊົນ, ເສີມຂະຫຍາຍສິດເປັນເຈົ້າ ແລະ ຮັບປະກັນຄວາມສະເຫມີພາບ ແລະ ຄວາມຍຸຕິທຳ ຕາມລະບຽບກົດຫມາຍ.

- ພັກກຳອຳນາດ ຍັງຕ້ອງກຳແຫນ້ນລະບົບເສດຖະກິດ-ການເງິນ ແລະ ຊັບສິນສ່ວນລວມຂອງຊາດ, ນຳພາ-ຊີ້ນຳ ອົງການລັດທີ່ກ່ຽວຂ້ອງ ດຳເນີນການຄຸ້ມຄອງ ນຳໃຊ້ ໃຫ້ມີປະສິດທິຜົນ ເພື່ອສ້າງຄວາມມັ່ງຄັ່ງ ເຂັ້ມແຂງ ແກ່ປະເທດຊາດ; ພ້ອມກັນນັ້ນ ກໍກຳແຫນ້ນກຳລັງປະກອບອາວຸດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂອງປະຊາຊົນ ແລະ ປັບປຸງ ກໍ່ສ້າງ ໃຫ້ມີຄວາມເຂັ້ມແຂງຍິ່ງໆຂຶ້ນ.

- ພັກກຳອຳນາດ ຍັງຕ້ອງກຳແຫນ້ນວຽກການຕ່າງປະເທດ ແລະ ການຮ່ວມມືສາກົນ; ຊີ້ນຳການເຊື່ອມໂຍງທາງດ້ານເສດຖະກິດ ກັບບັນດາປະເທດໃນອະນຸພາກພື້ນ, ພາກພື້ນ ແລະ ສາກົນ.

❷ ສ້າງພັກໃຫ້ຫນັກແຫນ້ນ ທາງດ້ານການເມືອງ-ແນວຄິດ.

ວຽກງານການເມືອງ-ແນວຄິດ ແມ່ນວຽກສຳຄັນແຖວຫນ້າ ຂອງພັກເຮົາ. ກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ເລັ່ງທວງ ໃຫ້ວຽກງານການເມືອງ-ແນວຄິດ ຕ້ອງດຳເນີນໄປ ໂດຍຕິດພັນກັບການອະທິບາຍ ແລະ ແກ້ໄຂບັນຫາທີ່ເກີດຂຶ້ນ ໃນການເຄື່ອນໄຫວ ນຳພາ ຂອງພັກ ແລະ ສະພາບການຕົວຈິງ ໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ; ໃຫ້ມີການປັບປຸງແກ້ໄຂ ລັກສະນະຮູບການ, ແຫ້ງກະແດ້ງ, ຜິວເຜີນ ແລະ ເຮັດໃຫ້ວຽກງານດັ່ງກ່າວ ມີຊີວິດຊີວາ ມີຄຸນນະພາບ ແລະ ມີປະສິດທິຜົນສູງຂຶ້ນ.

- ສະນັ້ນ ຕ້ອງຫັນຈາກການສຶກສາອົບຮົມ ການເມືອງ-ແນວຄິດ ແບບລວມໆ ເຂົ້າສູ່ການສຶກສາອົບຮົມ ໃຫ້ຮູ້, ໃຫ້ເຂົ້າໃຈ ແລະ ສາມາດໄປປະຕິບັດ ໃຫ້ເກີດປະໂຫຍດໃນພາກຕົວຈິງ; ຕິດພັນກັບຫນ້າທີ່ຈຸດສຸມ ໃນດ້ານຕ່າງໆ ຂອງການພັດທະນາ ແລະ ຕິດແທດ ກັບຮາກຖານປະຊາຊົນ ກໍຄື ບັນດາຊັ້ນຄົນໃນສັງຄົມ.

+ ຕ້ອງກວດແກ້, ປັບປຸງ ຫລັກສູດ, ເນື້ອໃນການຮຽນ, ການສອນ ທິດສະດີການເມືອງ ໃນລະ

ບົບໂຮງຮຽນພັກ, ໂຮງຮຽນການປົກຄອງ ໃນທົ່ວປະເທດ, ລວມທັງປຶ້ມຫລັກສູດ ວິຊາການເມືອງ-ສັງຄົມ ຢູ່ໃນໂຮງຮຽນຊັ້ນຕ່າງໆ ໃຫ້ແທດກັບຕົວຈິງ ແລະ ຫັນໃຫ້ເປັນວິຊາບັງຄັບ ໃນທຸກລະບົບໂຮງຮຽນ ລວມທັງໂຮງຮຽນເອກະຊົນ, ຕ້ອງບຳລຸງສ້າງ ແລະ ຍົກລະດັບຄວາມຮູ້ ຄວາມສາມາດ ຂອງຖັນແຖວຄູອາຈານ ວິຊາການເມືອງ ໃຫ້ມີຄຸນນະພາບສູງຂຶ້ນກວ່າເກົ່າ.

ເວົ້າລວມ, ຕ້ອງຍົກສູງຄຸນນະພາບ ຂອງວຽກງານການເມືອງ-ແນວຄິດ ເພື່ອບັນລຸເຖິງ ການສ້າງສະຕິບຸກຄົນ ແລະ ສະຕິສັງຄົມ ໃຫ້ສອດຄ່ອງກັບແນວທາງ ແຫ່ງການສ້າງສາພັດທະນາປະເທດຊາດ ຂອງພວກເຮົາ, ນັ້ນຄື :

- ສ້າງໃຫ້ໄດ້ສະຕິຕື່ນຕົວ ແລະ ຄວາມຮູ້ດ້ານການເມືອງ.

- ສ້າງໃຫ້ໄດ້ຄວາມເຊື່ອຫມັ້ນຕໍ່ແນວທາງ ແລະ ການນຳພາຂອງພັກ ກໍຄື ຕໍ່ອະນາຄົດ ຂອງປະເທດຊາດ.

- ປຸກລະດົມໃຫ້ເກີດຄວາມຕື່ນຕົວ ເປັນເຈົ້າການເຂົ້າຮ່ວມໃນພາລະກິດປ່ຽນແປງໃຫມ່ ກໍ ຄື ການປົກປັກຮັກສາ ແລະ ພັດທະນາປະເທດຊາດ ຕາມທິດສັງຄົມນິຍົມ.

- ຕ້ານຢັນດາແນວຄິດ ແລະ ປະກົດການຫຍໍ້ທໍ ທີ່ເກີດຂຶ້ນໃນຖັນແຖວພະນັກງານ ສະມາຊິກພັກ ແລະ ໃນສັງຄົມ.

✪ ***ການດຳເນີນວຽກງານການເມືອງ-ແນວຄິດ*** ໃນເງື່ອນໄຂໃຫມ່ນີ້ ຕ້ອງໄປຕາມ **ທິດນຳ** ດັ່ງນີ້ :

- ຕ້ອງສົມທົບກັນກົມກຽວ ແລະ ຫນັກແຫນ້ນ ລະຫວ່າງພາກສ່ວນຕ່າງໆ ທີ່ມີຄວາມຮັບຜິດຊອບ ໂດຍກົງ ແລະ ທາງອ້ອມ ຕໍ່ການດຳເນີນວຽກງານການເມືອງ-ແນວຄິດ ເພື່ອຮັບປະກັນຄວາມສອດຄ່ອງ ເປັນເອກະພາບ ທາງດ້ານເນື້ອໃນ, ວິທີການ ແລະ ຮູບການ ໃນການດຳເນີນການ ຂອງວຽກງານການເມືອງ-ແນວຄິດ.

- ຕ້ອງດຳເນີນວຽກງານການເມືອງ-ແນວຄິດ ຕິດພັນກັບວຽກງານກໍ່ສ້າງພັກ-ພະນັກງານ ທາງດ້ານການຈັດຕັ້ງ, ການກວດກາຕີລາຄາພະນັກງານ ແລະ ການປະຕິບັດນະໂຍບາຍ ທາງດ້ານວັດຖຸ ແລະ ຈິດໃຈ ທີ່ສົມເຫດສົມຜົນ, ບໍ່ຕັດແຍກວຽກງານການເມືອງ-ແນວຄິດ ອອກຈາກການແກ້ໄຂບັນຫາ ທາງດ້ານເສດຖະກິດ-ຊີວິດການເປັນຢູ່, ກຳແຫນ້ນສາຍກ່ຽວພັນຂອງມັນ ແລະ ມີທັດສະນະທ່າທີໃນການແກ້ໄຂ ຢ່າງຖືກຕ້ອງ.

- ສົມທົບແຫນ້ນ ລະຫວ່າງການສຶກສາອົບຮົມ ການເມືອງ-ແນວຄິດ ກັບການຝຶກຝົນຫລໍ່ຫລອມຕົນເອງ ຂອງສະມາຊິກພັກ-ພະນັກງານ; ລະຫວ່າງການສຶກສາອົບຮົມ ໃນໂຮງຮຽນ-ສຳນັກ

ງານອົງການ ກັບຢູ່ໃນຄອບຄົວ; ລະຫວ່າງພາຍໃນພັກ ກັບ ໃນສັງຄົມ.

❸ ປັບປຸງ ແລະ ຍົກສູງຄຸນນະພາບຂອງວຽກງານຈັດຕັ້ງ; ກອງປະຊຸມໃຫຍ່ຄັ້ງທີ IX ຂອງ ພັກ ໄດ້ເນັ້ນກ່ຽວກັບການເພີ່ມທະວີຄວາມສາມັກຄີເອກະພາບ ພາຍໃນພັກ, ຢຶດໝັ້ນ ໃນຫລັກ ການລວມສູນປະຊາທິປະໄຕ, ເສີມຂະຫຍາຍປະຊາທິປະໄຕ ໄປພ້ອມກັບການເພີ່ມທະວີລະບຽບ ວິໄນ ຢູ່ພາຍໃນພັກ ຢ່າງເຂັ້ມງວດ.

- ປະຊາທິປະໄຕພາຍໃນພັກ ເປັນການຄ້ຳປະກັນຄວາມມີຊີວິດຊີວາ ຂອງພັກ, ທັງເປັນ ປັດໄຈຮັບປະກັນ ຄວາມສາມັກຄີເປັນເອກະພາບ ພາຍໃນພັກ. ດັ່ງນັ້ນ, ຕ້ອງເອົາການເສີມຂະຫຍາຍ ປະຊາທິປະໄຕ ພາຍໃນພັກ ເປັນກຳລັງຊຸກດັນ ແລະ ເປັນຫລັກ ໃຫ້ແກ່ການເສີມຂະຫຍາຍ ປະ ຊາທິປະໄຕ ຢູ່ໃນສັງຄົມ. ກ່ອນອື່ນ ຕ້ອງໃຫ້ສະມາຊິກພັກທຸກຄົນ ໄດ້ປະຕິບັດສິດຕ່າງໆ ທີ່ກຳນົດ ໄວ້ໃນກົດລະບຽບ ຂອງພັກ ຢ່າງຄົບຖ້ວນ, ເປັນຕົ້ນ ແມ່ນສິດໃນການໄດ້ຮັບຂໍ້ມູນຂ່າວສານ, ສິດ ໃນການໄດ້ເຂົ້າຮ່ວມແລກປ່ຽນທັດສະນະ, ຄວາມຄິດຄວາມເຫັນ ແລະ ຕົກລົງບັນຫາຕ່າງໆ ຂອງ ພັກ ກໍຄື ສິດໃນການຮັກສາທັດສະນະຄວາມຄິດ ຂອງຕົນ ໄປພ້ອມກັບການສ້າງບັນຍາກາດ ແລະ ການປຶກສາຫາລື ທີ່ມີປະຊາທິປະໄຕອັນກ້ວາງຂວາງ ພາຍໃນພັກ.

ການເສີມຂະຫຍາຍ ປະຊາທິປະໄຕ ຕ້ອງໄປພ້ອມກັບການປະຕິບັດຫລັກການ ລວມສູນ ປະຊາທິປະໄຕ ຢ່າງເຂັ້ມງວດ, ຊຶ່ງອັນນັ້ນ ຫມາຍເຖິງການປຶກສາຫາລືບັນຫາຕ່າງໆ ຢ່າງກ້ວາງ ຂວາງ, ເລິກເຊິ່ງ ແລະ ພາຍຫລັງໄດ້ຕົກລົງເປັນເອກະພາບກັນແລ້ວ ແຕ່ລະຄົນ ຕ້ອງປະຕິບັດຕາມ ມະຕິຕົກລົງນັ້ນ; ບຸກຄົນ ຕ້ອງປະຕິບັດຕາມການຈັດຕັ້ງ, ຂັ້ນລຸ່ມ ຕ້ອງປະຕິບັດຕາມມະຕິຂັ້ນເທິງ, ຄະນະພັກທຸກຂັ້ນ ແລະ ທົ່ວພັກ ຕ້ອງປະຕິບັດຕາມມະຕິ ຂອງຄະນະບໍລິຫານງານສູນກາງພັກ.

ຫລັກການລວມສູນປະຊາທິປະໄຕ ຕ້ອງໄດ້ຮັບການຈັດຕັ້ງປະຕິບັດ ໃຫ້ຖືກ ແລະ ຄົບ ຕາມເນື້ອໃນ ຂອງມັນ; ຫມາຍວ່າ ທຸກບັນຫາສຳຄັນ ຕ້ອງນຳມາປຶກສາຫາລື ຢ່າງມີປະຊາທິປະ ໄຕ ແລະ ໃຫ້ເລິກເຊິ່ງຖີ່ຖ້ວນສາກ່ອນ ຈຶ່ງຕົກລົງ; ສ່ວນການຕົກລົງນັ້ນ ອາດເຮັດດ້ວຍຫລາຍຮູບ ການ, ລົງມະຕິແບບເປີດເຜີຍ ຫລື ແບບປິດລັບກໍໄດ້, ສິ່ງສຳຄັນ ແມ່ນຕ້ອງມີການປຶກສາຫາລື ຢ່າງເລິກເຊິ່ງຖີ່ຖ້ວນ. ຄວນຫລີກ ກໍລະນີປຶກສາກັນແບບພໍໄດ້ແຕ່ຮູບການ ຫລື ແບບພໍເປັນພິທີ, ພໍ ໃຫ້ຄືວ່າ ບັນຫານັ້ນ ໄດ້ຮັບການຄົ້ນຄວ້າພິຈາລະນາ ແລກປ່ຽນຄວາມເຫັນກັນ ເລິກເຊິ່ງແລ້ວ, ແຕ່ ໃນຕົວຈິງ ພັດບໍ່ແມ່ນແນວນັ້ນ. ຜ່ານມາ ຍັງມີກໍລະນີເຮັດແບບຫນັກໄປເບື້ອງລວມສູນດ້ານດຽວ ຊຶ່ງເປັນການຈຳກັດປະຊາທິປະໄຕ ພາຍໃນພັກ ເຮັດໃຫ້ສະມາຊິກພັກ ບໍ່ສາມາດ ປະຕິບັດສິດ ຂອງ ຕົນ ໄດ້ດີເທົ່າທີ່ຄວນ; ເຮັດໃຫ້ມີການຕົກລົງບັນຫາແບບງ່າຍດາຍ ຜິວເຜີນໂດຍບໍ່ມີການປຶກ

ສາທາລີ ຢ່າງເລິກເຊິ່ງ.

- ເພີ່ມທະວີການ**ກໍ່ສ້າງຮາກຖານພັກ**ໃຫ້ເຂັ້ມແຂງ, ເອົາໃຈໃສ່ວຽກງານສຶກສາ ອົບຮົມ ການເມືອງ-ແນວຄິດ ແລະ ຕິດຕາມກວດກາ ການປະຕິບັດໜ້າທີ່ວຽກງານ ກໍຄື ການດຳລົງຊີວິດ, ການຝຶກຝົນຄຸນສົມບັດ ຂອງສະມາຊິກພັກ ໃຫ້ແທດເຖິງ; ປະຕິບັດ ລະບອບການຕີລາຄາ ແບ່ງປະເພດພະນັກງານ, ສະມາຊິກພັກ ໃຫ້ເປັນປົກກະຕິ, ມີການຕິຊົມຕົນເອງ ແລະ ຕິຊົມກັນຢ່າງເຂັ້ມງວດ. ຄົ້ນຄວ້າອອກຂໍ້ກຳນົດ ແລະ ກົນໄກ ກ່ຽວກັບການປຸກລະດົມຊຸກຍູ້ ໃຫ້ມະຫາຊົນເຂົ້າຮ່ວມໃນການຕິດຕາມ ກວດກາ ແລະ ປະກອບຄວາມຄິດຄວາມເຫັນ ຕໍ່ສະມາຊິກພັກ, ທັງມີມາດຕະການອັນເໝາະສົມ ແລະ ທັນການ ໃນການເອົາຜູ້ທີ່ເສື່ອມທາດຂາດຄຸນ ອອກຈາກຖັນແຖວຂອງພັກ, ເດັດດ່ຽວປະຕິບັດທິດນຳ ກ່ຽວກັບການຂະຫຍາຍພັກ ທີ່ຖືເອົາຄຸນນະພາບ ເປັນຕົ້ນຕໍ, ເຮັດໃຫ້ຖັນແຖວຂອງພັກເຮົາ ປະກອບດ້ວຍຜູ້ຫນຸ່ມແຫນ້ນ, ມີລະດັບຄວາມຮູ້ ຄວາມສາມາດ, ເປັນແບບຢ່າງທີ່ດີ ແລະ ພົ້ນເດັ່ນຂຶ້ນ ຈາກຂະບວນການຕ່າງໆ ນັບມື້ນັບຫລາຍ.

ຕັ້ງໜ້າແກ້ໄຂລະບອບລະບຽບການ ກ່ຽວກັບການຈັດຕັ້ງຮາກຖານພັກ ໃຫ້ລະອຽດ ແລະ ຈະແຈ້ງຕື່ມອີກ ແນໃສ່ສ້າງຮາກຖານພັກ ໃຫ້ມີຢູ່ໃນທຸກຂົງເຂດວຽກງານ, ຢູ່ໃນທຸກພາກສ່ວນເສດຖະກິດ ແລະ ທຸກບໍລິເວນ ຂອງປະເທດ ໃຫ້ມີຄວາມໜັກແຫນ້ນເຂັ້ມແຂງ. ໃນສະເພາະໜ້ານີ້ ຕ້ອງສຸມການຊີ້ນຳ ເຂົ້າໃສ່ການປັບປຸງ ແລະ ແກ້ໄຂບັນດາຮາກຖານພັກທີ່ຍັງອ່ອນ ເພື່ອສ້າງການຫັນປ່ຽນອັນເດັ່ນຊັດ, ສູ້ຊົນ ສ້າງໃຫ້ເປັນໜ່ວຍພັກແຂງ ຮູ້ນຳພາຮອບດ້ານ.

ເອົາໃຈໃສ່ຕື່ມອີກ ຕໍ່ການປັບປຸງ ແລະ ຍົກສູງຄຸນນະພາບ ການນຳພາ ຂອງ ຄະນະພັກຂັ້ນຕ່າງໆ ໂດຍສຸມໃສ່ຍົກສູງຄວາມປະດິດສ້າງ, ເສີມຂະຫຍາຍ ຈິດໃຈກ້າຄິດ, ກ້າເຮັດ, ກ້າຮັບຜິດຊອບ; ປັບປຸງລະບອບແບບແຜນນຳພາ ໃຫ້ຖືກຕາມກົດລະບຽບ ຂອງພັກ, ມີເນື້ອໃນແທດຕົວຈິງ, ຮັບປະກັນໃຫ້ການຊີ້ນຳ ຂອງຄະນະພັກ ແທດເຖິງທຸກວຽກງານ ທີ່ຂຶ້ນກັບຄວາມຮັບຜິດຊອບ ຂອງຕົນ.

ປັບປຸງກົງຈັກຊ່ວຍວຽກ ຂອງຄະນະພັກຂັ້ນສູນກາງ, ທ້ອງຖິ່ນ ແລະ ຂະແໜງການ ເພື່ອຊ່ວຍຄະນະພັກ ໃນການນຳພາ-ຊີ້ນຳ ການແກ້ໄຂບັນຫາຕ່າງໆ ຢ່າງຖືກຕ້ອງທັນການ, ເພີ່ມທະວີການນຳພາ ຂອງຄະນະພັກ ຕໍ່ກົງຈັກຊ່ວຍວຽກຂອງແຕ່ລະຂັ້ນ ໃຫ້ແທດເຖິງກວ່າເກົ່າ.

❹ **ປັບປຸງແບບແຜນນຳພາ;** ພັກເຮົາ ເປັນພັກກຳອຳນາດ, ສະນັ້ນ ຕ້ອງຕັ້ງ ໜ້າປັບປຸງເນື້ອໃນ ແລະ ແບບແຜນນຳພາ ຂອງພັກ ໃຫ້ສອດຄ່ອງເໝາະສົມ :

- ກ່ອນອື່ນ ຕ້ອງຢຶດໝັ້ນໃນຫລັກການທີ່ວ່າ: ***ພັກບໍ່ປະການນຳພາລັດ ແລະ ອຳນາດ***

ການປົກຄອງຂັ້ນຕ່າງໆ ແຕ່ກໍບໍ່ເຮັດໜ້າທີ່ແທນ. ສະນັ້ນ ພັກຕ້ອງໃຫ້ຄວາມສຳຄັນ ຕໍ່ການເສີມຂະຫຍາຍບົດບາດ ຂອງລັດ ແລະ ອົງການປົກຄອງຂັ້ນດຽວກັນ, ຕ້ອງນຳພາ ພາຍໃຕ້ຂອບເຂດຂອງລັດຖະທຳມະນູນ ແລະ ກົດໝາຍ; ຈັດວາງສັບຊ້ອນພະນັກງານ ຜູ້ທີ່ມີເງື່ອນໄຂ-ມາດຖານຖືກຕ້ອງ, ມີຄວາມພ້ອມ ທາງດ້ານຄຸນສົມບັດ ແລະ ຄວາມຮູ້ ຄວາມສາມາດ ເຂົ້າໃນຕຳແໜ່ງງານທີ່ສຳຄັນ ຂອງອົງການລັດ ແລະ ອຳນາດການປົກຄອງທ້ອງຖິ່ນ, ທັງນີ້ ກໍເພື່ອຮັບປະກັນທັງສອງດ້ານຄື: ***ດ້ານໜຶ່ງ*** ແມ່ນໃຫ້ລັດສາມາດຈັດຕັ້ງປະຕິບັດແນວທາງ ຂອງພັກ ໃຫ້ໄດ້ຮັບຜົນດີ, ***ດ້ານສອງ*** ແມ່ນເພື່ອໃຫ້ພັກສາມາດນຳພາລັດ ແລະ ອົງການປົກຄອງ ໄດ້ຢ່າງໜັກແໜ້ນ ໂດຍຜ່ານພະນັກງານ ທີ່ໄດ້ຈັດວາງສັບຊ້ອນໄປນັ້ນ.

- ໃນການປັບປຸງແບບແຜນນຳພາ, ພັກເຮົາ ຕ້ອງເພີ່ມທະວີແບບແຜນ ***ວິທະຍາສາດ, ແທດຕົວຈິງ*** ແລະ ***ມີຄວາມໂປ່ງໃສ.*** ເພາະວ່າ ມີແບບແຜນວິທະຍາສາດ ຈຶ່ງສາມາດນຳພາການສ້າງສາພັດທະນາ ໃຫ້ມີຜົນສຳເລັດ; ມີແບບແຜນແທດຕົວຈິງ ຈຶ່ງນຳພາ-ບັນຊາການແກ້ໄຂບັນຫາ ທີ່ກົດໜ່ວງຖ່ວງດຶງ ແລະ ສ້າງບາດກ້າວບຸກທະລຸໄດ້; ມີແບບແຜນນຳພາໂປ່ງໃສ ຈຶ່ງມີຄວາມຕັດສິນໃຈເດັດຂາດ ໃນການກຳຈັດປັດເປົ່າພະຍາດອາດຍາສິດ, ການສໍ້ລາດບັງຫລວງ ແລະ ການເສື່ອມທາດຂາດຄຸນສົມບັດສິນທຳປະຕິວັດ ໃນຖັນແຖວພະນັກງານ ສະມາຊິກພັກໄດ້, ມີແບບແຜນນຳພາໂປ່ງໃສ ຈຶ່ງຍາດໄດ້ຈິດໃຈ ແລະ ຄວາມເຊື່ອໝັ້ນ ຂອງປະຊາຊົນ.

- ພັກເຮົາ ຕ້ອງເພີ່ມທະວີແບບແຜນນຳພາ ອັນເປັນມູນເຊື້ອຂອງຕົນ, ນັ້ນຄືແບບແຜນຕິດແທດກັບຮາກຖານປະຊາຊົນ, ອີງໃສ່ກຳລັງແຮງຂອງປະຊາຊົນ ແລະ ເຮັດທຸກສິ່ງທຸກຢ່າງເພື່ອຜົນປະໂຫຍດຂອງປະຊາຊົນ. ມາໃນເງື່ອນໄຂໃໝ່ນີ້ ມູນເຊື້ອດັ່ງກ່າວ ຕ້ອງສະແດງອອກໃນການຫັນການນຳພາ-ຊີ້ນຳ ຂອງພັກ, ຫັນພະນັກງານ ສະມາຊິກພັກ ລົງສູ່ຮາກຖານ ເພື່ອນຳພາ ປະຊາຊົນຜະລິດເປັນສິນຄ້າ-ເຮັດການບໍລິການສ້າງລາຍໄດ້ ແກ້ໄຂຄວາມທຸກຍາກສ້າງຄວາມ ພໍຢູ່ພໍກິນ ແລະ ຄວາມ ຮັ່ງມີ ແກ່ຄອບຄົວ ຕິດພັນກັບການພັດທະນາຊົນນະບົດ-ສ້າງບ້ານພັດທະນາ.

- ຕ້ອງປັບປຸງ ແລະ ເພີ່ມທະວີແບບແຜນນຳພາ ທີ່ມີການແບ່ງງານມອບໝາຍ ຄວາມຮັບຜິດຊອບ ໃຫ້ຈະແຈ້ງຂາດຕົວ, ສົມທົບຢ່າງກົມກຽວ ລະຫວ່າງບົດບາດ ແລະ ຄວາມສາມາດນຳພາຂອງໝູ່ຄະນະ ກັບບົດບາດ ແລະ ຄວາມສາມາດນຳພາ ຂອງ ແຕ່ລະຄົນໃນຄະນະ; ກຳຈັດປັດເປົ່າ ທັດສະນະອວດອົ່ງທະນົງຕົວ-ບົ່ງການອ້າຍດຽວ ແລະ ທັດສະນະເອື່ອຍອີງ ໃສ່ແຕ່ໝູ່ຄະນະ, ຫລີກລ່ຽງຄວາມຮັບຜິດຊອບ. ພ້ອມກັນນັ້ນ ກໍຕ້ອງຕີຖອຍທ່າອ່ຽງ ແລະ ຄວາມພະຍາຍາມສວຍໃຊ້ ແບບແຜນນຳພາເປັນໝູ່ຄະນະ ໃຫ້ກາຍເປັນການ ***ສ້າງກຸ່ມ, ສ້າງພວກ*** ເພື່ອມີບົດບາດຄອບ

ງຳ ໃນການນຳພາ ແລະ ສວຍໂອກາດສ້ໍລາດບັງຫລວງ ຫລື ຕົກລົງບັນຫາຕ່າງໆ ທີ່ຂັດກັບ ລະບຽບ-ກົດໝາຍ, ມະຕິຄຳສັ່ງ ຂອງພັກ ແລະ ລັດ.

- ຕ້ອງເພີ່ມທະວີ ແບບແຜນນຳພາ ທີ່ປະດິດສ້າງ, ກ້າຄິດ, ກ້າເຮັດ ແລະ ກ້າຮັບຜິດຊອບ ຕໍ່ຜົນໄດ້ຜົນເສຍ ຕິດພັນກັບການເພີ່ມທະວີ ການຕິດຕາມກວດກາ, ສະຫລຸບຕີລາຄາ ຢ່າງພາວະວິໄສ, ວ່ອງໄວ ໃນການເສີມຂະຫຍາຍ ປັດໄຈໃຫມ່-ຫນໍ່ແຫນງໃຫມ່ ທັງມີການຖອດຖອນບົດຮຽນຈາກຕົວຈິງ.

❺ ບຸກທະລຸ ໃນວຽກງານພະນັກງານ.

ໃນມະຕິ IX ໄດ້ກຳນົດໄວ້ຢ່າງຈະແຈ້ງວ່າ " ໃນເງື່ອນໄຂໃຫມ່ນີ້ ຍິ່ງຈຳເປັນຕ້ອງມີຖັນແຖວພະນັກງານທີ່ມີຄວາມຮູ້ ມີຄວາມສາມາດ ມີຄຸນສົມບັດ ມີທາດແທ້ຫລັກໝັ້ນການເມືອງ ຫນັກແຫນ້ນ ມີຄວາມຈົງຮັກພັກດີຢ່າງສຸດຊຶ້ງ ຕໍ່ປະເທດຊາດ ແລະ ພາລະກິດ ຂອງພັກ, ມີນ້ຳໃຈ ຮັບໃຊ້ຊາດ ແລະ ຮັບໃຊ້ປະຊາຊົນ ດ້ວຍຄວາມບໍລິສຸດໃຈ, ມີແບບແຜນດຳລົງຊີວິດ ທີ່ສົດໃສ ແລະ ກ້າວໜ້າ, ມີນາມະຈິດຝຶກຝົນຫລໍ່ຫລອມຕົນເອງ ແລະ ດຸໝັ່ນຄົ້ນຄວ້າຮ່ຳຮຽນ ຍົກລະດັບ ໃນທຸກດ້ານ ຢ່າງບໍ່ຢຸດຢັ້ງ, ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບວິໄນ, ເຄົາລົບ ແລະ ປະຕິບັດ ກົດໝາຍ ແລະ ກົດລະບຽບຂອງພັກ ຢ່າງເຂັ້ມງວດ ".

ອັນນີ້ ມີຄວາມສຳຄັນຫລາຍ ເພາະພັກເຮົາໄດ້ຢືນຢັນມາຕະຫລອດວ່າ ພະນັກງານມີບົດບາດຕັດສິນ ຕໍ່ຜົນໄດ້ຜົນເສຍ ຂອງແນວທາງ, ຊຶ່ງອັນນັ້ນ ຫມາຍຄວາມວ່າ ພາລະກິດປ່ຽນແປງໃຫມ່ ຈະໄດ້ຮັບການຈັດຕັ້ງປະຕິບັດ ມີຜົນສຳເລັດໃຫມ່ ທີ່ເດັ່ນຊັດຫລໍ່ບໍ່, ການສ້າງບາດກ້າວບຸກທະລຸ ໃນການພັດທະນາ ຈະເກີດເປັນຈິງໄດ້ຫລໍ່ບໍ່ ແລະ ຍິ່ງໄປກ່ວານັ້ນ ແມ່ນປະເທດເຮົາ ຈະຍືນຍົງຄົງຕົວຢູ່ໄດ້ທ່າມກາງກະແສໂລກາພິວັດ ແລະ ການເຊື່ອມໂຍງ ຫລໍ່ບໍ່ນັ້ນ ລ້ວນແຕ່ຂຶ້ນກັບພະນັກງານ ເປັນປັດໄຈສຳຄັນ ແລະ ເປັນຂໍ້ກຸນແຈ, ໂດຍສະເພາະ ແມ່ນຂຶ້ນກັບພະນັກງານ ບຸກຄະລະກອນຂັ້ນຍຸດທະສາດ ທີ່ມີຄວາມຮັບຜິດຊອບນຳພາ-ຊີ້ນຳ ຢູ່ແຕ່ລະຂົງເຂດວຽກງານ.

ສະນັ້ນ ຈຶ່ງໃຫ້ເອົາໃຈໃສ່ ຕໍ່ວຽກງານສຳຄັນຈຳນວນຫນຶ່ງ ດັ່ງນີ້:

1). ກວດກາຄືນ ແລະ ຂຶ້ນແຜນກຳນົດໃຫມ່ ກ່ຽວກັບພະນັກງານ ໂດຍອີງໃສ່ຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ການເມືອງ ກໍຄື ການພັດທະນາປະເທດຊາດ ໃນໄລຍະສະເພາະໜ້າ ແລະ ຍາວນານ. ເວົ້າລວມ ແມ່ນວາງຍຸດທະສາດດ້ານພະນັກງານໃຫມ່ ໃນນີ້ ເອົາໃຈໃສ່ເປັນພິເສດ ແລະ ຖືເປັນສຳຄັນ ການກໍ່ສ້າງພະນັກງານສືບທອດ ປ່ຽນແທນຕຳແໜ່ງນຳພາ-ຄຸ້ມຄອງ ທີ່ມີຄຸນທາດ ແລະ ມີຄຸນສົມບັດສິນທຳປະຕິວັດ ທີ່ຮູ້ການເມືອງດີ, ມີຄວາມເຂົ້າໃຈສະ

ພາບການລວມ ແລະ ມີຄວາມສາມາດນຳພາ-ຄຸ້ມຄອງເກັ່ງ; ຮັບປະກັນ ລັກສະນະສືບທອດ-ຕໍ່ເນື່ອງ, ລັກສະນະຄົບຊຸດ ແລະ ມີໂຄງປະກອບທີ່ເຫມາະສົມ ດ້ານເພດ, ໄວ, ເຜົ່າຊົນ ແລະ ວິຊາສະເພາະ; ຕ້ອງຕີຖອຍທັດສະນະ ທີ່ຖືຕົ້ນກຳເນີດ ຫລື ທີ່ມາທາງຊົນຊັ້ນ ເປັນສຳຄັນ ແລະ ຕ້ອງເບິ່ງຄວາມທ້າວທັນບຸກບືນ ຄວາມຕັ້ງອົກຕັ້ງໃຈ ໃນການປະຕິບັດຫນ້າທີ່ຢ່າງມີຜົນສຳເລັດ ແລະ ຖືເອົາຄວາມຈິງຮັກພັກດີ ຊື່ສັດບໍລິສຸດ, ມີຄວາມປະດິດສ້າງ, ກ້າຄິດ, ກ້າເຮັດ ແລະ ກ້າຮັບຜິດຊອບ ເປັນມາດຕະຖານອັນສຳຄັນ.

2). ສັບຊ້ອນ ແລະ ນຳໃຊ້ພະນັກງານໃຫ້ຖືກຕ້ອງ, ສ້າງເງື່ອນໄຂໃຫ້ເຂົາເຈົ້າ ໄດ້ຝຶກຝົນ ທົດສອບ ໃນຂະບວນການວຽກງານຕົວຈິງ ແລະ ມີໂອກາດໄດ້ຍົກສູງ ຄວາມຮູ້ ຄວາມສາມາດ ຂອງຕົນ ໃຫ້ສູງຂຶ້ນເລື້ອຍໆ; ການສັບຊ້ອນ ແລະ ນຳໃຊ້ພະນັກງານ ຕ້ອງມີການເລືອກເຟັ້ນນຳໃຊ້ ໃຫ້ຖືກຕາມລະດັບຄວາມຮູ້-ຄວາມສາມາດ, ພອນສະຫວັນ ແລະ ປະສົບການ ທີ່ແຕ່ລະຄົນຮຽນຮູ້ ແລະ ເຄີຍເຮັດມີຜົນສຳເລັດມາກ່ອນ; ສືບຕໍ່ປະຕິບັດ ລະບອບສັບປ່ຽນ-ຄ່ຽນຍ້າຍພະນັກງານ ໃຫ້ໄປຕາມທິດທີ່ຮັບປະກັນທັງສອງດ້ານ ຄື: ***ດ້ານຫນຶ່ງ;*** ຕ້ອງໃຫ້ວຽກງານຢູ່ບ່ອນນັ້ນ ມີປະສິດທິຜົນດີຂຶ້ນ. ***ດ້ານສອງ:*** ໃຫ້ກະໂຕພະນັກງານ ສາມາດຮຽນຮູ້ ຍົກລະດັບຄວາມສາມາດ ແລະ ປະສົບການໃນວຽກງານຂຶ້ນຕື່ມ.

3). ຄຸ້ມຄອງ-ປ້ອງກັນພະນັກງານ ໃຫ້ດີ ເພື່ອສົ່ງເສີມຄວາມກ້າວຫນ້າ ແລະ ຄວາມເປັນແບບຢ່າງ ໃນວຽກງານ; ພ້ອມກັນນັ້ນ ກໍສະກັດກັ້ນປະກົດການຫຍໍ້ທໍ້ຕ່າງໆ ບໍ່ໃຫ້ເກີດຂຶ້ນ ໃນຖັນແຖວພະນັກງານ, ຕ້ອງຢຶດຫມັ້ນໃນ***ຫລັກການຄຸ້ມຄອງ*** ພະນັກງານ ຂອງພັກ ແຕ່ກໍຕ້ອງດັດປັບ ***ວິທີການຄຸ້ມຄອງ*** ໄປຕາມທິດມີວິທະຍາສາດ, ມີປະຊາທິປະໄຕ ແລະ ທັນເປັນລະບອບລະບຽບ ການ ອັນຈະແຈ້ງ ຮັດກຸມ; ຕ້ອງສ້າງກົນໄກ ໃຫ້ພະນັກງານ ໄດ້ຮັບຊາບຄວາມເປັນຈິງ ໃນເວລາມີການຕີລາຄາ ແລະ ເລືອກເຟັ້ນພະນັກງານ.

ການຄຸ້ມຄອງພະນັກງານ ບັນຫາສຳຄັນ ຕ້ອງກຳໄດ້ພະນັກງານ ນັບທັງດ້ານ ຕັ້ງຫນ້າ ແລະ ດ້ານທີ່ຕ້ອງເອົາໃຈໃສ່ຊ່ວຍເຂົາເຈົ້າ ບໍ່ວ່າທາງດ້ານຄຸນສົມບັດ, ຄວາມຮັບຜິດຊອບການເມືອງ ແລະ ການພົວພັນດ້ານອື່ນໆ ໃນສັງຄົມ ແລະ ກັບຕ່າງປະເທດ.

ການປ້ອງກັນພະນັກງານ ບັນຫາກົກ ກໍແມ່ນການສຶກສາອົບຮົມ ໃຫ້ທຸກຄົນ ເປັນເຈົ້າການຝຶກຝົນຕົນເອງ ຕາມມາດຖານລວມ ກໍຄື ມາດຖານສະເພາະ ຂອງແຕ່ລະປະເພດພະນັກງານ ທີ່ໄດ້ກຳນົດໄວ້; ການຈັດຕັ້ງພັກ ບ່ອນພະນັກງານແຕ່ລະຄົນສັງກັດຢູ່ນັ້ນ ຕ້ອງມີການຕິດຕາມ, ຕັກເຕືອນ ໃຫ້ພະນັກງານທຸກລະດັບ ຄິດ ແລະ ກະທຳສິ່ງທີ່ດີ, ເຄົາລົບ ແລະ ປະຕິບັດລະບຽບ-

ກົດໝາຍ ຢ່າງເຂັ້ມງວດ, ກຳແໜ້ນ ແລະ ປະຕິບັດແນວທາງ ແຜນນະໂຍບາຍ ຂອງພັກ, ບໍ່ຄິດ ແລະ ບໍ່ເຮັດສິ່ງ ທີ່ຂັດກັບແນວທາງແຜນນະໂຍບາຍ ຂອງພັກ ແລະ ຂໍ້ກຳນົດກົດໝາຍ ຂອງລັດ.

ອີກອັນຫນຶ່ງທີ່ສຳຄັນ ຕ້ອງກຳແໜ້ນ ແລະ ເລືອກເຟັ້ນໄດ້ ຜູ້ທີ່ດີ ມີເງື່ອນໄຂ- ມາດຖານ ຖືກຕ້ອງ ເຂົ້າຮັບຜິດຊອບຫນ້າທີ່ຕຳແຫນ່ງນຳພາ ຄຸ້ມຄອງ ຢູ່ແຕ່ລະຂົງເຂດ, ພ້ອມກັນນັ້ນ ກໍຕ້ອງ ມີຄວາມກ້າຫານສັບຊ້ອນ ປ່ຽນແທນພະນັກງານ ຜູ້ທີ່ຂາດຄວາມສາມາດ, ຂາດຄວາມເຊື່ອຖື ຈາກ ມະຫາຊົນ ແລະ ຖັນແຖວພະນັກງານດ້ວຍກັນ; ຕ້ອງເດັດຂາດ ເອົາຜູ້ທີ່ເສື່ອມຫາດຂາດຄຸນ, ມີ ຄວາມຜິດຫນັກຫນ່ວງ ແລະ ສ້າງຄວາມເສື່ອມເສຍ ຕໍ່ພາບພົດບົດບາດ ຂອງພັກ ຂອງລັດອອກ ຈາກຫນ້າທີ່ຕຳແຫນ່ງ ໃຫ້ທັນການ.

4). ຕີລາຄາຜົນງານ ຂອງພະນັກງານ ຢ່າງພາວະວິໄສ. ສະນັ້ນ ຕ້ອງມີລະບຽບການ ແລະ ລະບອບຕີລາຄາພະນັກງານ ເຊັ່ນ: ຕີລາຄາເປັນຫມູ່ຄະນະມີປະຊາທິປະໄຕ ເຮັດເປີດເຜີຍ ແລະ ໂປ່ງໃສ ໂດຍໃຫ້ພະນັກງານ ໄດ້ເຂົ້າຮ່ວມປະກອບຄວາມເຫັນ ແລະ ຮັບຮູ້ຄວາມຈິງ; ມີການ ຈັດຕັ້ງທາບທາມຄວາມເຫັນຫລາຍຄົນ ເຮັດຫລາຍຮອບ (ບໍ່ຕີລາຄາເທື່ອດຽວ); ຕີລາຄາຜົນສຳເລັດ ໃນການປະຕິບັດຫນ້າທີ່ ຕິດພັນກັບຄຸນສົມບັດສິນທຳ, ເອົາຜົນສຳເລັດ ໃນການປະຕິບັດຫນ້າ ທີ່ການເມືອງ, ຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ ເປັນການວັດແທກ ຫລື ຢັ້ງ ຢືນ ຄຸນນະພາບ ຂອງພະນັກງານ. ໃນເງື່ອນໄຂໃຫມ່ ຄວນກວດກາ ດັດແປງຄົ້ນກົນໄກ-ລະບອບ ລະບຽບຕີລາຄາ ພະນັກງານແຕ່ລະປະເພດ ໃຫ້ແທດເຫມາະ-ສອດຄ່ອງກວ່າເກົ່າ, ຄວນມີກົນໄກໃຫ້ ພະນັກງານ ແລະ ປະຊາຊົນ ປະກອບຄວາມເຫັນ ຕໍ່ການປະຕິບັດຫນ້າທີ່ ຂອງພະນັກງານ, ເປັນຕົ້ນ ແມ່ນພະນັກງານ ທີ່ມີຕຳແຫນ່ງນຳພາ-ຄຸ້ມຄອງ ທີ່ສຳຄັນ ແຕ່ລະຂັ້ນ.

5) ປັບປຸງ ລະບອບນະໂຍບາຍ ທາງດ້ານວັດຖຸ ແລະ ຈິດໃຈ ຕໍ່ພະນັກງານ ໃຫ້ເຫມາະ ສົມ ແລະ ປະຕິບັດໃຫ້ເປັນຈິງ, ຮັບປະກັນ ລັກສະນະຕັ້ງຫນ້າ (ບໍ່ເກື້ອກູນ) ສາມາດສົ່ງເສີມ ຄວາມຮູ້ ຄວາມສາມາດ ແລະ ຜົນງານອັນໂດດເດັ່ນ ຂອງພະນັກງານ (ບໍ່ຖືຕຳແຫນ່ງບໍລິຫານ ເປັນ ຫລັກ), ເອົາໃຈໃສ່ເປັນພິເສດ ຕໍ່ຜູ້ທີ່ປະຈຳການຢູ່ເຂດທຸລະກັນດານ ຫ່າງໄກສອກຫລີກ ແລະ ຫຍຸ້ງຍາກ.

ສະຫລຸບລວມແລ້ວ, ໃນຊຸມປີຕໍ່ຫນ້ານີ້ ພັກ-ລັດເຮົາ ມີພາລະກິດອັນຍິ່ງໃຫຍ່ ມີລັກສະ ນະທ້າທາຍສູງ ທີ່ຕ້ອງໄດ້ປະຕິບັດໃຫ້ສຳເລັດ ຊຶ່ງມີຄວາມຕ້ອງການພະນັກງານ ແລະ ບຸກຄະລະ ກອນປະເພດຕ່າງໆ ທີ່ມີຄວາມຮູ້ ຄວາມສາມາດ ນັບມື້ນັບເພີ່ມຂຶ້ນ. ສະນັ້ນ ພັກເຮົາ ຕ້ອງເລັ່ງລັດ ຈັດຕັ້ງການກໍ່ສ້າງ ແລະ ບຳລຸງຍົກລະດັບພະນັກງານ ໃຫ້ໄດ້ທັງທາງດ້ານຈຳນວນ ແລະ ຄຸນນະ ພາບ; ພ້ອມກັນນັ້ນ ກໍຕ້ອງຄຸ້ມຄອງນຳໃຊ້ ໃຫ້ມີປະສິດທິຜົນສູງ; ພັກເຮົາ ຕ້ອງໃຫ້ຄວາມສຳຄັນ

ຕື່ມອີກ ຕໍ່ຜູ້ທີ່ດີ ມີຄວາມສາມາດໂດດເດັ່ນ; ພັກເຮົາ ຕ້ອງມີສາຍຕາກ້ວາງ ສອດສ່ອງໃຫ້ເຫັນຜູ້ທີ່ດີ, ຜູ້ທີ່ເກັ່ງ ແລະ ກ້າຫານນຳໃຊ້ເຂົາເຈົ້າ; ທັງຕ້ອງມີວິທີດຶງດູດ ແລະ ເຕົ້າໂຮມເອົາເຂົາເຈົ້າເຂົ້າມາເຮັດວຽກ, ຮູ້ມອບວຽກອັນເໝາະສົມ ໃຫ້ເຂົາເຈົ້າເຮັດ, ຕ້ອງຮູ້ຍ້ອງຄົນດີ-ຮູ້ໃຊ້ຄົນເກັ່ງ ເພື່ອສ້າງຜົນງານ ໃຫ້ແກ່ປະເທດຊາດ ແລະ ປະຊາຊົນ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

* * *

ພັກປະຊາຊົນປະຕິວັດລາວ
ກົມການເມືອງສູນກາງພັກ.

ເລກທີ: 03 / ກມສພ.

ນະຄອນຫລວງວຽງຈັນ, ວັນທີ 30 ພຶດສະພາ 2011

ຄຳສັ່ງແນະນຳ

ວ່າດ້ວຍ ການສ້າງບ້ານເປັນຫົວໜ່ວຍພັດທະນາ ສ້າງບ້ານໃຫຍ່ ໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດ

ເຖິງ: ເລຂາຄະນະພັກກະຊວງ-ອົງການອ້ອມຂ້າງສູນກາງ; ເລຂາຄະນະພັກນະຄອນຫລວງ ວຽງຈັນ ແລະ ບັນດາແຂວງ ໃນທົ່ວປະເທດ.

ເພື່ອສືບຕໍ່ເສີມຂະຫຍາຍຜົນໄດ້ຮັບ ຈາກການຈັດຕັ້ງປະຕິບັດຄຳສັ່ງແນະນຳ ເລກທີ 09 / ກມສພ, ສະບັບລົງວັນທີ 8 ມີຖຸນາ 2004 ໃນຊຸມປີທີ່ຜ່ານມາ ແລະ ປັບປຸງເນື້ອໃນ ຂອງຄຳສັ່ງແນະນຳ ດັ່ງກ່າວ ໃຫ້ສອດຄ່ອງກັບເງື່ອນໄຂໃຫມ່ ຂອງວຽກງານພັດທະນາຊົນນະບົດ, ໂດຍສະເພາະ ແມ່ນທິດນຳ ກ່ຽວກັບການ “ **ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ** ” ທີ່ກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ ວາງອອກ, ທັງສາມາດບັນລຸ ຄາດຫມາຍສູ້ຊົນ ກ່ຽວກັບການແກ້ໄຂຄວາມທຸກຍາກ ຂອງຄອບຄົວ ໃຫ້ຍັງເຫລືອບໍ່ເກີນ 10% ແລະ ເປົ້າຫມາຍສະຫັດສະວັດ ດ້ານການພັດທະນາ ໃນປີ 2015.

ກົມການເມືອງສູນກາງພັກ ອອກຄຳສັ່ງແນະນຳ :

I. ຄວາມຫມາຍ ຂອງການສ້າງບ້ານເປັນຫົວໜ່ວຍພັດທະນາ, ສ້າງບ້ານໃຫຍ່ ໃຫ້ເປັນຕົວເມືອງນ້ອຍໃນຊົນນະບົດ ແລະ ການສ້າງກຸ່ມບ້ານພັດທະນາ.

1. <u>ການສ້າງບ້ານເປັນຫົວໜ່ວຍພັດທະນາ</u> ຫມາຍເຖິງ ຂະບວນວິວັດແຫ່ງການປັບປຸງ ກໍ່ສ້າງຫົວໜ່ວຍພື້ນຖານ ຂອງລະບອບປະຊາທິປະໄຕປະຊາຊົນ ໃຫ້ມີຄວາມເຂັ້ມແຂງ ດ້ວຍການດຳເນີນມາດ

ຕະການຍຸດທະສາດ ທັນລົງກໍ່ສ້າງຮາກຖານການເມືອງ ຕິດພັນກັບການພັດທະນາຊົນນະບົດຮອບດ້ານ ເພື່ອແກ້ໄຂຄວາມທຸກຍາກ ແລະ ປັບປຸງຍົກລະດັບຊີວິດການເປັນຢູ່ ທາງດ້ານວັດຖຸ ແລະ ຈິດໃຈ ຂອງ ປະຊາຊົນບັນດາເຜົ່າ ຢູ່ຊົນນະບົດ ໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ, ເຮັດໃຫ້ບ້ານ ກາຍເປັນພື້ນຖານທາງການ ເມືອງ ເສດຖະກິດ-ສັງຄົມ-ວັດທະນະທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ອັນໜັ້ນຄົງ ຍືນ ຍົງ ຂອງລະບອບປະຊາທິປະໄຕປະຊາຊົນ. ເພາະສະນັ້ນ ການສ້າງບ້ານ ໃຫ້ເປັນໜ່ວຍພັດທະນາ ຈຶ່ງ ກວມເອົາໜົດກິດຈະກຳພັດທະນາດ້ານຕ່າງໆ ທີ່ປະຕິບັດຢູ່ໃນບ້ານ ເຊັ່ນ: ການກໍ່ສ້າງຮາກຖານການ ເມືອງ, ການພັດທະນາຊົນນະບົດ, ສົ່ງເສີມການຜະລິດ ແລະ ການບໍລິການເປັນສິນຄ້າ, ການສ້າງບ້ານ ວັດທະນະທຳ, ການສ້າງບ້ານປອດຄະດີ, ບ້ານປອດຢາເສບຕິດ ແລະ ອື່ນໆອີກ ໝາຍຄວາມວ່າ ທັງ ໜົດບັນດາກິດຈະກຳ ຂອງການພັດທະນາບ້ານໂຮມເຂົ້າກັນ ເອີ້ນເປັນຂະບວນການ ສ້າງບ້ານເປັນໜ່ວຍ ໜ່ວຍພັດທະນາ, ຊຶ່ງຜົນໄດ້ຮັບອັນສຸດທ້າຍ ແມ່ນບ້ານພັດທະນາ.

2. <u>ບ້ານພັດທະນາ ຕ້ອງບັນລຸໄດ້ 4 ຄາດໝາຍ ດັ່ງນີ້</u> :

2.1. ບ້ານ ມີລະບົບການເມືອງເຂັ້ມແຂງ, ໃນນັ້ນ ມີໜ່ວຍພັກທີ່ໄດ້ຮັບການກໍ່ສ້າງ ແລະ ຍັ້ງ ຍືນ ເປັນໜ່ວຍພັກແຂງ, ມີອົງການປົກຄອງບ້ານ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ທີ່ ເຄື່ອນໄຫວຕາມພາລະໜ້າທີ່ ຢ່າງເປັນປົກກະຕິ ສາມາດເຕົ້າໂຮມຄວາມສາມັກຄີ ປະຊາຊົນບັນດາຊັ້ນ ຄົນ, ບັນດາເຜົ່າ ພາຍໃນບ້ານ, ທັງປຸກລະດົມ ແລະ ຈັດຕັ້ງນຳພາ ຊາວບ້ານ ເປັນກຳລັງແຮງໃນການສ້າງ ສາພັດທະນາບ້ານຊ່ອງ.

2.2. ຊາວບ້ານ ໄດ້ຮັບການສຶກສາອົບຮົມ ດ້ານການເມືອງ-ແນວຄິດ, ມີຄວາມຕື່ນຕົວການເມືອງ ແລະ ມີຄວາມຫ້າວຫັນເປັນເຈົ້າການ ເຂົ້າຮ່ວມໃນວຽກງານລວມ ຂອງບ້ານ ກໍຄື ໃນການທຳມາຫາກິນແກ້ ໄຂຄວາມທຸກຍາກ, ສ້າງຄວາມຢູ່ດີ ກິນດີ ແລະ ຄວາມຮັ່ງມີ ແກ່ຄອບຄົວ; ທັງມີຄວາມສາມັກຄີປອງດອງ ແລະ ນ້ຳໃຈເອື້ອເຟື້ອຊ່ວຍເຫລືອກັນ ເປັນຊຸມຊົນ ທີ່ມີການຄຸ້ມຄອງກັນແໜ້ນ, ຮູ້ໄກ່ເກ່ຍ ແກ້ໄຂບັນຫາ ນຳກັນ ຢ່າງຖືກຕ້ອງເປັນທຳ.

2.3. ບ້ານ ມີພື້ນຖານໂຄງລ່າງ ຫລື ພື້ນຖານວັດຖຸ ເຕັກນິກ ຮັບໃຊ້ການຜະລິດ ແລະ ຊີວິດການ ເປັນຢູ່ ໃນລະດັບທີ່ສາມາດຮັບປະກັນ ໃຫ້ຊາວບ້ານດຳເນີນການຜະລິດ ແລະ ການບໍລິການເປັນສິນຄ້າ ສ້າງລາຍໄດ້ເຂົ້າຄອບຄົວ ເປັນປົກກະຕິ; ພາຍໃນບ້ານ ບໍ່ມີຄອບຄົວທຸກຍາກ, ທຸກຄອບຄົວ ລ້ວນແຕ່ມີ ພໍກິນພໍໃຊ້ ແລະ ມີຊີວິດການເປັນຢູ່ປົກກະຕິດີ; ເດັກໃນເກນອາຍຸເຂົ້າຮຽນ ໄດ້ຮຽນໜັງສືບໍ່ຫລຸດ 98%, ຜູ້ໃຫຍ່ ທີ່ມີອາຍຸ 15 ປີ ຂຶ້ນໄປ ຕ້ອງມີລະດັບການສຶກສາຈົບຊັ້ນປະຖົມບຳລຸງ ແລະ ມີແຜນຍົກລະດັບສູງ

ຂຶ້ນເລື້ອຍໆ; ບ້ານ ໄດ້ຮັບການຢັ້ງຢືນ ເປັນບ້ານແບບຢ່າງ ດ້ານສາທາລະນະສຸກ, ທຸກຄອບຄົວ ຢູ່ກິນມີສຸຂະອະນາໄມ ມີນ້ຳສະອາດໃຊ້ ແລະ ມີວິດຖ່າຍ, ເດັກໃນບ້ານ ໄດ້ຮັບການສັກຢາ ແລະ ຢອດຢາກັນພະຍາດ ບໍ່ຫລຸດ 95%; ອັດຕາສ່ວນການຕາຍ ຂອງເດັກ ແລະ ຂອງແມ່ ຕ້ອງຕ່ຳກວ່າຄາດໝາຍລວມທີ່ລັດວາງອອກ ໃນແຕ່ລະໄລຍະ; ເປັນບ້ານ ທີ່ເປັນລະບຽບຈີບຫາມ ແລະ ມີສິ່ງແວດລ້ອມທີ່ດີ.

2.4. ບ້ານ ມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ເປັນບ້ານປອດຢາເສບຕິດ ເປັນບ້ານປອດຄະດີ ໂດຍມີຊາວບ້ານເອງເຂົ້າຮ່ວມ ເປັນກຳລັງຕົ້ນຕໍ ໃນໜ່ວຍກອງຫລອມ ແລະ ໜ່ວຍປ້ອງກັນຄວາມສະຫງົບບ້ານ.

3. <u>ການສ້າງບ້ານໃຫຍ່ ໃຫ້ເປັນຕົວເມືອງນ້ອຍ ໃນຊົນນະບົດ</u>.

ໃນຂະບວນວິວັດ ແຫ່ງການສ້າງບ້ານພັດທະນານັ້ນ ຢູ່ບາງເຂດ-ບາງບໍລິເວນ ຈະມີຄວາມຈຳເປັນ ເຕົ້າໂຮມເອົາບ້ານ ທີ່ຢູ່ໃກ້ກັນຈຳນວນຫນຶ່ງ ເຂົ້າເປັນບ້ານດຽວ ຫລື ຢູ່ໃກ້ຄຽງກັນ ເພື່ອສະດວກໃນການ ຂະຫຍາຍ ແລະ ນຳໃຊ້ພື້ນຖານໂຄງລ່າງ ຮັບໃຊ້ການຜະລິດ ແລະ ຊີວິດການເປັນຢູ່ ເຊັ່ນ: ລະບົບຊົນລະປະທານ, ຫົນທາງ, ໄຟຟ້າ, ນ້ຳລິນ-ນ້ຳສະອາດ; ໂຮງຮຽນ, ສຸກສາລາ ແລະ ອື່ນໆອີກ; ຊຶ່ງຈະໃຫ້ບໍລິເວນເຂດແຄ້ວນັ້ນ ມີການຂະຫຍາຍຕົວ. ບ້ານທີ່ໂຮມເຂົ້າກັນ ຈະກາຍເປັນບ້ານໃຫຍ່ ແລະ ເປັນໃຈກາງ ທາງດ້ານການປົກຄອງ-ເສດຖະກິດ-ວັດທະນະທຳ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ດ້ານອື່ນໆ.

ການສ້າງບ້ານໃຫຍ່ ໃຫ້ກາຍເປັນຕົວເມືອງນ້ອຍ ຕ້ອງມີການສຶກສາຄົ້ນຄວ້າ ຢ່າງຮອບດ້ານ ວ່າຈະເອົາບ້ານໃດເປັນຈຸດໃຈກາງ ສຳລັບການເຕົ້າໂຮມ ເພື່ອໃຫ້ສາມາດເສີມຂະຫຍາຍທ່າແຮງ ຂອງບໍລິເວນເຂດແຄ້ວນັ້ນ ເຂົ້າໃນການພັດທະນາ ໄດ້ຢ່າງມີປະສິດທິຜົນ. ບ້ານທີ່ເປັນຈຸດໃຈກາງນັ້ນ ຕ້ອງເປັນບ້ານພັດທະນາ ຕາມ 4 ຄາດໝາຍ ທີ່ກຳນົດໄວ້, ທັງຕ້ອງມີເງື່ອນໄຂ ທາງດ້ານທີ່ຕັ້ງພູມສາດ ກໍຄື ດ້ານພື້ນຖານໂຄງລ່າງ ທາງດ້ານເສດຖະກິດ, ວັດຖຸ-ເຕັກນິກ-ວັດທະນະທຳ ແລະ ດ້ານອື່ນໆ ສຳລັບການເປັນຕົວເມືອງນ້ອຍ ເຊັ່ນ: ມີຖະໜົນຫົນທາງ ໄປ-ມາ ສະດວກ, ເຊື່ອມຈອດເຖິງເມືອງ ແລະ ບ້ານ ອື່ນໆ; ມີພື້ນຖານການຜະລິດ ແລະ ປຸງແຕ່ງ ເປັນສິນຄ້າ ທີ່ໜັ້ນຄົງ, ມີຕະຫລາດ, ມີໂຮງຮຽນປະຖົມ ແລະ ມັດທະຍົມສົມບູນ, ມີສຸກສາລາ ຫລື ໂຮງໝໍນ້ອຍ; ມີສະໂມສອນ ຫລື ຫໍວັດທະນະທຳ ຂອງບ້ານ, ມີຫ້ອງສະໝຸດ ແລະ ຫ້ອງອ່ານໜັງສື, ມີບ່ອນຫລິ້ນ ກິລາບາງປະເພດ ແລະ ມີສະຖານທີ່ສາທາລະນະ... ບ້ານໃຫຍ່ ທີ່ເປັນຕົວເມືອງນ້ອຍ ໃນເຂດຊົນນະບົດພູດອຍ ຄວນມີພົນລະເມືອງແຕ່ໜຶ່ງພັນຄົນຂຶ້ນໄປ; ສ່ວນຢູ່ໃນເຂດຊົນນະບົດທົ່ງພຽງ ຄວນມີພົນລະເມືອງແຕ່ສາມພັນຄົນຂຶ້ນໄປ.

4. <u>ກຸ່ມບ້ານພັດທະນາ</u>. ແມ່ນການຈັດຕັ້ງບ້ານ ໃຫ້ເປັນລະບົບຕິດລຽນ ເພື່ອມີເງື່ອນໄຂສະດວກໃນການເສີມຂະຫຍາຍທີ່ຕັ້ງ ຂອງແຕ່ລະບ້ານ ເຂົ້າໃນການປະຕິບັດໜ້າທີ່ ຫລື ຮັບໃຊ້ຈຸດປະສົງເປົ້າໝາຍ

ສະເພາະ. ກຸ່ມບ້ານ ປະກອບດ້ວຍຫລາຍບ້ານ ທີ່ບໍ່ສາມາດ ແລະ ບໍ່ຈຳເປັນເຕົ້າໂຮມ ເຂົ້າເປັນບ້ານໃຫຍ່ ອັນເນື່ອງມາຈາກ ມີຄວາມຈຳເປັນຕ້ອງໃຫ້ແຕ່ລະບ້ານ ປະຕິບັດໜ້າທີ່ ຫລື ເປົ້າໝາຍສະເພາະ ເຊັ່ນ: ການປົກປັກຮັກສາພື້ນທີ່ຊາຍແດນ, ປົກປັກຮັກສາເຂດສະຫງວນ ດ້ານຊັບພະຍາກອນທຳມະຊາດ ຫລື ເຂດທີ່ຍັງມີບັນຫາດ້ານອື່ນ. ຈຸດປະສົງຕົ້ນຕໍ ຂອງການສ້າງກຸ່ມບ້ານ ແມ່ນເພື່ອໃຫ້ມີຄວາມສະດວກ, ມີກຳລັງແຮງໃນການນຳພາ-ຊີ້ນຳ ຂອງຄະນະພັກ, ອົງການປົກຄອງເມືອງ ທັງໃນດ້ານການພັດທະນາເສດຖະກິດ-ສັງຄົມ ກໍຄື ໃນດ້ານວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ. ສະນັ້ນ ໃນກຸ່ມໜຶ່ງ ຈະໃຫ້ມີ ທໍ່ໃດບ້ານ, ແມ່ນໃຫ້ອີງໃສ່ສະພາບດ້ານທີ່ຕັ້ງ ແລະ ໜ້າທີ່ຈຸດສຸມຕົ້ນຕໍ ຂອງກຸ່ມບ້ານນັ້ນ; ແຕ່ຢ່າງ ໜ້ອຍ ໃນກຸ່ມໜຶ່ງ ຄວນມີ 3 ບ້ານຂຶ້ນໄປ.

ການສ້າງ **ກຸ່ມບ້ານ** ບໍ່ໝາຍເຖິງ ການສ້າງຕັ້ງຂັ້ນໜຶ່ງຂຶ້ນຕື່ມ ໃນລະບົບການປົກຄອງທ້ອງຖິ່ນ; ກຸ່ມບ້ານ ບໍ່ແມ່ນຫົວໜ່ວຍການປົກຄອງທ້ອງຖິ່ນ ແລະ ກໍບໍ່ແມ່ນຕາແສງຄືແຕ່ກ່ອນ. ສະນັ້ນ ການສ້າງ ກຸ່ມບ້ານ ແມ່ນເພື່ອຈຸດປະສົງເປົ້າໝາຍອັນແນ່ນອນ, ສະນັ້ນ ຈຶ່ງເອີ້ນວ່າ **ເຂດຈຸດສຸມກຸ່ມບ້ານ**. ໝາຍ ຄວາມວ່າ ກຸ່ມບ້ານນັ້ນ ຕັ້ງຂຶ້ນໂດຍແນໃສ່ແກ້ໄຂບັນຫາຈຸດສຸມໃດໜຶ່ງ ຫລື ປະຕິບັດໜ້າທີ່ຈຸດສຸມໃດໜຶ່ງ.

II. ເນື້ອໃນ ຂອງການສ້າງບ້ານພັດທະນາ.

ການສ້າງບ້ານພັດທະນາ ຢູ່ປະເທດເຮົາ ຕ້ອງດຳເນີນໄປຕາມ 4 ເນື້ອໃນ ຫລື ຕາມ 4 ໜ້າວຽກ ຕົ້ນຕໍ ດັ່ງນີ້ :

1. ດຳເນີນວຽກງານໂຄສະນາສຶກສາອົບຮົມ ການເມືອງ-ແນວຄິດ ຕິດແໜ້ນກັບການປັບປຸງ ກໍ່ສ້າງຮາກຖານການເມືອງ ໃຫ້ໜັກແໜ້ນເຂັ້ມແຂງ ຖ້ວນໜ້ ເປັນອັນຕົກສິນຜົນສຳເລັດ ຂອງການສ້າງ ບ້ານພັດທະນາ :

- ໂຄສະນາສຶກສາອົບຮົມ ແນວທາງນະໂຍບາຍ ຂອງພັກ ແລະ ຂອງລັດ ແລະ ລະບຽບກົດໝາຍ ໃຫ້ປະຊາຊົນ ຮັບຮູ້-ເຂົ້າໃຈ ນັບມື້ນັບເລິກເຊິ່ງ, ໃນນັ້ນ ເອົາໃຈໃສ່ເປັນພິເສດ ຕໍ່ຜູ້ເປັນຫລັກ ແຫລ່ງ ເພື່ອຊ່ວຍໂຄສະນາອະທິບາຍ ແລະ ເປັນແບບຢ່າງນຳພາຜູ້ອື່ນເຮັດຕາມ.

- ສຶກສາອົບຮົມ ປຸກລະດົມ ປະຊາຊົນ ໃຫ້ມີຄວາມຕື່ນຕົວ ເປັນເຈົ້າການທຳມາຫາກິນ ແກ້ໄຂ ຄວາມທຸກຍາກ ແລະ ສ້າງຄວາມຢູ່ດີ ກິນດີ ແກ່ຄອບຄົວ; ປະກອບສ່ວນ ເຂົ້າໃນການສ້າງສາພັດທະນາ ບ້ານຊ່ອງ ແລະ ປະຕິບັດພັນທະໜ້າທີ່ ຂອງພົນລະເມືອງ; ເວົ້າລວມ ແມ່ນເຮັດແນວໃດ ໃຫ້ຊາວບ້ານ ມີ ແນວຄິດພັດທະນາ, ມີນ້ຳໃຈສາມັກຄີເອື້ອເຟື້ອຊ່ວຍເຫລືອກັນ, ພ້ອມພຽງກັນ ຜ່ານຜ່າອຸປະສັກ ແລະ ຄວາມຫຍຸ້ງຍາກ ເພື່ອປັບປຸງ ແລະ ຍົກລະດັບຄຸນນະພາບຊີວິດ ຂອງຕົນ ໃຫ້ສູງຂຶ້ນເລື້ອຍໆ.

- ປັບປຸງ-ກໍ່ສ້າງໜ່ວຍພັກ ໃຫ້ເປັນໜ່ວຍພັກແຂງ, ສະມາຊິກພັກ ມີຄວາມໜ້າວໜັ່ນ ເປັນແບບຢ່າງນຳໜ້າ ທັງຮູ້ສຶກສາອົບຮົມ ປຸກລະດົມ ຈັດຕັ້ງນຳພາຊາວບ້ານ ທຳມາຫາກິນ ປູກຝັ່ງ-ລ້ຽງສັດ ເປັນສິນຄ້າ, ຮູ້ຈັກຊື້-ຂາຍ ແລະ ເຮັດການບໍລິການ ສ້າງລາຍໄດ້ ເພື່ອແກ້ໄຂຄວາມທຸກຍາກ ແລະ ສ້າງຄວາມຢູ່ດີ ກິນດີ ແກ່ຄອບຄົວ; ພ້ອມກັນນັ້ນ ກໍເປັນແບບຢ່າງ ໃນການບຸກບືນສູ້ຊົນຮ່ຳຮຽນ, ຍົກລະດັບການສຶກສາ ຂອງຕົນ ໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ.

- ປັບປຸງການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການແນວລາວສ້າງຊາດ ແລະ ອົງການມະຫາຊົນອື່ນໆ ຢູ່ຂັ້ນບ້ານ ໃຫ້ເປັນກຳລັງແຮງ ຊ່ວຍໜູນການພັດທະນາບ້ານຊ່ອງ.

2. ສຸມທຸກກຳລັງ ແລະ ສຸມທຸກການຊີ້ນຳ ເຂົ້າໃສ່ການແກ້ໄຂຄວາມທຸກຍາກ ດ້ວຍການສົ່ງເສີມການຜະລິດ ແລະ ການບໍລິການ ເປັນສິນຄ້າ, ປັບປຸງຄຸນນະພາບຊີວິດ ຂອງຊາວຊົນນະບົດ ໃຫ້ດີຂຶ້ນ ໂດຍຖືອັນນີ້ ເປັນໜ້າທີ່ວຽກງານໃຈກາງ ຂອງການສ້າງບ້ານພັດທະນາ :

- ກຳແໜ້ນຈຳນວນຄອບຄົວທຸກຍາກ, ໂດຍຈຳແນກໃຫ້ແຈ້ງ ສາເຫດຂອງມັນ ເພື່ອກຳນົດວິທີການ ມາດຕະການແກ້ໄຂ ໃຫ້ຖືກຕ້ອງແທດເໝາະ ໂດຍແນໃສ່ສຳເລັດຕາມຄາດໝາຍ ຄື: ເຖິງໃນປີ 2015 ຢູ່ແຕ່ລະບ້ານ ບໍ່ໃຫ້ມີຄອບຄົວທຸກຍາກ ເກີນ 10% ຂອງຈຳນວນຄອບຄົວທັງໝົດ.

- ໃນການແກ້ໄຂຄວາມທຸກຍາກ ແລະ ສ້າງຄວາມຢູ່ດີ ກິນດີ ຂອງຄອບຄົວນັ້ນ ໃຫ້ເອົາໃຈໃສ່ສ້າງເງື່ອນໄຂ ຫລື ປັດໄຈອັນຈຳເປັນ ຈຳນວນໜຶ່ງ ດັ່ງນີ້ :

+ ກໍ່ສ້າງ ແລະ ຂະຫຍາຍພື້ນຖານໂຄງລ່າງ ຮັບໃຊ້ການຜະລິດ ແລະ ຊີວິດການເປັນຢູ່ ຂອງປະຊາຊົນ ໂດຍສະເພາະ ແມ່ນຫົນທາງ, ໄຟຟ້າ, ຊົນລະປະທານ, ສູນສົ່ງເສີມການຜະລິດກະສິກຳ...

+ ເອົາໃຈໃສ່ ຕໍ່ການຈັດຕັ້ງຝຶກອົບຮົມ, ໃຫ້ຄວາມຮູ້ພື້ນຖານ ແກ່ປະຊາຊົນ ກ່ຽວກັບການປູກຝັ່ງ-ລ້ຽງສັດ ເປັນສິນຄ້າ ໂດຍອີງໃສ່ທ່າແຮງ ຂອງແຕ່ລະພື້ນທີ່ຕົວຈິງ ແລະ ຈັດຕັ້ງຝຶກອົບຮົມກັບທີ່ ເປັນ ຕົ້ນຕໍ.

+ ຕອບສະໜອງທຶນ (ເປັນເງິນ, ເປັນສັດລ້ຽງ, ເປັນແນວພັນພືດ ຫລື ເປັນວັດຖຸອື່ນໆ) ທີ່ຈຳເປັນໃຫ້ແກ່ປະຊາຊົນ (ໂດຍສະເພາະ ແມ່ນຜູ້ທີ່ມີຄວາມຕື່ນຕົວ ຢາກເຮັດແທ້ທຳຈິງ) ໂດຍມີການອະທິບາຍແນະນຳ ໃຫ້ລະອຽດຈະແຈ້ງ ກ່ຽວກັບວິທີການນຳໃຊ້ ຄຸ້ມຄອງ, ແຕ່ບໍ່ມີເງື່ອນໄຂຜູກມັດຫລາຍ.

+ ມີການຕິດຕາມ, ແນະນຳ-ຊ່ວຍໜູນ ທາງດ້ານວິຊາການ ເພື່ອໃຫ້ການປູກຝັ່ງ-ລ້ຽງສັດ ຂອງເຂົາເຈົ້າ ມີປະສິດທິຜົນ.

+ ຕ້ອງມີຕະຫລາດ ຊື້-ຂາຍ ຮອງຮັບ (ຜະລິດອອກມາແລ້ວ ໃຫ້ໄດ້ຂາຍ) ແລະ ມີການປຸງແຕ່ງຍິ່ງເປັນການດີ.

+ ຈັດຕັ້ງ ໃຫ້ມີກອງທຶນແກ້ໄຂຄວາມທຸກຍາກ ຫລື ສະຫະກອນສິນເຊື່ອ, ສະຫະກອນບໍລິການ; ສະຫະກອນຜະລິດ ລວມທັງທະນາຄານເຂົ້າ, ທະນາຄານສັດ... ເພື່ອຊຸກຍູ້ສົ່ງເສີມການຜະລິດ ແລະ ການບໍລິການສ້າງລາຍໄດ້ ຂອງປະຊາຊົນ.

+ ຈັດຕັ້ງກຸ່ມຜູ້ຜະລິດ, ກຸ່ມລ້ຽງສັດ, ກຸ່ມນຳໃຊ້ນ້ຳ, ກຸ່ມຫັດຖະກຳ, ກຸ່ມຜູ້ຜະລິດເຂົ້າ-ພືດຜັກປອດສານພິດ... ເພື່ອສະດວກໃນການຈັດຕັ້ງຝຶກອົບຮົມ ແລະ ໃຫ້ການບໍລິ ການ ທາງດ້ານວິຊາການ; ລວມທັງ ໃຫ້ຂໍ້ມູນຂ່າວສານ ແລະ ການປົກປ້ອງຜົນປະໂຫຍດ ຂອງກຸ່ມ.

+ ຄົ້ນຄວ້າອອກນະໂຍບາຍ ແລະ ມາດຕະການສົ່ງເສີມເປັນພິເສດ ຕໍ່ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄປລົງທຶນເຂົ້າໃນໂຄງການແກ້ໄຂຄວາມທຸກຍາກ ຂອງປະຊາຊົນ ໃນເຂດທີ່ຢູ່ຫ່າງໄກສອກຫລີກ ແລະ ທຸລະກັນດານ, ເພື່ອສ້າງບາດກ້າວບຸກທະລຸ ໃນການແກ້ໄຂຄວາມທຸກຍາກ ໃຫ້ເປັນຈິງ.

+ ໃຫ້ຈັດສັນພື້ນທີ່ທຳການຜະລິດ ແລະ ຕັ້ງຖິ່ນຖານພູມລຳເນົາຄົງທີ່ ໃຫ້ແກ່ປະຊາຊົນ, ກ່ອນອື່ນ ແມ່ນຜູ້ທີ່ບໍ່ມີບ່ອນທຳມາຫາກິນ ແລະ ບໍ່ມີຖິ່ນຖານຖາວອນ, ຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການພັດທະນາຕ່າງໆ; ຜູ້ທີ່ເຮັດໄຮ່ເລື່ອນລອຍ, ຜູ້ທີ່ປະສົບກັບໄພພິບັດທາງທຳມະຊາດ ແລະ ອື່ນໆ... ເພື່ອສະກັດກັ້ນ ແລະ ແກ້ໄຂສະພາບການເຄື່ອນຍ້າຍ ແບບຊະຊາຍ ຂອງພົນລະເມືອງ ໃຫ້ຕົກໄປ; ໃຫ້ປະຊາຊົນ ມີຄວາມອຸ່ນອຽນ ໃນການທຳມາຫາກິນແກ້ໄຂຄວາມທຸກຍາກ ແລະ ສ້າງຄວາມຢູ່ດີ ກິນດີ ໃຫ້ແກ່ຄອບຄົວ ບົນພື້ນຖານການມີດິນເປັນຂອງຕົນເອງ.

3. ພັດທະນາຂົງເຂດສັງຄົມ-ວັດທະນະທຳ ໃຫ້ສົມຄູ່ກັບເສດຖະກິດ ໂດຍສະເພາະ ແມ່ນການສົ່ງເສີມການສຶກສາ ແລະ ການຂະຫຍາຍຕາໜ່າງບໍລິການ ດ້ານສາທາລະນະສຸກ ໃຫ້ທົ່ວເຖິງແຕ່ລະບ້ານ ເພື່ອສ້າງເງື່ອນໄຂ ໃຫ້ແກ່ການບັນລຸເປົ້າໝາຍສະຫັດສະວັດ ດ້ານການພັດທະນາ ໃນປີ 2015 ແລະ ເປັນພື້ນຖານອັນໜັກແໜ້ນ ໃຫ້ແກ່ການພັດທະນາ ໃນຂັ້ນຕໍ່ໄປ.

ບ້ານ ແມ່ນບ່ອນດຳລົງຊີວິດ ແລະ ທຳມາຫາກິນ ເປັນປະຈຳໃນແຕ່ລະວັນ ຂອງປະຊາຊົນ, ສະນັ້ນ ຕ້ອງເຮັດໃຫ້ບ້ານມີການພັດທະນາ ທາງດ້ານສັງຄົມ-ວັດທະນະທຳ ທີ່ສົມຄູ່ກັບເສດຖະກິດ ເພື່ອໃຫ້ບ້ານເປັນບ່ອນຢູ່ອາໄສ ທີ່ມີຊີວິດຊີວາ ແລະ ມີພື້ນຖານ ແຫ່ງການພັດທະນາແບບຍືນຍົງ; ເມື່ອເປັນແນວນັ້ນ ຕ້ອງເອົາໃຈໃສ່ ດັ່ງນີ້ :

- ອະນຸລັກຮັກສາ ແລະ ເສີມຂະຫຍາຍ ມູນເຊື້ອວັດທະນະທຳ-ປະເພນີ ຂອງປະຊາຊົນບັນດາເຜົ່າ ໃນແຕ່ລະບ້ານ; ເສີມສ້າງຄວາມສາມັກຄີປອງດອງ ລະຫວ່າງເຜົ່າ ໃຫ້ແໜ້ນແຟ້ນ ບໍ່ໃຫ້ມີການຈຳແນກ ຫລື ຫມິ່ນປະໝາດເຜົ່ານັ້ນ ເຜົ່ານີ້, ທັງມີສະຕິຕໍ່ກັນ ອຸບາຍແບ່ງແຍກຄວາມສາມັກຄີ ລະຫວ່າງເຜົ່າ

ກໍ່ຄື ການສວຍໃຊ້ບັນຫາສາສະໜາ ແລະ ບັນຫາອື່ນໆ...

- ຈັດຕັ້ງເທສະການ ຫລື ກິດຈະກຳ ສົ່ງເສີມວັດທະນະທຳ ຂອງເຜົ່າຕ່າງໆ ເປັນປະຈຳ ຕາມມູນເຊື້ອ ແລະ ປະເພນີ ຂອງແຕ່ລະເຜົ່າ (ງານບຸນປະເພນີ) ຢູ່ໃນບ້ານ ເພື່ອສ້າງບັນຍາກາດສາມັກຄີເບີກບານ, ເຮັດໃຫ້ຊາວບ້ານ ໂດຍສະເພາະ ແມ່ນໄວໜຸ່ມ ມີຄວາມຮັກ ຄວາມຜູກພັນກັບບ້ານ, ຢາກດຳລົງຊີວິດຢູ່ບ້ານ (ບໍ່ຢາກໜີໄປຢູ່ບ່ອນອື່ນ). ສະນັ້ນ ຢູ່ບ້ານ ຫລື ກຸ່ມບ້ານ ໃຫ້ມີສະໂມສອນ ຫລື ຫໍວັດທະນະທຳ, ມີຫ້ອງສະໝຸດ ຫລື ຫ້ອງອ່ານໜັງສື, ມີໂທລະໂຄ່ງ ແລະ ກະດານແຈ້ງຂ່າວ, ມີເດີ່ນຫລິ້ນກິລາບາງປະເພດ; ມີສະຖານທີ່ສາທາລະນະ ເພື່ອເປັນບ່ອນເຕົ້າໂຮມມວນຊົນ...

- ຢູ່ແຕ່ລະບ້ານ ຕ້ອງມີການຈັດຕັ້ງຮຽນໜັງສື ເພື່ອລົບລ້າງການກ້ຳກາໜັງສື ແລະ ບຳລຸງວັດທະນະທຳ ໃຫ້ປະຊາຊົນ ໂດຍຕິດພັນກັບການຝຶກອົບຮົມ ສົ່ງຄວາມຮູ້ ກ່ຽວກັບການທຳມາຫາກິນ ປູກຝັ່ງ-ລ້ຽງສັດ; ຈັດຕັ້ງການໂຄສະນາສຸຂະສຶກສາ ເປັນປົກກະຕິ, ປ້ອງກັນ ແລະ ເຝົ້າລະວັງ ການເກີດພະຍາດລະບາດ ໃນຄົນ ແລະ ໃນສັດ; ຮັບປະກັນ ໃຫ້ປະຊາຊົນ ໄດ້ຮັບການກວດກາສຸຂະພາບ, ປິ່ນປົວພະຍາດ ແລະ ໄດ້ຮັບບໍລິການດ້ານສາທາລະນະສຸກ ຢ່າງທົ່ວເຖິງ; ໃນສະເພາະໜ້ານີ້ ຕ້ອງປະຕິບັດນະໂຍບາຍຮຽນຈົບຊັ້ນປະຖົມ ພາກບັງຄັບ ແລະ ການເກີດລູກ ຢູ່ສຸກສາລາ, ຢູ່ໂຮງໝໍ ໂດຍບໍ່ເສຍຄ່າໃດໆ ໃຫ້ເປັນຈິງ.

4. ຈັດຕັ້ງປະຕິບັດ ແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ ຢູ່ຮາກຖານບ້ານ ແລະ ກຸ່ມບ້ານ ຢ່າງເປັນລະບົບ ຕໍ່ເນື່ອງປົກກະຕິ; ສ້າງບ້ານປ້ອມໝັ້ນ ແລະ ກຸ່ມບ້ານສູ້ຮົບຕິດລ່ຽນ ໃນບັນດາເຂດ ແລະ ບໍລິເວນຈຸດສຸມ; ແກ້ໄຂໃຫ້ໄດ້ ໜໍ່ແໜງ ແລະ ປັດໄຈ ຂອງຄວາມບໍ່ສະຫງົບປອດໄພ :

- ຈັດຕັ້ງໜ່ວຍກອງຫລອນ ແລະ ໜ່ວຍປ້ອງກັນຄວາມສະຫງົບ ຂອງບ້ານ ແລະ ກຸ່ມບ້ານ ໂດຍມີການຫັດແອບ, ຝຶກຊ້ອມ ເປັນປົກກະຕິ; ມີການປະກອບອາວຸດ ຢ່າງເໝາະສົມ.

- ກຳນົດລະບຽບການເຄື່ອນໄຫວ, ປະສານສົມທົບ ແລະ ຂອບເຂດຄວາມຮັບຜິດຊອບ ໃຫ້ຈະແຈ້ງລະຫວ່າງກຳລັງຕ່າງໆ, ທັງມີການປະຕິບັດລະບອບນະໂຍບາຍ ຢ່າງເໝາະສົມ.

- ກຳນົດລະບຽບການຄຸ້ມຄອງພົນລະເມືອງ ແລະ ລະບຽບການຮັກສາຄວາມສະຫງົບ-ຄວາມເປັນລະບຽບຮຽບຮ້ອຍ, ລວມທັງ ລະບຽບການເສຍຄ່າທຳນຽມຕ່າງໆ ສຳລັບພົນລະເມືອງ ຢູ່ຂັ້ນບ້ານ ໃຫ້ເປັນລະບົບເອກະພາບ.

- ຕັ້ງໜ້າກຳຈັດ ແລະ ແກ້ໄຂການປູກຝິ່ນ, ບັນຫາຢາເສບຕິດ (ໂດຍສະເພາະ ໃນໂຮງຮຽນ ແລະ ຖ້ຳແຖວຊາວໜຸ່ມ), ບັນຫາການພະນັນ ແລະ ປະກົດການຫຍໍ້ທໍ້ອື່ນໆ ໃນສັງຄົມ ຢ່າງຈິງຈັງ ດ້ວຍກຳລັງແຮງສັງລວມ ທີ່ມີຢູ່ໃນແຕ່ລະຮາກຖານບ້ານ, ເຮັດໃຫ້ບ້ານ ເປັນບ້ານປອດຢາເສບຕິດ, ເປັນບ້ານປອດຄະດີ...

III. ມາດຕະການຈັດຕັ້ງປະຕິບັດ.

ການສ້າງບ້ານພັດທະນາ ແມ່ນວຽກທີ່ໄດ້ປະຕິບັດມາຫລາຍປີແລ້ວ, ທຸກທ້ອງຖິ່ນ ແລະ ບັນດາ ຂະແໜງການກ່ຽວຂ້ອງ ລ້ວນແຕ່ມີບົດຮຽນ ໃນດ້ານໃດ ດ້ານໜຶ່ງ ອັນແນ່ນອນ, ແຕ່ເພື່ອໃຫ້ການຈັດຕັ້ງ ປະຕິບັດ ມີຄວາມເປັນເອກະພາບ ແລະ ມີຜົນສຳເລັດດີຂຶ້ນຕື່ມອີກ ໃຫ້ເອົາໃຈໃສ່ປະຕິບັດມາດຕະການ ຈຳນວນໜຶ່ງ ດັ່ງນີ້ :

1. ໃຫ້ຄົ້ນຄວ້າເນື້ອໃນ ຂອງຄຳສັ່ງແນະນຳສະບັບນີ້ ຢ່າງລະອຽດເລິກເຊິ່ງ; ຈາກນັ້ນ ຈຶ່ງຜັນ ຂະຫຍາຍ ແລະ ກຳນົດບາດກ້າວຈັດຕັ້ງປະຕິບັດ ໃຫ້ເປັນຮູບປະທຳ ໂດຍອີງໃສ່ທ່າແຮງ ແລະ ສະພາບຈຸດພິເສດ ຂອງແຕ່ລະທ້ອງຖິ່ນ ແຕ່ລະຂະແໜງການ; ກຳແໜ້ນບົດຮຽນ ທີ່ດີ ມີຜົນສຳ ເລັດ ໃນຊຸມປີທີ່ຜ່ານມາ ແລະ ໃຫ້ເປັນເຈົ້າການ ສືບຕໍ່ເສີມຂະຫຍາຍ ຢ່າງກ້ວາງຂວາງ ທົ່ວເຖິງ, ພ້ອມກັນນັ້ນ ກໍປັບປຸງແກ້ໄຂ ອັນທີ່ເຮັດບໍ່ຖືກ-ເຮັດບໍ່ໄດ້ຮັບຜົນ ເພື່ອສ້າງບາດກ້າວບຸກທະລຸ ໃນການ ແກ້ໄຂຄວາມທຸກຍາກ ແລະ ສ້າງບ້ານພັດທະນາ ໃຫ້ມີຈຳນວນຫລາຍຂຶ້ນ.

2. ໃຫ້ບັນດາອົງການຂັ້ນສູນກາງ ທີ່ກ່ຽວຂ້ອງ ສົມທົບກັບແຂວງ ເພື່ອກຳນົດໃຫ້ຈະແຈ້ງ ຄາດ ໝາຍສູ້ຊົນ ທີ່ຕ້ອງປະຕິບັດໃຫ້ເປັນຈິງ ສຳລັບ 4-5 ປີ ຕໍ່ໜ້າ ດັ່ງນີ້ :

+ ຄາດໝາຍການສ້າງບ້ານພັດທະນາ ຈະໃຫ້ໄດ້ທໍ່ໃດ, ມີບ້ານໃດແດ່, ຢູ່ເມືອງໃດ, ໃນແຕ່ ລະແຂວງ, ຈາກນັ້ນ ສະຫລຸບເປັນຄາດໝາຍລວມ ໃນທົ່ວປະເທດ.

+ ຄາດໝາຍການສ້າງບ້ານໃຫຍ່ (ໂຮມບ້ານ) ໃຫ້ເປັນຈຸດສຸມພັດທະນາ ເພື່ອກາຍເປັນຕົວ ເມືອງນ້ອຍ ໃນຊົນນະບົດນັ້ນ ຈະສຸມໃສ່ບ່ອນໃດແດ່, ບ່ອນນັ້ນ ມີເງື່ອນໄຂ ແລະ ມີທີ່ຕັ້ງສຳຄັນ ໃນ ດ້ານຕ່າງໆ ຄືແນວໃດ; ມີໂຄງການ-ມີກິດຈະການພັດທະນາ ອັນໃດແດ່ ເພື່ອຫັນໃຫ້ເປັນຕົວເມືອງ ນ້ອຍ ເທື່ອລະກ້າວ ໂດຍມີການທ້ຽງທຳກະກຽມ ໃຫ້ລະອຽດຮອບຄອບ, ເມື່ອໂຮມເຂົ້າກັນແລ້ວ ຕ້ອງ ມີເງື່ອນໄຂສະດວກກວ່າເກົ່າ, ຮັບປະກັນ ບໍ່ໃຫ້ປະຊາຊົນ ກັບຄືນບ້ານເກົ່າ ຫລື ຫນີໄປຢູ່ບ່ອນໃຫມ່.

+ ຈະກຳນົດໃຫ້ມີຈັກກຸ່ມບ້ານຈຸດສຸມ (ຕາມຄວາມຈຳເປັນ ຕ້ອງຮັກສາເປັນກຸ່ມ), ແຕ່ລະກຸ່ມ ບ້ານນັ້ນ ມີຈຸດປະສົງເປົ້າໝາຍຫຍັງ ເປັນຕົ້ນຕໍ ແລະ ຕ້ອງດຳເນີນວຽກງານ ອັນໃດແດ່ ເພື່ອສ້າງ ກຸ່ມນັ້ນ ໃຫ້ເຂັ້ມແຂງ ກ່ອນອື່ນ ແມ່ນສ້າງບ້ານທີ່ເປັນໃຈກາງ ຂອງກຸ່ມ.

+ ໃຫ້ກຳນົດເຂດຈຸດສຸມພັດທະນາ (ໂຄງການຈຸດສຸມ) ຂອງສູນກາງ, ຂອງແຂວງ ແລະ ຂອງ ເມືອງ ໃຫ້ຈະແຈ້ງ ໂດຍສະເພາະ ເຂດຈຸດສຸມພັດທະນາ ທີ່ຫມັ້ນປະຕິວັດ, ເຂດຈຸດສຸມ ດ້ານ ປກຊ-ປກສ; ເຂດຈຸດສຸມ ເພື່ອສະຫງວນຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ເຂດຈຸດສຸມ ເພື່ອ ຈັດສັນພູມລຳເນົາ ແລະ ບ່ອນທຳມາຫາກິນຄົງທີ່ ທີ່ຍືນຍົງ ເພື່ອຢຸດຕິການຖາງປ່າເຮັດໄຮ່ ແບບ

ເລື່ອນລອຍ ແລະ ເພື່ອຮອງຮັບ ຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການພັດທະນາຕ່າງໆ.

ໃຫ້ກຳນົດແຈ້ງວ່າ ເຂດຈຸດສຸມນັ້ນຢູ່ໃສ, ໃຜເປັນຜູ້ຮັບຜິດຊອບ, ມີໂຄງການວຽກງານ ອັນໃດແດ່, ໃຊ້ທຶນຮອນ ຄິແນວໃດ, ທຶນຮອນ ມາຈາກໃສ, ໄລຍະຈັດຕັ້ງປະຕິບັດ ທ່ໃດປີ...

3. ໃຫ້ລັດຖະບານ ຮີບຮ້ອນຄົ້ນຄວ້າ ອອກນະໂຍບາຍ ແລະ ມາດຕະການ ສົ່ງເສີມເປັນພິເສດ ເພື່ອຊຸກຍູ້ໃຫ້ນັກລົງທຶນ ຫລື ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ໄປລົງທຶນໃນໂຄງການຕ່າງໆ ທີ່ຕິດພັນກັບການແກ້ໄຂຄວາມທຸກຍາກ ແລະ ພັດທະນາຊົນນະບົດ (ການລົງທຶນປູກຝັງ, ລ້ຽງສັດ; ປຸງແຕ່ງຜົນຜະລິດ ກະສິກຳ-ປ່າໄມ້ ແລະ ຫັດຖະກຳ; ການປູກພືດເປັນຢາ; ການບໍລິການເກັບຊື້ ແລະ ການບໍລິການ ທາງດ້ານເຕັກນິກວິຊາການ, ການຟື້ນຟູບູລະນະຮັກສາປ່າໄມ້ ແລະ ຊີວະນາໆພັນ ເພື່ອການສຶກສາຄົ້ນຄວ້າ ແລະ ການທ່ອງທ່ຽວ...) ໃນເຂດ ທີ່ຍັງຫຍຸ້ງຍາກ-ທ່າງໄກສອກຫລີກ ແລະ ທຸລະກັນດານ, ເປັນຕົ້ນ ແມ່ນ :

+ ນະໂຍບາຍ ດ້ານການເຊົ່າ ແລະ ສຳປະທານທີ່ດິນ.

+ ນະໂຍບາຍ ດ້ານການຍົກເວັ້ນ ແລະ ຫລຸດຜ່ອນການເສຍພາສີ-ອາກອນ.

+ ນະໂຍບາຍ ດ້ານການນຳເຂົ້າພາຫະນະ, ອຸປະກອນ ຮັບໃຊ້ການຜະລິດ ແລະ ສົ່ງອອກຜົນຜະລິດ.

+ ນະໂຍບາຍ ດ້ານແຮງງານ, ການຝຶກອົບຮົມຍົກລະດັບ ສີມືແຮງງານ ແລະ ດ້ານອື່ນໆອີກ.

4. ໃຫ້ລັດຖະບານ ຮີບຮ້ອນປະກາດໃຊ້ ແລະ ຊີ້ນຳ ການປະຕິບັດນະໂຍບາຍລະອຽດ ທາງດ້ານການສຶກສາ ແລະ ສາທາລະນະສຸກ ສຳລັບປະຊາຊົນ ທີ່ຢູ່ຊົນນະບົດ, ກ່ອນອື່ນ ແມ່ນຜູ້ທີ່ຍັງທຸກຍາກຂາດເຂີນ ໃຫ້ມີເງື່ອນໄຂໄດ້ຮັບການສຶກສາ ແລະ ການບໍລິການ ດ້ານສາທາລະນະສຸກ ຢ່າງທົ່ວເຖິງກວ່າເກົ່າ ແນໃສ່ບັນລຸຄາດໝາຍສະຫັດສະວັດ ດ້ານການພັດທະນາ ໃນປີ 2015 ກ່ອນອື່ນ ແມ່ນສຳເລັດການສຶກສາ ຊັ້ນປະຖົມພາກບັງຄັບ, ການເກີດລູກ ຢູ່ໂຮງໝໍ ແລະ ສຸກສາລາ ໂດຍບໍ່ເສຍຄ່າ; ການປິ່ນປົວພະຍາດ ສຳລັບເດັກອາຍຸຕ່ຳກວ່າ 5 ປີ ໂດຍບໍ່ໄດ້ເສຍຄ່ານັ້ນ ໃຫ້ໄດ້ຢ່າງແທ້ຈິງ.

5. ໃຫ້ລັດຖະບານ ປະຕິບັດລະບອບນະໂຍບາຍສົ່ງເສີມ ສຳລັບເປົ້າໝາຍພະນັກງານ ນາຍຄູ, ນາຍໝໍ, ພະນັກງານວິຊາການ... ຜູ້ທີ່ລົງເຮັດວຽກປະຈຳການ ຢູ່ຮາກຖານບ້ານ ໃນເຂດຊົນນະບົດຫ່າງໄກສອກຫລີກ ແລະ ທຸລະກັນດານ ໃຫ້ແທດເໝາະຕົວຈິງ.

ພ້ອມກັນນັ້ນ ກໍໃຫ້ກຳນົດລະບອບການສັບຊ້ອນ ເອົານັກຮຽນ, ນັກສຶກສາ ທີ່ສຳເລັດຈາກສະຖາບັນການສຶກສາວິຊາຊີບ ແລະ ມະຫາວິທະຍາໄລ ລົງເຮັດວຽກປະຈຳຢູ່ຮາກຖານ ເພື່ອຝຶກຝົນທົດສອບໃນວຽກງານຕົວຈິງ, ຈາກນັ້ນ ຈຶ່ງຮັບເຂົ້າເປັນລັດຖະກອນ ຕາມຜົນງານຕົວຈິງ ຂອງແຕ່ລະ

ຄົນ ແລະ ຕາມຄວາມຮຽກຮ້ອງຕ້ອງການຕົວຈິງ.

- ໃຫ້ສະຫງວນໂຄຕ້າພະນັກງານປະຈຳປີ ສຳລັບເຂດຈຸດສຸມພັດທະນາ ເພື່ອຈະມີເງື່ອນໄຂ ຕອບສະໜອງ ຄວາມຕ້ອງການພະນັກງານ ຂອງເຂດດັ່ງກ່າວ ໃຫ້ໄດ້ຢ່າງພຽງພໍ ໂດຍສະເພາະ ແມ່ນພະນັກງານຄູ, ແພດໝໍ, ພະນັກງານວິຊາການກະສິກຳ ປູກຝັ່ງ-ລ້ຽງສັດ-ສັດຕະວະແພດ...

6. ໃຫ້ຄະນະພັກແຂວງ ສົມທົບກັບຄະນະພັກເມືອງ ແລະ ຄະນະພັກຮາກຖານ ປຶກສາຫາລື ແລະ ຕົກລົງ ຢ່າງເປັນເອກະພາບ ກ່ຽວກັບການຫັນເອົາພະນັກງານ (ທັງພະນັກງານການເມືອງ ແລະ ພະນັກງານວິຊາການ) ລົງປະຈຳຢູ່ຈຸດສຸມພັດທະນາ, ຢູ່ກຸ່ມບ້ານ ຫລື ຢູ່ບ້ານ ໂດຍສອດຄ່ອງ ກັບ ຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງໂຄງການວຽກງານ ຢູ່ແຕ່ລະບ່ອນ, ທັງນີ້ ກໍເພື່ອຫລີກເວັ້ນ ການຫັນເອົາພະນັກງານ ລົງໄປຮາກຖານແບບເປັນຂະບວນ, ເປັນແຕ່ລະບັ້ນ ແຕ່ລະຍາມ ທຽວ ຂຶ້ນທຽວລົງ ແຕ່ບໍ່ມີປະສິດທິຜົນຕົວຈິງ, ຍິ່ງໄປກວ່ານັ້ນ ພາໃຫ້ສິ້ນເປືອງງົບປະມານ ຢ່າງຫລວງ ຫລາຍ; ໃນກໍລະນີ ບໍ່ມີພະນັກງານ (ເພື່ອເຮັດວຽກຈຸດສຸມ ຂອງໂຄງການ) ກໍໃຫ້ສະເໜີຂຶ້ນມາຫາ ສູນກາງ ພິຈາລະນາຈັດຫາໃຫ້; ໃນສະເພາະໜ້ານີ້ ຕ້ອງປະຕິບັດໃຫ້ເປັນຈິງ ທິດນຳທີ່ວ່າ *"ທຸກວຽກ ຈຸດສຸມສຳຄັນ ຕ້ອງມີຜູ້ເຮັດຕົວຈິງ ແລະ ມີຜູ້ຮັບຜິດຊອບນຳພາ-ຊີ້ນຳເປັນປະຈຳ"*.

7. ໃຫ້ຄະນະພັກ ບັນດາອົງການອ້ອມຂ້າງສູນກາງ ເພີ່ມຄວາມເອົາໃຈໃສ່ຊີ້ນຳ ພະນັກງານ ຕາມຂະແໜງການສາຍຕັ້ງຂອງຕົນ ເພື່ອໃຫ້ເຂົາເຈົ້າປະກອບສ່ວນ ຢ່າງຕັ້ງໜ້າ ເຂົ້າໃນວຽກງານ ສ້າງບ້ານພັດທະນາ, ສ້າງເຂດຈຸດສຸມ ແລະ ກຸ່ມບ້ານພັດທະນາ ຕາມການນຳພາ-ຊີ້ນຳ ຂອງຄະນະ ພັກທ້ອງຖິ່ນ.

ພ້ອມກັນນີ້ ກໍໃຫ້ດຳເນີນການສຶກສາອົບຮົມ ການເມືອງ-ແນວຄິດ ແຕ່ງຕັ້ງມອບໝາຍພະ ນັກງານ ຂອງຕົນ ລົງເຮັດວຽກປະຈຳຢູ່ຮາກຖານບ້ານ, ກຸ່ມບ້ານ ແລະ ເຂດຈຸດສຸມ ຕາມຄວາມຮຽກ ຮ້ອງຕ້ອງການ ຂອງໂຄງການວຽກງານ ແຕ່ລະບ່ອນ.

ບັນດາສະຫາຍ ການນຳ ຂອງບັນດາອົງການອ້ອມຂ້າງສູນກາງ ຕ້ອງມີລະບອບລົງທ້ອງຖິ່ນ ຮາກຖານ ເພື່ອຊ່ວຍຊຸກຍູ້ ສະໜັບສະໜູນວຽກງານສຳຄັນນີ້ ຕາມພາລະບົດບາດ ຂອງຕົນ.

8. ໃຫ້ຮີບຮ້ອນປັບປຸງລະບົບການຈັດຕັ້ງ ແລະ ບຸກຄະລາກອນ ລວມທັງກົນໄກ ແລະ ລະ ບອບແບບແຜນການຊີ້ນຳ ການພັດທະນາຊົນນະບົດ ຢູ່ຂັ້ນສູນກາງ ໃຫ້ເປັນອົງການລວມສູນເອກະ ພາບ, ເປັນກົງຈັກການຈັດຕັ້ງ ທີ່ກະທັດລັດ ແຕ່ມີເງື່ອນໄຂຄວາມສາມາດ ຊ່ວຍກົມການເມືອງ ແລະ ລັດຖະບານ ໃນການດຳເນີນວຽກງານອັນສຳຄັນນີ້ ໄດ້ຢ່າງມີປະສິດທິພາບ.

- ສຳລັບຢູ່ແຂວງ ແລະ ເມືອງ ຕ້ອງມອບໝາຍໃຫ້ສະຫາຍໜຶ່ງ ໃນຄະນະປະຈຳພັກເປັນ

ຜູ້ຮັບຜິດຊອບວຽກນີ້ ໂດຍມີຫນ່ວຍງານຫນຶ່ງ ທີ່ຂຶ້ນກັບທ້ອງວ່າການ ເປັນເສນາທິການຊ່ວຍວຽກ.

9. ໃຫ້ລັດຖະບານ ສືບຕໍ່ຈັດເອົາໂຄງການສ້າງບ້ານ, ສ້າງເຂດຈຸດສຸມ ແລະ ກຸ່ມບ້ານພັດທະນາ (ຕິດພັນກັບວຽກງານ ກໍ່ສ້າງຮາກຖານການເມືອງ) ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ໂດຍຈັດໄວ້ເປັນສາລະບານສະເພາະ ແລະ ຈັດເປັນແຜນລົງທຶນ ຫລື ຮ່ວງງົບປະມານ ການໃຊ້ຈ່າຍປະຈຳແຕ່ລະສົກປີສະເພາະ ໃຫ້ຈະແຈ້ງ; ຈາກນັ້ນ ຕ້ອງມອບທັງໂຄງການ, ທັງງົບປະມານ ແລະ ມອບຄວາມຮັບຜິດຊອບ ໃຫ້ທ້ອງຖິ່ນ ຈັດຕັ້ງປະຕິບັດ.

- ພ້ອມກັນນີ້ ກໍໃຫ້ສືບຕໍ່ຂົນຂວາຍ ຍາດແຍ່ງເອົາການສະຫນັບສະຫນູນ ຊ່ວຍເຫລືອ ເອົາທຶນຮອນ, ເຕັກນິກວິຊາການ ແລະ ບົດຮຽນ ຈາກປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ ແລະ ອົງການບໍ່ສັງກັດລັດຖະບານ; ລວມທັງນິຕິບຸກຄົນ ແລະ ບັນດາຊັ້ນຄົນ ພາຍໃນ ແລະ ຕ່າງປະເທດ ເຂົ້າໃນວຽກງານນີ້ ຢ່າງກ້ວາງຂວາງ ແລະ ມີຈຸດສຸມກວ່າເກົ່າ; ທັງມີການຄຸ້ມຄອງ ການຈັດຕັ້ງປະຕິບັດໂຄງການຕ່າງໆ ຢ່າງຮອບດ້ານ ແລະ ມີປະສິດທິຜົນ.

10. ໃຫ້ລັດຖະບານ ຮີບຮ້ອນຄົ້ນຄວ້າກຳນົດເປັນນະໂຍບາຍ ອັນຈະແຈ້ງ ກ່ຽວກັບການຈັດສັນລາຍຮັບລວມ ຂອງລັດຖະບານ ຈາກໂຄງການລົງທຶນ ທີ່ນຳໃຊ້ແຫລ່ງຊັບພະຍາກອນທຳມະຊາດ, ເປັນຕົ້ນ ແມ່ນແຮ່ທາດ, ນ້ຳ, ທີ່ດິນຈຳນວນຫລວງຫລາຍ ທັງມີຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ຢູ່ທ້ອງຖິ່ນໃດ ໃຫ້ທ້ອງຖິ່ນນັ້ນ ໃນອັດຕາສ່ວນທີ່ເຫມາະສົມ ເພື່ອໃຫ້ທ້ອງຖິ່ນນັ້ນ ສາມາດນຳໃຊ້ເປັນທຶນຮອນ ສຳລັບການພັດທະນາບ້ານ, ປົວແປງ ແລະ ຍົກສູງຄຸນນະພາບຊີວິດ ຂອງປະຊາຊົນ ໃນທ້ອງຖິ່ນນັ້ນໆ ຫລື ນຳໃຊ້ເຂົ້າໃນວຽກງານອື່ນໆ ທີ່ຈຳເປັນ ໂດຍມີການກຳນົດລະບຽບການໃຊ້ຈ່າຍ ແລະ ລະບອບການຕິດຕາມ ກວດກາ ໃຫ້ໂປ່ງໃສ-ຮັດກຸມ.

IV. ຄຳສັ່ງແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ຄຳສັ່ງແນະນຳ ເລກທີ 09 / ກມສພ, ສະບັບລົງວັນທີ 8 ມີຖຸນາ 2004; ຄະນະພັກ ບັນດາອົງການອ້ອມຂ້າງສູນກາງ, ຄະນະພັກນະຄອນຫລວງວຽງຈັນ ແລະ ຄະນະພັກແຂວງ ໃນທົ່ວປະເທດ ມີຫນ້າທີ່ ແລະ ມີຄວາມຮັບຜິດຊອບ ຈັດຕັ້ງປະຕິບັດຄຳສັ່ງແນະນຳສະບັບນີ້ ໃຫ້ຖືກຕ້ອງ ແລະ ໄດ້ຮັບຜົນດີ.

ມອບໃຫ້ກຳມະການກົມການເມືອງສູນກາງພັກ ສະຫາຍຫນຶ່ງ ເປັນຜູ້ຊີ້ນຳຕິດຕາມ ຊຸກຍູ້ ການຈັດຕັ້ງປະຕິບັດຄຳສັ່ງແນະນຳສະບັບນີ້ ໃຫ້ເປັນຈິງ ແລະ ລາຍງານຕໍ່ກົມການເມືອງ. ອັນຮີບດ່ວນໃນສະເພາະຫນ້ານີ້ ແມ່ນໃຫ້ປັບປຸງຄະນະຊີ້ນຳພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ທີ່ຂຶ້ນກັບລັດຖະບານ ພາຍໃຕ້ການຊີ້ນຳໂດຍກົງ ຂອງກຳມະການກົມການເມືອງສູນກາງພັກ ທີ່ຖືກມອບ

ຫມາຍ ເພື່ອປະຕິບັດພາລະບົດບາດ ເປັນຈຸດປະສານງານ ກັບຄະນະພັກ ຂອງບັນດາອົງການອ້ອມ ຂ້າງສູນກາງ ແລະ ທຸກທ້ອງຖິ່ນ ເພື່ອຜັນຂະຫຍາຍຄຳສັ່ງແນະນຳສະບັບນີ້, ທັງເຮັດພາລະບົດບາດ ຕິດຕາມການປະຕິບັດຕົວຈິງ ແລະ ສະຫລຸບສັງລວມລາຍງານ ໃຫ້ຄະນະເລຂາທິການສູນກາງພັກ ແລະ ລັດຖະບານ ຊາບເປັນປົກກະຕິ.

ຕ. ກົມການເມືອງສູນກາງພັກ
ເລຂາທິການໃຫຍ່

ສູນມາລີ ໄຊຍະສອນ

ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ

ຈູມມາລີ ໄຊຍະສອນ

ກົມການເມືອງສູນກາງພັກ

ຈູມມາລີ ໄຊຍະສອນ

ທອງສິງ ທຳມະວົງ

ບຸນຍັງ ວໍລະຈິດ

24/VII
ห้องสมุดประชาชน

ນາງ ປານີ ຢາທໍ່ຕູ້

ອາຊາງ ລາວລີ

ດຣ. ທອງລຸນ ສີສຸລິດ

ພົນໂທ ດວງໃຈ ພິຈິດ

ສົມສະຫວາດ ເລັ່ງສະຫວັດ

ດຣ. ບຸນທອງ ຈິດມະນີ

ດຣ. ບຸນປອນ ບຸດຕະນະວົງ

ດຣ. ພັນຄຳ ວິພາວັນ

ຄະນະເລຂາທິການສູນກາງພັກ

ຈູມມາລີ ໄຊຍະສອນ

ບຸນຍັງ ວໍລະຈິດ
(ຜູ້ປະຈຳການຄະນະເລຂາທິການສູນກາງພັກ)

ດຣ. ບຸນທອງ ຈິດມະນີ
(ປະທານກວດກາສູນກາງພັກ)

ດຣ. ບຸນປອນ ບຸດຕະນະວົງ

ດຣ. ທອງບັນ ແສງອາພອນ

ຈັນສີ ໂພສີຄຳ

ສຸກັນ ມະຫາລາດ

ພົນຕີ ແສງນອນ ໄຊຍະລາດ

ເຈືອງ ສົມບູນຂັນ

ຄະນະບໍລິຫານງານສູນກາງພັກ ສະໄໝທີ IX

ຈູມມາລີ ໄຊຍະສອນ

ທອງສິງ ທຳມະວົງ

ບຸນຍັງ ວໍລະຈິດ

ນາງ ປານີ ຢາທໍ່ຕູ້

ອາຊາງ ລາວລີ

ດຣ. ທອງລຸນ ສີສຸລິດ

ພົນໂທ ດວງໃຈ ພິຈິດ

ສົມສະຫວາດ ເລັ່ງສະຫວັດ

ດຣ.ບຸນທອງ ຈິດມະນີ

ດຣ. ບຸນປອນ ບຸດຕະນະວົງ

ດຣ. ພັນຄຳ ວິພາວັນ

ດຣ.ທອງບັນ ແສງອາພອນ

ຈັນສີ ໂພສີຄຳ

ສຸກັນ ມະຫາລາດ

ພົນຕີ ແສງນອນ ໄຊຍະລາດ

ເຈືອງ ສົມບູນຂັນ

ດຣ. ໄຊສົມພອນ ພົມວິຫານ

ສົມພັນ ແພງຄຳມີ

ນາງ ອ່ອນຈັນ ທຳມະວົງ

ດຣ. ພົມມະສອນ ເລືອງຄຳມາ

ຄຳພັນ ສູນວິເລີດ

ດຣ. ຈະເລີນ ເຢຍປາວເຮີ

ສຸລິວົງ ດາລາວົງ

ນາງ ບຸນເພັ່ງ ມູນໂພໄຊ

ດຣ. ພັນດວງຈິດ ວົງສາ

ຄຳບຸ່ນ ດ້ວງປັນຍາ

ພົນຕີ ຈັນສະໝອນ ຈັນຍາລາດ

ດຣ. ຄຳເຜີຍ ປານມະໄລທອງ

ວິໄລວັນ ພົມເຂ

ຄຳສານ ສຸວົງ

ດຣ. ສົນລະວົງ ຄຸດໄພທູນ

ດຣ. ຄຳພັນ ພົມມະທັດ

ສຈ.ດຣ. ສົມກົດ ມັ່ງໜໍ່ເມກ

ສອນໄຊ ສີພັນດອນ

ດຣ. ນາມ ວິຍະເກດ

ຕ໋ງ ເຢີຫ໋ໍ

ນາງ ສີໃສ ລືເດດມຸນສອນ

ພົນຕີ ສັນຍາຮັກ ພົມວິຫານ

ສຈ.ດຣ. ກິແກ້ວ ໄຂຄຳພິທູນ

ຄຳໃບ ດຳລັດ

ສົມມາດ ພົນເສນາ

ສົມດີ ດວງດີ

ພູເພັດ ຄຳພູນວົງ

ສຈ.ດຣ ບໍ່ແສງຄຳ ວົງດາລາ

ດຣ. ລຸງ ທິແກ້ວ

ສຈ.ດຣ.ເອກສະຫວ່າງ ວົງວິຈິດ

ຄຳຫລ້າ ລໍລອນສີ

ໄຊສີ ສັນຕິວົງ

ດຣ. ຄຳແພງ ໄຊສົມແພງ

ຄຳຮຸ່ງ ເຮືອງວົງສີ

ພົນຈັດຕະວາ ສຸວອນ ເລືອງບຸນມີ

ຄຳເມິງ ພົງທະດີ

ພົນຈັດຕະວາ ສົມແກ້ວ ສິລາວົງ

ຄຳເຈນ ວົງໂພສີ

ປ້ານ ນ້ອຍມະນີ

ສຈ.ດຣ. ສຸກກົ່ງແສງ ໄຊຍະເລີດ

ຄຳພັນ ສິດທິດຳພາ

ຄຳຫລ້າ ລົ້ງນະສອນ

ຄຳເຜີຍ ບຸດດາວົງ

ນາງ ສູນທອນ ໄຊຍະຈັກ

ພົນຈັດຕະວາ ທອງລອຍ ສີລິວົງ

ສາລະບານ

ໜ້າ:

ຄຳນຳ:.....1.

ຄຳຂວັນຂອງກອງປະຊຸມໃຫຍ່ຄັ້ງທີ IX .....2.

- **ພາກທີ I:** ສະຫລຸບຕີລາຄາຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VIII.....4.

ກ. ຜົນງານ ແລະ ດ້ານດີ.....4.

ຂ. ບັນດາຂໍ້ຄົງຄ້າງຕົ້ນຕໍ.....8.

ຄ. ສາເຫດຂອງຂໍ້ຄົງຄ້າງ.....10.

ງ. ຂໍ້ສະຫລຸບເປັນບົດຮຽນຈາກການຈັດຕັ້ງປະຕິບັດຕົວຈິງ.....11.

- **ພາກທີ II:** ບັນດາທິດທາງໜ້າທີ່ຈຸດສຸມໃນ 5 ປີຕໍ່ໜ້າ (2011-2015) .....14.

ກ. ຄາດໝາຍຍຸດທະສາດຮອດປີ 2020 ແລະ 2015.....14.

ຂ. ສ້າງບາດກ້າວບຸກທະລຸໃຫ້ເປັນຈິງທັງ 4ດ້ານ.....17.

ຄ. ໜ້າທີ່ ແລະ ວຽກງານຈຸດສຸມດ້ານເສດຖະກິດ.....20.

ງ. ໜ້າທີ່ ແລະ ວຽກງານຈຸດສຸມດ້ານສັງຄົມ-ວັດທະນະທຳ.....45.

ຈ. ສ້າງລັດເຮົາເປັນລັດແຫ່ງກົດໝາຍຂອງປະຊາຊົນໂດຍປະຊາຊົນເພື່ອເປັນປະຊາຊົນ ແລະ ມີຄວາມໝັ້ນຄົງ.....54.

ສ. ເພີ່ມທະວີວຽກງານແນວໂຮມ ແລະ ວຽກງານມະຫາຊົນຂອງພັກ.....64.

ຊ. ວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ.....69.

ຍ. ວຽກງານການຕ່າງປະເທດ.....70.

- **ພາກທີ III: ເພີ່ມທະວີການນຳພາຂອງພັກ, ສ້າງພັກໃຫ້ປອດໃສໜັກແໜ້ນ ແລະ ເຂັ້ມແຂງ**.....72.

ກ. ເພີ່ມທະວີບົດບາດນຳພາຂອງພັກ .....72.

ຂ. ຢຶດໝັ້ນທາດແທ້ເປັນຕົວແທນຂອງພັກເຮົາໃຫ້ແກ່ຜົນປະໂຫຍດຂອງຊົນຊັ້ນກຳມະກອນ, ຊາວຜູ້ອອກແຮງງານ ແລະ ຂອງຊາດລາວທັງໝົດ.....72.

ຄ. ກຳແໜ້ນຖານະກຳອຳນາດຂອງພັກເຮົາ, ສ້າງພັກໃຫ້ໜັກແໜ້ນເຂັ້ມແຂງໃນທຸກດ້ານ.....73.

* ຄຳສັ່ງແນະນຳເລກທີ 03/ກມສພ, ລົງວັນທີ 30 ພຶດສະພາ 2011 ວ່າດ້ວຍການສ້າງບ້ານເປັນໜ່ວຍພັດທະນາ, ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງ

ห้ามจำหน่าย

ນ້ອຍໃນຊີມນະບົດ.....83.
* ຮູບກຳມະການກິມການເມືອງສູນກາງພັກ ສະໄຫມທີ IX .....95.
* ຮູບຄະນະເລຂາທິການສູນກາງພັກ ສະໄຫມທີ IX .....97.
* ຮູບຄະນະບໍລິຫານງານສູນກາງພັກ ສະໄຫມທີ IX .....98.

ຈັດພິມ ແລະ ຈຳໜ່າຍໂດຍ: ຄະນະໂຄສະນາອົບຮົມສູນກາງພັກ.

ພິມທີ່ໂຮງພິມແຫ່ງລັດ

ຕາມ: ລທບ 272 ພຈ 11082011

ຂະໜາດ 18 x 26 ຊມ, ຈຳນວນ 15.000 ຫົວ

ພິມສຳເລັດ15/9/2011